# ການທົບທວນກົດໝາຍນິຕິບັນຍັດ ແລະ ກົດໝາຍປະເພນີຢູ່ທີ່ເຂດ ຣໍາຊາ ເຊຈໍາພອນ, ສປປ ລາວ

## ຄວາມໝາຍສໍາລັບວິທີການສິດທິມະນຸດທີ່ໃຊ້ຕໍ່ການອະນຸລັກ



INTERNATIONAL UNION FOR CONSERVATION OF NATURE

Federal Ministry for Economic Cooperation and Development

MINISTRY FOR FOREIGN AFFAIRS OF FINLAND

MEKONG WATER DIALOGUES

Ramsar

ການກຳນົດ ເອກະລັກສະນະ ທາງພູມສາດ ໃນ ປຶ້ມເຫຼັ້ມນີ້, ແລະ ການສະເໜີ ເນື້ອຫາສາລະ ບໍ່ໝາຍເຖິງ ການສະແດງ ຄວາມຄິດເຫັນ ໃດໜຶ່ງ ກ່ຽວກັບສ່ວນຂອງ IUCN ຫຼື ກະຊວງ ການຮ່ວມມື ດ້ານເສດຖະກິດແລະການພັດທະນາແຫ່ງສາທາລະລະລັດ ສະຫະພັນ ເຢຍລະມັນ (BMZ) ຫຼື ກະຊວງຕ່າງປະເທດ ຂອງ ປະເທດ ແຟັງລັງ ກ່ຽວກັບ ສະຖານະພາບທາງກົດ ໝາຍຂອງປະເທດ, ອານາເຂດ ຫຼື ພື້ນທີ່ໃດໜຶ່ງ, ຫຼື ບັນດາອຳນາດໜ້າທີ່ ຂອງມັນ ຫຼື ກ່ຽວກັບ ກຳນົດເສັ້ນຊາຍແດນ ຫຼື ເຂດແດນ ຂອງປະເທດ, ອານາເຂດ ຫຼືພື້ນທີ່ເຫຼົ່ານັ້ນ.

ທັດສະນະທີ່ສະແດງອອກ ໃນປຶ້ມເຫຼັ້ມນີ້ ບໍ່ໄດ້ສະທ້ອນຢ່າງຈຳເປັນເຖິງ ທັດສະນະ ຂອງ IUCN ຫຼື ກະຊວງ ການຮ່ວມມື ດ້ານເສດຖະກິດແລະການພັດທະນາແຫ່ງສາທາລະ ນະລັດ ສະຫະພັນ ເຢຍລະມັນ(BMZ) ຫຼື ກະຊວງຕ່າງປະເທດ ຂອງ ປະເທດ ແຟັງລັງ ແຕ່ຢ່າງໃດ.

ບົດລາຍງານສະບັບນີ້ ແມ່ນ ບົດສັງລວມ ການຄົ້ນຄວ້າ ທີ່ໄດ້ຈັດຕັ້ງປະຕິບັດ ໃນປີ 2012 ພາຍໃຕ້ ວິທີການ ສິດທິມະນຸດ ທີ່ໃຊ້ຕໍ່ໂຄງການອະນຸລັກ ແລະ Mekong Water Dialogues, ໂດຍໄດ້ຮັບການອຳນວຍຄວາມສະດວກ ຈາກ IUCN. ບໍ່ຮັບປະກັນ ຕໍ່ຄວາມແມ່ນຢຳ ຫຼື ຄວາມຄົບຖ້ວນ ຂອງ ຂໍ້ມູນຂ່າວສານ ແລະ ບໍ່ໄດ້ມີການຮັບຮອງ ຄວາມຮັບຜິດຊອບ ຈາກ IUCN ຫຼື ພະນັກງານ ຂອງ IUCN ຕໍ່ການສູນເສຍ ຫຼື ຄວາມເສຍຫາຍໃດໆ ທີ່ເກີດຂຶ້ນ ຈາກການອີງອາໄສ ຂໍ້ມູນຂ່າວສານທີ່ໄດ້ສະໜອງໃນບົດນີ້.

**ຈັດພິມໂດຍ:** IUCN, ນະຄອນຫຼວງວຽງຈັນ, ສປປ ລາວ.

**ລິຂະສິດ:**
©2012 ອົງການສາກົນ ເພື່ອການອະນຸລັກ ທຳມະຊາດ ແລະ ຊັບພະຍາກອນທຳມະຊາດ (International Union for Conservation of Nature
and Natural Resources)

**ຊັບພະຍາກອນ:**
ການເຮັດສຳເນົາ ປຶ້ມເຫຼັ້ມນີ້ ເພື່ອຈຸດປະສົງການສຶກສາ ຫຼື ຈຸດປະສົງອື່ນ ທີ່ບໍ່ເປັນການຄ້າ ແມ່ນໄດ້ຮັບອະນຸຍາດ ໂດຍບໍ່ຕ້ອງມີການອອກໃບອະນຸຍາດ ຢ່າງເປັນລາຍລັກອັກສອນ ກ່ອນໜ້າຈາກເຈົ້າຂອງລິຂະສິດ ໃນເງື່ອນໄຂທີ່ຍອມຮັບ ແຫຼ່ງທີ່ມາ ຢ່າງເຕັມສ່ວນ.

ຫ້າມ ການເຮັດສຳເນົາ ປຶ້ມເຫຼັ້ມນີ້ ເພື່ອຈຳໜາຍຕໍ່ ຫຼື ເພື່ອຈຸດປະສົງທາງການຄ້າ ໂດຍບໍ່ໄດ້ຮັບອະນຸຍາດ ກ່ອນໜ້າ ຢ່າງເປັນລາຍລັກອັກສອນຈາກເຈົ້າຂອງລິຂະສິດ

**ຂໍ້ມູນອ້າງອີງ:** Moore P., Pholsena M., Phommachanh K. ແລະ Glemet R. (2013).ການທົບທວນ ກົດໝາຍນິຕິບັນຍັດ ແລະກົດໝາຍປະເພນີ ຢູ່ ສະຖານທີ່ຕັ້ງ ຮຳຊາ ເຊຈຳພອນ, ສປປ ລາວ. ຄວາມໝາຍສຳລັບ ວິທີການສິດທິມະນຸດທີ່ໃຊ້ ຕໍ່ການອະນຸລັກ. ນະຄອນຫຼວງວຽງຈັນ. ສປປ ລາວ. IUCN. 82pp...

**ຮູບໜ້າປົກ**: ການປຶກສາຫາລື ຂອງຊຸມຊົນກ່ຽວກັບ ກົດໝາຍປະເພນີ, ບ້ານຕາແຫຼວ, ສປປ ລາວ. ຮູບທັງໝົດ © Raphael Glemet, IUCN, ສປປ ລາວ

**ຈັດໜ້າ ໂດຍ:**
ສິນທະລາ ວິໄລສິມ. IUCN ປະເທດລາວ

**ຜະລິດໂດຍ:**
ສຳນັກງານ IUCN ປະຈຳ ສປປ ລາວ

**ຫາໄດ້ຈາກ: ສຳນັກງານ**
ສຳນັກງານ IUCN (ອົງການສາກົນ ເພື່ອການອະນຸລັກທຳມະຊາດ) ປະຈຳ ສປປ ລາວ
ຕູ້ ປ.ນ: 4340
082/01 ຖະໜົນ ຟ້າງຸ່ມ, ບ້ານວັດຈັນ
ນະຄອນຫຼວງວຽງຈັນ, ສປປ ລາວ;
ໂທ: +856-21-216401
books@iucn.org
www.iucn.org/publications ນອກນັ້ນຍັງຫາໄດທີ່ www.iucn.org/lao

ISBN:

# ການທົບທວນກົດໝາຍ ນິຕິບັນຍັດ ແລະ ກົດໝາຍປະເພນີ ຢູ່ທີ່ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ, ສປປ ລາວ

## ຄວາມໝາຍ ສຳລັບ ວິທີການສິດທິມະນຸດທີ່ໃຊ້ ຕໍ່ການອະນຸລັກ

Patricia Moore, ມີນາວັນ ພິລເສນາ, ເກດສະໜາ ພິມມະຈັນ, Raphael Glemet

**ກ່ຽວກັບ IUCN**
IUCN, ອົງການສາກົນ ເພື່ອການອະນຸລັກ ທຳມະຊາດ ຊ່ວຍໂລກໃຫ້ພົບ ການແກ້ໄຂທີ່ຈິງຈັງ ສິ່ງທ້າທາຍ ອັນຮີບດ່ວນທີ່ສຸດຂອງພວກເຮົາ ດ້ານສິ່ງແວດລ້ອມ ແລະ ການພັດທະນາ.

ວຽກງານຂອງ IUCN ແມ່ນສຸມໃສ່ການປະເມີນຄຸນຄ່າ ແລະ ການອະນຸລັກ ທຳມະຊາດ, ຮັບປະກັນການຄຸ້ມຄອງການໃຊ້ທຳມະຊາດໃຫ້ມີປະສິດທິຜົນ ແລະຍຸດຕິທຳ ແລະນຳໃຊ້ບັນດາວິທີການແກ້ໄຂ ທີ່ອີງໃສ່ທຳມະຊາດຕໍ່ສິ່ງທ້າທາຍ ໃນຂອບເຂດທົ່ວໂລກ ດ້ານພູມອາກາດ, ສະບຽງອາຫານ ແລະການພັດທະນາ. IUCN ສະໜັບສະໜູນການຄົ້ນຄວ້າທາງວິທະຍາສາດ. ຈັດການບັນດາໂຄງການພາກສະໜາມ ຢູ່ທົ່ວໂລກ ແລະນຳເອົາລັດຖະບານບັນດາປະເທດ, ອົງການສະຫະປະຊາຊາດ ແລະບັນດາບໍລິສັດເຂົ້າມາຮ່ວມກັນ ເພື່ອສ້າງນະໂຍບາຍ, ບັນດາກົດໝາຍ ແລະ ວິທີການປະຕິບັດທີ່ດີເລີດ.

IUCN ແມ່ນອົງການສິ່ງແວດລ້ອມໜຶ່ງທີ່ເກົ່າແກ່ທີ່ສຸດຂອງໂລກ ເຊິ່ງມີສະມາຊິກທີ່ເປັນລັດຖະບານ ແລະບັນດາອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ ເຖິງ 1200 ອົງການ ແລະບັນດາຜູ້ຊ່ຽວຊານ ອາສາສະໝັກເກືອບ 11,000 ຄົນ ໃນ 160 ປະເທດ. ວຽກງານ ຂອງ IUCN ໄດ້ຮັບການສະໜັບສະໜູນ ຈາກພະນັກງານ 1000 ກວ່າຄົນ ທີ່ປະຈຳຢູ່ 45 ສຳນັກງານ ແລະມີຄູ່ຮ່ວມປະຕິບັດງານນັບເປັນຮ້ອຍ ທັງໃນພາກລັດ, ອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ ແລະພາກເອກະຊົນ ຢູ່ທົ່ວທຸກທິດຂອງໂລກ.
www.iucn.org

ກ່ຽວກັບສູນກົດໝາຍສິ່ງແວດລ້ອມຂອງ IUCN (ELC)
ສູນກົດໝາຍສິ່ງແວດລ້ອມ ຂອງ IUCN (ELC) ມີປະຫວັດການທີ່ຍາວນານ ແລະ ໜ້າທະນົງໃຈ ກ່ຽວກັບຜົນງານ ແລະ ຄວາມສຳພັນ ທີ່ມີມູນເຊື້ອຍາວນານ ກັບ ກຸງບອນ, ປະເທດເຢຍລະມັນ ເຊິ່ງເປັນບ່ອນທີ່ມັນຖືກສ້າງຕັ້ງຂຶ້ນມາ ເປັນຄັ້ງທຳອິດ ທີ່ຢ້ອນຄືນຫຼັງເຖິງປີ 1970. ELC ເປັນສຳນັກງານສາກົນ ທີ່ເປັນມືອາຊີບ ທີ່ປະກອບດ້ວຍຜູ້ຊ່ຽວຊານດ້ານກົດໝາຍ ແລະ ຂໍ້ມູນຂ່າວສານທີ່ມີທັກສະສູງ ແລະຖືກຮັບຮູ້ທົ່ວໂລກວ່າເປັນ ສູນແຫ່ງຄວາມເປັນເລີດທີ່ນຳໜ້າຂອງໂລກ ໃນດ້ານກົດໝາຍສິ່ງແວດລ້ອມ. ສູນດັ່ງກ່າວ ເປັນສະຖານທີ່ຕັ້ງ ສຳລັບຫ້ອງສະໝຸດທີ່ມີເອກະສານຈຳນວນມາກມາຍ ກ່ຽວກັບນິຕິກຳ, ສົນທິສັນຍາ ແລະກົດໝາຍປະເພນີຕ່າງໆ ແລະເອກະສານຂໍ້ມູນ ແລະກົດໝາຍອ່ອນ ແລະມັນຍັງເປັນສຳນັກງານໃຫຍ່ ຂອງ ໜ່ວຍຄຸ້ມຄອງ UNEP, FAO, IUCN ສຳລັບຂໍ້ລິເລີ່ມຮ່ວມກັນທີ່ຮູ້ກັນວ່າ ECOLEX. ສູນ ELC ນີ້ຍັງເປັນສ່ວນໜຶ່ງ ຂອງ ເຄື່ອຂ່າຍທີ່ອຸດົມຮັ່ງມີ ດ້ານວິຊາຄວາມຮູ້ທາງກົດໝາຍສິ່ງແວດລ້ອມ ທີ່ປະກອບດ້ວຍແຜນງານກົດໝາຍສິ່ງແວດລ້ອມ IUCN (ELC) ມັນກໍເຮັດວຽກຮ່ວມມືກັບທັງໝົດຄອບຄົວຂອງ IUCN, ຮ່ວມມືກັບຫຼາຍຄູ່ຮ່ວມປະຕິບັດງານອື່ນໆອີກຈາກທຸກທິດ ຂອງໂລກໃນການພັດທະນາ ກົດໝາຍສິ່ງແວດລ້ອມ.

www.iucn.org/about/work/programmes/environmental_law/elp_work/elc

ກ່ຽວກັບ Mekong Water Dialogues (ການສົນທະນາແລກປ່ຽນກ່ຽວກັບນ້ຳ ຂອງ ແມ່ນ້ຳຂອງ)
Mekong Water Dialogues ແມ່ນໄດ້ຮັບການປະສານງານ ແລະ ອຳນວຍຄວາມສະດວກ ຈາກ IUCN ແລະໄດ້ຮັບການສະໜັບສະໜູນ ຈາກກະຊວງການຕ່າງປະເທດ ແຟັງລັງ. ອົງການນີ້ ໄດ້ຖືກລິເລີ່ມຂຶ້ນມາ ເພື່ອເຮັດວຽກຮ່ວມກັບ ບັນດາປະເທດໃນພາກພື້ນແມ່ນ້ຳຂອງ ເຊັ່ນ ກຳປູເຈຍ, ສປປ ລາວ, ປະເທດໄທ ແລະ ປະເທດຫວຽດນາມ ເພື່ອປັບປຸງ ການຄຸ້ມຄອງນ້ຳໃຫ້ດີຂຶ້ນ ໂດຍການອຳນວຍຄວາມສະດວກ ໃຫ້ແກ່ການຕົກລົງບັນຫາ

ຢ່າງໂປ່ງໃສ ແລະກວມລວມທຸກພາກສ່ວນ ເພື່ອປັບປຸງຄວາມໝັ້ນຄົງດ້ານການດຳລົງຊີວິດ, ສຸຂະພາບ ຂອງມະນຸດ ແລະ ລະບົບນິເວດ.

www.iucn.org/asia/mekong_dialogues

## ສາລະບານ


**ຄໍານໍາ ..... IV**

**ອັກສອນຫຍໍ້ ແລະ ຊື່ຫຍໍ້ ..... VII**

**ທຽບມູນຄ່າເທົ່າທຽມໂດຍປະມານ ລະຫວ່າງ ເງີນຕາ ..... VII**

**1. ແນະນໍາເລື່ອງ ..... 1**

1.1 ໂຄງການ ກົດໝາຍປະເພນີ ຂອງ ກະຊວງຍຸດຕິທໍາ ..... 2

1.2 ໂຄງການນີ້ ..... 3

**2. ກົດໝາຍປະເພນີ ທີ່ຄຸ້ມຄອງ ຊັບພະຍາກອນທໍາມະຊາດ ຢູ່ ທີ່ດິນບໍລິເວນນໍ້າ ເຊຈໍາພອນ ..... 5**

2.1 ປ່າສະຫງວນ ສໍາລັບເປັນ ຫໍຜີບ້ານ ..... 8

2. 2ປ່າ ແລະ ໜອງສັກສິດ ..... 9

2.3 ປ່າຊ້າ ..... 13

2.4 ປ່າສະຫງວນລວມໝູ່ ທີ່ບໍ່ມີວິນຍານເຝົ້າ ຮັກສາ ..... 13

2.5 ໝໍຜີ/ໝໍດູ ແລະ ພິທີກໍາ ..... 15

2.6 ການອະນຸຍາດ ແລະ ການ ບັງຄັບໃຊ້ ..... 16

**3. ລັດຖະທໍາມະນູນ ແລະ ກົດໝາຍນິຕິບັນຍັດ ..... 17**

3.1 ລັດຖະທໍາມະນູນ ແຫ່ງ ສປປ ລາວ (2003) ..... 18

3.2 ສົນທິສັນຍາສາກົນ ..... 19

*3.2.1 ສົນທິສັນຍາ ຣໍາຊາ ວ່າດ້ວຍ ທີ່ດິນບໍລິເວນນໍ້າ ທີ່ມີຄວາມສໍາຄັນໃນສາກົນ (Ramsar)* ..... 19

*3.2.2 ສົນທິສັນຍາວ່າດ້ວຍ ການຄ້າສາກົນ ຊຶ່ງຊະນິດພັນ ສັດ ແລະ ພືດປ່າ ທີ່ໃກ້ຈະສູນພັນ (CITES)* ... 20

*3.2.3 ສົນທິສັນຍາ ວ່າດ້ວຍ ຊີວະນາໆພັນ (CBD)* ..... 21

3.3 ກົດໝາຍນິຕິບັນຍັດ ..... 21

*3.3.1 ກົດໝາຍທີ່ດິນ (2003)* ..... 22

*3.3.2 ກົດໝາຍວ່າດ້ວຍ ສັດນໍ້າ ແລະ ສັດປ່າ (2007)* ..... 23

*3.3.3 ກົດໝາຍການປະມົງ (2009)* ..... 25

*3.3.4 ກົດໝາຍປ່າໄມ້ (2007)* ..... 26

*3.3.5 ນໍ້າ ແລະ ຊັບພະຍາກອນນໍ້າ (1996)* ..... 28

*3.3.6 ກົດໝາຍວ່າດ້ວຍກະສິກໍາ (1998)* ..... 29

*3.3.7 ກົດໝາຍ ວ່າດ້ວຍ ການປົກປັກຮັກສາ ສິ່ງແວດລ້ອມ (1999)* ..... 30

*3.3.8 ກົດໝາຍອາຍາ (2005)* ..... 31

3.4 ດໍາລັດ ແລະ ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ ..... 32

3.5 ລະບຽບການ ນິຕິບັນຍັດ ສະເພາະ ທີ່ໃຊ້ ສໍາລັບ ພື້ນທີ່ ເຊຈໍາພອນ ..... 32

*3.5.1 ຢູ່ຂັ້ນແຂວງ* ..... 32

*3.5.2 ຢູ່ຂັ້ນເມືອງ* ..... 33

*3.5.3 ຢູ່ຂັ້ນບ້ານ* ..... 33

*3.5.4 ສັງລວມ ບັນດາ ລະບຽບການຂອງບ້ານ* ..... 42

**4. ສົມທຽບ ກົດໝາຍ ປະເພນີ ກັບ ກົດໝາຍນິຕິບັນຍັດ ..... 43**

4.1 ຂໍ້ຫ້າມ ແລະ ຂໍ້ຈຳກັດ....45
*4.1.1 ການລ່າສັດ*....46
*4.1.2 ການຫາປາ*....47
*4.1.3 ການຕັດໄມ້ / ການສ້າງຄວາມເສຍຫາຍແກ່ປ່າໄມ້*....49
*4.1.4 ການເກັບ ເຄື່ອງປ່າ ຂອງດົງ*....51
*4.1.5 ການເອົານໍ້າ*....52
*4.1.6 ການໃຊ້ເຮືອ*....54
*4.1.7 ການໃຫ້ສັດລ້ຽງກິນຫຍ້າ*....54
4.2 ການລົງໂທດ....60
*4.2.1 ການລ່າສັດ*....61
*4.2.2 ການຫາປາ*....63
*4.2.3 ການຕັດໄມ້ ແລະ ການສ້າງຄວາມເສຍຫາຍ ຫຼື ການທຳລາຍ ປ່າ*....65
*4.2.4 ການເກັບ ເຄື່ອງປ່າ ຂອງດົງ*....66
*4.2.5 ການເອົານໍ້າ ແລະ ການໃຊ້ເຮືອ*....67
*4.2.6 ການໃຫ້ສັດກິນຫຍ້າ (ການລ້ຽງສັດ)*....68
**5. ຄວາມໝາຍ ສຳລັບ ການຄຸ້ມຄອງ ສະຖານທີ່ຕັ້ງ ຣຳຊາ ຢູ່ ສປປ ລາວ....68**
5.1 ສະຖານະພາບ ຂອງ ສະຖານທີ່ຕັ້ງ ຣຳຊາ ໃນສະພາບແວດລ້ອມ ຂອງ ກົດໝາຍ ນິຕິບັນຍັດ ແຫ່ງຊາດ....69
5.2 ອີງການທີ່ຈະ ຮັບຮອງ ເອົາ ລະບຽບການ ທີ່ໃຊ້ ກັບ ສະຖານທີ່ຕັ້ງ ຣຳຊາ....70
5.3 ຄວາມຂັດແຍ່ງ ທີ່ອາດເກີດຂຶ້ນ ລະຫວ່າງ ກົດໝາຍ ນິຕິບັນຍັດ ແຫ່ງຊາດ, ກົດໝາຍປະເພນີ ແລະ ລະບຽບການຂອງບ້ານ: ການຫ້າມ ແລະ ການຈຳກັດ ກ່ຽວກັບ ການລ່າສັດ ແລະ ການຫາປາ....71
5.4 ສະຖານະພາບ ຂອງ ປ່າສັກສິດ ແລະ ປ່າຊ້າ ຂອງບ້ານ....71
5.5 ຄວາມຂັດແຍ້ງ ທີ່ອາດເກີດຂຶ້ນ ລະຫວ່າງ ກົດໝາບນິຕິບັນຍັດ ແຫ່ງຊາດ, ກົດໝາຍປະເພນີ ແລະ ລະບຽບການຂອງບ້ານ - ການປັບໃໝ ແລະ ໂທດອື່ນໆ....72
*5.5.1 ຄ່າປັບໃໝ*....72
*5.5.2 ການລົງໂທດອື່ນໆ*....74
**6. ຄວາມໝາຍສຳລັບລະບຽບການຂອງ ເຂດ ຣຳຊາ ເຊຈຳພອນ....75**
**7. ການພິຈາລະນາສຸດທ້າຍ....77**
**8. ໃບຊ້ອນທ້າຍ....79**
ໃບຊ້ອນທ້າຍ 1: ແຜນທີ່ ທາງການ ຂອງ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ແລະ ບ້ານຕ່າງໆ ທີ່ໄດ້ລົງສຳຫຼວດ....79
ໃບຊ້ອນທ້າຍ 2: ບົດລາຍງານ ການລົງສຳຫຼວດ ພາກສະໜາມ ດ້ານສັງຄົມ-ເສດຖະກິດ : ວິທີການ ໃຊ້ສິດທິ....80
ໃນການອະນຸລັກ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ, ສປປ ລາວ.....80

## ບັນຊີ ຕາຕະລາງ

ຕາຕະລາງ 1: ການປະຕິບັດຕາມກົດໝາຍປະເພນີ ແລະ ກົດໝາຍນິຕິບັນຍັດ....6
ຕາຕະລາງ 2: ສະຖານທີ່ ທີ່ຖືກສະຫງວນໄວ້ ພາຍໃຕ້ ກົດໝາຍປະເພນີ ໃນ 10 ບ້ານ ທີ່ຢູ່ໃນ

ແລະ ຢູ່ອ້ອມຮອບ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ( ກ່ຽວກັບ 11 ບ້ານທີ່ໄດ້ສຳຫຼວດ )......................7
ຕາຕະລາງ 3: ພື້ນຖານສຳລັບ ລະບຽບການ................................................................44
ຕາຕະລາງ 4: ການລ່າສັດ: ການອະນຸຍາດ, ຂໍ້ຫ້າມ ແລະ ຂໍ້ຈຳກັດ..........................................47
ຕາຕະລາງ 5: ການຫາປາ: ການອະນຸຍາດ, ຂໍ້ຫ້າມ ແລະ ຂໍ້ຈຳກັດ.......................................... 49
ຕາຕະລາງ 6: ການຕັດໄມ້: ການອະນຸຍາດ, ຂໍ້ຫ້າມ, ແລະ ຂໍ້ຈຳກັດ....................................... 51
ຕາຕະລາງ 7: ການເກັບເຄື່ອງປ່າຂອງດົງ: ການອະນຸຍາດ, ຂໍ້ຫ້າມ ແລະ ຂໍ້ຈຳກັດ........................... 52
ຕາຕະລາງ 8: ການຕັກນໍ້າ: ການອະນຸຍາດ, ຂໍ້ຫ້າມ ແລະ ຂໍ້ຈຳກັດ....................................... 53
ຕາຕະລາງ 9: ການໃຊ້ເຮືອ: ການອະນຸຍາດ, ຂໍ້ຫ້າມ, ແລະ ຂໍ້ຈຳກັດ...................................... 54
ຕາຕະລາງ 10: ຄັງຫຍ້າລ້ຽງສັດ: ການອະນຸຍາດ, ຂໍ້ຫ້າມ ແລະ ຂໍ້ຈຳກັດ.................................... 55
ຕາຕະລາງ 11: ການປຽບທຽບກົດໝາຍປະເພນີ ກັບລະບຽບການ ຂອງບ້ານ ສຳລັບ ບ້ານທີ່ໄດ້
ສຳຫຼວດ ຢູ່ໃນ ສະຖານທີ່ຕັ້ງ ຣຳຊາ, ເຊຈຳພອນ............................................ 56

## ຄຳນຳ

ແຜນງານ ກົດໝາຍສິ່ງແວດລ້ອມ ຂອງ IUCN ຄົ້ນຄວ້າຫາ ບັນດາວິທີການ ສິດທິມະນຸດ ເພື່ອຫຼຸດຜ່ອນ ຄວາມທຸກຍາກ ແລະ ໃຫ້ເປັນປະໂຫຍດແກ່ການອະນຸລັກ ໄດ້ສຸມໃສ່ການພັດທະນາບັນດາເຄື່ອງມື ເພື່ອໃຫ້ຮູ້ກ່ຽວ ກັບ ບັນດາຍຸດທະສາດການ ອະນຸລັກໃຫ້ດີກວ່າເກົ່າ. ຈຸດປະສົງແມ່ນ ເພື່ອໃຫ້ບັນດາອົງການຈັດຕັ້ງ ການອະນຸລັກ ສາມາດ ສ້າງບັນດາຍຸດທະສາດ ໂດຍອີງໃສ່ບັນດາຫຼັກການ ສິດທິມະນຸດ ໃຫ້ເປັນການປະກອບສ່ວນ ຕໍ່ການບັນລຸ ບັນດາເປົ້າໝາຍ ສະຫັດສະວັດ ໃນການພັດທະນາ (ເຊັ່ນ MDG 1: ຫຼຸດຜ່ອນຄວາມທຸກຍາກທີ່ຮ້າຍແຮງ; MDG 3: ສົ່ງເສີມຄວາມສະເໝີພາບລະຫວ່າງຍິງຊາຍ ແລະ ໃຫ້ອຳນາດແກ່ແມ່ຍິງ; MDG 7: ຮັບປະກັນຄວາມ ຍືນຍົງດ້ານສິ່ງແວດລ້ອມ).

ບັນດາວິທີການສິດທິມະນຸດ ສາມາດຖືກເບິ່ງວ່າເປັນ ການປະສົມປະສານ ການຄຳນຶງເຖິງສິດທິ ໃນແຜນງານນະໂຍ ບາຍຫຼື ຂໍ້ລິເລີ່ມໃດໜຶ່ງ ແລະ ສາມາດຮັບໃຊ້ ໃນວຽກງານ ເພື່ອຮັບປະກັນໃຫ້ ການປ້ອງກັນສິດທິ ແລະ ການ ອະນຸລັກຊີວະນາໆພັນ ກາຍເປັນ ແລະໃຫ້ເປັນການສະໜັບສະໜູນຊຶ່ງກັນແລະກັນຢູ່ຕໍ່ໄປ.
ໃນຂອບວຽກ ໂຄງການ 2007-2010 ຂອງ BMZ *ວິທີການສິດທິມະນຸດ* : CBD COP 9 ແລະ ນອກ ເໜືອໄປກວ່ານັ້ນ, ສູນກົດໝາຍສິ່ງແວດລ້ອມ IUCN ໄດ້ພັດທະນາ ວິທີການ ແບບເປັນກ້າວໆ ສຳລັບ ການຈັດ ຕັ້ງປະຕິບັດ ບັນດາວິທີການສິດທິມະນຸດ ເພື່ອການອະນຸລັກ ເຊິ່ງໄດ້ມີຄຳອະທິບາຍຕໍ່ໄປ ໃນປຶ້ມທີ່ພິມຈຳໜ່າຍ ຂອງ IUCN ທີ່ໃສ່ຫົວຂໍ້ວ່າ " ການອະນຸລັກ ດ້ວຍຄວາມຍຸດຕິທຳ - ວິທີການໜຶ່ງ ຂອງສິດທິມະນຸດ ". ໂດຍຜ່ານ ໂຄງການ ການໝູນໃຊ້ ວິທີການສິດທິມະນຸດ ເພື່ອການອະນຸລັກ - ຈາກທິດສະດີ ສູ່ ຄວາມເປັນຈິງ, ສຳນັກງານ IUCN ປະຈຳ ສປປ ລາວ, ໂດຍໄດ້ຮັບການສະໜັບສະໜູນ ຈາກ ສູນກົດໝາຍສິ່ງແວດລ້ອມ IUCN, ໄດ້ໝູນ ໃຊ້ ບັນດາວິທີການ ແບບເປັນກ້າວໆ ຕາມຫຼັກການສິດທິມະນຸດ ເພື່ອທົດສອບ ປະສິດທິພາບ ຂອງບັນດາວິທີການ ເຫຼົ່ານັ້ນ ແລະ ໄດ້ຮັບປະສົບການຕໍ່ໄປ ຂອງວິທີການສິດທິມະນຸດ ຈາກວຽກງານໃນພື້ນທີ່ປະຕິບັດຕົວຈິງ. ວຽກ ງານເຊັ່ນນີ້ ແມ່ນສິ່ງຈຳເປັນ ເພາະວ່າ ສິ່ງທ້າທາຍທີ່ສຳຄັນ ສຳລັບຜູ້ນຳພາໃນການປະຕິບັດທຸກຄົນ ແມ່ນ ເພື່ອໃຫ້ ເຂົ້າໃຈວ່າ ຈະເອົາແນວຄວາມຄິດ ວິທີການສິດທິມະນຸດ ເພື່ອການອະນຸລັກ ເຂົ້າໃນພາກປະຕິບັດແນວໃດ.

ຫຼັງຈາກໄດ້ສ້າງ ວິທີການ ແບບເປັນກ້າວໆ ສຳລັບການຈັດຕັ້ງປະຕິບັດ RBAs ຕໍ່ການ ອະນຸລັກ, ສູນກົດໝາຍສິ່ງ ແວດລ້ອມ, ໂດຍການຮ່ວມມືກັບ ຫ້ອງການ IUCN ປະຈຳ ສປປ ລາວ. ຫ້ອງການ IUCN ປະຈຳພາກພື້ນ ອາເມ ລິກາ ລາຕິນ ແລະ ຫ້ອງການ IUCN ປະຈຳພາກພື້ນ ເມໂຊ ອາເມລິກາ ໄດ້ລິເລີ່ມ ໂຄງການ "*ນຳໃຊ້ ວິທີການ ສິດທິມະນຸດທີ່ໃຊ້ ຕໍ່ການອະນຸລັກ - ຈາກທິດສະດີ ສູ່ຄວາມເປັນຈິງ*" ເພື່ອ ໝູນໃຊ້ບາດກ້າວຕ່າງໆ ຂອງ ວິທີການ ນຳໃຊ້ແບບອະນຸລັກ ເຂົ້າໃນພາກປະຕິບັດ ໃນລະດັບ ຊາດ ກໍຄື ລະດັບສາກົນ. ການທົດສອບ ປະສິດທິຜົນ ຂອງ ວິທີການ ແບບເປັນກ້າວໆ ແລະ ການໄດ້ຮັບປະສົບການໃນ RBA ຈາກການປະຕິບັດ ວຽກງານ ຢູ່ກັບພື້ນທີ່ ເປັນ ສິ່ງຈຳເປັນ, ເພາະວ່າ ສິ່ງທ້າທາຍໜຶ່ງທີ່ສຳຄັນ ສຳລັບຜູ້ນຳພາໂຄງການ ແມ່ນ ເພື່ອໃຫ້ເຂົ້າໃຈວ່າ ຈະເອົາແນວຄວາມ ຄິດ RBA ຕໍ່ການອະນຸລັກ ເຂົ້າໃນການປະຕິບັດຕົວຈິງ ແນວໃດ. ເປົ້າໝາຍລວມ ຂອງ ໂຄງການນີ້ ແມ່ນ ເພື່ອ ຮັບປະກັນໃຫ້ RBAs ຕໍ່ການອະນຸລັກ ຖືກຈັດຕັ້ງປະຕິບັດ ແລະ ຂໍ້ມູນ ທີ່ກ່ຽວຂ້ອງ ໄດ້ຖືກເຜີຍແຜ່ ເພື່ອ ຮັບປະກັນ ສິດຂອງບັນດາຊຸມຊົນທີ່ອ່ອນແອ, ປັບປຸງ ການດຳລົງຊີວິດ ຂອງເຂົາເຈົ້າ ແລະ ສົ່ງເສີມ ການອະນຸລັກ ຊີວະນາໆພັນ ແລະ ການໃຫ້ບໍລິການ ຂອງລະບົບນິເວດ.

ເພື່ອໃຫ້ໄດ້ຮັບປະສົບການຕໍ່ໄປ ກ່ຽວກັບ RBAs ຕໍ່ການ ອະນຸລັກ, ອີງປະກອບ ສປປ ລາວ ຂອງ ໂຄງການ ຈຶ່ງ ສຸມໃສ່ ການຈັດຕັ້ງປະຕິບັດ ບາດກ້າວທີ 1 ຂອງ ວິທີການ ແບບເປັນກ້າວໆ – ດຳເນີນການ ວິເຄາະສະພາບການ – ຢູ່ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ໃນ ສປປ ລາວ. ບົດສຶກສານີ້ ແນໃສ່ ວິໄຈສະພາບການ ຢູ່ ທີ່ດິນ ບໍລິເວນ ນ້ຳ ເຊຈຳພອນ ຂອງ ສປປ ລາວ. ມັນຈະວິເຄາະ ບັນຫາທີ່ຄົ້ນຄວ້າ ບໍ່ທັນຖີ່ຖ້ວນ ຂອງກົດໝາຍປະເພນີ ທີ່ຄຸ້ມຄອງ ຊັບພະຍາກອນ ທຳມະຊາດ, ລວມທັງ ສາຍພົວພັນຂອງພວກມັນ ກັບກົດໝາຍ ນິຕິບັນຍັດ. ສຳລັບ ບັນຫານີ້ , ທີມງານ ໄດ້ດຳເນີນ ການຄົ້ນຄວ້າ ຈາກເອກະສານ ກ່ຽວກັບກົດໝາຍ ທີ່ຄຸ້ມຄອງ ການໃຊ້ ຊັບພະຍາກອນ ທຳມະຊາດ ຢູ່ ສປປ ລາວ ກໍຄື ການດຳເນີນວຽກພາກສະໜາມ ທີ່ກວມລວມ ກັບບັນດາຊຸມຊົນ ທີ່ຢູ່ໃນ ແລະ ຢູ່ຕິດ ກັບ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ເພື່ອ ເກັບກຳ ຂໍ້ມູນ ກ່ຽວກັບ ສິດທາງປະເພນີ ແລະ ເພື່ອຮັບປະກັນ ໃຫ້ບັນດາຊຸມຊົນ ມີສ່ວນຮ່ວມ ໃນຜົນໄດ້ຮັບ ຕ່າງໆ ຂອງ ໂຄງການ. ບົດລາຍງານ ສະບັບນີ້ ສັງລວມ ແລະ ວິເຄາະ ຜົນຂອງວຽກພາກສະໜາມ. ນອກນັ້ນ ບົດລາຍງານສະບັບນີ້ ຍັງໃຫ້ ຄຳສະເໜີແນະນຳ ກ່ຽວກັບວ່າ ເຮັດແນວໃດ ຈະລວບລວມ ເອົາກົດໝາຍ ປະເພນີ ທີ່ຄຸ້ມຄອງ ຊັບພະຍາກອນທຳມະຊາດ ເຂົ້າໃນ ການຄຸ້ມຄອງ ບັນດາ ສະຖານທີ່ຕັ້ງ ຣຳຊາ ໃນປະເທດ. ບົນພື້ນຖານ ຄຳສະເໜີແນະນຳ ແລະ ການສະເໜີ ຂອງ ລັດຖະບານ, ໂຄງການ ໄດ້ຮ່າງ ສອງ ດຳລັດ - ດຳລັດໜຶ່ງ ແມ່ນດຳລັດລະດັບຊາດ ວ່າດ້ວຍ ການຄຸ້ມຄອງ ສະຖານທີ່ຕັ້ງ ຣຳຊາ ໃນ ສປປ ລາວ ໂດຍລວມ, ແລະອີກດຳລັດໜຶ່ງ ແມ່ນສຳລັບ ການຄຸ້ມຄອງ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ. ວຽກນີ້ ເສີມເຕີມ ການຄົ້ນຄວ້າ ຂອງລັດຖະບານລາວ ແລະ ເປີດປະຕູ ໃຫ້ແກ່ ການຄົ້ນຄວ້າທີ່ຄ້າຍຄືກັນ ຢູ່ໃນສ່ວນອື່ນໆ ຂອງປະເທດ.

ນອກຈາກນັ້ນ, ບົດລາຍງານນີ້ ຍັງສະເໜີ ປະສົບການທີ່ໜ້າສົນໃຈ ສຳລັບ ການຈັດຕັ້ງປະຕິບັດ ສິດທິມະນຸດ ຢູ່ທົ່ວໂລກ ໃນການວາງແຜນ ແລະ ພາກປະຕິບັດຕົວຈິງ ການອະນຸລັກ ເຊິ່ງຖືກເຜີຍແຜ່ ຜ່ານເຄື່ອງມື ທີ່ມີການພົວພັນຊຶ່ງກັນ ແລະ ກັນ, ເຊັ່ນ: ເວບໄຊ ຂອງ IUCN RBA ຕໍ່ການອະນຸລັກ (www.rights-based-approach.org). ໂດຍສະເພາະ, ບົດຮຽນທີ່ຖອດຖອນໄດ້ ຈະໃຫ້ຮູ້ກ່ຽວກັບ ຂະບວນການ ຂອງການສືບຕໍ່ພັດທະນາ ແລະ ການປະຕິບັດການ ຂອງ ນະໂຍບາຍ IUCN ກ່ຽວກັບ ສິດທິມະນຸດ ແລະ ການ ອະນຸລັກ ເພື່ອການພັດທະນາ ແບບຍືນຍົງ, ເຊິ່ງຈະຖືກຈັດຕັ້ງປະຕິບັດ ຢູ່ໃນທຸກໆນະໂຍບາຍ, ແຜນງານ ແລະ ກິດຈະກຳ ຂອງ IUCN... ນະໂຍບາຍດັ່ງກ່າວ ຂອງ IUCN ຖືກຮັບຮອງເອົາ ຜ່ານ ມະຕິ WCC-2012-RES-099 ຢູ່ ກອງປະຊຸມໂລກ ກ່ຽວກັບການອະນຸລັກ ຂອງ IUCN 2012 ທີ່ ເຈຈູ, ປະເທດ ເກົາຫຼີ (World Conservation Congress Jeju, Korea ປີ 2012. ນອກນັ້ນ ມັນຍັງໃຫ້ໝາກຜົນອື່ນອີກ ຢ່າງໄດ້ຮັບຜົນສຳເລັດ ເຊິ່ງໄດ້ຮັບການສົ່ງເສີມຜ່ານ ໂຄງການ RBA.

ບຸກຄົນ ຈຳນວນມາກມາຍ ໄດ້ປະກອບສ່ວນ ໃນການຊ່ວຍໃຫ້ ບົດລາຍງານນີ້ ເຫັນແສງສະຫວ່າງ ຂອງ ວັນໃໝ່ ໂດຍການແບ່ງປັນແນວຄວາມຄິດ ແລະ ປະສົບການອັນມີຄ່າ ຂອງຕົນ ຢ່າງໃຈກວ້າງ ກ່ຽວກັບ ແນວຄວາມຄິດຂອງວິທີການ ໃຊ້ສິດທິມະນຸດ ກໍຄື ຄວາມໝາຍຂອງມັນ ໃນສະພາບແວດລ້ອມ ສະເພາະ ສປປ ລາວ. ໂດຍສະເພາະ, ຂໍ້ມູນ ຂອງ ທ່ານ Raphaël Glémet (ຜູ້ຈັດການໂຄງການ ປະຈຳ IUCN. ສປປ ລາວ), Patricia Moore (ຜູ້ຊ່ຽວຊານ ດ້ານກົດໝາຍລະຫວ່າງຊາດ ແລະ ຫົວໜ້າຄະນະຜູ້ຂຽນບົດ), ທ່ານ ເກດສະໜາ ພົມມະຈັນ (ຜູ້ຊ່ຽວຊານ ດ້ານກົດໝາຍແຫ່ງຊາດ), ທ່ານ ນາງ ມິນາວັນ ພົນເສນາ (ຜູ້ຊ່ຽວຊານ ດ້ານສັງຄົມ-ເສດຖະກິດ), ແລະ ທ່ານ Thomas Greiber (ຜູ້ຈັດການໂຄງການ ປະຈຳ ສູນກົດໝາຍ ສິ່ງແວດລ້ອມ ຂອງ IUCN ) ເປັນການປະກອບສ່ວນ ທີ່ສຳຄັນຍິ່ງ ຕໍ່ການວາງແຜນ ແລະ ການສຳເລັດ ການຄົ້ນຄວ້າ, ການວິເຄາະ ແລະ ການຮ່າງ ດຳລັດ ທີ່ໄດ້ດຳເນີນການ. ຫ້ອງການ IUCN ປະຈຳ ສປປ ລາວ ແລະ ສູນກົດໝາຍສິ່ງແວດລ້ອມ ຂອງ IUCN ຂໍສະແດງຄວາມຂອບໃຈ ຕໍ່ບຸກຄົນເຫຼົ່ານີ້ ທີ່ໄດ້ໃຫ້ຄວາມສົນໃຈ ແລະ ການສະໜັບສະໜູນ ຕໍ່ໂຄງການນີ້.

ພວກເຮົາ ຂໍສະແດງຄວາມຂອບໃຈ ດ້ວຍຄວາມຮູ້ບຸນຄຸນ ມາຍັງ ກະຊວງ ການຮ່ວມມື ດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສາທາລະນະລັດ ສະຫະພັນ ເຢຍລະມັນ ແລະ ກະຊວງການຕ່າງປະເທດ ຂອງ ແຟັງລັງ ຕໍ່ ການປະກອບສ່ວນດ້ານການເງິນ ແກ່ ໂຄງການ IUCN ແລະ ການຈັດພິມເຜີຍແຜ່ ບົດລາຍງານສະບັບນີ້.

ເມສາ 2013



Dr Alejandro O. Iza

ຫົວໜ້າ ແຜນງານກົດໝາຍສິ່ງແວດລ້ອມ IUCN

ຜູ້ອຳນວຍການສູນກົດໝາຍສິ່ງແວດລ້ອມ ຂອງIUCN



ລັດສະໄໝ ສີລາວົງ

ຜູ້ຕາງໜ້າປະຈຳປະເທດ

IUCN ປະຈຳ ສປປ ລາວ

## ອັກສອນຫຍໍ້ ແລະ ຊື່ຫຍໍ້

| | |
|---|---|
| BMZ | ກະຊວງການຮ່ວມມືເສດຖະກິດ ແລະການພັດທະນາ ແຫ່ງສາທາລະນະລັດ ສະຫະພັນ ເຢຍລະມັນ |
| CBD | ສົນທິສັນຍາວ່າດ້ວຍ ຊີວະນາໆພັນ |
| CITES | ສົນທິສັນຍາວ່າດ້ວຍ ການຄ້າສາກົນ ບັນດາຊະນິດພັນສັດ ແລະ ພືດປ່າ ທີ່ໃກ້ຈະສູນພັນ |
| IUCN | ອົງການສາກົນ ເພື່ອການອະນຸລັກ ທຳມະຊາດ |
| Lao PDR | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| MoJ | ກະຊວງຍຸດຕິທຳ |
| MoNRE | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| MoU | ບົດບັນທຶກຄວາມເຂົ້າໃຈ |
| NA | ສະພາແຫ່ງຊາດ |
| NTFP | ເຄື່ອງປ່າຂອງດົງ |
| NW | ຕາເວັນຕົກສ່ຽງເໜືອ |
| PM | ນາຍົກລັດຖະມົນຕີ |
| Ramsar | ສົນທິສັນຍາ ຣຳຊາ ວ່າດ້ວຍທີ່ດິນບໍລິເວນນໍ້າ ທີ່ມີຄວາມສຳຄັນໃນສາກົນ |
| UNDP | ອົງການສະຫະປະຊາຊາດ ແຜນງານການພັດທະນາ |
| WCS | ສະມາຄົມ ອະນຸລັກ ສັດປ່າ |

### ທຽບມູນຄ່າເທົ່າທຽມໂດຍປະມານ ລະຫວ່າງ ເງິນຕາ

| ເງິນກີບ (LAK) | ເງິນ ໂດລາສະຫະລັດ (USD) |
|---|---|
| 100,000 | 13.00 |
| 200,000 | 25.00 |
| 300,000 | 38.00 |
| 500,000 | 63.00 |
| 1,000,000 | 125.00 |
| 1,500,000 | 188.00 |
| 2,000,000 | 250.00 |
| 3,000,000 | 375.00 |
| **5,000,000** | 625.00 |
| **10,000,000** | 1,255.00 |
| **30,000,000** | 3,760.00 |

## 1. ແນະນຳເລື່ອງ:

ບົດລາຍງານສະບັບນີ້ ວິເຄາະ ສາຍພົວພັນລະຫວ່າງ ພັນທະສາກົນ ແລະ ບັນດາກົດໝາຍນິຕິບັນຍັດ ແລະ ກົດໝາຍປະເພນີ ກໍຄືບັນດາຄວາມໝາຍຂອງພວກມັນ ສໍາລັບການຄຸ້ມຄອງ ທີ່ດິນບໍລິເວນນໍ້າ ແລະ ບັນດາສະຖານທີ່ຕັ້ງ ຣຳຊາ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໂດຍທົ່ວໄປ ແລະ ໂດຍສະເພາະ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ.
ຍຸດທະສາດ ການຄຸ້ມຄອງສິ່ງແວດລ້ອມແຫ່ງຊາດ ຂອງ ສປປ ລາວ, ມີຜົນບັງຄັບໃຊ້ຮອດປີ 2020, ເນັ້ນຄວາມສຳຄັນ ຂອງການປ້ອງກັນສິ່ງແວດລ້ອມ. ລັກສະນະພິເສດໜຶ່ງ ຂອງ ຍຸດທະສາດດັ່ງກ່າວ ຄືການເຂົ້າຮ່ວມ ຂອງ ສປປ ລາວ ໃນບັນດາສົນທິສັນຍາ ຫຼາຍຝ່າຍດ້ານສິ່ງແວດລ້ອມ. ນອກນັ້ນ ນະໂຍບາຍ ຂອງລັດຖະບານ ຍັງສົ່ງເສີມດ້ານໃດໜຶ່ງສະເພາະ ຂອງການພັດທະນາ ປະເພນີແລະ ວັດທະນະທຳຂອງກຸ່ມຊົນເຜົ່າ ແຫ່ງຊາດ. ນະໂຍບາຍດັ່ງກ່າວ ຖືກສະແດງອອກ ໃນລັດຖະທຳມະນູນ ແຫ່ງ ສປປ ລາວ ແລະ ຖືກຈັດຕັ້ງປະຕິບັດໃນກົດໝາຍນິຕິບັນຍັດ. ສອງດ້ານດັ່ງກ່າວ ຂອງນະໂຍບາຍ ຂອງລັດຖະບານ ຄົບກັນ ຢູ່ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ.

ໃນປີ 2010, ສປປ ລາວ ໄດ້ເຂົ້າເປັນພາຄີ ຂອງ ສົນທິສັນຍາ ຣຳຊາ ວ່າດ້ວຍ ທີ່ດິນບໍລິເວນນໍ້າ ທີ່ມີຄວາມສຳຄັນໃນສາກົນ (Ramsar) ແລະໄດ້ກຳນົດ ສະຖານທີ່ຕັ້ງ ຂອງ ຣຳຊາ 2 ແຫ່ງ ຄື: ເຊຈຳພອນ ແລະ ບຶງ ກຽດໂງ້ງ. ທີ່ດິນບໍລິເວນນໍ້າ ເຊຈຳພອນ ມີສະຖານທີ່ຕັ້ງຢູ່ ໃນສອງເມືອງ ຂອງແຂວງ ສະຫວັນນະເຂດ: ຄື ເມືອງ ຈຳພອນ ແລະ ເມືອງ ຊົນບູລີ. ໃນປີ 2011, ລັດຖະບານ ໄດ້ສ້າງຕັ້ງ ຄະນະກຳມະການແຫ່ງຊາດ ຄຸ້ມຄອງ ທີດິນບໍລິເວນນໍ້າ ຂອງ ສົນທິສັນຍາ ຣຳຊາ ໃນ ສປປ ລາວ ແລະ ເຈົ້າແຂວງ ແຂວງສະຫວັນນະເຂດ ກໍໄດ້ສ້າງຕັ້ງ ກອງເລຂາ ແລະ ໜ່ວຍປະຕິບັດງານ ໃນລະດັບແຂວງ ເພື່ອຄຸ້ມຄອງ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ.

ອີງຕາມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ), ສ່ວນໃຫຍ່ ຂອງ ທີ່ດິນບໍລິເວນນໍ້າ ແມ່ນຢູ່ໃຕ້ ບ້ານແກ້ງກອກ-ດົງ, ເມືອງຈຳພອນ ປະມານ 3 ກິໂລແມັດ , ລະຫວ່າງ ເສັ້ນທາງເລກ 9 ແລະ ເສັ້ນທາງເລກ 11. ສົ້ນເບື້ອງໃຕ້ ຂອງສະຖານທີ່ຕັ້ງ ແມ່ນຕິດກັບ ເມືອງຊົນບູລີ. ແຜນທີ່ທາງການ ຂອງ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ, ເຊິ່ງຖືກຂັດຕິດເປັນ ໃບຊ້ອນທ້າຍ 1. ນັ້ນຊີ້ໃຫ້ເຫັນ ສອງພື້ນທີ່ຫຼັກແຫຼ່ງ ຢູ່ໃນສະຖານທີ່ຕັ້ງທີ່ກ່າວມານັ້ນ[1].

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບການສະຖາປະນາຂຶ້ນໃນປີ 1975. ສີ່ ທົດສະວັດທຳອິດ ຂອງການຄົງຕົວຢູ່ ຂອງລັດນີ້, ປະຊາຊົນບັນດາຊົນເຜົ່າ ຂອງປະເທດ ໄດ້ຖືກຈັດເປັນສາມຊົນຊາດ ແລະ 68 ຊົນເຜົ່າ. ໃນປີ 2008 ສະພາແຫ່ງຊາດ ໄດ້ຮັບຮອງເອົາການ ເອີ້ນຊື່ຄືນໃໝ່ ແລະ ຈັດແບ່ງຄືນໃໝ່, ໂດຍອີງຕາມພາສາ, ຈຶ່ງໄດ້ຈັດເປັນ 49 ຊົນເຜົ່າ[2]. ປະຊາຊົນຈຳນວນຫຼວງຫຼາຍ ຂອງຊົນເຜົ່າເຫຼົ່ານີ້ ດຳລົງຊີວິດຢູ່ໃນ ຫຼື ຢູ່ໃກ້ເຂດ ທີ່ດິນບໍລິເວນນໍ້າ ແລະ ນຳໃຊ້ຊັບພະຍາກອນ ທີ່ດິນບໍລິເວນນໍ້າ ໂດຍສອດຄ່ອງກັບ ກົດລະບຽບ ແລະ ການປະຕິບັດທີ່ເປັນປະເພນີຂອງເຂົາເຈົ້າ.

---

[1] ດຳລັດເລກທີ່ 50/ນຍ, ລົງວັນທີ 21 ກຸມພາ 2011 ວ່າດ້ວຍການສ້າງຕັ້ງ ຄະນະກຳມະການແຫ່ງຊາດ ເພື່ອຄຸ້ມຄອງ ທີ່ດິນບໍລິເວນນໍ້າ ຂອງ ສົນທິສັນຍາ Ramsar ໃນ ສປປ ລາວ ແລະ ຂໍ້ຕົກລົງ ຂອງ ຄະນະກຳມະການແຂວງ ເພື່ອຄຸ້ມຄອງ ທີ່ດິນບໍລິເວນນໍ້າ ຂອງ ສົນທິສັນຍາ Ramsar ວ່າດ້ວຍການແຕ່ງຕັ້ງ ກອງເລຂານຸການ ແລະ ໜ່ວຍງານ ຈັດຕັ້ງປະຕິບັດ ສໍາລັບການຄຸ້ມຄອງ ທີ່ດິນບໍລິເວນນໍ້າ ເຊຈຳພອນ, ເມືອງຈຳພອນ, ແຂວງສະຫວັນນະເຂດ , ເລກທີ 1022/ຈຂ.ສວຂ ລົງວັນທີ 02 ສິງຫາ 2011, ວ່າດ້ວຍການແຕ່ງຕັ້ງ ກອງເລຂານຸການ ແລະ ໜ່ວຍປະຕິບັດງານ ລະດັບແຂວງ ເພື່ອຄຸ້ມຄອງ ສະຖານທີ່ຕັ້ງ ຣຳຊາ ຢູ່ ເຊຈຳພອນ, ເມືອງ ຈຳພອນ.

[2] ລັດຖະບານແຫ່ງ ສປປ ລາວ (2008). ມະຕິ ເລກທີ 213/ສພ ຂອງສະພາແຫ່ງຊາດ ວ່າດ້ວຍການຮັບຮອງ ເອົາ 48 ຊົນເຜົ່າ ທີ່ຖືກຈັດເປັນ 4 ໝວດພາສາ ຂອງ ສປປ ລາວ, ລົງວັນທີ 28 ພະຈິກ 2008.

ອັດຕາສ່ວນທີ່ໃຫຍ່ ຂອງ ພົນລະເມືອງ ຍັງຄົງດຳລົງຊີວິດ ຢູ່ເຂດຊົນນະບົດ ຫຼື ເຂດຫ່າງໄກສອກຫຼີກ ແລະ ປະຊາຊົນ ກໍຍັງສືບຕໍ່ ຄົບຫາສະມາຄົມກັນແລະກັນ ຢູ່ໃນກຸ່ມຊົນເຜົ່າ ແລະ ວັດທະນະທຳ ຂອງພວກຕົນເອງ, ບາງ ຈຳພວກ ກໍບໍ່ອ່ານພາສາລາວໄດ້. ເພາະສະນັ້ນ, ພົນລະເມືອງລາວຈຳນວນຫຼວງຫຼາຍ ຈຶ່ງບໍ່ຮູ້ກົດໝາຍນິຕິບັນຍັດ ຂອງປະເທດ ແລະ ບໍ່ມີຊ່ອງທາງເຂົ້າເຖິງກົດໝາຍເຫຼົ່ານັ້ນ. ລະບຽບ ແລະ ການປະຕິບັດ ທາງປະເພນີ, ເຊິ່ງມີ ວິວັດທະນາການຂຶ້ນມາ ເຊັ່ນດຽວກັບປະເທດ ແລະ ບັນດານະໂຍບາຍ ແຫ່ງຊາດ ຄ່ອຍໆເກີດຂຶ້ນມານັ້ນ ຈຶ່ງມີອິດ ທິພົນ ຕໍ່ການດຳລົງຊີວິດປະຈຳວັນຂອງພວກເຂົາ ຫຼາຍກວ່າ.

ເພື່ອສືບຕໍ່ເຮັດໃຫ້ ຫຼັກການແຫ່ງກົດໝາຍມີຄວາມເຂັ້ມແຂງຂຶ້ນ ແລະ ສົ່ງເສີມການປະສົມປະສານ ກົດໝາຍປະ ເພນີ ເຂົ້າໃນ ຂອບນິຕິກຳ ທາງການ, ໃນປີ 2010 ກະຊວງຍຸດຕິທຳ ຈຶ່ງໄດ້ດຳເນີນການ ສຳຫຼວດກົດໝາຍປະເພນີ ໃນປະເທດ[3]. ຄະນະກຳມະການສຳຫຼວດ ລວມມີ ບັນດາຜູ້ຕາງໜ້າ ຂອງ 49 ຊົນເຜົ່າ ແລະ ອົງການຂອງ ລັດຖະບານ ທັງໃນລະດັບສູນກາງ ແລະ ລະດັບທ້ອງຖິ່ນ. ບັນດາຜູ້ຊ່ຽວຊານ ຂອງ ສປປ ລາວ ກ່ຽວກັບຊົນເຜົ່າ ແຫ່ງຊາດ, ທີ່ປຶກສາທາງກົດໝາຍແຫ່ງຊາດໜຶ່ງທ່ານ, ບັນດາຜູ້ຕາງໜ້າຈາກຫຼາຍໆອົງການຈັດຕັ້ງ[4], ແລະ ນັກ ມະນຸດວິທະຍາສາກົນໜຶ່ງທ່ານ.

## 1.1 ໂຄງການ ກົດໝາຍປະເພນີ ຂອງ ກະຊວງຍຸດຕິທຳ

ໂຄງການກົດໝາຍປະເພນີ ທີ່ກະຊວງ ຍຸດຕິທຳ ໄດ້ດຳເນີນການໃນປີ 2010 ໂດຍໄດ້ຮັບການສະໜັບສະໜູນ ຈາກ ອົງການສະຫະປະຊາຊາດ ແຜນງານ ການພັດທະນາ (UNDP) ໄດ້ເປັນຂໍ້ລິເລີ່ມໃໝ່ໆ.
ຈຸດປະສົງຂອງໂຄງການແມ່ນ:

- ສະໜັບສະໜູນການສ້າງຍຸດທະສາດ ສຳລັບການເຊື່ອມຕໍ່ ລະບົບກົດໝາຍປະເພນີ ກັບ ຂອບວຽກ ນິຕິກຳຂອງລັດ;

- ສົ່ງເສີມການພັດທະນາຄວາມເຂົ້າໃຈ ແລະ ສະໜັບສະໜູນການສ້າງຄວາມສອດຄ່ອງກັນ ລະຫວ່າງ ຄ່າສະເລ່ຍ, ວິທີປະຕິບັດ ແລະ ມາດຕະຖານ ຂອງ ລະບົບທາງການ ແລະ ບໍ່ທາງການ, ຕາມທີ່ຈຳ ເປັນ; ແລະ

- ປັບປຸງຊ່ອງທາງເຂົ້າຫາຄວາມ ຍຸດຕິທຳ, ຄວາມມີສະຕິດ້ານກົດໝາຍ ແລະ ການໃຫ້ອຳນາດທາງກົດ ໝາຍໃນທຸກລະດັບ[5].

---

[3] UNDP/ກະຊວງຍຸດຕິທຳ, (2011) *ໂຄງການກົດໝາຍປະເພນີ* , ບົດລາຍງານ. ການສຳຫຼວດ ເປັນກິດຈະກຳທຳອິດ ພາຍໃຕ້ແຜນແມ່ບົດ ຂະແໜງການກົດໝາຍ ຮອດປີ 2020 ເຊິ່ງໄດ້ຖືກຮັບຮອງເອົາຢ່າງເປັນທາງການ ຈາກລັດຖະບານ ໃນວັນທີ 11 ກັນຍາ 2009 ໂດຍດຳລັດ ເລກທີ 266/ນຍ.

[4] ບັນດາອົງການຈັດຕັ້ງ ທີ່ມີຜູ້ຕາງໜ້າ ໃນຄະນະກຳມະການສຳຫຼວດ:ສະຖາບັນຄົ້ນຄວ້າກົດໝາຍ; ກົມກົດໝາຍ; ກົມເຜີຍແຜ່ກົດໝາຍ ຂອງກະຊວງ ຍຸດຕິທຳ; ແນວລາວສ້າງຊາດ; ສະຖາບັນວິທະຍາສາດ-ສັງຄົມ; ສະພາແຫ່ງຊາດ; ສະຫະພັນແມ່ຍິງລາວ; ກະຊວງການຕ່າງປະເທດ; ຫ້ອງການ ໄອຍະການ ປະຊາຊົນສູງສຸດ; ສານປະຊາຊົນສູງສຸດ; ໂຮງຮຽນກົດໝາຍ ວຽງຈັນ; ຄະນະກຳມະການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ; ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ; ສະມາຄົມທະນາຍຄວາມລາວ.

[5] ກະຊວງຍຸດຕິທຳ / ໂຄງການພັດທະນາ ຂອງ ອົງການ ສະຫະປະຊາຊາດ (MoJ/UNDP). (2011). ໂຄງການກົດໝາຍປະເພນີ, ພາກສັງລວມ ພາຍໃຕ້ຫົວຂໍ້ ”ໂຄງການກົດໝາຍ ປະເພນີ” (ໃນພາກສັງລວມ ບໍ່ມີໝາຍເລກໜ້າ).

ໂຄງການ ໄດ້ດຳເນີນການສຶກສາ ກົດໝາຍປະເພນີ ສຳລັບແຕ່ລະເຜົ່າ ຂອງທັງໝົດ 49 ເຜົ່າໃນປະເທດ. ບັນດາບົດລາຍງານ ຕ່າງຫາກ ສຳລັບແຕ່ລະຊົນເຜົ່າກໍ່ມີເປັນພາສາລາວ ຢູ່ໃນ ເວບໄຊ ຂອງແຜນງານສະໜັບສະໜູນ ແຜນແມ່ບົດ ຂອງຂະແໜງນິຕິກຳ ກະຊວງຍຸດຕິທຳ. http://www.laos-lsmp.org.
ບົດລາຍງານສັງລວມ ໂຄງການ, ໄດ້ຖືກຕີພິມອອກເປັນພາສາອັງກິດ ໃນປີ 2011 ແມ່ນອີງຕາມ 5 ບົດສຶກສາ ຂອງຈຳນວນ 49 ບົດ. ໜຶ່ງໃນຫ້າ ຊົນເຜົ່າ ທີ່ບົດລາຍງານສັງລວມໄດ້ກວມເອົານັ້ນ ແມ່ນເຜົ່າ ມະກອງ, ເຊິ່ງເປັນຊົນເຜົ່າທີ່ມີຢູ່ ໃນບ້ານ ຕາແຫຼວ ແລະ ໜອງນົກຂຽນ ຢູ່ເຂດເຊຈຳພອນ.

ການສຳຫຼວດ ຂອງ ໂຄງການ ຂອງກະຊວງ ຍຸດຕິທຳ/ອົງການສະຫະປະຊາຊາດ ໄດ້ກວມເອົາ ຫ້າຂົງເຂດທີ່ກວ້າງຂວາງ ຄື: ແນວຄວາມຄິດທາງດ້ານວັດທະນະທຳ, ລວມທັງທຳນຽມປະຕິບັດທາງສາດສະໜາ, ຄວາມຄິດຄວາມເຂົ້າໃຈກ່ຽວກັບ ສິດທິ ແລະ ການເປັນຜູ້ນຳ ແລະ ໂຄງປະກອບຂອງການຕັກລົງບັນຫາ, ດ້ານຄວາມນຶກຄິດ ແລະ ຂອບເຂດ ຂອງ ກົດໝາຍປະເພນີ, ດ້ານລະບຽບຂັ້ນຕອນ ຂອງ ກົດໝາຍປະເພນີ, ຄວາມສຳພັນຊຶ່ງກັນແລະກັນ ລະຫວ່າງ ກົດໝາຍປະເພນີ ແລະ ລະບົບຍຸດຕິທຳ ທີ່ເປັນທາງການ; ແລະ ການປ່ຽນແປງ ໃນ ບັນດາກົດໝາຍປະເພນີ ທີ່ ບັນດາຊົນເຜົ່າໄດ້ລາຍງານ. ການສຳຫຼວດ ໄດ້ສະຫຼຸບ ໂດຍການລະບຸ ບັນດາທາງເລືອກ ສຳລັບ ການຄົ້ນຄວ້າຕໍ່ໄປ ເພື່ອນຳໄປສູ່ ການຮັບຮູ້ກົດໝາຍ ປະເພນີ ຢູ່ໃນລະບົບກົດໝາຍ ນິຕິບັນຍັດ ໃນ ສປປ ລາວ ກໍ່ອາດເປັນໄປໄດ້.

ເນື້ອໃນທີ່ສຳຄັນ ຂອງ ກົດໝາຍປະເພນີ ຂອງໂຄງການ ກົດໝາຍປະເພນີ ກວມເອົາ:

- **ກົດໝາຍ ຄອບຄົວ**, ລວມມີ ພັນທະ ແລະ ສິດຕ່າງໆຂອງຄອບຄົວ, ບັນຫາຕ່າງໆ ທີ່ພົວພັນກັບເດັກນ້ອຍ, ການແຕ່ງດອງ, ຄວາມມີຮັກຮ່ວມເພດ ແລະ ແບບແຜນການສືບມໍລະດົກ;

- **ກົດໝາຍແພ່ງ**, ລວມມີ ການເປັນເຈົ້າຂອງ ແລະ ຊ່ອງທາງເຂົ້າເຖິງ ທີ່ດິນ, ບັນດາພັນທະ ແລະ ສິດຕ່າງໆຂອງສັງຄົມ ແລະ ຊຸມຊົນ, ສັນຍາຜູກພັນ ແລະ ການສືບທອດມໍລະດົກ ແລະ

- **ກົດໝາຍ ອາຍາ**, ລວມມີ ການກະທຳຜິດ ຕໍ່ບຸກຄົນ, ຊັບສິນ ແລະ ຊື່ສຽງ[6].

ໃນຂະນະ ທີ່ ຂໍ້ມູນຈຳນວນໜຶ່ງ ກ່ຽວກັບ ການເປັນເຈົ້າຂອງ ແລະ ການເຂົ້າເຖິງທີ່ດິນ ຈາກ ໂຄງການ ກົດໝາຍປະເພນີ ຂອງ ກະຊວງຍຸດຕິທຳ / ອົງການ ສະຫະປະຊາຊາດ ແຜນງານ ການພັດທະນາ ມີຄວາມກ່ຽວຂ້ອງ ສຳລັບບົດວິເຄາະນີ້, ໂຄງການດັ່ງກ່າວ ຜັດບໍ່ໄດ້ສຶກສາ ກົດໝາຍປະເພນີ ທີ່ຄຸ້ມຄອງ ຊັບພະຍາກອນທຳມະຊາດ. ເພາະສະນັ້ນ, ຂໍ້ມູນທີ່ເກັບກຳໄດ້ ແລະ ໄດ້ວິເຄາະ ໂດຍໂຄງການໃນປະຈຸບັນ ກ່ຽວກັບ ກົດໝາຍປະເພນີ ທີ່ຄຸ້ມຄອງ ຊັບພະຍາກອນທຳມະຊາດ ຈຶ່ງປະກອບເປັນ ອົງປະກອບໜຶ່ງທີ່ມີຄວາມສຳຄັນຢ່າງຍິ່ງ ສຳລັບບົດສຶກສາ ຂອງ MoJ/UNDP ແລະ ຕໍ່ຄວາມເຂົ້າໃຈກົດໝາຍ ປະເພນີ ໃນ ສປປ ລາວ.

## 1.2 ໂຄງການນີ້

ໃນປີ 2011 - ດ້ວຍການສະໜອງທຶນ ຈາກກະຊວງ ການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງສາທາລະນະລັດ ສະຫະພັນ ເຢຍລະມັນ (BMZ) ຜ່ານສູນກົດໝາຍ ສິ່ງແວດລ້ອມ ຂອງ IUCN - ຫ້ອງການ IUCN ປະຈຳ ສປປ ລາວ, ໂດຍມີການຮ່ວມມືກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ - ຈຶ່ງ

[6] MoJ/UNDP). (2011). *ໂຄງການ ກົດໝາຍ ປະເພນີ*. ບົດລາຍງານ. ໜ້າ 11 – 12.

ໄດ້ອອກແບບຄິດລິເລີ່ມ ໂຄງການໜຶ່ງຂຶ້ນມາ ເພື່ອສຶກສາ ກົດໝາຍປະເພນີ ທີ່ຄຸ້ມຄອງ ຊັບພະຍາກອນທຳມະຊາດ ຢູ່ໃນຊຸມຊົນ ທີ່ຢູ່ໃນ ແລະ ອ້ອມຮອບ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ແລະ ຊ່ວຍເຫຼືອດ້ວຍການ ສ້າງລະບຽບການ ສຳລັບສະຖານທີ່ຕັ້ງ ຣຳຊາ, ໂດຍປະສົມປະສານ ກົດໝາຍປະເພນີ ໃນທ້ອງຖິ່ນ ເຂົ້າໃຫ້ໄດ້ເທົ່າທີ່ເປັນໄປໄດ້.

ໂຄງການໃນປະຈຸບັນ ຈະເສີມເຕີມໃຫ້ແກ່ ການສຳຫຼວດ ກົດໝາຍປະເພນີ ຂອງ ກະຊວງຍຸດຕິທຳ ແລະຈະລາຍງານ ແລະ ໝູນໃຊ້ຜົນຂອງ ກໍລະນີສະເພາະ ຂອງ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ. ດ້ວຍການນຳໃຊ້ ວິທີການສິດທິມະນຸດ ໂຄງການນີ້ ຈະວິເຄາະ ກົດໝາຍປະເພນີ ທີ່ຄຸ້ມຄອງ ຊັບພະຍາກອນທຳມະຊາດ ເຊິ່ງບໍ່ໄດ້ມີການສຳຫຼວດ ໃນບົດສຶກສາ ຂອງ ກະຊວງ ຍຸດຕິທຳ ບໍ່ວ່າ ຈະຢູ່ໃນ ຫຼື ອ້ອມຮອບ ເຊຈຳພອນ ແລະ ສະໜັບສະໜູນການປະສົມປະສານ ບັນດາກົດໝາຍປະເພນີ ຂອງປະຊາຊົນ ທີ່ມີມາແຕ່ດົນນານ ເຂົ້າກັບ ບັຍດາກົດໝາຍນິຕິບັນຍັດ. ເປົ້າໝາຍ ກໍແມ່ນເພື່ອຮັບປະກັນ ການປົກປັກຮັກສາ ການຊົມໃຊ້ຢ່າງຍືນຍົງ ຊັບພະຍາກອນທຳມະຊາດ ຢູ່ໃນສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ດ້ວຍລະບຽບການ ທີ່ເໝາະສົມ ສຳລັບທ້ອງຖິ່ນ ແລະ ໃນເງື່ອນໄຂທົ່ວ ສປປ ລາວ.

ເຊຈຳພອນ ເປັນຖິ່ນທີ່ຢູ່ອາໄສ ຂອງ ໜຶ່ງໃນບັນດາປະຊາກອນປ່າ ຂອງ ແຂ້ສະຫຍາມ ທີ່ຍັງລອດເຫຼືອຢູ່ບໍ່ ພໍເທົ່າໃດຕົວ *(crocodylus siamensis)*, ເຊິ່ງເປັນຊະນິດພັນໜຶ່ງ ທີ່ຖືກປົກປ້ອງ ພາຍໃຕ້ກົດໝາຍສາກົນ ແລະ ກົດໝາຍ ແຫ່ງຊາດ. ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ແມ່ນຖືກປົກປ້ອງ ພາຍໃຕ້ ສົນທິສັນຍາ ຣຳຊາ ວ່າດ້ວຍ ທີ່ດິນບໍລິເວນນໍ້າ; ບັນດາຊະນິດພັນ ທີ່ໃກ້ຈະສູນພັນ ແລະ ບັນດາຊະນິດພັນສະເພາະ ຂອງ ສະຖານທີ່ຕັ້ງແຫ່ງນີ້ ແມ່ນໄດ້ຮັບການຄຸ້ມຄອງ ໂດຍບັນດາ ສົນທິສັນຍາສາກົນ ອື່ນໆ ( ເບິ່ງຂໍ້ 3.2 ) ແລະ ໂດຍກົດໝາຍ ແຫ່ງຊາດຂອງ ຂະແໜງການ. ຢູ່ໃນສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ນັ້ນ, ມີເຂດສະເພາະ ທີ່ຢູ່ພາຍໃຕ້ ການປົກປ້ອງ ຂອງ ກົດໝາຍ ປະເພນີ ສ່ວນເຂດທີ່ຖືກກຳນົດໃຫ້ເປັນ ເຂດອະນຸລັກ ຢູ່ຕາມບ້ານຕ່າງໆ ແມ່ນຖືກປົກປ້ອງ ພາຍໃຕ້ລະບຽບກົດໝາຍນິຕິບັນຍັດ ຂອງບ້ານ.

ອີງຕາມການສຳຫຼວດ ຂອງ ໂຄງການ, ມີປະຊາຊົນ 20.000 ກວ່າຄົນ ອາໄສຢູ່ໃນພື້ນທີ່ ຂອງສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ເຊິ່ງຢູ່ພາຍໃຕ້ ການປົກຄອງ ຂອງ ສອງເມືອງ. ມີຈຳນວນ 40 ບ້ານ ເຊິ່ງແຕ່ລະບ້ານ ແມ່ນມີເຖິງສີ່ ຊົນເຜົ່າທີ່ແຕກຕ່າງກັນ ປະກອບຢູ່ນຳ. ການສຳຫຼວດ ຂອງ ໂຄງການ ແນເປົ້າໝາຍໃສ່ 11 ບ້ານ ຂອງບັນດາບ້ານ ທີ່ມີແຕ່ລະຊົນເຜົ່າ ຂອງ ສີ່ຊົນເຜົ່າທີ່ກ່າວມານັ້ນ ອາໄສຢູ່ໃນໜຶ່ງບ້ານ ຫຼື ຫຼາຍບ້ານກວ່ານັ້ນ. ຊັບພະຍາກອນທຳມະຊາດ ຈາກ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ມັກເປັນສ່ວນທີ່ສຳຄັນທີ່ສຸດ ຂອງ ການດຳລົງຊີວິດ ຂອງ ປະຊາຊົນເຫຼົ່ານີ້, ໃນບາງກໍລະນີ ກໍສ້າງລາຍຮັບຈາກ ການຊົມໃຊ້ເປັນສິນຄ້າ.



ການປຶກສາຫາລືກັນເປັນກຸ່ມ ຢູ່ ບ້ານ ຕາແຫຼວ

## 2. ກົດໝາຍປະເພນີ ທີ່ຄຸ້ມຄອງ ຊັບພະຍາກອນທໍາມະຊາດ ຢູ່ ທີ່ດິນບໍລິເວນນໍ້າ[7] ເຊຈໍາພອນ

ມີ 12 ບ້ານຕັ້ງຢູ່ຂ້າງໃນ ຂອງ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ ແລະ ຢ່າງໜ້ອຍ ມີອີກ ສີ່ບ້ານ ທີ່ຮູ້ກັນວ່າມີດິນແດນ, ແຕ່ວ່າບໍ່ມີເຮືອນ ຢູ່ຂ້າງໃນ ສະຖານທີ່ຕັ້ງ ຣໍາຊາ. ຈົນເຖິງເວລາ ເຂດແດນຂອງບ້ານ ຖືກປັກຫຼັກໝາຍຢ່າງເປັນທາງການນັ້ນ ແມ່ນຈະບໍ່ຮູ້ໄດ້ວ່າ ມີອີກຈັກບ້ານຕື່ມ ອາດຈະມີດິນແດນ ທີ່ຕັ້ງຢູ່ຂ້າງໃນ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ. ບໍ່ມີເຮືອນຈັກຫຼັງ ທີ່ຕັ້ງຢູ່ພາຍໃນສອງເຂດຫຼັກແຫຼ່ງ ທີ່ຖືກກໍານົດ ຢູ່ຂ້າງໃນ ສະຖານທີ່ຕັ້ງ ຣໍາຊາ ແຕ່ວ່າ ບ້ານຕານສຸມ ແລະ ບາງທີກໍມີບ້ານອື່ນໆອີກ, ມີທີ່ດິນຢູ່ພາຍໃນ ເຂດຫຼັກແຫຼ່ງທີ່ກວ້າງທີ່ສຸດ ຂອງ ສະຖານທີ່ຕັ້ງ ຣໍາຊາ ກໍອາດເປັນໄປໄດ້.

ໂຄງການນີ້ ໄດ້ສໍາຫຼວດ ກົດໝາຍປະເພນີ ຢູ່ຫົກບ້ານ ທີ່ຢູ່ຂ້າງໃນ ສະຖານທີ່ຕັ້ງ ຣໍາຊາ, ຢູ່ສີ່ ບ້ານ ທີ່ຢູ່ລຽບຕາມ ຫຼື ຢູ່ໃກ້ ກັບສາຍເຊ ຈໍາພອນ ແລະ ໜຶ່ງບ້ານ ຄືບ້ານ ນານົກຂຽນ ທີ່ຢູ່ໄກຈາກ ສາຍເຊ ປະມານ 1,5 ກິໂລແມັດ ແລະ ປະຊາກອນຂອງບ້ານ ເປັນຊົນເຜົ່າ ມະກອງ 100%. ບ້ານ ນານົກຂຽນ ແມ່ນຖືກລວມເຂົ້າໃນການສໍາຫຼວດ ເພາະວ່າ ເຜົ່າມະກອງ ກວມພຽງແຕ່ 10% ຂອງປະຊາກອນ ຂອງ ບ້ານ ຕາແຫຼວ ແລະ ນອກຈາກນັ້ນ ກຸ່ມຊົນເຜົ່າມະກອງ ກໍບໍ່ມີຢູ່ໃນ ບ້ານອື່ນໆ ທີ່ໄດ້ສໍາຫຼວດ.

ເພື່ອເປັນຂໍ້ມູນເພີ່ມເຕີມ ກ່ຽວກັບ ສະພາບເງື່ອນໄຂ ດ້ານສັງຄົມ-ເສດຖະກິດ ໃນບ້ານທີ່ໄດ້ຖືກສໍາຫຼວດ ແລະກ່ຽວກັບຄວາມເຂົ້າໃຈ ຂອງເຂົາເຈົ້າ ຕໍ່ກົດໝາຍ ປະເພນີ ແລະ ກົດໝາຍນິຕິບັນຍັດ. ເບິ່ງ ໃບຊ້ອນທ້າຍ 2.
ປະມານ 86 % ຂອງຜູ້ທີ່ຕອບຄໍາຖາມໃນ ບ້ານທີ່ໄດ້ຖືກສໍາຫຼວດ ນັ້ນໄດ້ລາຍງານວ່າ ພວກຕົນ ປະຕິບັດຕາມກົດໝາຍປະເພນີ. ໝົດທຸກຄົນ ທີ່ຕອບຄໍາຖາມ ຢູ່ໃນ 6 ຈາກ 11 ບ້ານທີ່ໄດ້ຖືກລົງສໍາຫຼວດນັ້ນ ລາຍງານວ່າ

[7] ຂໍ້ນີ້ແມ່ນປັບຈາກ ຂໍ້ 4 ໃນ ໃບຊ້ອນທ້າຍ 2.

ພວກຕົນ ຖືກົດປະເພນີ ກວ່າ ກົດໝາຍນິຕິບັນຍັດ;; ຜູ້ທີ່ຕອບຄຳຖາມ ຢູ່ໃນ 5 ບ້ານ ຮັບຮູ້ກົດໝາຍ ນິຕິບັນຍັດ ແຕ່ວ່າ ບໍ່ຢູ່ໃນລະດັບດຽວກັບ ການທີ່ເຂົ້າຖືກົດປະເພນີ. ເບິ່ງຕາຕະລາງ 1.

**ຕາຕະລາງ 1 ການປະຕິບັດຕາມ ກົດໝາຍປະເພນີ ແລະ ກົດໝາຍນິຕິບັນຍັດ**

| **ບ້ານ** | **ຈຸດທີ່ຕັ້ງ ທີ່ກ່ຽວຂ້ອງກັບ ສະຖານທີ່ຕັ້ງ ຣໍາຊາ ເຊຈຳພອນ** | **ກຸ່ມຊົນເຜົ່າ** | **ກົດໝາຍປະເພນີ** (ສ່ວນຮ້ອຍ) | **ກົດໝາຍນິຕິບັນຍັດ** (ສ່ວນຮ້ອຍ) |
|---|---|---|---|---|
| ຕານສຸມ | ຂ້າງໃນ ບ້ານທີ່ຢູ່ໃກ້ທີ່ສຸດກັບ ເຂດທີ່ໃຫຍ່ກວ່າ ຂອງ ສອງເຂດຫຼັກແຫຼ່ງ | ໄຕ ກະໄດ (ລາວລຸ່ມ) | 100 | 0 |
| ຫົວເມືອງ | ຂ້າງໃນ | ລາວລຸ່ມ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ |
| ແກ້ງກອກ-ດົງ | ຂ້າງໃນ | ໄຕ ກະໄດ (ລາວລຸ່ມ) | 83 | 17 |
| ດອນແດງ | ຂ້າງໃນ | ຜູ້ໄທ/ ໄຕ ກະໄດ | 71 | 29 |
| ຕາແຫຼວ | ຂ້າງໃນ ບ້ານທີ່ຢູ່ໃກ້ທີ່ສຸດ ກັບເຂດທີ່ນ້ອຍກວ່າ ຂອງສອງເຂດຫຼັກແຫຼ່ງ | ຜູ້ໄທ 90, ລາວລຸ່ມ/ ມະກອງ 10 | 100 | 0 |
| ນາກະທາງ | ຂ້າງໃນ | ກະຕ່າງ | 100 | 0 |
| ດົງເໜືອງ | ຢູ່ສາຍນໍ້າເຊ ຈຳພອນ | ໄຕ ກະໄດ (ລາວລຸ່ມ) | 75 | 25 |
| ເຊ | ຢູ່ສາຍເຊຈຳພອນ | ໄຕ ກະໄດ (ລາວລຸ່ມ) | 100 | 0 |
| ຊາຄູນ ເໜືອ | ໃກ້ສາຍເຊຈຳພອນ | ໄຕ ກະໄດ (ລາວລຸ່ມ) | 53 | 47 |
| ດົງຕະແບງ | ໃກ້ສາຍເຊຈຳພອນ | ກະຕ່າງ | 100 | 0 |
| ນານົກຂຽນ | 15km ໄປທາງທິດຕາເວັນຕົກສ່ຽງເໜືອ | ມະກອງ | 100 | 0 |
| **ລວມ** | | | **86** | **14** |

ອີງຕາມ ການສຶກສາ ຂອງ MoJ/UNDP ບໍ່ແມ່ນວ່າ ໝົດທຸກຊົນເຜົ່າ ທີ່ອາໄສ ຢູ່ໃນ ຫຼື ອ້ອມຮອບ ສະຖານທີ່ຕັ້ງ ຣໍາຊາ ມີກົດໝາຍປະເພນີ ອັນດຽວກັນ. ເຖິງຢ່າງໃດກໍຕາມ, ທຳນຽມປະຕິບັດ ກົດໝາຍປະເພນີ ທີ່ຖືກປະຕິບັດ ຕາມ ຢູ່ໝົດທຸກບ້ານ ທີ່ໄດ້ລົງສຳຫຼວດ ເພື່ອໂຄງການນີ້ນັ້ນ, ແມ່ນຄ້າຍຄືກັນຫຼາຍທີ່ສຸດ, ເຖິງແມ່ນວ່າ ມີພຽງແຕ່ ສອງບ້ານເທົ່ານັ້ນ ທີ່ມີຫຼາຍກວ່າສອງເຜົ່າອາໄສຢູ່.

ກົດໝາຍປະເພນີ ສຳລັບ ຊັບພະຍາກອນທຳມະຊາດ ໃນບັນດາບ້ານ ທີ່ໂຄງການໄດ້ລົງສຳຫຼວດນັ້ນ ມີອິດທິພົນ ຕໍ່ການໃຊ້ ຂອງ ມະນຸດ ທັງການໃຊ້ລະບົບນິເວດ ກໍຄື ການໃຊ້ບັນດາຊະນິດພັນ. ກົດໝາຍປະເພນີ ຮັບຮູ້ ເຂດທີ່ຖືກກຳນົດ ບ່ອນທີ່ ອະນຸຍາດ ໃຫ້ເຮັດກິດຈະກຳສະເພາະໄດ້, ຈຳກັດໃນລະດັບໃດໜຶ່ງ ຫຼືວ່າເກືອດຫ້າມພ້ອມກັນທັງໝົດ. ມັນຍັງປ້ອງກັນ ໂດຍສະເພາະ ບັນດາຊະນິດພັນ ແລະ ໃນຫຼາຍໆກໍລະນີ ຍັງອະນຸຍາດ ໃຫ້ລ່າສັດນ້ອຍ ເຊັ່ນ ກະຮອກ/ໜູ ແລະ ແລນ ແຕ່ວ່າບໍ່ໃຫ້ລ່າສັດ ຊະນິດອື່ນໆ. ພວກຊາວບ້ານ ໃຊ້ນິທານ, ເລື່ອງເລົ່າ ເປັນຕຳນານ

ເພື່ອປະກອບ ແລະເພີ່ມຄວາມລະອຽດ ກ່ຽວກັບ ກົດໝາຍປະເພນີ ເພື່ອໃຫ້ຈຸດປະສົງຂອງມັນແຈ່ມແຈ້ງ ແລະເຂົ້າໃຈງ່າຍ.

ການສຳຫຼວດຂອງໂຄງການ ໄດ້ຄົ້ນພົບຫຼາຍຊະນິດຕ່າງກັນ ຂອງການປົກປັກຮັກສາ ທີ່ເປັນປະເພນີ ແລະ ມີການລົງໂທດໂດຍການບັງຄັບໃຊ້ເອງຢ່າງກວ້າງຂວາງ ພາຍໃຕ້ກົດໝາຍ ປະເພນີ. ບັນດາກິດຈະກຳ ທີ່ຖືກເກືອດຫ້າມ ຫຼື ຈຳກັດ ພາຍໃຕ້ກົດໝາຍ ປະເພນີ ໃນບ້ານທີ່ໂຄງການໄດ້ລົງສຳຫຼວດມີຄືດັ່ງນີ້:

- ການລ່າສັດ;
- ການຫາປາ;
- ການຕັດໄມ້;
- ການເກັບກູ້ເຄື່ອງປ່າ-ຂອງດົງ;
- ການເອົານໍ້າ;
- ການໃຊ້ເຮືອ; ແລະ
- ການປ່ອຍສັດລົງກິນຫຍ້າ.

ການສຳຫຼວດ ໄດ້ຄົ້ນພົບ ປ່າສະຫງວນ ແບບປະເພນີ 24 ແຫ່ງ ທີ່ຢູ່ໃນ ແລະ ອ້ອມຮອບ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ. ເບິ່ງ ຕາຕະລາງ 2. ເຂດເຫຼົ່ານັ້ນ ສາມາດຖືກຈັດປະເພດດັ່ງນີ້:

- ປ່າສະຫງວນໄວ້ສຳລັບ ພິທີກຳທາງຄວາມເຊື່ອຖື ທີ່ຮັກສາ ຄວາມເຊື່ອຖືທາງສາດສະໜາ ຫຼື ທາງວັດທະນະທຳ ແລະ ຄວາມຕ້ອງການ; ແລະ

- ປ່າສະຫງວນຂອງຊຸມຊົນ ທີ່ບໍ່ກ່ຽວກັບເລື້ອງຄວາມເຊື່ອ/ຈິດວິນຍານ ທີ່ຖືກສ້າງຕັ້ງຂຶ້ນມາ ໂດຍຜ່ານທຳນຽມປະຕິບັດມາແຕ່ ບັນພະບູລຸດ ແລະ ມາຫຼັງໆນີ້ ທຳນຽມປະຕິບັດ ຂອງຊຸມຊົນ ເພື່ອສືບຕໍ່ຮັກສາຊ່ອງທາງເຂົ້າຫາ ຊັບພະຍາກອນ ເພື່ອການດຳລົງຊີວິດ ແລະ ຮັບປະກັນ ການປົກປັກຮັກສາສັດປ່າ.

**ຕາຕະລາງ 2 ບັນດາສະຖານທີ່ ທີ່ຖືກສະຫງວນໄວ້ ພາຍໃຕ້ ກົດໝາຍປະເພນີ ຢູ່ໃນ 10 ບ້ານ ທີ່ຢູ່ໃນ ແລະ ອ້ອມຮອບ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ( 11 ບ້ານ ທີ່ໂຄງການໄດ້ສຳຫຼວດ[8] )**

| **ຢູ່ຂ້າງໃນ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ** | |
|---|---|
| **ແກ້ງກອກ ດົງ**<br>1. ໜອງສັກສິດ/ໜອງ ປູ່ຕາ<br>2. ໜອງ ແມ່ຮ້າງ<br>3. ປ່າສັກສິດ / ດົງມະເຫສັກ<br>4. ປ່າຊ້າ | **ຕາແຫຼວ**<br>1. ປ່າວັດ<br>2. ໜອງສັກສິດ ເສືອໂຄກ ແລະ ປ່າເສືອໂຄກ<br>3. ປ່າສັກສິດ / ດົງມະເຫສັກ<br>4. ປ່າຊ້າ |
| **ດອນແດງ**<br>1. ໜອງເຕົ່າ / ໜອງປາຝາ<br>2. ປ່າຊ້າ | **ນາກະທາງ**<br>▪ ປ່າສັກສິດ / ດົງມະເຫສັກ ດອນແຮ້ວ (ຢູ່ບ້ານຂ້າງໃນ) |

[8] ຕາມສຸມບໍ່ມີປ່າສະຫງວນ ທາງປະເພນີ

<table>
<tr><td colspan="2">ຢູ່ຂ້າງໃນ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ</td></tr>
<tr><td>3. ປ່າສັກສິດ / ດົງມະເຫສັກ ດອນແຮ້ວ</td><td rowspan="2">▪ ປ່າຊ້າ<br>▪ ປ່າສັກສິດ / ດົງມະເຫສັກ (ຢູ່ນອກບ້ານ, ຢູ່ໃນທົ່ງນາ)<br>▪ ໜອງ / ໜອງຝາງແດງ</td></tr>
<tr><td>ຫົວເມືອງ<br>ປ່າສັກສິດ / ດົງມະເຫສັກ</td></tr>
<tr><td colspan="2">ລຽບຕາມສາຍນໍ້າເຊ ຈໍາພອນ</td></tr>
<tr><td>ຊະຄຸນ ເໜືອ<br>ປ່າຊ້າ</td><td>ດົງມ່ວງ<br>ປ່າລີງສັກສິດ / ດົງລີງ ( ຮ່ວມກັບຊະຄຸນເໜືອ)</td></tr>
<tr><td>ເຊ<br>1. ປ່າສັກສິດ /ດົງມະເຫສັກ ດອນແຮ້ວ ກັບໜອງທີ່ຕໍ່ກັບ / ໜອງ ຊຽງເຂດ<br>2. ປ່າສັກສິດ / ດົງກູດຍາງ</td><td rowspan="2">ດົງຕາແບງ<br>1. ໜອງ /ໜອງທ່າຍູງນ້ອຍ<br>2. ຫ້ວຍລາດ<br>3. ປ່າສັກສິດ / ດົງມະເຫສັກ ດອນແຮ້ວ</td></tr>
<tr><td>ນາພີກຂຽບ<br>ປ່າສະຫງວນ / ມະເຫສັກ ດອນແຮ້ວ ແລະ ກູດ ແຊງ</td></tr>
</table>

## 2.1 ປ່າສະຫງວນ ສໍາລັບເປັນ ທໍາຜີບ້ານ

ສ່ວນໃຫຍ່ ຂອງ ປ່າສະຫງວນ ຕາມກົດໝາຍປະເພນີ ໃນບ້ານທີ່ໄດ້ລົງສໍາຫຼວດນັ້ນ ເປັນປ່າສະຫງວນ ທໍາຜີບ້ານ. ຄວາມເຊື່ອທາງສາດສະໜາ ໄດ້ສ້າງ ກົດໝາຍປະເພນີຕ່າງໆ ທີ່ໃຊ້ການ ໂດຍທາງກົງ ແລະທາງອ້ອມ ອັນເປັນຜົນດີໃຫ້ແກ່ ການອະນຸລັກ ຊັບພະຍາກອນທໍາມະຊາດ ຢູ່ໃນບ້ານທີ່ໄດ້ລົງສໍາຫຼວດ ຢູ່ໃນ ແລະ ຢູ່ອ້ອມຮອບ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ.



ຫໍຜີ ທີ່ຢູ່ໃກ້ໆກັບຕົ້ນໄມ້ສັກສິດ ຢູ່ທີ່ດິນບໍລິເວນນໍ້າ ເຊຈໍາພອນ

ຊາວບ້ານພາກັນ ເຝົ້າດູແລ ປ່າສັກສິດ, ໜອງສັກສິດ ແລະປ່າຊ້າ ຢ່າງເອົາໃຈໃສ່ ຢູ່ຕາມບ້ານຕ່າງໆ ທີ່ໂຄງການໄດ້ລົງສໍາຫຼວດ ໃຫ້ເປັນສະຖານທີ່ ໄຫວ້ວອນບູຊາ ແລະ ເປັນຫໍວິນຍານ ຫຼື ເງືອກ/ນາກ (ງູສັກສິດ). ເຊື່ອກັນວ່າ ວິນຍານ ນໍ້າ ແລະ ວິນຍານທີ່ເຝົ້າປ່າໄມ້ ຈະລົງໂທດ ຜູ້ທີ່ບຸກລຸກເຂົ້າທີ່ດິນທີ່ສະຫງວນໄວ້, ລ່າສັດທີ່ຫວງຫ້າມ ຫຼືຜູ້ທີ່ໃຊ້ຊີວິດໂດຍບໍ່ມີສິນທໍາ. ຫຼາຍໆ ບຶງໃຫຍ່ ແລະ ໜອງ ກໍຄືປ່າ ສະຫງວນເຫຼົ່ານີ້  ທີ່ຢູ່ໃນເຂດທີ່ດິນບໍລິເວນນໍ້າ ໄດ້ກາຍມາເປັນ ສະຖານທີ່ແຜ່ພັນ ສໍາລັບ ສັດນໍ້າ ແລະ ສັດບົກ. ຕົວຢ່າງຈໍານວນໜຶ່ງ ກໍໄດ້ແກ່ ດົງມະເຫສັກ ( ປ່າສັກສິດ ) ຢູ່ບ້ານດົງມ່ວງ ແລະ ບ້ານແກ້ງກອກດົງ, ໜອງສັກສິດ ຢູ່ບ້ານແກ້ງກອກດົງ ແລະ ບ້ານດອນແດງ ແລະປ່າຊ້າ ຢູ່ບ້ານ ທີ່ໄດ້ລົງສໍາຫຼວດຈໍານວນໜຶ່ງ.

## 2.2 ປ່າ ແລະ ໜອງສັກສິດ

ໝົດທຸກບ້ານ ທີ່ໄດ້ລົງສໍາຫຼວດ ລ້ວນແຕ່ມີ ປ່າສັກສິດ ຍົກເວັ້ນແຕ່ ບ້ານ ຕານສຸມ ແລະ ບ້ານ ຊະຄຸນເໜືອ ເທົ່ານັ້ນ. ບ້ານຕານສຸມ ມີປ່າສັກສິດ ຮ່ວມ ກັບອີກບ້ານໜຶ່ງ ທີ່ບໍ່ແມ່ນໜຶ່ງ ໃນຈໍານວນບ້ານ ທີ່ໄດ້ລົງສໍາຫຼວດ. 5 ບ້ານທີ່ມີປ່າສັກສິດ ໄດ້ແກ່ ບ້ານຕາແຫຼວ, ບ້ານແກ້ງກອກດົງ, ບ້ານເຊ, ບ້ານດອນແດງ ແລະ ບ້ານດອນຕະແບ່ງ.

ປ່າ ແລະ ໜອງເຫຼົ່ານີ້ ຖືກເຊື່ອກັນວ່າ ເປັນສະຖານທີ່ທີ່ສັກສິດ ຂອງ ວິນຍານ ຜູ້ເຝົ້າຮັກສາ ທີ່ປົກປ້ອງ ບັນດາສະມາຊິກຂອງຊຸມຊົນທັງໝົດ. ເມື່ອເປັນເຊັ່ນນັ້ນ, ພວກເພິ່ນ ຕ້ອງໄດ້ຮັບຄວາມເຄົາຣົບນັບຖື ແລະ ບໍ່ໃຫ້ມີການແຕະຕ້ອງ. ຕາມທໍາມະດາ ປ່າສັກສິດ ແມ່ນຢູ່ໃກ້ໆກັບໜອງ, ຍອດຫ້ວຍ ຫຼື ແຄມຝັ່ງສາຍນໍ້າໃຫຍ່; ບາງເທື່ອໜອງ ຫຼື ຫ້ວຍເຫຼົ່ານັ້ນ ກໍຢູ່ພາຍໃຕ້ການປົກປ້ອງ ໂດຍປະເພນີເຊັ່ນດຽວກັນ.



ໜອງປາຝາ

*ໜອງປາຝາ / ໜອງເຕົ່າ / ຢູ່ບ້ານດອນແດງ ເປັນ ໜອງສະຫງວນ ເພາະວ່າເຕົ່າໄດ້ມາອາໄສຢູ່ໃນໜອງດັ່ງກ່າວ ກ່ອນໜ້າການສ້າງຕັ້ງບ້ານ. ພວກຊາວບ້ານ ພາກັນເຊື່ອວ່າ ວິນຍານທັງຫຼາຍ ປົກປ້ອງ ແລະ ກໍສະຖິດຢູ່ໃນເຕົ່າເຫຼົ່ານັ້ນ ໂດຍເປັນລ່າງບອກວ່າ ເຕົ່າເຫຼົ່ານັ້ນ ເປັນລູກ ຂອງ ບັນດາວິນຍານທັງຫຼາຍເຫຼົ່ານັ້ນ.*

*ບັນດາເຕົ່າເຜືອກທີ່ຖືກພົບເຫັນຢູ່ໃນໜອງແຫ່ງນີ້ ກ່ອນໜ້ານີ້ 20–30 ປີ ໄດ້ຖືກເຊື່ອກັນວ່າເປັນສິ່ງສັກສິດທີ່ສຸດ, ແຕ່ພວກມັນບໍ່ໄດ້ປະກົດຕົວໃຫ້ເຫັນອີກໃນຊຸມປີຫຼັງໆມານີ້.*

*ອົງການປົກຄອງແຂວງ ຢູ່ຊາຍແດນ ຈັບໄດ້ຊາວຄ້າຂາຍ ທີ່ເດີນ ທາງຜ່ານເຂດດັ່ງກ່າວ ເຊິ່ງຫາບເຕົ່າຈຳນວນ 12 ຕົວ: ເຕົ່າເຫຼົ່ານັ້ນໄດ້ຖືກປ່ອຍລົງສູ່ໜອງແຫ່ງນີ້ ແລະ ກໍຍັງຄົງເຫັນພວກມັນຢູ່.*

*ບຸກຄົນ ຂອງ ຊາວບ້ານແມ່ນບໍ່ໄດ້ຮັບອະນຸຍາດ ໃຫ້ ຫາປາ ແລະໃຊ້ເຮືອ ຢູ່ໃນໜອງປາຝາ, ແຕ່ກໍອະນຸຍາດໃຫ້ ຫາປາບາງຄັ້ງຄາວເພື່ອການນຳໃຊ້ຮ່ວມໝູ່. ພວກຊາວບ້ານ ອາດ ບໍ່ລ່າສັດໃນປ່າທີ່ຢູ່ອ້ອມຮອບໜອງແຫ່ງນີ້,ແຕ່ອາດ ເກັບເຄື່ອງປ່າຂອງດົງ ຈາກວົງອ້ອມໜອງນັ້ນໃນຂອບເຂດ 10 ແມັດ ຖ້າພວກເຂົາເຈົ້າໄດ້ຂໍອະນຸຍາດຈາກບັນດາວິນຍານ.*

*ເຖິງຢ່າງໃດກໍຕາມ, ເດັກນ້ອຍ ແມ່ນໄດ້ຮັບອະນຸຍາດໃຫ້ຫຼິ້ນ ແລະ ລອຍນ້ຳໃນໜອງນີ້ ແລະ ຜູ້ຄົນກໍໄດ້ຮັບອະນຸຍາດໃຫ້ສຳຜັດລູບເຕົ່ານັ້ນໄດ້. ຖ້າກົດເຫຼົ່ານີ້ ຫາກຖືກລະເມີດ, ການລົງໂທດຈະແມ່ນເລື້ອງຂອງວິນຍານ ເພາະບໍ່ມີ ການລົງໂທດຂອງບ້ານທີ່ຖືກສ້າງຕັ້ງຂຶ້ນ.*

*ໜອງເຕົ່າໄດ້ກາຍມາເປັນແຫຼ່ງທ່ອງທ່ຽວໃນແຂວງ ແລະ ເປັນແຫຼ່ງລາຍຮັບໃໝ່ສຳລັບຊາວບ້ານ. ດ້ວຍການຈ່າຍເງິນ 2000 ກີບ ຜູ້ຄົນກໍຈະໄດ້ຜ່ານຂົວທີ່ສ້າງຂຶ້ນໃນປີ 2010 ທີ່ມຸ່ງໄປສູ່ຫໍນ້ອຍໆ ທີ່ຢູ່ກາງໜອງ. ດ້ວຍຄ່າທຳນຽມເລັກນ້ອຍ, ພວກເດັກນ້ອຍທີ່ຫຼິ້ນຢູ່ໃນເຂດນັ້ນ ຈະຂັບຮ້ອງເພງພື້ນເມືອງ ແລະ ເຕົ່າກໍຈະພາກັນຟູຂຶ້ນມາໜ້ານ້ຳ, ລໍຖ້າ ການເກືອດ້ວຍອາຫານທີ່ມີຂາຍຢູ່ທາງເຂົ້າ.*

*ເຖິງແມ່ນວ່າ ນີ້ເປັນແຫຼ່ງລາຍຮັບສຳລັບບ້ານ, ແຕ່ພວກຊາວບ້ານກໍພາກັນກັງວົນ ກ່ຽວກັບການໃຊ້ປີໄທຍດຂອງເຕົ່າເພື່ອການທ່ອງທ່ຽວ ແລະ ສຳລັບຜູ້ຄົນທີ່ມາຈາກບັນດາປະເທດທີ່ຢູ່ອ້ອມແອ້ມປະເທດເຮົາ.*

ປ່າສັກສິດ ຢູ່ບ້ານ ນານິກຂຽນ ລວມມີ ໜອງເຊັງ / ກູດ ເຊັງ ແລະ ທັງສອງແມ່ນຢູ່ໃຕ້ ການປົກປັກຮັກສາ ດ້ວຍປະເພນີ; ຢູ່ຍ້ານແກ້ງກອກ ດົງ ປ່າສັກສິດ ແມ່ນຢູ່ຕິດກັບ ໜອງສັກສິດ / ໜອງປູ່ຕາ ເຊິ່ງຢູ່ພາຍໃຕ້ ການປົກປ້ອງໂດຍປະເພນີ; ແລະຢູ່ ບ້ານດອນແດງ ປ່າສັກສິດ ແມ່ນຢູ່ໃກ້ ກັບໜອງເຕົ່າ / ໜອງປາຝາ, ໜອງປາຝາ ທີ່ມີຊື່ສຽງຂອງເມືອງ ຈຳພອນ ເຊິ່ງຢູ່ພາຍໃຕ້ກົດໝາຍປະເພນີ. ບ້ານ ນາກະທາງ ມີປ່າສັກສິດສອງແຫ່ງ: ແຫ່ງໜຶ່ງຢູ່ໃກ້ໃຈກາງຂອງບ້ານ ແລະ ອີກແຫ່ງໜຶ່ງ ຢູ່ກາງທົ່ງນາ ນອກໃຈກາງຂອງບ້ານ. ບາງກິດຈະກຳ ທີ່ຖືກຫ້າມຢູ່ໃນປ່າທີ່ຢູ່ໃນບ້ານ ກໍໄດ້ຮັບອະນຸຍາດ ໃຫ້ເຮັດຢູ່ໃນປ່າ ທີ່ຢູ່ນອກບ້ານ.



*ລີງສັກສິດ ຢູ່ ດົງລີງ*

*ປ່າລີງ / ດົງລີງ ຢູ່ບ້ານດົງມ່ວງ ເປັນປ່າສັກສິດ ທີ່ມີເນື້ອທີ່ກວ້າງ ປະມານ 11 ເຮັກຕາ. ລີງໄດ້ມາອາໄສຢູ່ປ່າແຫ່ງນີ້ກ່ອນທີ່ບ້ານຖືກສ້າງຕັ້ງຂຶ້ນ ແລະ ປັດຈຸບັນນີ້ ມີລີງຈຳນວນ 1.000 ກວ່າຕົວ ແລະແບ່ງອອກເປັນ 5 ຝູງທີ່ແຕກຕ່າງກັນ. ສັດອື່ນໆ ທີ່ຖືກພົບເຫັນຢູ່ໃນປ່າແຫ່ງນີ້ ກໍລວມມີ ເຫັ້ງ/ແລນ, ເຕົ່າ ແລະ ງູ.*

*ພວກຊາວບ້ານ ພາກັນເຊື່ອວ່າ ມີວິນຍານ ສະຖິດຢູ່ໃນປ່າດົງແຫ່ງນີ້ ແລະ ເຊື່ອວ່າລີງນັ້ນ ເປັນສັດສັກສິດ. ຍ້ອນແນວນັ້ນ , ພວກຊາວບ້ານ ຈຶ່ງບໍ່ໄດ້ຮັບອະນຸຍາດ ໃຫ້ລ່າ ແລະ ເຮັດແນວໃດແນວໜຶ່ງ ທີ່ເປັນອັນຕະລາຍ ຕໍ່ລີງ, ເຖິງແມ່ນວ່າ ລີງ ຈະລັກ ຫຼື ກໍ່ຄວາມລົບກວນແນວອື່ນ ກໍ່ຢ່າ ກໍບໍ່ຄວນແຕະຕ້ອງພວກມັນ.*

*ພວກຊາວບ້ານ ເຖິງຂັ້ນວ່າ ບໍ່ບັງອາດທີ່ຈະເວົ້າແນວບໍ່ດີ ກ່ຽວກັບລີງ, ເຖິງແມ່ນວ່າ, ຈະເວົ້າດ້ວຍຄວາມຊື່ສັດ ແທ້ໆກໍຕາມ, ໂດຍສະເພາະ ຖ້າພວກເຂົາເຈົ້າ ຫາກຢູ່ໃກ້ໆກັບພວກມັນ. ເຖິງແມ່ນວ່າ ບໍ່ອະນຸຍາດ ໃຫ້ ລ່າສັດ ແລະ ຕັດໄມ້ , ແຕ່ວ່າ ຊາວບ້ານ ກໍໄດ້ຮັບອະນຸຍາດ ໃຫ້ເກັບໄມ້ນອນຂອນຕາຍດ້ວຍການຂໍອະນຸຍາດຈາກ ວິນຍານທັງຫຼາຍ ແລະ ເກັບເຄື່ອງປ່າຂອງດົງກໍໄດ້ ໂດຍບໍ່ຕ້ອງຂໍອະນຸຍາດ. ປ່າດົງລີງ ໄດ້ກາຍມາເປັນ ແຫຼ່ງທ່ອງທ່ຽວທີ່ສຳຄັນ ແຫ່ງໜຶ່ງ ໃນເມືອງ ຈຳພອນ . ການຂະຫຍາຍຕົວ ຂອງການທ່ອງທ່ຽວ ໄດ້ນຳໄປສູ່ ລາຍຮັບທີ່ເພີ່ມຂຶ້ນ ສຳລັບຊາວບ້ານ ເພາະເຂົາເຈົ້າ ຂາຍກ້ວຍ ເພື່ອໄປ ເກືອພວກລີງ ແລະ ເຂົາເຈົ້າ ກໍມີ ຮ້ານອາຫານແຫ່ງໜຶ່ງ ແລະ ມີການບໍລິການ ໂຮມສະເຕຍ໌ ສຳລັບ ນັກທ່ອງທ່ຽວ (ຮັບນັກທ່ອງທ່ຽວ ມາພັກຢູ່ເຮືອນ ຂອງຊາວບ້ານ).*

ການລ່າສັດ ໃນປ່າສັກສິດ ຢູ່ໃນບ້ານ ທີ່ໂຄງການໄດ້ລົງໄປສຳຫຼວດ ແມ່ນຖືກຫ້າມ ເພາະວ່າຊາວບ້ານ ເຊື່ອວ່າ ຈຳພວກສັດ ພາກັນປົກປ້ອງ ວິນຍານທີ່ເຝົ້າຮັກສາ. ບັນດາຕົວຢ່າງ ກໍລວມມີ ຈຳພວກລີງ ໃນປ່າລີງ/ດົງລີງ ຢູ່ບ້ານດົງມ່ວງ ແລະ ເຕົ່າທີ່ຢູ່ໜອງສັກສິດ / ໜອງປູ່ຕາ ຂອງ ບ້ານ ແກ້ງກອກດົງ ແລະ ໜອງເຕົ່າ / ໜອງປາຝາ ຂອງບ້ານດອນແດງ ນັ້ນເອງ. ຕາຕະລາງ ທີ່ມີການແຍກ ຈຳພວກສັດ ທີ່ຖືກພົບເຫັນ ຢູ່ ຕາມປ່າສັກສິດ ຂອງ ແຕ່ລະບ້ານແມ່ນຢູ່ໃນ ໃບຊ້ອນທ້າຍ 2, ຂໍ້ 4.2.2, ຕາຕະລາງ 13.

ການຕັດໄມ້ ຢູ່ໃນປ່າສັກສິດທຸກແຫ່ງ ແມ່ນຖືກຫ້າມ. ຢູ່ບ້ານ ເຊ ພວກຊາວບ້ານ ອາດຈະໄດ້ຮັບອະນຸຍາດ ໃຫ້ຕັດໄມ້ຕົ້ນໜຶ່ງ ເພື່ອຈຸດປະສົງ ລວມໝູ່ ທີ່ນານໆຈຶ່ງມີເທື່ອໜຶ່ງ ແລະ ການເກັບໄມ້ນອນຂອນຕາຍ ກໍແມ່ນໄດ້ຮັບອະນຸຍາດ ຢູ່ທັງ ບ້ານ ເຊ ແລະ ບ້ານ ນານົກຂຽນ. ການເກັບ ເຄື່ອງປ່າຂອງດົງ ແມ່ນຖືກຫ້າມ ຢູ່ໃນປ່າສັກສິດ ຢູ່ບ້ານຕາແຫຼວ, ບ້ານເຊ, ບ້ານນາກະທາງ (ຢູ່ຂ້າງໃນຂອງບ້ານ), ແລະ ບ້ານດົງແດງ, ແຕ່ວ່າ ໄດ້ຮັບອະນຸຍາດ ໃຫ້ເກັບໄດ້ຢູ່ ໃນປ່າສັກສິດ ຢູ່ບ້ານແກ້ງກອກດົງ, ບ້ານນານົກຂຽນ, ບ້ານເຊ ແລະ ບ້ານນາກະທາງ (ຢູ່ນອກບ້ານ). ການໃຫ້ສັດລ້ຽງ ກິນຫຍ້າ ແມ່ນຖືກຫ້າມ ຢູ່ໃນປ່າສັກສິດ ຢູ່ບ້ານ ຕາແຫຼວ ແລະ ບ້ານນາກະທາງ (ໃນບ້ານ ) ແລະ ໄດ້ຮັບອະນຸຍາດ ຢູ່ບ້ານແກ້ງກອກດົງ, ບ້ານເຊ ແລະ ບ້ານດົງແດງ.

ສ່ວນການຫາປາ ແມ່ນຖືກຫ້າມຢ່າງສິ້ນເຊີງ ຢູ່ຕາມໜອງຕ່າງໆ ທີ່ຢູ່ໃຕ້ ການປົກປັກຮັກສາ ໂດຍປະເພນີ ຢູ່ ສອງບ້ານ - ໜອງສັກສິດ ຢູ່ ບ້ານຕາແຫຼວ ແລະ ໜອງແມ່ຮ້າງ ຢູ່ບ້ານແກ້ງກອກດົງ. ບ້ານອື່ນໆ ອີກສີ່ບ້ານ ຄື: ບ້ານນານົກຂຽນ, ບ້ານດອນແດງ, ບ້ານນາກະທາງ ແລະ ບ້ານດອນຕະແບ່ງ- ແມ່ນອະນຸຍາດ ໃຫ້ຫາປາຮ່ວມໝູ່ ຢູ່ຕາມບັນດາໜອງ ທີ່ຢູ່ໃຕ້ ການປົກປ້ອງ ໂດຍປະເພນີ, ແຕ່ວ່າ ບໍ່ອະນຸຍາດໃຫ້ບຸກຄົນຫາປາ. ການເອົານໍ້າ ແລະ ໃຊ້ເຮືອ ແມ່ນຖືກຫ້າມ ຢູ່ຕາມບັນດາໜອງສັກສິດ ຢູ່ບ້ານ ຕາແຫຼວ ແລະ ບ້ານດອນແດງ, ແຕ່ວ່າ ໄດ້ຮັບອະນຸຍາດຢູ່ຕາມບັນດາໜອງສັກສິດອື່ນໆ.

*ບ້ານເຊ ມີປ່າສັກສິດ ສອງແຫ່ງ, ທັງສອງແຫ່ງ ແມ່ນຢູ່ຕິດກັບໜອງແຫ່ງໜຶ່ງ. ບ້ານໄດ້ອະນຸລັກ ປ່າສັກສິດ ດອນແຮ້ວ ແລະໜອງທີ່ຢູ່ຕິດນັ້ນ / ໜອງ ຊຽງເຂດ ໄດ້ຫຼາຍເຊັ່ນຄົນມາແລ້ວ. ປີ 2006 ປ່າສະຫງວນ ໂດຍກົດໝາຍປະເພນີ ແຫ່ງນີ້ ໄດ້ຖືກຮັບຮູ້ ຢ່າງເປັນທາງການ ຈາກເມືອງ. ໜອງດັ່ງກ່າວ ບາງສ່ວນກໍເປັນຂອງສ່ວນຕົວ; ສ່ວນທີ່ບ້ານສະຫງວນໄວ້ນັ້ນ ມີເນື້ອທີ່ກວ້າງປະມານ 4.5 ເຮັກຕາ ແລະ ປ່າສັກສິດມີພຽງ 0.5 ເຮັກຕາເທົ່ານັ້ນ. ເນື້ອທີ່ທັງໝົດເຫຼົ່ານັ້ນ ຖືກເຊື່ອວ່າ ເປັນບ່ອນຢູ່ອາໄສ ຂອງ ບັນດາວິນຍານທັງຫຼາຍ ແລະ ແຕ່ລະປີ ຊາວບ້ານ ກໍໄດ້ເຮັດບຸນກິນທານຫາວິນຍານເຫຼົ່ານັ້ນ.*

*ບໍ່ມີການອະນຸຍາດໃຫ້ ລ່າສັດ ຢູ່ໃນປ່າແຫ່ງນີ້, ຍົກເວັ້ນການຈັບແມງໄມ້. ການຫາປາແມ່ນໄດ້ຮັບອະນຸຍາດ ສໍາລັບງານບຸນໃຫຍ່ ຮ່ວມໝູ່, ແຕ່ຕ້ອງໄດ້ຮັຍການອະນຸຍາດ ຈາກອໍານາດການປົກຄອງບ້ານ.*

*ພວກຊາວບ້ານ ອາດຈະບໍ່ຕັດຕົ້ນໄມ້ ຍົກເວັ້ນແຕ່ ບາງເຫດຜົນເພື່ອຈຸດປະສົງ ຮ່ວມໝູ່ ທີ່ບໍ່ຄ່ອຍມີເລື້ອຍໆ; ການໄດ້ຮັບອະນຸຍາດກ່ອນໜ້າ ຈາກ ບັນດາວິນຍານ ແລະ ຈາກອໍານາດການປົກຄອງບ້ານ ແມ່ນຈໍາເປັນ. ການເກັບໄມ້ນອນຂອນຕາຍ ໃນປ່າສັກສິດ ກໍຕ້ອງມີ ການອະນຸຍາດ ຈາກບັນດາວິນຍານ, ແຕ່ວ່າ ການເກັບ ເຄື່ອງປ່າຂອງດົງນັ້ນ ບໍ່ມີກໍໄດ້.*

*ໃນເວລາມີລົມພາຍຸ, ຕົ້ນໄມ້ໃຫຍ່ຕົ້ນໜຶ່ງໄດ້ລົ້ມລົງ ແລະໄດ້ທໍາລາຍ ສາຍສົ່ງໄຟຟ້າ ເຂົ້າບ້ານ. ພວກຊາວບ້ານ ໄດ້ຂໍ*

*ປ່າສັກສິດແຫ່ງທີສອງ ຢູ່ບ້ານເຊ ກໍຖືກປົກປ້ອງມາແລ້ວຫຼາຍເຊັ່ນຄົນ ແລະ ເຖິງວ່າມັນສັກສິດ, ກໍຫຼຸດປ່າສັກສິດ ດອນແຮ້ວ ແລະກໍບໍ່ໄດ້ເຮັດພິທີລ້ຽງຜີຢູ່ປ່າແຫ່ງນີ້. ປ່າສັກສິດແຫ່ງນີ້ ມີເນື້ອທີ່ກວມປະມານ 10 ເຮັກຕາ. ໜອງກູດຍາງ ແມ່ນຢູ່ໃນປ່າສັກສິດ ດອນກູດຍາງ. ຢູ່ໜອງນີ້ ມີເຕົ່າອາໄສຢູ່ຫຼາຍກວ່າຢູ່ໜອງ ຊຽງເຂດ.*

*ການຫາປາ ແລະ ການລ່າສັດ ແມ່ນບໍ່ຖືກຫ້າມ ຢູ່ໜອງ ແລະປ່າແຫ່ງນີ້. ການຕັດໄມ້ແມ່ນບໍ່ ໄດ້ຮັບອະນຸດຍາດ ຍົກເວັ້ນແຕ່ ສໍາລັບໂອກາດທີ່ມີໜ້ອຍເທື່ອ, ເຊັ່ນ ເພື່ອຈຸດປະສົງສ່ວນຮ່ວມ ຄື ການບູລະນະ ປະຕິສັງຂອນວັດ ແລະ ກໍຕ້ອງມີການອະນຸຍາດຈາກ ວິນຍານເຈົ້າປ່າ. ອະນຸຍາດໃຫ້ ເກັບໄມ້ນອນຂອນຕາຍໄດ້ ເພື່ອການໃຊ້ສ່ວນຮ່ວມ ແຕ່ຕ້ອງໄດ້ຂໍອະນຸຍາດ ຈາກວິນຍານທີ່ເປັນເຈົ້າຈອມຮັກສາປ່າ. ພວກຊາວບ້ານ ໄດ້ຮັບອະນຸຍາດ ໃຫ້ເກັບເຄື່ອງປ່າຂອງດົງໄດ້ ໂດຍບໍ່ຕ້ອງຂໍອະນຸຍາດ.*

*ຜູ້ໃດກໍຕາມ ທີ່ລ່ວງລະເມີດ ບັນດາກົດເຫຼົ່ານີ້ ຈະຖືກບັນດາວິນຍານ ລົງໂທດ ແລະ ນອກຈາກນັ້ນ ຈະຖືກອໍານາດການປົກຄອງບ້ານປັບໃໝ.*

*ອະນຸຍາດ ນຳບັນດາວິນຍານ ແລະໄດ້ຕັດຕົ້ນໄມ້ໃຫຍ່ຕົ້ນອື່ນໆລົງ ທີ່ເຫັນວ່າ ມີຄວາມສ່ຽງຈະລົ້ມທັບສາຍໄຟຟ້າ. ບ້ານເຊ ບັງຄັບໃຊ້ຄ່າປັບໃໝແບບກົດໝາຍທາງການ ສໍາລັບການລ່ວງລະເມີດກົດລະບຽບເຫຼົ່ານີ້ ແລະການລົງໂທດ ທາງຄວາມເຊື່ອຖືຈິດວິນຍານ ນັ້ນແມ່ນເປັນໄປໄດ້ຢູ່ສະເໝີ.*

## 2.3 ປ່າຊ້າ

ຫ້າບ້ານ ທີ່ຖືກລົງສໍາຫຼວດ ນັ້ນ ແມ່ນຮັບຮູ້ ປ່າຊ້າ ເປັນເຂດປົກປ້ອງໂດຍປະເພນີ: ບ້ານເຫຼົ່ານັ້ນໄດ້ແກ່: ບ້ານຕາແຫຼວ, ບ້ານແກ້ງກອກດົງ, ບ້ານຊາຄຸນເໜືອ, ບ້ານດອນແດງ ແລະ ບ້ານນາກະທາງ. ກົດໝາຍປະເພນີ ທີ່ຄຸ້ມຄອງການລ່າສັດ ໃນປ່າຊ້າ ແມ່ນແຕກຕ່າງກັນໄປຕາມແຕ່ລະບ້ານ. ໂດຍທົ່ວໄປ ການລ່າສັດຢູ່ໃນປ່າຊ້າ ແມ່ນໄດ້ຮັບອະນຸຍາດ ຢູ່ບ້ານ ຕາແຫຼວ ແລະ ບ້ານ ຊາຄຸນເໜືອ. ສ່ວນຢູ່ ບ້ານແກ້ງກອກດົງ ອາດຈະອະນຸຍາດໃຫ້ລ່າສັດນ້ອຍເຊັ່ນ ກະຮອກ/ໜູ ແລະ ແລນ ເປັນຕົ້ນ, ແຕ່ຫ້າມລ່າສັດ ຊະນິດອື່ນ. ຢູ່ບ້ານດົງແດງ, ການລ່າສັດຊະນິດໃດ ກໍຕ້ອງມີການອະນຸຍາດເສຍກ່ອນຈາກ ວິນຍານເຈົ້າປ່າ; ແລະ ຢູ່ນາກະທາງ ຜູ້ທີ່ລ່າສັດ ໂດຍທົ່ວໄປ ແມ່ນຫຼີກເວັ້ນປ່າຊ້າຍ້ອນມີຄວາມຢ້ານ ແລະ ຄວາມເຄົາຣົບນັບຖື.

ຄ້າຍໆຄືກັນນັ້ນ, ບັນດາກົດໝາຍປະເພນີ ທີ່ຄຸ້ມຄອງຕົ້ນໄມ້, ເຄື່ອງປ່າຂອງດົງ ແລະ ການປ່ອຍສັດລົງກິນຫຍ້າ ຢູ່ໃນປ່າຊ້າ ແມ່ນແຕກຕ່າງກັນ ອີງຕາມແຕ່ລະບ້ານ. ຢູ່ບ້ານຕາແຫຼວ ການຕັດໄມ້ ແມ່ນໄດ້ຮັບອະນຸຍາດ; ຢູ່ບ້ານແກ້ງກອກດົງ ຜັດຖືກຫ້າມ ແລະ ຢູ່ບ້ານດອນແດງ ກໍຖືກຫ້າມ ຍົກເວັ້ນ ເພື່ອຈຸດປະສົງ ການຊາປະນາກິດສົບ. ສ່ວນຢູ່ບ້ານ ຊາຄູນເໜືອ ແມ່ນບໍ່ມີຄົ້ນໄມ້ຢູ່ໃນປ່າຊ້າ ແຕ່ວ່າກໍສາມາດເອົາ ພູມໄມ້ນ້ອຍໄດ້; ແລະ ຢູ່ບ້ານນາກະທາງ ການຕັດໄມ້ຢູ່ໃນປ່າຊ້າ ແມ່ນຖືກຫ້າມ ແລະ ອະນຸຍາດ ໃຫ້ຕັດຕົ້ນໄມ້ນ້ອຍ ເພື່ອໃຊ້ສ່ວນຮ່ວມສໍາລັບຊຸມຊົນໄດ້.

ການເກັບ ເຄື່ອງປ່າຂອງດົງ ແມ່ນໄດ້ຮັບອະນຸຍາດ ຢູ່ໃນປ່າຊ້າ ບ້ານຕາແຫຼວ, ບ້ານແກ້ງກອກດົງ ແລະ ບ້ານ ດອນແດງ. ຊາວບ້ານ ບ້ານຫົວເມືອງ ແມ່ນໄດ້ຮັບອະນຸຍາດ ໃຫ້ຕັດໄມ້ໄຜ່ ແລະ ຫາໜໍ່ໄມ້ ໃນປ່າຊ້າ ເພື່ອໃຊ້ໃນຄົວເຮືອນໄດ້ ໂດຍຕ້ອງໄດ້ຮັບການອະນຸຍາດ ຈາກອຳນາດການປົກຄອງບ້ານເສຍກ່ອນ. ຄົນຂ້າງນອກ ແມ່ນບໍ່ໄດ້ຮັບອະນຸຍາດ ໃຫ້ຕັດໄມ້ໄຜ່ ຫຼື ຫາໜໍ່ໄມ້. ການປ່ອຍສັດໃຫ້ກິນຫຍ້າໃນປ່າຊ້າ ແມ່ນໄດ້ຮັບອະນຸຍາດ ຢູ່ສາມບ້ານທີ່ກ່າວມານັ້ນ ແລະ ຢູ່ບ້ານຊາຄຸນເໜືອ ກໍເຊັ່ນດຽວກັນ. ສ່ວນຢູ່ບ້ານນາກະທາງ ພວກຊາວບ້ານ ແມ່ນຫຼີກເວັ້ນ ການເກັບເຄື່ອງປ່າຂອງດົງ ແລະ ການປ່ອຍສັດກິນຫຍ້າ ຢູ່ໃນປ່າຊ້າ ຍ້ອນຄວາມຢ້ານ ແລະ ຄວາມນັບຖື.

## 2.4 ປ່າສະຫງວນລວມໝູ່ ທີ່ບໍ່ມີວິນຍານເຝົ້າ ຮັກສາ

ສີ່ບ້ານ ທີ່ໂຄງການໄດ້ລົງສໍາຫຼວດ ນັ້ນຍັງຮັກສາ ປ່າສະຫງວນ ສ່ວນຮ່ວມ ທີ່ບໍ່ມີຜີເຈົ້າປ່າ. ໄດ້ຫຼາຍເຊັ່ນຄົນມາແລ້ວ ບ້ານແກ້ງກອກດົງ ໄດ້ຫ້າມການຫາປາ ແລະ ລ່າແຂ້ ຢູ່ໜອງແມ່ຮ້າງ; ອຳນາດການປົກຄອງບ້ານ ເປັນຜູ້ຮັບຜິດຊອບ ການບັງຄັບໃຊ້ ກົດໝາຍປະເພນີດັ່ງກ່າວ.



*ໜອງແມ່ຮ້າງ*

ປ່າສ່ອງ ປ່າແດງ ຢູ່ບ້ານຕາແຫຼວ ເປັນປ່າສະຫງວນ ຍ້ອນມີບໍ່ນ້ຳໃຕ້ດິນ ທີ່ເປັນແຫຼ່ງນ້ຳສຳຄັນ ສຳລັບຊຸມຊົນ ໃນໄລຍະລະດູແລ້ງ. ໃນປ່າແຫ່ງນີ້ ການຕັດໄມ້ໃຫຍ່ແມ່ນຖືກຫ້າມ. ຕົ້ນໄມ້ນ້ອຍແມ່ນສາມາດຕັດໄດ້, ແຕ່ສະເພາະເພື່ອໃຊ້ສ່ວນບຸກຄົນເທົ່ານັ້ນ. ການຕັດໄມ້ຊະນິດໃດກໍຕາມ ທີ່ມີຈຸດປະສົງເປັນສິນຄ້າ ແມ່ນບໍ່ໄດ້ຮັບອະນຸຍາດ. ການລ່າສັດ ໃນປ່າແຫ່ງນີ້ ກໍມີການຄວບຄຸມເຊັ່ນດຽວກັນ ເຊັ່ນ: ການລ່າສັດໃຫຍ່ແມ່ນຖືກຫ້າມ ແຕ່ວ່າ ອະນຸຍາດໃຫ້ລ່າສັດນ້ອຍໄດ້.

ອຳນາດການປົກຄອງບ້ານຢູ່ ນານົກຂຽນ ໄດ້ອະນຸລັກ ໜອງແຜກ ມາໄດ້ຫຼາຍປີ ເພື່ອຄ້ຳຊູ ການດຳລົງຊີວິດ ຂອງຊາວບ້ານ. ບໍ່ອະນຸຍາດໃຫ້ບຸກຄົນໃດ ຫາປາ, ແຕ່ວ່າບ້ານ ກໍຈັດວັນ ຫາປາລວມໝູ່ ປີລະໜຶ່ງເທື່ອ. ບ້ານນາກະທາງ ປົກປັກຮັກສາ ໜອງຝາງແດງ ເພື່ອອະນຸລັກ ປາ. ອະນຸຍາດໃຫ້ແຕ່ການຫາປາລວມໝູ່ເທົ່ານັ້ນ ແລະ ລາຍໄດ້ແຕ່ລະກົບຈາກການຂາຍປາ ແມ່ນສິ່ງເຂົ້າງົບປະມານ ຂອງບ້ານ.

*ປ່າໄມ້ ຂອງ ບ້ານ ປ່າຊ່ອງ ປາງແດງ ຢູ່ບ້ານຕາແຫຼວ ມີເນື້ອທີ່ປະມານ 13 ເຮັກຕາ ເປັນປ່າໄມ້ຂັ້ນສອງ ປ່າແຫ່ງນີ້ ບໍ່ເປັນປ່າສັກສິດ ແຕ່ວ່າຊາວບ້ານ ກໍປົກປັກຮັກສາມັນ ເພາະມັນເກີດຂຶ້ນຢູ່ເທິງ ບໍ່ນ້ຳ ທີ່ເປັນແຫຼ່ງຕົ້ນຕໍ ຂອງນ້ຳ ສຳລັບບ້ານ , ແມ້ແຕ່ໃນໄລຍະລະດູແລ້ງ. ຊາວບ້ານໄດ້ພາກັນຫ້າມ ຕັດໄມ້ໃຫຍ່ ຢູ່ໃນປ່າແຫ່ງນີ້ເພາະວ່າເຂົາເຈົ້າຮູ້ ຈາກປະສົບການ ໃນໄລຍະຜ່ານມາທີ່ວ່າຄຸນນະພາບ ຂອງນ້ຳ ຫຼຸດລົງ ຖ້າວ່າປ່າໄມ້ຫຼຸດລົງ ຫຼືຖືກເຮັດໃຫ້ເຊື່ອມໂຊມ.*

*ການຕັດຕົ້ນໄມ້ໃຫຍ່ ແມ່ນບໍ່ໄດ້ຮັບອະນຸຍາດ ຜູ້ໃດກໍຕາມ ທີ່ລະເມີດກົດລະບຽບເຫຼົ່ານີ້ ຕ້ອງຈ່າຍຄ່າປັບໃໝ ເປັນເງິນສົດ ກັບ ເຫຼົ້າຂາວໜຶ່ງກວດ ແລະ ຄ່າປັບໃໝ ຈະເພີ້ມຂຶ້ນ ຖ້າຜູ້ໃດລະເມີດເທື່ອຕໍ່ໄປ. ປ່າສັກສິດ ເສືອໂຄກ, ເຊິ່ງຢູ່ໃກ້ໆນັ້ນ ຖືກເຊື່ອວ່າ ມີສ່ວນກ່ຽວຂ້ອງ ກັບບໍ່ນ້ຳ; ການຫາປາໃນໜອງດັ່ງກ່າວ ແມ່ນຖືກຫ້າມ.*

*ຊາວບ້ານຕາແຫຼວ ໄດ້ສັງເກດວ່າ ການກະທຳຂອງມະນຸດ ສົ່ງຜົນກະທົບ ຕໍ່ແຫຼ່ງນ້ຳທັງສອງນີ້ແນວໃດ ແລະ ປະກົດວ່າ ເຂົາເຈົ້າຮູ້ດີ ວ່າ ທີ່ດິນບໍລິເວນນ້ຳໃຫ້ ການບໍລິການ ລະບົບນິເວດ, ໂດຍສະເພາະຢ່າງຍິ່ງ ການກັ່ນຕອງນ້ຳ ແລະ ເຮັດໃຫ້ນ້ຳໃສບໍລິສຸດ..*

*ແລະ ພວກຊາວບ້ານໄດ້ຮັບອະນຸຍາດ ໃຫ້ຕັດແຕ່ຕົ້ນໄມ້ນ້ອຍ ເພື່ອໃຊ້ສະເພາະພວກຕົນ. ການລ່າສັດນ້ອຍ ເຊັ່ນ ກະຮອກ/ໜູ ແລະ ແລນ ແມ່ນໄດ້ຮັບອະນຸຍາດ ແຕ່ວ່າການລ່າສັດໃຫຍ່ແມ່ນຖືກຫ້າມ.*

## 2.5 ໝໍຜີ/ໝໍດູ ແລະ ພິທີກໍາ

ບັນດາບ້ານທີ່ມີ ປ່າສັກສິດ ແມ່ນມີ ກວານຈໍ້າ ຂອງ ບ້ານ ເຊິ່ງເປັນຜູ້ ສື່ສານກັບວິນຍານ ຂອງສະຖານທີ່ສັກສິດ ແລະ ຈັດ ພິທີກໍາ. ໝໍດູ/ໝໍຜີ, ຜູ້ທີ່ບໍ່ຂຶ້ນກັບ ແລະ ບໍ່ຮ່ວມຢູ່ກັບ ບັນດາ ສະຖານທີ່ສັກສິດສະເພາະ, ຈະແນະນໍາ ຊາວບ້ານ ກ່ຽວກັບແຫຼ່ງ ຂອງເຄາະເວນເຂັນຮ້າຍ ທີ່ພາໃຫ້ເຂົາເຈົ້າຢູ່ບໍ່ສະບາຍນັ້ນ ແລະ ພວກເຂົາເຈົ້າຕ້ອງເຮັດຫຍັງແດ່ ເພື່ອຈະພົ້ນ ເຄາະຮ້າຍ ຈາກການເຮັດຜິດ ຕໍ່ຜີຫຼື ວິນຍານ.



*ການປຶກສາຫາລື ຂອງ ກຸ່ມ ກວານຈໍ້າບ້ານ*

ແຕ່ລະປີ ບ້ານດາບ້ານທີ່ ມີປ່າ ຫຼື ໜອງສັກສິດ ພາກັນຈັດຕັ້ງ ພິທີກໍາ ທີ່ມີກວານຈໍ້າຂອງບ້ານ ເປັນຜູ້ພາເຮັດ ເພື່ອໄຫວ້ ຜີຜູ້ເປັນເຈົ້າດູແລຮັກສາ ຢູ່ໃນສະຖານທີ່ສັກສິດ. ຈະມີການຂ້າສັດ ເຊັ່ນ ໄກ່ ຫຼື ໝູ ໃນໄລຍະດໍາເນີນພິທີກໍາດັ່ງກ່າວ. ບ້ານທີ່ຮັ່ງມີກວ່າ ກໍມີການຂ້າຄວາຍທຸກໆສາມປີ ເພື່ອລ້ຽງຜີຫໍບ້ານ ທີ່ເປັນສະຖານທີ່ສັກສິດ.



ຫໍຜີທີມີ 3 ຂັ້ນ *(ສໍາລັບວິນຍານ, ທະຫານ ແລະ ເມຍ)*

ບ້ານ ດົງມ່ວງ ແລະ ບ້ານຊາຄຸນເໜືອ ມີປ່າສັກສິດຮ່ວມບ່ອນດ່ຽວກັນ ແລະ ມີກວານຈໍາບ້ານ ສອງຄົນ . ມີແຕ່ກວານຈໍາຜູ້ ທີ່ຢູ່ ບ້ານຊາຄຸນເໜືອ ເທົ່ານັ້ນ ສາມາດຈັດ ພິທີກໍາ ຫຼວງ ປະຈໍາປີ; ສ່ວນຜູ້ທີ່ຢູ່ດອນມ່ວງນັ້ນ ສາມາດຈັດໄດ້ແຕ່ພິທີກໍານ້ອຍ ສໍາລັບຜູ້ທີ່ ຖືກລົບກວນຈາກວິນຍານ.

ເມື່ອວິນຍານຫາກມີຜູ້ກະທໍາຜິດຕໍ່, ພວກເພິ່ນສາມາດກໍ່ເຄາະເວນເຂັນຮ້າຍຕໍ່ຜູ້ໃດຜູ້ໜຶ່ງ. ຜູ້ທີ່ພົບເຄາະຮ້າຍນັ້ນອາດຈະແມ່ນ ຫຼື ບໍ່ແມ່ນຄົນທີ່ເຮັດຜິດກັບຜີນັ້ນກໍເປັນໄດ້. ເມື່ອຊາວບ້ານຜູ້ໜຶ່ງ ປະສົບເຄາະຮ້າຍ ຫຼື ເຈັບປ່ວຍ ຜູ້ທໍາອິດທີ່ໃຫ້ຄໍາປຶກສາ ກໍແມ່ນໝໍດູ. ໝໍດູຜູ້ນີ້ ຈະບອກໃຫ້ຮູ້ ຕົ້ນເຫດຂອງເຄາະຮ້າຍນັ້ນ ແລະ ສິ່ງທີ່ອາດເກີດຂຶ້ນເຖິງຂັ້ນຮ້າຍແຮງ ຂອງການລົງໂທດນັ້ນ ແລະ ແນະນໍາ ພວກຊາວບ້ານ ກ່ຽວກັບພິທີລ້ຽງທີ່ຕ້ອງໄດ້ເຮັດ ເພື່ອ ຮຽກເອົາຂວັນນັ້ນຄືນມາ.

ຫຼັງຈາກ ການປຶກສາຫາລື ກັບໝໍດູໝໍຜີແລ້ວ, ຊາວບ້ານ ກໍຈະຖາມ ກວານຈໍາບ້ານ ວ່າເຄື່ອງຖວາຍນັ້ນ ມີຫຍັງແດ່ຕ້ອງໄດ້ເຮັດ ເພື່ອສະຫງົບປອບໃຈວິນຍານທີ່ຖືກເຮັດຜິດນັ້ນ. ໝໍຜີຜູ້ທີ່ໄດ້ຖືກປຶກສາກ່ອນໝູ່ນັ້ນ ຕ້ອງບໍ່ແມ່ນຜູ້ທີ່ມາຈາກບ້ານດຽວກັນ ກັບກວານຈໍາບ້ານ ຂອງ ສະຖານທີ່ສັກສິດ ບ່ອນທີ່ຜີໄດ້ຖືກເຮັດຜິດນັ້ນ. ບາງເທື່ອ ກວານຈໍາບ້ານ ກໍອາດຈະເຮັດໜ້າທີ່ ເປັນໝໍຜີເຊັ່ນກັນ. ໝໍຜີສາມາດໃຫ້ຄໍາແນະນໍາ ກ່ຽວກັບເຄື່ອງຖວາຍ, ແຕ່ວ່າ ກວານຈໍາບ້ານ, ໃນຖານະເປັນຕົວແທນຂອງຜີ, ເປັນຜູ້ຕັດສິນສຸດທ້າຍ ແລະ ຈັດພິທີ ພິທີກໍາ ເພື່ອເອົາໃຈວິນຍານ. ທັງໝໍຜີ ແລະ ກວານຈໍາບ້ານ ແມ່ນບໍ່ມີໃຜມີສ່ວນກ່ຽວຂ້ອງ ກັບການຄຸ້ມຄອງ ຊັບພະຍາກອນທໍາມະຊາດ.

## 2.6 ການອະນຸຍາດ ແລະ ການ ບັງຄັບໃຊ້

ກົນໄກ ສໍາລັບ ການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ການບັງຄັບໃຊ້ ກົດໝາຍປະເພນີແມ່ນຄ້າຍຄືກັນຫຼາຍ ສໍາລັບ ປ່າສະຫງວນ ໂດຍປະເພນີ ທາງຄວາມເຊື່ອຖື ແລະ ບໍ່ກ່ຽວກັບຄວາມເຊື່ອຖື, ຢູ່ໃນທຸກໆບ້ານ ທີ່ຖືກລົງສໍາຫຼວດ, ບໍ່ສໍາຄັນວ່າບ້ານເຫຼົ່ານັ້ນ ຈະປະກອບດ້ວຍຊົນເຜົ່າໃດ. ບັນດາອໍານາດການປົກຄອງບ້ານ, ຜູ້ປ້ອງກັນຄວາມສະຫງົບ ແລະ ຕໍາຫຼວດອາສາສະໝັກ ຂອງບ້ານ ພາກັນເຝົ້າປ້ອງກັນ ເຂດທີ່ບໍ່ກ່ຽວກັບຄວາມເຊື່ອຖື ແລະບັງຄັບໃຊ້ກົດລະບຽບ ທີ່ໝູນໃຊ້ກັບເຂດປ່າເຫຼົ່ານັ້ນ ພ້ອມດຽວກັນນັ້ນ, ວິນຍານ ກໍປ້ອງກັນ ເຂດປ່າທີ່ມີວິນຍານເປັນເຈົ້າຮັກສາ.

ຄ່າປັບໃໝ ສໍາລັບການລະເມີດ ຂໍ້ຫ້າມ ແລະ ຂໍ້ຈໍາກັດ ໂດຍປະເພນີ ໃນພື້ນທີ່ສ່ວນຫຼາຍ ແມ່ນກ່ຽວຂ້ອງກັບ ການຂ້າສັດ ເປັນເຄື່ອງຖວາຍແກ່ວິນຍານ. ມູນຄ່າຂອງ ການລົງໂທດນັ້ນ ແມ່ນຂຶ້ນກັບຄວາມຮ້າຍແຮງ ຂອງການເຮັດ

ຄວາມຜິດນັ້ນຫຼາຍທີ່ສຸດ, ແລະອາດຈະເລີ້ມແຕ່ ໄກ່ໜຶ່ງໂຕ ໄປຮອດໝູ, ງົວ ຫຼື ຄວາຍ. ຫຼັງຈາກພິທີ ກວານຈ້ຳບ້ານ ກໍແບ່ງປັນຊີ້ນທີ່ເປັນເຄື່ອງລ້ຽງວິນຍານນັ້ນ ໃຫ້ກັບສະມາຊິກ ຂອງຊຸມຊົນ.

ການລົງໂທດ ສຳລັບການລະເມີດ ໃນປ່າ ແລະ ໜອງສັກສິດ ຕົ້ນຕໍແມ່ນປະຕິບັດ ໂດຍການຮັບຮູ້ຄວາມຜິດຂອງຕົນເອງ ຍ້ອນຢ້ານຈະເກີດສິ່ງທີ່ບໍ່ເປັນມຸງຄຸນ ຈາກການກໍ່ໃຫ້ວິນຍານເກີດໃຈຮ້າຍ. ບັນດາບ້ານ ທີ່ຖືກລົງສຳຫຼວດນັ້ນ ໄດ້ລາຍງານວ່າ ບໍ່ເຄີຍມີການປັບໃໝ ຫຼື ການລົງໂທດຈາກວິນຍານ ສຳລັບການລະເມີດຂໍ້ຫ້າມໃນປ່າຊ້າ.

ການລົງໂທດຈາກວິນຍານ ສຳລັບການລະເມີດຂໍ້ຫ້າມ ຫຼື ຂໍ້ຈຳກັດ ທີ່ພົວພັນ ກັບບັນດາປ່າ ແລະ ໜອງສັກສິດ ໃນບ້ານໜຶ່ງ ຕົ້ນຕໍແມ່ນປະກອບດ້ວຍ ການເຈັບປ່ວຍ, ໂຊກຮ້າຍ ຫຼືເຄາະເຂັນ ຫຼືໃນກໍລະນີຮ້າຍແຮງຫຼາຍ ກໍເຖິງແກ່ຄວາມຕາຍ. ເຄາະຮ້າຍສາມາດຕົກໃສ່ໃຜກໍໄດ້, ບໍ່ວ່າບຸກຄົນໃດໜຶ່ງສະເພາະ ຫຼື ຄອບຄົວ ໄດ້ລະເມີດກົດລະບຽບຫຼືບໍ່ ເມື່ອຄອບຄົວໜຶ່ງ ປະສົບຄວາມເຈັບປ່ວຍ, ພວກເຂົາກໍຈະ ປຶກສາກັບໝໍຜີ ເພື່ອໄດ້ຄຳແນະນຳ ແລະຈາກນັ້ນເຂົາເຈົ້າກໍຈະ ຂໍຄວາມຊ່ວຍເຫຼືອ ຈາກ ກວານຈ້ຳບ້ານ. ພວກຊາວບ້ານ ປະຕິບັດຕາມຄຳແນະນຳ ຂອງໝໍຜີ ແລະ ກວານຈ້ຳບ້ານ; ການບໍ່ຖືສຳຄັນ ຄຳແນະນຳຂອງໝໍຜີ ແລະ ກວານຈ້ຳບ້ານ ນັ້ນແມ່ນການສ່ຽງຕໍ່ຊີວິດຂອງຜູ້ໃດຜູ້ໜຶ່ງ.

ຄົນນອກບ້ານ ກໍສ່ຽງຕໍ່ການລົງໂທດຈາກວິນຍານເຊັ່ນກັນ. ພວກຊາວບ້ານພາກັນເລົ່ານິທານເລື້ອງໜຶ່ງ ກ່ຽວກັບການລົງໂທດ ທີ່ກ່ຽວຂ້ອງກັບ ທະຫານຫວຽດນາມສອງຄົນ ທີ່ເອົາລີງຈາກປ່າດົງລີງ ຢູ່ບ້ານດົງມ່ວງ. ບົນເສັ້ນທາງກັບເມືອຄ້າຍຂອງພວກເຂົາ, ພວກທະຫານເຫຼົ່ານັ້ນ ພາກັນຍິງກັນເອງ. ເລື້ອງໃໝ່ໆກວ່ານັ້ນອີກ ແມ່ນກ່ຽວກັບກຳມະກອນກໍ່ສ້າງຜູ້ໜຶ່ງ ທີ່ເຮັດວຽກກໍ່ສ້າງວັດຫຼັງໃໝ່ ຢູ່ບ້ານດອນມ່ວງ ເຊິ່ງຜູ້ກ່ຽວໄດ້ຕີລີງໂຕໜຶ່ງ ທີ່ລັກອາຫານຂອງລາວ. ຄືນນັ້ນ ກຳມະກອນຜູ້ນັ້ນ ເຈັບປ່ວຍໜັກກະທັນຫັນ ແລະ ເລືອດປາກເລືອດດັງອອກ ແລະສຸດທ້າຍກໍໄປຕາຍຢູ່ໂຮງໝໍແຂວງ. ພວກຊາວບ້ານ ເວົ້າວ່າ ຖ້າຄົນພວກນີ້ ຫາກໄດ້ເຮັດຕາມທີ່ໝໍຜີ ແລະ ຂໍຂະມາ ຕໍ່ວິນຍານ ໃນປ່າສັກສິດ, ພວກເຂົາກໍຈະບໍ່ໄດ້ຕາຍໄປແບບນັ້ນ.

## 3. ລັດຖະທຳມະນູນ ແລະ ກົດໝາຍນິຕິບັນຍັດ

ການວິເຄາະ ຂອບວຽກກົດໝາຍໃນປະຈຸບັນ ທີ່ຄຸ້ມຄອງ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ຕ້ອງພິຈາລະນາ ທັງບັນດາກົດໝາຍທົ່ວໄປ ແລະ ທັງບັນດາກົດໝາຍທີ່ ໝູນໃຊ້ສະເພາະ ຕໍ່ເຂດພື້ນທີ່ດັ່ງກ່າວ. ບັນດາກົດໝາຍທີ່ ໃຊ້ໂດຍທົ່ວໄປ ຕໍ່ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ລວມມີ, ແຕ່ບໍ່ມີພຽງເທົ່ານີ້: ລັດຖະທຳມະນູນ; ກົດໝາຍທີ່ດິນ; ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ; ກົດໝາຍນ້ຳ ແລະ ຊັບພະຍາກອນນ້ຳ; ກົດໝາຍປ່າໄມ້; ກົດໝາຍການປະມົງ; ກົດໝາຍປ້ອງກັນສິ່ງແວດລ້ອມ; ກົດໝາຍອາຍາ; ແລະບັນດາດຳລັດ ເພື່ອການຈັດຕັ້ງປະຕິບັດ ຂອງພວກມັນ. ບັນດາດຳລັດ ເພື່ອການຈັດຕັ້ງປະຕິບັດ ສຳລັບສ່ວນຫຼາຍ ຂອງບັນດາກົດໝາຍເຫຼົ່ານີ້ ສ້າງກົດລະບຽບລະອຽດ ທີ່ກ່ຽວຂ້ອງ ກັບການນຳໃຊ້ສະເພາະ ຊັບພະຍາກອນທຳມະຊາດ. ບໍ່ມີກົດໝາຍສະເພາະ ທີ່ຖືກສ້າງຂຶ້ນມາ ໂດຍສະພາແຫ່ງຊາດ ເພື່ອຄຸ້ມຄອງ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ. ເຖິງຢ່າງໃດກໍຕາມ ກໍມີດຳລັດບໍລິຫານຕ່າງໆ ທີ່ມອບໝາຍ ສິດ ໃນການກຳກັບດູແລ ແລະ ອຳນາດ ເພື່ອການອອກ ຂໍ້ກຳນົດກົດລະບຽບ ຕ່າງໆໄປ ເພື່ອຄຸ້ມຄອງແຫຼ່ງສະຖານທີ່ຕັ້ງດັ່ງກ່າວ.

ລະບຽບການເຫຼົ່ານັ້ນ ລວມມີ ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງ ຄະນະກຳມະການແຫ່ງຊາດ ເພື່ອຄຸ້ມຄອງ ທີດິນບໍລິເວນນ້ຳ ຂອງ ສົນທິສັນຍາ ຣຳຊາ ໃນ ສປປ ລາວ ແລະ ຂໍ້ຕົກລົງ ທີ່ອອກໂດຍ ເຈົ້າແຂວງໆ ສະຫວັນນະເຂດ ແຕ່ງຕັ້ງ ກອງເລຂານຸການແຂວງ ທີ່ຮັບຜິດຊອບ ຕໍ່ການຄຸ້ມຄອງ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ. ນອກນັ້ນ ຍັງມີ ລະບຽບການຕ່າງໆ ທີ່ຖືກຮັບຮອງໂດຍ ອຳນາດການປົກຄອງທ້ອງຖິ່ນ ທີ່ໃຊ້ໃນບັນດາບ້ານຕ່າງໆ ທີ່ຕັ້ງຢູ່ໃນ ແລະ ອ້ອມຮອບ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ.

ນອກຈາກບັນດາກົດໝາຍທົ່ວໄປ ແລະ ດຳລັດເຫຼົ່ານີ້ແລ້ວ, ກະຊວງໃດທີ່ກ່ຽວຂ້ອງ ກໍອາດຈະອອກ ລະບຽບການ (ນິຕິກຳ) ເພີ່ມເຕີມ ຕາມທີ່ໄດ້ຖືກມອບໝາຍຈາກ ບັນດາດຳລັດນາຍົກລັດຖະມົນຕີ. ໃນເມື່ອບໍ່ມີກົດໝາຍສະເພາະ ຂອງສະພາແຫ່ງຊາດ ຫຼື ດຳລັດນາຍົກລັດຖະມົນຕີ ສຳລັບສະຖານທີ່ຕັ້ງໃດໜຶ່ງ, ບັນດາກະຊວງທີ່ກ່ຽວຂ້ອງ ກໍອາດຈະ ອອກນິຕິກຳ ສຳລັບຂົງເຂດສະເພາະ, ລວມທັງ ທີ່ດິນບໍລິເວນນ້ຳ ເຊຈຳພອນ.

ໃນເມື່ອບໍ່ມີບັນດາກົດໝາຍ ຫຼື ດຳລັດ ທີ່ຄຸ້ມຄອງ ສະຖານທີ່ຕັ້ງສະເພາະ, ບັນດາກົດໝາຍທົ່ວໄປກໍຖືກນຳມາໃຊ້. ອົງກອນທີ່ຄຸ້ມຄອງ ກຳກັບດູແລ ຢູ່ ທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ຮັບຜິດຊອບ ໃນການກຳກັບດູແລ ການສ້າງກົດລະບຽບລະອຽດ ທີ່ຕ້ອງສອດຄ່ອງກັບ ບັນດາກົດໝາຍທີ່ໃຊ້ທົ່ວໄປ, ພັນທະສາກົນ ແລະ ລັກສະນະພິເສດສະເພາະ ຂອງຊຸມຊົນ ແລະ ບັນດາກົດໝາຍປະເພນີ ຂອງຊຸມຊົນນັ້ນ. ບັນດາອົງກອນ ທີ່ຄຸ້ມຄອງບໍລິຫານ ບັນດາກົດໝາຍທົ່ວໄປເຫຼົ່ານີ້ ຕ້ອງມີຄວາມເຂົ້າໃຈ ກ່ຽວກັບຄວາມໝາຍ ຂອງ ສານພົວພັນຊຶ່ງກັນແລະກັນ ລະຫວ່າງບັນດາກົດໝາຍ ສຳລັບການຈັດຕັ້ງປະຕິບັດພວກມັນ. ສຳລັບບັນຫານີ້ ມັນຮຽກຮ້ອງຄວາມຮູ້ທີ່ເລິກເຊິ່ງ ກ່ຽວກັບການຂະຫຍາຍຕົວຂອງປະຊາກອນ ໃນພື້ນທີ່ ເພື່ອໃຫ້ມີການຄວບຄຸມ ເພື່ອປະສົມປະສານ ຢ່າງມີປະສິດທິຜົນບັນດາ ການປະຕິບັດທີ່ເປັນປະເພນີ ເຂົ້າກັບ ເງື່ອນໄຂມາດຕາທີ່ກ່ຽວຂ້ອງໃນບັນດາກົດໝາຍ ນິຕິບັນຍັດທີ່ໃຊ້ຢູ່ໃນປັດຈຸບັນ.

ເພາະວ່າ ຊັບພະຍາກອນທຳມະຊາດ ສະໜັບສະໜູນ ການພັດທະນາ ເສດຖະກິດແຫ່ງຊາດ ແລະ ໂອກາດ ການຫຼຸດຜ່ອນຄວາມທຸກຍາກ, ລັດຖະບານຈຶ່ງ ມີໄຫວພິບ ຕໍ່ຄວາມສຳຄັນ ຂອງການອະນຸລັກ ຊັບພະຍາກອນສິ່ງແວດລ້ອມ ແລະ ຮັບປະກັນ ຄວາມຍືນຍົງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງ ທຸກໆກິດຈະກຳ ການພັດທະນາ. ບັນດາກົດໝາຍ, ດຳລັດ ແລະ ນິຕິກຳ ແມ່ນພະຍາຍາມ ເພື່ອຮັບປະກັນ ການອະນຸລັກ ຊັບພະຍາກອນທຳມະຊາດ. ເຖິງຢ່າງໃດກໍຕາມ, ການຈັດຕັ້ງປະຕິບັດພວກມັນ ບໍ່ມີປະສິດທິຜົນ ຍ້ອນຄວາມບໍ່ເຂັ້ມແຂງ ໃນລະບົບການຕິດຕາມກວດກາ ແລະ ການຂາດ ມາດຕະການການປະຕິບັດຕາມ ແລະ ການບັງຄັບໃຊ້ ທີ່ເໝາະສົມ, ລວມທັງສິ່ງທ້າທາຍອື່ນໆອີກ.

ການວິເຄາະນີ້ ຈະລະບຸ (ຊອກໃຫ້ພົບ) ການຈັດລຳດັບຂັ້ນ ຂອງ ມາດຕະຖານ ໃນ ສປປ ລາວ, ເຊິ່ງລວມມີ: ເງື່ອນໄຂຕ່າງໆ ຂອງລັດຖະທຳມະນູນ; ບັນດາສົນທິສັນຍາສາກົນ; ບັນດາກົດໝາຍທີ່ຜ່ານສະພາແຫ່ງຊາດ; ບັນດາດຳລັດແລະ ນິຕິກຳ ບໍລິຫານງານ ທີ່ຄຸ້ມຄອງສິດທິ; ພັນທະ ແລະ ຂໍ້ຫ້າມ ທີ່ພົວພັນ ກັບຊັບພະຍາກອນ ທີ່ດິນບໍລິເວນນ້ຳ; ແລະ ສະຖານະພາບ ຂອງ ກົດໝາຍປະເພນີ ທີ່ກ່ຽວຂ້ອງກັບ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ.

## 3.1 ລັດຖະທຳມະນູນ ແຫ່ງ ສປປ ລາວ (2003)

ລັດຖະທຳມະນູນ, ໃນຖານະເປັນ ກົດໝາຍສູງສຸດ ຂອງປະເທດ, ຄ້ຳປະກັນຄວາມເຄົາຣົບຕໍ່ ແລະ ການສົ່ງເສີມບັນດາຊົນເຜົ່າ ແລະ ວັດທະນະທຳຂອງເຂົາເຈົ້າ, ລວມທັງອິດສະລະພາບໃນການເຊື່ອຖືຂອງເຂົາເຈົ້າ. ມາດຕາ 8 ສ້າງຕັ້ງນະໂຍບາຍ ຂອງລັດ ແຫ່ງຄວາມເປັນເອກະພາບ ແລະ ສະເໝີພາບ ລະຫວ່າງທຸກຊົນເຜົ່າ ແລະ ຫ້າມການຈຳແນກແບ່ງແຍກ, ໃນຂະນະທີ່ ມາດຕາ 43 ຄ້ຳປະກັນ ອິດສະລະພາບ ໃນການເຊື່ອຖື. ມາດຕາ 19 ລະບຸວ່າພົນລະເມືອງທຸກຄົນ ມີພັນທະໃນການປ້ອງກັນ ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ.

ບັນດາມາດຕາເຫຼົ່ານີ້ ຂອງ ລັດຖະທຳມະນູນ ເປັນພື້ນຖານ ໃຈກາງ ທາງກົດໝາຍ ສຳລັບການວິເຄາະໃນຂໍ້ນີ້ ເຊິ່ງສຸມໃສ່ ພື້ນຖານ ທາງລັດຖະທຳມະນູນ ແລະ ທາງນິຕິບັນຍັດ ສຳລັບ ການອະນຸລັກ ຊັບພະຍາກອນທຳມະຊາດ, ປ້ອງກັນ ສິ່ງແວດລ້ອມ ແລະ ສົ່ງເສີມ ວັດທະນະທຳ ແລະ ວິທີປະຕິບັດ ແລະ ກົດໝາຍທີ່ເປັນປະເພນີ ຂອງບັດາຊົນເຜົ່າໃນ ສປປ ລາວ.

### 3.2 ສົນທິສັນຍາສາກົນ

ພາຍໃຕ້ຂອບວຽກ ນິຕິກຳ ຂອງ ສປປ ລາວ, ຂັ້ນທີ່ສອງ ຂອງລະບົບການຈັດຂັ້ນ ຂອງກົດໝາຍ ແມ່ນ ສົນທິສັນຍາສາກົນ[9]. Ramsar ແລະ ບັນດາສົນທິສັນຍາອື່ນ ທີ່ກ່ຽວຂ້ອງ ກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແມ່ນຄຸ້ມຄອງ ບັນດາເຂດ ຣໍາຊາ ຢູ່ໃນປະເທດ. ສົນທິສັນຍາ ວ່າດ້ວຍ ການຄ້າສາກົນ ຊະນິດພັນ ສັດແລະ ພືດປ່າ ທີ່ໃກ້ຈະສູນພັນ (CITES) ຈັດໝວດຂອງ ຊະນິດພັນ ໂດຍອີງຕາມ ລະດັບຄວາມສ່ຽງທີ່ພວກມັນ ໃກ້ຈະສູນພັນ. ບັນດາສົນທິສັນຍາສາກົນ ແມ່ນມີຜົນສັກສິດ ໂດຍກົງ ໃນ ສປປ ລາວ. ໃນລະບົບການຈັດຂັ້ນ ກົດໝາຍແຫ່ງຊາດ, ພວກມັນ ແມ່ນຢູ່ໃຕ້ ລັດຖະທຳມະນູນ ແລະ ຢູ່ເໜືອກວ່າ ກົດໝາຍ ແລະ ລະບຽບການຕ່າງໆ ແຫ່ງຊາດ ແລະ ກົດໝາຍຂັ້ນທ້ອງຖິ່ນ (ຂັ້ນແຂວງ).

#### 3.2.1 ສົນທິສັນຍາ ຣໍາຊາ ວ່າດ້ວຍ ທີ່ດິນບໍລິເວນນໍ້າ ທີ່ມີຄວາມສຳຄັນໃນສາກົນ (Ramsar)

ພັນທະ ຂອງ ສປປ ລາວ ໃນຖານະເປັນພາຄີ ຂອງ Ramsar ລວມມີ:

- ສ້າງ ແລະ ຈັດຕັ້ງປະຕິບັດ ການວາງແຜນ ເພື່ອສົ່ງເສີມ ການອະນຸລັກ ບັນດາສະຖານທີ່ຕັ້ງ ຣໍາຊາ ຂອງຕົນ ແລະ ການໃຊ້ແບບອະນຸລັກ ທີ່ດິນບໍລິເວນນໍ້າ ໃນປະເທດ ( ມາດຕາ 3.1);
- ສົ່ງເສີມ ການອະນຸລັກ ທີ່ດິນບໍລິເວນນໍ້າ ແລະ ບັນດານົກນໍ້າ ໂດຍສ້າງຕັ້ງ ເຂດສະຫງວນທຳມະຊາດ ຢູ່ເທິງ ທີ່ດິນບໍລິເວນນໍ້າ, ບໍ່ວ່າພວກມັນຖືກກຳນົດ ໃຫ້ເປັນ ເຂດ ຣໍາຊາ ຫຼື ບໍ່, ແລະ ຕອບສະໜອງ ການປ້ອງກັນພວກມັນຢ່າງພຽງພໍເໝາະສົມ (ມາດຕາ 4.1);
- ສົ່ງເສີມສະໜັບສະໜູນການຄົ້ນຄວ້າ ແລະ ການແລກປ່ຽນຂໍ້ມູນ ແລະ ເອກະສານພິມເຜີຍແຜ່ (ມາດຕາ 4.3);
- ສູ້ຊົນຜ່ານ ການຄຸ້ມຄອງ ເພື່ອໃຫ້ປະຊາກອນ ນົກນໍ້າ ເພີ່ມຂຶ້ນ ຢູ່ຕາມ ທີ່ດິນບໍລິເວນນໍ້າ ທີ່ເໝາະສົມ (ມາດຕາ 4.4);
- ສົ່ງເສີມການຝຶກອົບຮົມ ບຸກຄະລາກອນ ທີ່ມີຄວາມສາມາດ ໃນຂົງເຂດການຄົ້ນຄວ້າ, ຄຸ້ມຄອງ ແລະ ກຳກັບດູແລ ທີ່ດິນບໍລິເວນນໍ້າ (ມາດຕາ 4.5);
- ປຶກສາຫາລື ກັບ ບັນດາພາຄີອື່ນໆຂອງ ຣໍາຊາ ກ່ຽວກັບ ການຈັດຕັ້ງປະຕິບັດ ພັນທະ ທີ່ຍົກຂຶ້ນຈາກສົນທິສັນຍາ ໂດຍສະເພາະ ໃນກໍລະນີ ທີ່ດິນບໍລິເວນນໍ້າ ຂ້າມຊາຍແດນ ຫຼື ບ່ອນທີ່ ລະບົບນໍ້າ ຖືກແບ່ງໂດຍ ບັນດາພາຄີ ສັນຍາ (ມາດຕາ 5); ແລະ
- ຮັບປະກັນໃຫ້ ບັນດາຜູ້ຕາງໜ້າຂອງຕົນ ຜູ້ທີ່ເຂົ້າຮ່ວມ ກອງປະຊຸມພາຄີ ຂອງ ຣໍາຊາ ລວມເອົາ ບັນດາບຸກຄົນ ທີ່ເປັນຜູ້ຊ່ຽວຊານ ກ່ຽວກັບ ທີ່ດິນ ບໍລິເວນນໍ້າ ຫຼື ນົກນໍ້າ (ມາດຕາ 7).

ຣໍາຊາ ຮັບຮູ້ ສາມລະດັບ ຂອງ ສະຖານະພາບ ຂອງ ທີ່ດິນບໍລິເວນນໍ້າໃນປະເທດໜຶ່ງ: ຖືກກຳນົດໃຫ້ເປັນສະຖານທີ່ຕັ້ງ ຂອງ ຣໍາຊາ ທີ່ມີຄວາມສຳຄັນໃນສາກົນ; ຖືກກຳນົດ ໃຫ້ເປັນ ເຂດປ່າສະຫງວນແຫ່ງຊາດ ໂດຍສອດຄ່ອງຕາມລັກສະນະພິເສດ ຂອງປະເທດ; ແລະ ບໍ່ຖືກສະຫງວນ. ກ່ຽວກັບການເປັນ ພາຄີ ຂອງ ຣໍາຊາ, ປະເທດໜຶ່ງຕ້ອງ ກຳນົດຢ່າງໜ້ອຍ ທີ່ດິນບໍລິເວນນໍ້າ ຂອງປະເທດ ໜຶ່ງແຫ່ງ ໃຫ້ເປັນສະຖານທີ່ຕັ້ງ ຣໍາຊາ (ມາດຕາ 2.1). ນອກນັ້ນ ບັນດາພາຄີ ຂອງ ຣໍາຊາ ຍັງມີພັນທະອັນໜຶ່ງ ເພື່ອສ້າງຕັ້ງ ເຂດອະນຸລັກທຳມະຊາດ, ຫຼື ປະເພດອື່ນໆ ຂອງ ເຂດປ່າສະຫງວນ, ຢູ່ທີ່ດິນບໍລິເວນນໍ້າ, ບໍ່ວ່າເຂດປ່າສະຫງວນເຫຼົ່ານັ້ນ ຖືກກຳນົດ ໃຫ້ເປັນ ສະຖານທີ່ຕັ້ງ ຣໍາ

[9] ລັດຖະບານ ສປປ ລາວ (2009). ຄຳສັ່ງ ປະທານປະເທດ ເລກທີ 01. ລົງວັນທີ 7 ຕຸລາ 2009 ວ່າດ້ວຍການໃຫ້ສັດຕະຍາບັນ ແລະ ການເຂົ້າເປັນພາຄີ ສົນທິສັນຍາສາກົນ.

ຊາ ຫຼືບໍ່ກໍຕາມ (ມາດຕາ 4.1). ຢູ່ທຸກໆປະເທດ ຈະມີທີ່ດິນບໍລິເວນນໍ້າ ທີ່ບໍ່ຂຶ້ນກັບການປົກປັກຮັກສາ; ຣໍາຊາ ມອບໃຫ້ເປັນພັນທະ ຂອງ ປະເທດດັ່ງກ່າວ ທີ່ເປັນພາຄີ ຂອງ ສົນທິສັນຍາ ໃຫ້ສົ່ງເສີມການອະນຸລັກ ແລະ ໃຊ້ແບບອະນຸລັກ ທີ່ດິນບໍລິເວນນໍ້າ ທີ່ບໍ່ມີການປົກປ້ອງສະຫງວນໄວ້ນັ້ນ (ມາດຕາ 3.1).

' ການໃຊ້ແບບອະນຸລັກ' ທີ່ດິນບໍລິເວນນໍ້າ (ມາດຕາ 3.1), ເປັນຫຼັກການພື້ນຖານ ຂອງ ສົນທິສັນຍາ ຣໍາຊາ. ມັນໃຫ້ນິຍາມວ່າ:

> ... ການຮັກສາ ລັກສະນະ ນິເວດຂອງພວກມັນ, ບັນລຸຜົນ ຜ່ານການຈັດຕັ້ງປະຕິບັດ ບັນດາວິທີການລະບົບນິເວດ, ໃນສະພາບແວດລ້ອມ ຂອງການພັດທະນາແບບຍືນຍົງ[10].

ເພາະສະນັ້ນ, ຣໍາຊາ ຈຶ່ງບໍ່ບັງຄັບ ໃຫ້ມີການປົກປັກຮັກສາ ສະຖານທີ່ຕັ້ງ ຣໍາຊາ ຢ່າງເຂັ້ມງວດ ຫຼື ຢ່າງຂາດຕົວ. ແຕ່ຕ້ອງການ ໃຫ້ ອະນຸລັກ ທີ່ດິນບໍລິເວນນໍ້າ ຜ່ານ ການວາງແຜນ ແລະ ຄຸ້ມຄອງ ຢ່າງຕັ້ງໜ້າແລະ ມີປະສິດທິຜົນ ເພື່ອຮັກສາ ລະບົບນິເວດ ຂອງ ທີ່ດິນບໍລິເວນນໍ້າ ແລະ ການບໍລິການ ທີ່ພວກມັນສະໜອງໃຫ້, ດ້ວຍວິທີໃດກໍໄດ້ ທີ່ເໝາະສົມທີ່ສຸດ ສໍາລັບແຕ່ລະ ສະຖານທີ່ຕັ້ງສະເພາະ.

ຕະຫຼອດໄລຍະຫຼາຍໆປີ, ຣໍາຊາ ໄດ້ ພັດທະນາຂຶ້ນມາ ແລະ ອະທິບາຍ ແນວຄວາມຄິດ ກ່ຽວກັບ ການໃຊ້ແບບອະນຸລັກ ແລະ ກອງປະຊຸມ ຂອງບັນດາພາຄີ ໄດ້ຮັບຮອງເອົາ ຂໍ້ແນະນໍາ ເພື່ອການຈັດຕັ້ງປະຕິບັດ[11]

### 3.2.2 ສົນທິສັນຍາວ່າດ້ວຍ ການຄ້າສາກົນ ຊິ່ງຊະນິດພັນ ສັດ ແລະ ພືດປ່າ ທີ່ໃກ້ຈະສູນພັນ (CITES)

CITES ຄຸ້ມຄອງການຄ້າສາກົນ ຊິ່ງຊະນິດພັນສັດ ແລະ ພືດປ່າ ທີ່ໃກ້ຈະສູນພັນ ແລະ ຈັດໝວດຊະນິດພັນ ສັດແລະພືດ ໂດຍອີງຕາມລະດັບຄວາມສ່ຽງທີ່ຈະສູນພັນ ຫຼື ໄດ້ຮັບການປົກປ້ອງ. ບັນຊີລາຍຊື່ ຂອງປະເພດເຫຼົ່ານັ້ນ ແມ່ນຢູ່ໃບຊ້ອນທ້າຍ ຂອງ ສົນທິສັນຍາ.

ໃບຊ້ອນທ້າຍ I ລວມເອົາ ທຸກຊະນິດພັນ ທີ່ຖືກຂົ່ມຂູ່ ດ້ວຍການສູນພັນ ທີ່ໄດ້ຮັບຜົນກະທົບ, ຫຼືອາດຈະໄດ້ຮັບຜົນກະທົບ ຈາກ ການຄ້າລະຫວ່າງຊາດ. ໃບຊ້ອນທ້າຍ II ລວມເອົາ ບັນດາຊະນິດພັນ ທີ່ໃນປັດຈຸບັນ ບໍ່ຖືກຂົ່ມຂູ່ດ້ວຍ ການສູນພັນ ແຕ່ ຕ້ອງມີການຄຸ້ມຄອງ ເພື່ອໃຫ້ພວກມັນ ຫຼີກລ່ຽງໄພຂົ່ມຂູ່ດ້ວຍການສູນພັນ. ໃບຊ້ອນທ້າຍ III ຈັດບັນຊີລາຍຊື່ ບັນດາຊະນິດພັນ ທີ່ປະເທດໃດໜຶ່ງ ຄວບຄຸມ ພາຍໃຕ້ອໍານາດກົດໝາຍ ຂອງຕົນເອງ ແລະພວກເຂົາຕ້ອງການການສະໜັບສະໜູນ ຂອງບັນດາປະເທດອື່ນ ເພື່ອຄວບຄຸມການຄ້າ ບັນດາຊະນິດພັນເຫຼົ່ານັ້ນ.

ແຂ້ສະຫຍາຍ, ທີ່ອາໄສຢູ່ ທີ່ດິນບໍລິເວນນໍ້າ ເຊຈໍາພອນ ແລະ ເຊິ່ງຖືກຈັດໝວດຢູ່ໃນ ບັນຊີແດງ ຂອງ IUCN ຂອງ ບັນດາຊະນິດພັນທີ່ຖືກຂົ່ມຂູ່ຢ່າງຮ້າຍແຮງ ແມ່ນຖືກຈັດເປັນບັນຊີ ຢູ່ໃນ ໃບຊ້ອນທ້າຍ I ຂອງ CITES. ໃນຖານະເປັນ ພາຄີໜຶ່ງ ຂອງ CITES, ສປປ ລາວ ມີພັນທະຕ້ອງ ລົງໂທດ ການຄອບຄອງ ແຂ້ສະຫຍາມ ທີ່ບໍ່ໄດ້ຮັບອະນຸຍາດ ກໍຄື ຕ້ອງຫ້າມ ການຄ້າສັດດັ່ງກ່າວ ໂດຍບໍ່ໄດ້ຮັບອະນຸຍາດ. CITES ບໍ່ບັງຄັບ ບັນດາພາຄີ ຢ່າງ

---

[10]**The Ramsar Convention on Wetlands, 'The Wise Use Concept'. http://www.ramsar.org/cda/en/ramsar-home/main/ramsar/1_4000_0. Accessed 30 September 2012.**

[11]**The Ramsar Convention on Wetlands. (1) (2006). A Conceptual Framework for the wise use of wetlands and the maintenance of their ecological character (Resolution IX.1 A). Available on-line: http://www.ramsar.org/cda/en/ramsar-documents-guidelines-a-conceptual-framework/main/ramsar/1-31-105%5E20842_4000_0__. (2). (1993). 'Additional Guidance for the Implementation of the Wise Use Concept'. First adopted as Resolution 5.6 of the 5th Meeting of the Conference of the Contracting Parties, Kushiro, Japan. Available on-line: http://www.ramsar.org/cda/en/ramsar-documents-guidelines-additional-guidance-for/main/ramsar/1-31-105%5E20915_4000_0__. (3) (1990). Guidelines for the Implementation of the Wise Use Concept. First adopted as Recommendation 4.10 of the 4th Meeting of the Conference of the Contracting Parties (Montreux, Switzerland). Available on-line: http://www.ramsar.org/cda/en/ramsar-documents-guidelines-guidelines-for-the-20909/main/ramsar/1-31-105%5E20909_4000_0__. All accessed 30 September 2012.**

ຈະແຈ້ງ ແລະ ຊັດເຈນ ໃຫ້ປ້ອງກັນ ບັນດາຊະນິດພັນສັດປ່າໃນ ໃບຊ້ອນທ້າຍ I, ແຕ່ວ່າພັນທະ ໃຫ້ລົງໂທດ ການຄອບຄອງທີ່ບໍ່ໄດ້ຮັບອະນຸຍາດ ນັ້ນ ເຮັດໃຫ້ເກີດຄວາມຈໍາເປັນ ສໍາລັບ ການອອກກົດໝາຍໃນປະເທດ ທີ່ຈໍາເປັນຕ້ອງມີ ການອະນຸຍາດ ສໍາລັບການຄອບຄອງ ແລະ ລົງໂທດການຄອບຄອງທີ່ບໍ່ມີໜັງສືອະນຸຍາດ.

### 3.2.3 ສົນທິສັນຍາ ວ່າດ້ວຍ ຊີວະນາໆພັນ (CBD)

ສປປ ລາວ ກໍເປັນພາຄີ ຂອງ CBD ເໝືອນກັນ. ໃນຂະນະທີ່ Ramsar ໃຊ້ສະເພາະແຕ່ ທີ່ດິນບໍລິເວນນໍ້າ ແລະ CITES ໃຊ້ໃນ ບັນດາຊະນິດພັນ, ພັນທະຂອງ CBD ແມ່ນໃຊ້ເຂົ້າໃນ ທຸກໆປະເພດ ຂອງລະບົບນິເວດ, ລວມທັງ ທີ່ດິນບໍລິເວນນໍ້າ ແລະ ບັນດາຊະນິດພັນທັງໝົດ.

ສົນທິສັນຍາ CBD ບາງຄັ້ງ ກໍຖືກອ້າງເຖິງ ວ່າເປັນ "ຄັນຮົ່ມ" ໃຫ້ແກ່ ບັນດາຂໍ້ຕົກລົງລະຫວ່າງຊາດ ອື່ນໆ ທີ່ຄວບຄຸມລະບົບນິເວດ ແລະ ບັນດາຊະນິດພັນ ແລະ ພັນທະຂອງມັນ ແມ່ນສອດຄ່ອງ ກັບບັນດາພັນທະ ທີ່ຢູ່ພາຍໃຕ້ Ramsar ແລະ CITES. ພາຍໃຕ້ CBD, ການອະນຸລັກ ໃຫ້ຢູ່ທີ່ເດີມ (*in-situ*) ຫຼື ການອະນຸລັກ ລະບົບນິເວດ ແລະ ບັນດາຊະນິດພັນ ບ່ອນທີ່ພວກມັນ ເກີດຂຶ້ນໂດຍທໍາມະຊາດ, ເປັນບູລິມະສິດ. ໃນລະຫວ່າງບັນດາຫຼາຍໆເງື່ອນໄຂຂອງ CBD ທີ່ໃຊ້ສະເພາະ ເຂດຈໍາພວນ ນັ້ນ, ສິ່ງດັ່ງຕໍ່ໄປນີ້ ແມ່ນສໍາຄັນໂດຍສະເພາະ: ຄວບຄຸມ ຫຼື ຄຸ້ມຄອງ ຊັບພະຍາກອນ ຊີວະວິທະຍາ ທີ່ສໍາຄັນສໍາລັບ ການອະນຸລັກ ຊີວະນາໆພັນ, ບໍ່ວ່າຈະຢູ່ໃນ ຫຼືນອກເຂດສະຫງວນ, ດ້ວຍມູມມອງ ທີ່ ຮັບປະກັນ ການອະນຸລັກ ແລະ ການນໍາໃຊ້ ພວກມັນຢ່າງຍືນຍົງ (ມາດຕາ 8c);

- ສົ່ງເສີມການປົກປ້ອງ ລະບົບນິເວດ, ຖິ່ນທີ່ຢູ່ອາໄສ ແລະ ການຮັກສາ ປະຊາກອນຂອງ ບັນດາຊະນິດພັນໃຫ້ຢູ່ລອດ ໃນສະພາບແວດລ້ອມ ທໍາມະຊາດ (ມາດຕາ 8d);
- ພາຍໃຕ້ກົດໝາຍແຫ່ງຊາດ ຂອງຕົນ, ເຄົາລົບ, ອະນຸລັກ ແລະ ຮັກສາພູມປັນຍາ, ຫົວຄິດປະດິດສ້າງ ແລະ ທໍານຽມການປະຕິບັດ ຂອງ ບັນດາຊຸມຊົນພື້ນເມືອງ ແລະ ທ້ອງຖິ່ນ ທີ່ ປະກອບເປັນວິຖີການດໍາລົງຊີວິດ ທີ່ກ່ຽວຂ້ອງ ກັບການອະນຸລັກ ແລະ ການນໍາໃຊ້ ແບບຍືນຍົງ ຊີວະນາໆພັນ ແລະ ສົ່ງເສີມ ການໝູນໃຊ້ພວກມັນຢ່າງກວ້າງຂວາງ ດ້ວຍການຍິນຍອມ ແລະ ມີສ່ວນຮ່ວມ ຂອງ ເຈົ້າຂອງພູມປັນຍາ, ຫົວຄິດປະດິດສ້າງ ແລະ ວິທີປະຕິບັດ ເຫຼົ່ານັ້ນ ແລະສົ່ງເສີມ ການແບ່ງປັນຜົນປະໂຫຍດ ທີ່ຍຸດຕິທໍາ ທີ່ເກີດຈາກການນໍາໃຊ້ປະໂຫຍດ ພູມປັນຍາ, ຫົວຄິດປະດິດສ້າງ ແລະ ວິທີປະຕິບັດເຫຼົ່ານັ້ນ (ມາດຕາ 8j); ແລະ
- ປົກປ້ອງ ແລະ ສົ່ງເສີມ ການນໍາໃຊ້ແບບປະເພນີ ບັນດາຊັບພະຍາກອນ ຊີວະພາບ ໂດຍສອດຄ່ອງ ກັບທໍານຽມການປະຕິບັດ ທີ່ເປັນປະເພນີ ທີ່ສາມາດໃຊ້ຮ່ວມກັນໄດ້ ກັບການອະນຸລັກ ແລະ ເງື່ອນໄຂທີ່ຈໍາເປັນ ຂອງການນໍາໃຊ້ແບບຍືນຍົງ (ມາດຕາ 10c).

## 3.3 ກົດໝາຍນິຕິບັນຍັດ

ບັນດາກົດໝາຍສ່ວນຫຼາຍ ທີ່ຜ່ານສະພາແຫ່ງຊາດ ແມ່ນຖືກເສີມເຕີມ ໂດຍການຈັດຕັ້ງປະຕິບັດ ບັນດາດໍາລັດນາຍົກລັດຖະມົນຕີ, ຍົກເວັ້ນ ສໍາລັບກົດໝາຍວ່າດ້ວຍ ສັດນໍ້າ ແລະ ສັດປ່າ ແລະ ກົດໝາຍອາຍາ. ບັນດາດໍາລັດເຫຼົ່ານັ້ນ ມີກົດລະບຽບລະອຽດ ແລະເປັນເຄື່ອງມື ນິຕິກໍາ ທີ່ລັດຖະບານໃຊ້ ເປັນພື້ນຖານ ສໍາລັບການຕົກລົງການບໍລິຫານ ຂອງຕົນ ເພື່ອຈັດຕັ້ງປະຕິບັດ ກົດໝາຍ ນິຕິບັນຍັດ. ບັນດາດໍາລັດ ທີ່ຖືກຈັດຕັ້ງປະຕິບັດ ທີ່ມີຢູ່ໃນປັດຈຸບັນ ເປັນຂອບວຽກຄວບຄຸມໂດຍທົ່ວໄປ, ແຕ່ບໍ່ແນໃສ່ສະເພາະ ສະຖານທີ່ຕັ້ງ ຮໍາຊາ ເຂດຈໍາພວນ.

### 3.3.1 ກົດໝາຍທີ່ດິນ (2003)

ຢູ່ ສປປ ລາວ, ທີ່ດິນເປັນເຈົ້າຂອງ ໂດຍວົງຄະນາຍາດ ແຫ່ງຊາດ ແລະ ລັດອະນຸຍາດ ສິດໃນການພັດທະນາ. ມີແຕ່ພາຍໃຕ້ກົດໝາຍທີ່ດິນເທົ່ານັ້ນ ບຸກຄົນສາມາດໄດ້ຮັບໃບຕາດິນ, ບໍ່ວ່າເປັນທີ່ດິນບໍລິເວນນໍ້າ, ທີ່ດິນປ່າໄມ້, ທີ່ດິນກະສິກໍາ ຫຼືທີ່ດິນ ທີ່ໃຊ້ເພື່ອເປົ້າໝາຍອື່ນໆ.

ພາກທີ IV ຂອງ ກົດໝາຍທີ່ດິນ ຄຸ້ມຄອງສະເພາະ ທີ່ດິນບໍລິເວນນໍ້າ ແລະ ໃຫ້ຄໍານິຍາມທາງ ນິຕິບັນຍັດ ກ່ຽວກັບທີ່ດິນບໍລິເວນນໍ້າ ໃນ ສປປ ລາວ.

> *ທີ່ດິນພື້ນທີ່ນໍ້າ [ທີ່ດິນບໍລິເວນນໍ້າ] ແມ່ນທີ່ດິນ ທີ່ຈົມນໍ້າ ຫຼືຢູ່ອ້ອມພື້ນທີ່ນໍ້າ ເຊັ່ນ ທີ່ດິນຈົມນໍ້າ, ທີ່ດິນຢູ່ຍອດແມ່ນໍ້າ, ແຄມແມ່ນໍ້າ, ດອນ, ທີ່ດິນທີ່ກໍ່ຕົວຂຶ້ນໃໝ່, ທີ່ດິນທີ່ກໍ່ຕົວຂຶ້ນເມື່ອນໍ້າບົກແຫ້ງ, ຫຼືທີ່ດິນທີ່ກໍ່ຕົວຂຶ້ນໂດຍການປ່ຽນແປງ ຫຼື ການຜັນແລວນໍ້າ (ມາດຕາ 23).*

ກົດໝາຍ ມອບໝາຍ ກະຊວງກະສິກໍາ ແລະ ປ່າໄມ້ ໃຫ້ເປັນ ອົງການຮັບຜິດຊອບ ການບໍລິຫານ ທີ່ດິນບໍລິເວນນໍ້າ (ມາດຕາ 24).

ການໃຊ້ທີ່ດິນບໍລິເວນນໍ້າ ຕ້ອງປະຕິບັດຕາມເງື່ອນໄຂດັ່ງຕໍ່ໄປນີ້:

1. ບໍ່ກໍ່ໃຫ້ມີການເຊາະເຈື່ອນ;
2. ບໍ່ກໍ່ໃຫ້ມີການກີດຂວາງແລວນໍ້າໄຫຼ;
3. ບໍ່ກໍ່ໃຫ້ລະດັບນໍ້າຫຼຸດລົງ ຫຼື ຖ້ວມ;
4. ບໍ່ສ້າງມົນລະພິດ ຫຼື ເຮັດໃຫ້ນໍ້າເປັນພິດ;
5. ບໍ່ຕັດຕົ້ນໄມ້ ຫຼື ທໍາລາຍປ່າໄມ້ໃນພື້ນທີ່ອ່າງຂອງນໍ້າ;
6. ບໍ່ຂຸດຈີກ ຫຼື ເອົາດິນອອກໄປຈາກ ໜອງບຶງ ແລະ ທີ່ດິນບໍລິເວນນໍ້າ, ຍົກເວັ້ນໃນກໍລະນີທີ່ຈໍາເປັນ ຕ້ອງມີການອະນຸຍາດເສຍກ່ອນ ຈາກອົງການຈັດຕັ້ງ ທີ່ກ່ຽວຂ້ອງ [sic] (ມາດຕາ 25)

ກົດໝາຍທີ່ດິນ ມອບຄວາມຮັບຜິດຊອບໃຫ້ອໍານາດການປົກຄອງບ້ານ ບ່ອນທີ່ທີ່ດິນບໍລິເວນນໍ້າຕັ້ງຢູ່ ໃນການ '… ສຶກສາ ແລະ ເຮັດຂໍ້ສະເໜີ ຕໍ່ອໍານາດການປົກຄອງເມືອງ ຫຼື ກໍາແພງນະຄອນ ກ່ຽວກັບ ການຈັດສັນທີ່ດິນແບບນີ້ ໃຫ້ແກ່ບຸກຄົນ ຫຼື ອົງການຈັດຕັ້ງ ເພື່ອໃຫ້ມີການປົກປັກຮັກສາ ແລະ ນໍາໃຊ້ຢ່າງເໝາະ' (ມາດຕາ 26). ອໍານາດການປົກຄອງເມືອງ ຫຼື ກໍາແພງນະຄອນ ເປັນຜູ້ຮັບຜິດຊອບໃນການ ຈັດສັນ ສິດນໍາໃຊ້ປ່າໄມ້ ແລະ ທີ່ດິນ (ມາດຕາ 22). ໃບຕາດິນ ໃຫ້ສິດແກ່ປະຊາຊົນ ໃນການພັດທະນາທີ່ດິນ ຂອງຕົນ ແລະ ໃບຕາດິນສາມາດ ໂອນໄດ້.

ກົດໝາຍກໍານົດໂທດທົ່ວໄປ ຢູ່ໃນມາດຕາ 83-84, ນອກຈາກ ການສູນເສຍສິດ ນໍາໃຊ້ທີ່ດິນ (ມາດຕາ 6).

#### 3.3.1.1 ດໍາລັດ ເລກທີ 88/ນຍ, 03 ມິຖຸນາ 2008 ວ່າດ້ວຍ ການຈັດຕັ້ງປະຕິບັດ ກົດໝາຍທີ່ດິນ

ດໍາລັດນາຍົກລັດຖະມົນຕີສະບັບນີ້ ກໍານົດ ' ທີ່ດິນຈົມນໍ້າ' ໃຫ້ ສັດແລະພືດນໍ້າ (ເບິ່ງ ຂໍ້ 2.3.2, ລຸ່ມນີ້):

> '**ທີ່ດິນຈົມນໍ້າ**' ອ້າງເຖິງ ທີ່ດິນທຸກຕອນ ທີ່ຕັ້ງຢູ່ໃຕ້ນໍ້າ ຢູ່ຕາມດິນບໍລິເວນນໍ້າ, ເຊິ່ງປະກອບດ້ວຍສັດນໍ້າ, ພືດນໍ້າ, ແຮ່ທາດ ແລະ ອື່ນໆ. (ມາດຕາ 2)

ດຳລັດນາຍົກລັດຖະມົນຕີ ຍັງກຳນົດ ການນຳໃຊ້ທີ່ດິນ ແບບປະເພນີ ແລະ ລະບຸສະເພາະ ວ່າມັນຈະຖືກຮັບຮູ້ພາຍໃຕ້ກົດໝາຍທີ່ດິນແນວໃດ:

> ສິດການນຳໃຊ້ທີ່ດິນແບບປະເພນີ ແມ່ນການປົກປັກຮັກສາ ແລະ ການນຳໃຊ້ທີ່ດິນ ຜ່ານ ການບຸກເບີກ ແລະ ພັດທະນາ ຫຼື ຜ່ານແຜນ ຂອງລັດ ໃນການຈັດສັນ ຕອນດິນທີ່ກ່ຽວຂ້ອງ ແບບປົກກະຕິ, ແບບສືບຕໍ່ ແລະ ແບບຍາວນານ ຈົນມາຮອດປັດຈຸບັນ ໂດຍບໍ່ມີເອກະສານໃດໆ ທີ່ຢັ້ງຢືນ ສິດການນຳໃຊ້ທີ່ດິນສຳລັບ ບຸກຄົນ , ອົງການຈັດຕັ້ງ ຫຼື ການໃຊ້ລວມໝູ່ຂອງບ້ານ.
>
> ລັດຮັບຮູ້ ສິດການນຳໃຊ້ທີ່ດິນ ແບບປະເພນີ ຂອງບຸກຄົນ, ອົງການຈັດຕັ້ງ ຫຼື ວົງຄະນາຍາດບ້ານ ໂດຍການອອກໃບຢັ້ງຢືນ ການສຳຫຼວດທີ່ດິນ ຫຼື ໃບຕາດິນ ຫຼື ໃບຢັ້ງຢືນທີ່ດິນ ຕາມແຕ່ກໍລະນີ, ດັ່ງທີ່ໄດ້ລະບຸລະອຽດຢູ່ໃນ ກົດໝາຍທີ່ດິນ, ຜ່ານຄຳຮ້ອງ ຂໍຈົດທະບຽນ ຍື່ນເຖິງ ອົງການຄຸ້ມຄອງທີ່ດິນ...(ມາດຕາ 26).

### 3.3.2 ກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ (2007)

ນີ້ແມ່ນກົດໝາຍ ນິຕິບັນຍັດ ທີ່ຄຸ້ມຄອງໂດຍກົງທີ່ສຸດ ສັດປ່າຢູ່ ເຂດ ຣຳຊາ ເຊຈຳພອນ. ກົດໝາຍສະບັບນີ້ ມອບພັນທະໃຫ້ປະຊາຊົນ ໃນການປ້ອງກັນ ສັດປ່າ ແລະ ສັດນ້ຳ, ເຖິງແມ່ນວ່າ ພວກມັນຖືກພົບເຫັນຢູ່ນອກພື້ນທີ່ປ່າສະຫງວນ. ຢູ່ ເຂດ ຣຳຊາ ເຊຈຳພອນ, ບັນດາຊະນິດພັນ ສັດປ່າ ແລະ ສັດນ້ຳ ແມ່ນຢູ່ໃນປ່າສະຫງວນ ທີ່ຖືກຮັບຮູ້ໂດຍສາກົນ, ແລະ ເພາະສະນັ້ນ ຈຶ່ງຈຳເປັນຕ້ອງມີການຄວບຄຸມດູແລເພີ່ມເຕີມ ຈາກລັດຖະບານ.

ກົດໝາຍນີ້ ນິຍາມສັດນ້ຳ ວ່າ ທຸກຊະນິດພັນທີ່ ອາໄສຢູ່ໃນນ້ຳຕະຫຼອດເວລາ ຫຼື ເວລາສ່ວນຫຼາຍ ແລະ ອາໄສຕໍ່ລະບົບນິເວດນ້ຳ ເພື່ອການເກີດຄືນໃໝ່ ຫຼື ສາມາດເອົາຈາກທຳມະຊາດເພື່ອການປະສົມພັນ (ມາດຕາ 2). ກົດໝາຍກຳນົດການນຳໃຊ້ ສັດນ້ຳ ແລະ ສັດປ່າ ແບບປະເພນີ ເປັນການນຳໃຊ້ທີ່ສອດຄ່ອງ ກັບຄວາມເຊື່ອຖື ທີ່ໄດ້ປະຕິບັດມາເປັນປະເພນີ ມາແຕ່ດົນນານ. (ມາດຕາ 3.30).

ການອະນຸລັກ ສະຖານທີ່ຕັ້ງ ຣຳຊາ ຂອງຕົນ ເປັນພັນທະທຳອິດ ຂອງ ສປປ ລາວ ພາຍໃຕ້ສົນທິສັນຍາ ຣຳຊາ. ພາຍໃຕ້ກົດໝາຍ ການອະນຸລັກ 'ໝາຍເຖິງ ຮັກສາໃຫ້ຢູ່ໃນສະພາບເດີມ ແລະ ນຳໃຊ້ສັດປ່າ ແລະ ສັດນ້ຳ ໃຫ້ສອດຄ່ອງກັບ ລະບຽບກົດໝາຍໃດໜຶ່ງ ແລະ ຮັກສາມັນໄວ້ເພື່ອການນຳໃຊ້ແບບຍືນຍົງ,' (ມາດຕາ 3.14).

ບັນດາຫຼັກການທົ່ວໄປ ກ່ຽວກັບການປ້ອງກັນ, ການພັດທະນາ ແລະ ນຳໃຊ້ ສັດປ່າ ແລະ ສັດນ້ຳ, ທີ່ລະບຸໄວ້ ໃນ ມາດຕາ 6, ລວມເອົາ ການປ້ອງກັນ, ການນຳໃຊ້ແບບຍືນຍົງ ແລະ ການ ເກີດຄືນໃໝ່ ຂອງບັນດາຊະນິດພັນ ແລະ ການຮັກສາ ຖິ່ນທີ່ຢູ່ອາໄສ ແລະ ລະບົບນິເວດ, ໂດຍສະເພາະ ໃຫ້ສອດຄ່ອງ ກັບບັນດາສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ມາດຕາ 11, 12 ແລະ 13 ຂອງກົດໝາຍ ຕັ້ງໄວ້ ສາມໝວດ ຂອງ ສັດປ່າ  ແລະ ສັດນ້ຳ, ເຊິ່ງສອດຄ່ອງກັບ ບັນດາປະເພທີ່ຖືກສ້າງຕັ້ງຂຶ້ນ ພາຍໃຕ້ CITES. ການລ່າ ບັນດາຊະນິດພັນ ທີ່ຖືກຈັດຢູ່ໃນບັນຊີ ໃນ ປະເພດ I ແມ່ນຖືກຫ້າມໂດຍເດັດຂາດ. ແຂ້ສະຫຍາມ ທີ່ອາໄສຢູ່ ທີ່ດິນບໍລິເວນນ້ຳ ເຊຈຳພອນ ແມ່ນຢູ່ໃນບັນຊີໃນປະເພດ I.


ລູກ ແຂ້ ສະຫຍາມ ຢູ່ບ້ານຕານສຸມ

ມາດຕາ 17 ລະບຸເຖິງການ ບົ່ງບອກ ຖິ່ນທີ່ຢູ່ອາໄສ, ເຂດການອະນຸລັກ ແລະ ເຂດໃຫ້ອາຫານ ແກ່ສັດປ່າ ແລະ ສັດນ້ຳ ດ້ວຍການມີສ່ວນຮ່ວມ ຂອງ ປະຊາຊົນທ້ອງຖິ່ນ, ເພື່ອສ້າງ ລະບຽບການ ແລະ ຂໍ້ແນະນຳ.

ກົດໝາຍນີ້ ລວມເອົາ ເງື່ອນໄຂສະເພາະ ກ່ຽວກັບ ການນຳໃຊ້ ແບບປະເພນີ ສັດປ່າ ແລະ ສັດນ້ຳ :

> ການນຳໃຊ້ ແບບປະເພນີ ສັດປ່າ ແລະ ສັດນ້ຳ ສຳລັບຄວາມຈຳເປັນ ໃນແງ່ຂອງ ວັດທະນະທຳ ແລະ ຄວາມເຊື່ອຖື, ເຊັ່ນ: ປ່ອຍນົກ, ເຕົ່າ, ປາ ແລະ ອື່ນໆ. ການນຳໃຊ້ ແບບປະເພນີ ສັດປ່າ ແລະ ສັດນ້ຳ ແມ່ນ ໄດ້ຮັບອະນຸຍາດ ຢູ່ໃນບ້ານ ໂດຍສອດຄ່ອງ ກັບກົດລະບຽບ ແລະ ຂໍ້ກຳນົດ (ມາດຕາ 32).

ມາດຕາ 24 ອະນຸຍາດ ໃຫ້ລ່າສັດປ່າ ຫຼື ການຈັບສັດນ້ຳ ເພື່ອການນຳໃຊ້ແບບປະເພນີ, ແຕ່ວ່າ ສະເພາະແຕ່ຈຳພວກສັດ ທີ່ຢູ່ໃນບັນຊີ ໃນໝວດ 2 ເທົ່ານັ້ນ, ແລະ ມີການຈຳກັດກ່ຽວກັບເຄື່ອງມື ທີ່ອາດຈະຖືກນຳໃຊ້.

ບັນດາເງື່ອນໄຂສະເພາະ ກ່ຽວກັບການນຳໃຊ້ສຳລັບຄົວເຮືອນ, ແມ່ນລະບຸໄວ້ໃນມາດຕາ 31, ອະນຸຍາດໃຫ້ນຳໃຊ້ ສັດປ່າ ແລະ ສັດນ້ຳ ໃນໝວດ II ແລະ ໝວດ III ' ...ໃນລະດູການສະເພາະ ຫຼື ໃນຂົງເຂດທີ່ໄດ້ຮັບອະນຸຍາດ, ການນຳໃຊ້ ບັນດາເຄື່ອງມື ແລະ ອຸປະກອນ ທີ່ບໍ່ເປັນອັນຕະລາຍ ຕໍ່ປະຊາກອນຂອງຊະນິດພັນ ຫຼື ມີຜົນກະທົບທາງລົບ ຕໍ່ຖິ່ນທີ່ຢູ່ອາໄສ ທຳມະຊາດ.'

ມາດຕາ 52 ວາງ ຂໍ້ຫ້າມທົ່ວໄປ ດັ່ງຕໍ່ໄປນີ້ ສຳລັບ ບຸກຄົນ, ອົງການຈັດຕັ້ງທ້ອງຖິ່ນ(ຂອງປະເທດ) ແລະ ອົງການຈັດຕັ້ງສາກົນ ໃນ ສປປ ລາວ: ການຈັບສັດນ້ຳ ແລະ ສັດປ່າ ທີ່ຢູ່ໃນບັນຊີ ໝວດ III; ທາລຸນ/ທຳລະມານ ສັດນ້ຳ ແລະ ສັດປ່າ; ຈັບເອົາ, ຄອບຄອງ ແລະ ຄ້າຂາຍ ສັດນ້ຳ ແລະ ສັດປ່າ ໂຍບໍ່ມີການອະນຸຍາດ ທີ່ຈຳເປັນ; ການຈັບສັດນ້ຳ ແລະ ສັດປ່າ ໃນເຂດ ອະນຸລັກ, ໃນລະດູປະສົມພັນ, ແລະ ເມື່ອຍາມສັດມີລູກນ້ອຍ; ຜະລິດ. ນຳເຂົ້າ, ຂາຍ ແລະ ນຳໃຊ້ ອຸປະກອນ ແລະ ອາວຸດ ທີ່ສາມາດຖືກນຳໃຊ້ ເພື່ອເຮັດໃຫ້ ສັດນ້ຳ ແລະ ສັດປ່າໝົດສິ້ນໄປ; ສ້າງຄວາມເສຍຫາຍໃຫ້ແກ່ ເຂດ ອະນຸລັກ ແບບໃດແບບໜຶ່ງ, ລວມທັງ ສ້າງຄວາມເສຍຫາຍແກ່ເຄື່ອງໝາຍເຂດແດນ; ແລະ ກໍ່ໃຫ້ເກີດມົນລະພິດ ໂດຍການລ້ຽງ ສັດນ້ຳ ແລະ ສັດປ່າ ໃນບັນດາຊຸມຊົນ ແລະ ເຂດໃນເມືອງ.

ການອະນຸຍາດ ສຳລັບການນຳໃຊ້ທຸກໆກໍລະນີ ສັດປ່າ ທີ່ຢູ່ໃນ:

- ໝວດ I ຕ້ອງໄດ້ຮັບຈາກລັດຖະບານ;

- ໝວດ II ອາດອອກໃຫ້ໂດຍ ກະຊວງ ກະສິກຳ ແລະປ່າໄມ້;
- ໝວດ III ອາດ ແມ່ນແຂວງ ອອກໃຫ້ ດັ່ງທີ່ໄດ້ເວົ້າລາຍລະອຽດ ຢູ່ໃນ ລະບຽບຂໍ້ກຳນົດ.[12] ບັນຊີລາຍຊື່ຂອງຊະນິດພັນ ໝວດ I ແລະ ໝວດ II ໄດ້ຮັບການອະນຸມັດ ຈາກ ລັດຖະບານ ໂດຍອີງຕາມ ຂໍ້ສະເໜີ ຂອງ ກະຊວງກະສິກຳ ແລະ ປ່າໄມ້.

ການລົງໂທດ ສຳລັບການລ່ວງລະເມີດກົດໝາຍ ແມ່ນຖືກລະບຸໄວ້ໃນມາດຕາ 67-72. ການລົງໂທດ ແມ່ນເລີ້ມແຕ່ມາດຕະການສຶກສາອົບຮົມ, ໄປເຖິງການປັບໃໝ ແລະ ລົງໂທດອາຍາ. ພາຍໃຕ້ມາດຕາ 70, ຜູ້ລະເມີດ ທີ່ກໍ່ຄວາມເສຍຫາຍຫຼາຍກວ່າ 200,000 ກີບ ແມ່ນຖືກປັບໃໝສອງເທົ່າ ຂອງຄ່າເສຍຫາຍ ທີ່ຜູ້ກ່ຽວໄດ້ກໍ່ຂຶ້ນ. ການລະເມີດເທື່ອທີສອງ ຫຼື ເປັນຄວາມຊິນເຄີຍ ແມ່ນຖືກປັບໃໝ ສາມເທົ່າ ຂອງມູນຄ່າຄວາມເສຍຫາຍ ທີ່ໄດ້ກໍ່ຂຶ້ນຕໍ່ສັດປ່າໃນໝວດທີ I, ສອງເທົ່າ ຂອງມູນຄ່າຄວາມເສຍຫາຍ ທີ່ໄດ້ກໍ່ຂຶ້ນຕໍ່ສັດປ່າ ໃນໝວດ II, ແລະ ມູນຄ່າຂອງຄວາມເສຍຫາຍຕໍ່ສັດປ່າໃນໝວດທີ III.

ຊັດເຈນແລ້ວວ່າ, ບໍ່ມີການປັບໃໝ ສຳລັບການ ກະທຳຜິດເທື່ອທຳອິດ ຖ້າວ່າມູນຄ່າ ຂອງຄວາມເສຍຫາຍທີ່ໄດ້ກໍ່ຂຶ້ນນັ້ນ ຕ່ຳກວ່າ 200,000 ກີບ. ການລົງໂທດອາຍາ ສຳລັບ ການກະທຳຜິດທີ່ສະເພາະເຈາະຈົງ ໄດ້ລະບຸຢູ່ໃນມາດຕາ 71 ແລະ ອາດຈະລວມມີ ການຖືກຈຳຄຸກ ແຕ່ສາມເດືອນ ຫາ ຫ້າປີ ນອກຈາກ ການປັບໃໝ ແລະຈ່າຍຄ່າທົດແທນ. ການລົງໂທດເພີ້ມ ລວມມີ ການໂຈະ ຫຼື ຖອນຄືນໃບອະນຸຍາດ ໃຫ້ນຳໃຊ້ສັດປ່າ ແລະ ສັດນ້ຳ (ມາດຕາ 72).

ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ບໍ່ມີດຳລັດ ຈັດຕັ້ງປະຕິບັດ.

### 3.3.3 ກົດໝາຍການປະມົງ (2009)

ກົດໝາຍສະບັບນີ້ ຄຸ້ມຄອງ ການເຄື່ອນໄຫວທີ່ພົວພັນກັບ ການປະມົງ, ການປະສົມພັນປາ, ແລະ ການອະນຸລັກຊັບພະຍາກອນນ້ຳ ທຳມະຊາດ. ກົດໝາຍ ໃຫ້ຄຳນິຍາມ 'ສັດນ້ຳ' ແມ່ນສັດ ທີ່ລູກຂອງພວກມັນ ເກີດ ແລະເຕີບໃຫຍ່ໃນນ້ຳ (ມາດຕາ 3.1). ກົດໝາຍ ໃຫ້ຄຳນິຍາມຕໍ່ ສັດນ້ຳທີ່ຖືກປົກປ້ອງ, ຄວບຄຸມ ແລະ ທົ່ວໄປໃນແງ່ ຂອງລະບົບການຈັດເປັນສາມໝວດ ທີ່ຖືກຕັ້ງຂຶ້ນ ໃນກົດໝາຍວ່າດ້ວຍ ສັດນ້ຳ ແລະສັດປ່າ: ສັດນ້ຳທີ່ຖືກປົກປ້ອງ ແມ່ນຖືກຈັດເປັນໝວດທີ I; ສັດນ້ຳທີ່ຖືກຄວບຄຸມ ແມ່ນຖືກຈັດເປັນໝວດທີ II; ແລະ ສັດນ້ຳທົ່ວໄປ ແມ່ນຢູ່ໃນໝວດທີ III (ມາດຕາ 3.9, 3.19, 3.11 ແລະ 9).

ກົດໝາຍ ແບ່ງ ການປະມົງອອກເປັນສອງປະເພດ: ການປະມົງ ແບບຄອບຄົວ ແລະ ການປະມົງແບບການຄ້າ (ມາດຕາ 13). ການປະມົງແບບຄອບຄົວ ຖືກນິຍາມວ່າ ເປັນການເພາະລ້ຽງສັດນ້ຳ ແລະການຫາປາ ພໍກຸ້ມກິນ ໃສ່ພື້ນທີ່ໜຶ່ງ ທີ່ເປັນນ້ຳສະເພາະ ເພື່ອສະໜອງອາຫານພື້ນຖານ ສຳລັບຊີວິດປະຈຳວັນ ຂອງຄອບຄົວໜຶ່ງ (ມາດຕາ 14) ແລະ 'ການໃຊ້ປະໂຫຍດ ເພື່ອຄອບຄົວ' ກໍ່ຖືກນິຍາມຄ້າຍໆຄືກັນ ໃນມາດຕາ 26. ນອກນັ້ນ ກົດໝາຍນີ້ ຍັງອະນຸຍາດ ການຈັບປາ ແລະ ການປ່ອຍປາ ແລະສັດນ້ຳອື່ນໆ ສຳລັບ ງານປະເພນີ ແລະ ພິທີທາງສາດສະໜາ (ມາດຕາ 28).

**ກົດໝາຍການປະມົງ ຫ້າມໂດຍທົ່ວໄປ ບັນດາກິດຈະກຳດັ່ງຕໍ່ໄປນີ້: ການໃຊ້ຢາເບື່ອ, ທາດລະເບີດ, ອາວຸດ,** ອຸປະກອນໄຟຟ້າ, ແສງເຫຼື້ອມ, ແລະ ອຸປະກອນອື່ນໆ ເພື່ອຫາປາ; ການໃຊ້ເຄື່ອງຈັບສັດນ້ຳທຸກປະເພດ ທີ່ຂວາງກັ້ນທາງຜ່ານ ຂອງສັດນ້ຳ ຈົນເກີນຄວນ; ການຜະລິດ ການນຳເຂົ້າ ຫຼື ຂາຍ ເຄື່ອງມືຈັບສັດນ້ຳ ທຸກປະເພດ; ການຖິ້ມສິ່ງເສດເຫຼືອ ຫຼື ການປ່ອຍນ້ຳໂສໂຄກ ຫຼື ສານເຄມີລົງໃນພື້ນທີ່ນ້ຳ; ໃສ່ກັບດັກຈັບປາໂດຍຕັນຫ້ວຍນ້ຳ, ບຶງ ຫຼື

[12] ໃນໝວດ III, ອະນຸຍາດສະເພາະການນຳໃຊ້ ຕາມລະດູການເທົ່ານັ້ນ, ບໍ່ດັ່ງນັ້ນ, ຕ້ອງມີໃບອະນຸຍາດຂອງ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ.

ຊ່ອງຄອງນ້ຳໄຫຼ ຫຼື ໂດຍການຂຸດຂຸມໜອງ ຫຼື ລະບາຍນ້ຳອອກຈາກໜອງ ຖາວອນທຳມະຊາດ; ການຫາປາໃນລະດູວາງໄຂ່; ຈັບລູກປາ ຫຼືລູກສັດນ້ຳອື່ນໆ ທີ່ບໍ່ທັນໃຫຍ່ພໍ ທີ່ຖືກປົກປ້ອງ ຫຼື ຄວບຄຸມ; ສ້າງຄວາມເສຍຫາຍໃຫ້ແກ່ ເຂດອະນຸລັກປາ ແລະ ຫາປາ ໃນ ເຂດປະສົມພັນ ແລະ ພື້ນທີ່ ປະສົມພັນ ທຳມະຊາດ; ແລະການຮັບເອົາ, ຄ້າຂາຍ, ການເປັນເຈົ້າຂອງ ຫຼື ການຂົນສົ່ງ ສັດນ້ຳ ທີ່ຖືກປົກປ້ອງ ຫຼື ຄວບຄຸມ (ມາດຕາ 38).

ການລະເມີດ ກົດໝາຍ ທີ່ພາໃຫ້ເກີດຄວາມເສຍຫາຍ ທີ່ມີມູນຄ່າຕ່ຳກວ່າ 200,000 ກີບ, ບໍ່ສຳຄັນວ່າສັດນ້ຳນັ້ນຢູ່ໃນໝວດໃດ, ແມ່ນຖືກລົງໂທດ ດ້ວຍ ການສຶກສາອົບຮົມຄືນ ແລະ ການຕັກເຕືອນຢ່າງເປັນທາງການ; ບໍ່ມີການປັບໃໝ (ມາດຕາ 64). ບ່ອນໃດທີ່ ຄວາມເສຍຫາຍ ສູງກວ່າ 200,000 ກີບ, ກໍເຊັ່ນດຽວກັນ, ໂດຍບໍ່ສຳຄັນວ່າສັດນ້ຳນັ້ນ ຢູ່ໃນໝວດໃດ, ຜູ້ກະທຳຜິດ ແມ່ນຖືກປັບໃໝ ສອງເທົ່າ ຂອງຈຳນວນ ທີ່ເສຍຫາຍ.

ເຊັ່ນດຽວກັບ ກົດໝາຍວ່າດ້ວຍ ສັດນ້ຳ ແລະ ສັດປ່າ, ສຳລັບການກະທຳຜິດ ເທື່ອຕໍ່ມາ, ຄ່າປັບໃໝ ແມ່ນສາມເທົ່າຂອງມູນຄ່າ ຄວາມເສຍຫາຍ ຂອງສັດນ້ຳທີ່ຖືກປົກປ້ອງ, ສອງເທົ່າ ຂອງມູນຄ່າຄວາມເສຍຫາຍ ຂອງສັດນ້ຳທີ່ຖືກປົກປ້ອງ ແລະ ເທົ່າກັບມູນຄ່າ ຂອງຄວາມເສຍຫາຍ ຂອງສັດນ້ຳທົ່ວໄປ ເຊິ່ງໝາຍຄວາມວ່າ ຄ່າປັບໃໝ ສຳລັບການລະເມີດເທື່ອຕໍ່ໄປ ທີ່ກ່ຽວກັບສັດນ້ຳທີ່ ຖືກຄວບຄຸມ ແມ່ນຄືກັນກັບ ການກະທຳຜິດເທື່ອທຳອິດ ເຊິ່ງຄວາມເສຍຫາຍສູງກວ່າ 200,000 ກີບ. ສຳລັບການລະເມີດເທື່ອຕໍ່ໄປ ທີ່ກ່ຽວຂ້ອງກັບສັດນ້ຳທົ່ວໄປ, ຄ່າປັບໃໝ ແມ່ນໜ້ອຍກວ່າ ຄ່າປັບໃໝສຳລັບການລະເມີດເທື່ອທຳອິດ ເຊິ່ງຄວາມເສຍຫາຍແມ່ນສູງກວ່າ 200,000 ກີບ. ນອກຈາກນັ້ນ, ສຳລັບ ການລະເມີດຄັ້ງຕໍ່ໄປ, ລັດຍຶດທຸກໆຊັບສິນທີ່ ບໍ່ຖືກຕ້ອງຕາມກົດໝາຍ (ມາດຕາ 66). ນອກຈາກຄ່າປັບໃໝແລ້ວ, ກົດໝາຍຍັງບັງຄັບ ໃຫ້ຊຳລະຄ່າທົດແທນເຕັມສ່ວນ ສຳລັບຄວາມເສຍຫາຍທັງໝົດທີ່ກໍ່ຂຶ້ນ (ມາດຕາ 67).

ນອກຈາກ ການກະທຳຜິດ ທີ່ລະບຸໄວ້ສະເພາະ ໃນກົດໝາຍ ອາຍາແລ້ວ (ເບິ່ງຂໍ້ 3.3.8), ກົດໝາຍການປະມົງລະບຸວ່າ ສິ່ງດັ່ງຕໍ່ໄປນີ້ ເປັນການກະທຳຜິດທາງອາຍາ: ການທຳລາຍ ຖິ່ນຢູ່ອາໄສ, ເຂດວາງໄຂ່ ແລະ ແຫຼ່ງອາຫານຂອງປາ ແລະ ສັດນ້ຳອື່ນໆ; ການລັກລອບຫາປາ, ຈັບປາ ຫຼື ຍຶດຄອງ ປາ ແລະ ສັດນ້ຳປະເພດອື່ນ ທີ່ຖືກປົກປ້ອງ, ບໍ່ວ່າສັດເປັນຫຼືສັດຕາຍ, ຮ່າງກະດູກ ຫຼື ສ່ວນຕ່າງໆຂອງຮ່າງກະດູກ; ແລະ ການນຳເຂົ້າ, ສົ່ງອອກ, ການສົ່ງຜ່ານ ແລະ ການ ເຄື່ອນຍ້າຍ ປາ ແລະ ສັດນ້ຳປະເພດ ທີ່ຖືກປົກປ້ອງ. ການລົງໂທດອາຍາ ແມ່ນການຈຳຄຸກ ສາມເດືອນຫາ ໜຶ່ງປີ, ນອກຈາກຄ່າປັບໃໝ ທີ່ລະບຸສະເພາະ ໃນມາດຕາ 66 ຂອງກົດໝາຍ (ມາດຕາ 68).

ກົດໝາຍການປະມົງ ບໍ່ມີ ດຳລັດຈັດຕັ້ງປະຕິບັດ.

### 3.3.4 ກົດໝາຍປ່າໄມ້ (2007)

ກົດໝາຍປ່າໄມ້ ຕິດພັນຢ່າງໃກ້ຊິດ ກັບກົດໝາຍ ວ່າດ້ວຍ ສັດນ້ຳ ແລະສັດປ່າ. ອີງການກວດກາ ດຽວກັນ ເປັນຜູ້ບໍລິຫານ ກົດໝາຍ ທັງສອງສະບັບນີ້. ກົດໝາຍສະບັບນີ້ ວາງລະດັບແຕກຕ່າງກັນ ຂອງ ການປົກປ້ອງ ເຊິ່ງຂຶ້ນກັບປະເພດຂອງປ່າໄມ້. ໃນກໍລະນີ ຂອງ ເຂຈຳພວນ, ປ່າໄມ້ ແລະ ທີ່ດິນບໍລິເວນນ້ຳ ແລະ ສັດນ້ຳ ແລະ ສັດປ່າ ແມ່ນຂຶ້ນກັບການປົກປ້ອງພິເສດ ພາຍໃຕ້ກົດໝາຍທັງສອງ.

ການນຳໃຊ້ ແບບປະເພນີ ເປັນໜຶ່ງໃນສີ່ປະເພດ ຂອງ ການນຳໃຊ້ປ່າໄມ້ ທີ່ກຳນົດໄວ້ໃນມາດຕາ 39, ແຕ່ວ່າກົດໝາຍ ນິຍາມ ການນຳໃຊ້ແບບປະເພນີ ໃນແງ່ຂອງ ກົດໝາຍນິຕິບັນຍັດເທົ່ານັ້ນ:

> ການໃຊ້ປະໂຫຍດປ່າໄມ້ແບບປະເພນີແມ່ນການໃຊ້ປ່າໄມ້ ແລະ ຜະລິດຕະພັນປ່າໄມ້ ທີ່ເຄີຍປະຕິບັດມາແຕ່ດົນນານ ໂດຍສອດຄ່ອງຕາມ ບັນດາກົດໝາຍ ແລະ ລະບຽບການ. ລັດອະນຸຍາດ ການໃຊ້ໄມ້ ແລະ ເກັບກູ້ ຜະລິດຕະພັນປ່າໄມ້ ໃນປ່າທີ່ບໍ່ຖືກຫວງຫ້າມ ສຳລັບ ການໃຊ້ສອຍໃນຄົວເຮືອນ ໂດຍບໍ່ມີຜົນ

ກະທົບທາງລົບຕໍ່ຊັບພະຍາກອນປ່າໄມ້, ແລະສິ່ງແວດລ້ອມ ກໍຄື ຄຳນຶງເຖິງ ສິດແລະຜົນປະໂຫຍດ ຂອງບັນດາບຸກຄົນ ຫຼື ອົງການຈັດຕັ້ງ. [ເນື້ອໃນ ຂອງປະໂຫຍກທີສອງ ມີຢູ່ໃນມາດຕາ 40 ເໝືອນກັນ ]

ການໃຊ້ປະໂຫຍດຂອງປ່າໄມ້ ແລະ ຜະລິດຕະພັນປ່າໄມ້ ຄວນໃຫ້ສອດຄ່ອງກັບແຜນທີ່ໄດ້ວາງໄວ້ ແລະລະບຽບກົດໝາຍ ຂອງບ້ານ ກ່ຽວກັບປ່າໄມ້ (ມາດຕາ 42).

ກົດໝາຍປ່າໄມ້ ກຳນົດ ສາມປະເພດ ຂອງປ່າໄມ້ (ມາດຕາ 9): ປ່າປ້ອງກັນ; ປ່າອະນຸລັກ; ແລະປ່າຜະລິດ. ປ່າໄມ້ແຕ່ລະປະເພດ ຕ້ອງຂຶ້ນກັບ ການຄຸ້ມຄອງປະເພດຕ່າງກັນ. ປະຊາຊົນ ໄດ້ຮັບອະນຸຍາດໃຫ້ໃຊ້ໄມ້ ແລະ ຜະລິດຕະພັນປ່າໄມ້, ໂດຍສອດຄ່ອງຕາມແຜນຄຸ້ມຄອງ, ໃນບັນດາເຂດ ຂອງການນຳໃຊ້ທີ່ມີການຄວບຄຸມ ຂອງປ່າຜະລິດ ແລະປ່າ ອະນຸລັກ (ມາດຕາ 23 ແລະ 24). ປ່າຜະລິດ ແມ່ນປ່າທີ່ມີການອະນຸຍາດ ໃຫ້ຂຸດຄົ້ນໄມ້ ແລະ ເກັບກູ້ເຄື່ອງປ່າຂອງດົງ, ໂດຍສອດຄ່ອງຕາມແຜນຄຸ້ມຄອງ ພື່ອຈຸດປະສົງ ການພັດທະນາ ສັງຄົມ-ເສດຖະກິດ ແລະ ການລຶບລ້າງຄວາມທຸກຍາກ ໃນໝູ່ບັນດາຊົນເຜົ່າ (ມາດຕາ 25).

ມາດຕາ 82 ລະບຸລະອຽດວ່າ ປ່າໄມ້ທີ່ ຖືກຈັດສັນໃຫ້ ອຳນາດການປົກຄອງບ້ານ ມີສາມປະເພດ, ແຕ່ວ່າ ບອກຊື່ແຕ່ສອງປະເພດເທົ່ານັ້ນ: ປ່າປ້ອງກັນ ແລະ ປ່າອະນຸລັກ. ປ່າປ້ອງກັນ ລວມເອົາ ປ່າສັກສິດ, ປ່າຊ້າ, ແລະປ່ານຳໃຊ້ຂອງບ້ານ. ອີງຕາມມາດຕາ 82, ມີເຂດທີ່ດິນທີ່ຄາດວ່າ ບໍ່ຖືກຈັດປະເພດ ທີ່ຖືກນຳໃຊ້ເພື່ອການຜະລິດເໝືອນກັນ. ຄວາມແຕກຕ່າງລະຫວ່າງ ປ່າຜະລິດ (ມາດຕາ 25), 'ປ່ານຳໃຊ້ຂອງບ້ານ', ເປັນປ່າອະນຸລັກ (ມາດຕາ 82), ແລະທີ່ດິນທີ່ບໍ່ຖືກຈັດປະເພດ ທີ່ຈະຖືກນຳໃຊ້ນັ້ນ ແມ່ນບໍ່ແຈ້ງ.

ມາດຕາ 102 ລະບຸ ຂໍ້ຫ້າມ, ເຊິ່ງລວມມີ: ການທຳລາຍປ່າໄມ້ ໂດຍການບຸກລຸກ, ການບຸກເບີກ, ການຕັດໄມ້, ການຈູດປ່າ ແລະ ການໃຊ້ສານເຄມີ ເພື່ອເຮັດໃຫ້ຕົ້ນໄມ້ຕາຍ; ການຕັ້ງພູມລຳເນົາຢູ່ ໃນປ່າໄມ້ ໂດຍບໍ່ໄດ້ຮັບອະນຸຍາດ; ການຕັດຕົ້ນໄມ້ທີ່ຢູ່ໃນການປົກປັກຮັກສາ; ການຍຶດຄອງຕົ້ນໄມ້, ປ່າໄມ້, ເຄື່ອງປ່າຂອງດົງ ແລະ ທີ່ດິນປ່າໄມ້; ແລະ ການຍ້າຍ, ການປ່ຽນແປງ ຫຼື ການທຳລາຍ ເຄື່ອງໝາຍ ຫຼື ຫຼັກໝາຍເຂດແດນ ພື້ນທີ່ ປ່າປ້ອງກັນ, ປ່າອະນຸລັກ ແລະ ປ່າຜະລິດ. ການລະເມີດ ອາດພາໃຫ້ ເສຍສິດຕໍ່ປ່າໄມ້ (ມາດຕາ 98).

ພາຍໃຕ້ມາດຕາ 125, ຜູ້ລະເມີດ ທີ່ກໍ່ຄວາມເສຍຫາຍ ຫຼາຍກວ່າ 1,000,000 ກີບ ແມ່ນຖືກປັບໃໝ ເທົ່າກັບມູນຄ່າ ຂອງປ່າ, ເຄື່ອງປ່າຂອງດົງ, ແລະ ຊັບພະຍາກອນປ່າໄມ້ ທີ່ຖືກເສຍຫາຍ, ອີງຕາມລາຄາຕົວຈິງ ໃນທ້ອງຕະຫຼາດ. ການລະເມີດຊ້ຳສອງ ຫຼື ແບບບໍ່ເຂັດຫຼາບ ແມ່ນຖືກປັບໃໝ ສອງເທົ່າຂອງມູນຄ່າ. ນອກຈາກນັ້ນ, ຜູ້ລະເມີດ ຕ້ອງຈ່າຍຄ່າທົດແທນເທົ່າກັບ ຄວາມເສຍຫາຍທີ່ໄດ້ກໍ່ຂຶ້ນ (ມາດຕາ 126). ການລົງໂທດອາຍາແມ່ນ ດັ່ງທີ່ໄດ້ລະບຸສະເພາະ ໃນກົດໝາຍອາຍາ (ມາດຕາ 127). ການລົງໂທດເພີ້ມ ລວມມີ ການຍຶດຊັບສິນ, ພາຫະນະແລະອຸປະກອນ ທີ່ພົວພັນກັບ ການກະທຳຜິດ, ການໂຈະ ຫຼື ຖອນສິດຕໍ່ປ່າໄມ້ (ມາດຕາ 128).

### 3.3.4.1 ດຳລັດຈັດຕັ້ງປະຕິບັດ ກົດໝາຍປ່າໄມ້

ດຳລັດຈັດຕັ້ງປະຕິບັດກົດໝາຍປ່າໄມ້ ມີຫຼາຍສະບັບ. ບັນດາດຳລັດ ທີ່ຄຸ້ມຄອງ ປ່າປ້ອງກັນ ແລະ ປ່າຜະລິດ ແມ່ນມີການອະທິບາຍຢູ່ຂ້າງລຸ່ມນີ້.

#### 3.3.4.1.1 ດຳລັດ ວ່າດ້ວຍປ່າປ້ອງກັນ ເລກທີ 333 / ນຍ, 19 ກໍລະກົດ 2010

ບັນດາຫຼັກການທີ່ຖືກລະບຸໄວ້ ໃນດຳລັດສະບັບນີ້ ລວມເອົາ ການຮັບປະກັນ ໃຫ້ປ່າປ້ອງກັນຕ້ອງ ພິຈາລະນາການມີສ່ວນຮ່ວມ ຂອງປະຊາຊົນ (ມາດຕາ 5.3). ປ່າປ້ອງກັນ ແມ່ນຖືກແບ່ງອອກເປັນ ສີ່ ລະດັບ (ລະດັບຊາດ, ລະດັບແຂວງ/ນະຄອນ, ເມືອງ/ກຳແພງນະຄອນ, ແລະ ບ້ານ) ແລະ ແບ່ງອອກເປັນ ສອງ ເຂດ (ເຂດຫວງຫ້າມ

ຢ່າງເດັດຂາດ ແລະ ເຂດ ການນຳໃຊ້ພາຍໃຕ້ການຄຸ້ມຄອງ) (ມາດຕາ 6). ປ່າປ້ອງກັນ ພາຍໃຕ້ ການຄຸ້ມຄອງຂອງ ບ້ານ ແມ່ນຖືກຈັດແບ່ງອອກເປັນ ສາມ ປະເພດ: ປ່າຍອດຫ້ວຍ, ປ່າແຄມນ້ຳ ແລະ ປ່າແຄມເສັ້ນທາງລົດ. ປ່າ ອະນຸລັກ ຂອງ ບ້ານ ປະກອບດ້ວຍ ປ່າສັກສິດ, ປ່າຊ້າ ແລະ ປ່າຜະລິດ. ທີ່ດິນເປົ່າຫວ່າງ ອາດຖືກຈັດ ເປັນເຂດ ຜະລິດ (ມາດຕາ 16).

### 3.3.4.1.2 ດຳລັດວ່າດ້ວຍ ການຄຸ້ມຄອງແບບຍືນຍົງ ເຂດປ່າຜະລິດ, ເລກທີ 59/ນຍ, 22 ພຶດສະພາ 2002

ຈຸດປະສົງ ຂອງດຳລັດສະບັບນີ້ ລວມເອົາ ການເຂົ້າຮ່ວມ ຂອງຊາວບ້ານ ໃນການວາງແຜນຄຸ້ມຄອງປ່າໄມ້, ການ ຄຸ້ມຄອງ ແລະ ຮັບລາຍຮັບ (ມາດຕາ 2.3). ເນື້ອທີ່ປ່າຜະລິດ ທີ່ຈະຖືກສ້າງຂຶ້ນ ດ້ວຍການເຂົ້າຮ່ວມ ຂອງ ຊາວບ້ານ (ມາດຕາ 5.1). ເຂດການຄຸ້ມຄອງປ່າໄມ້ ຕ້ອງມີການຂີດເສັ້ນແບ່ງເຂດ ຢູ່ໃນພື້ນທີ່ຂອງປ່າຜະລິດ ແລະ ຊາວບ້ານ ຕ້ອງເຂົ້າຮ່ວມ ໃນການຄຸ້ມຄອງປ່າຜະລິດ ເພື່ອສ້າງລາຍຮັບແກ່ຕົນເອງ (ມາດຕາ 6). ການຂຸດຄົ້ນໄມ້ ແລະ ເກັບກູ້ເຄື່ອງປ່າຂອງດົງ ແມ່ນໄດ້ຮັບອະນຸຍາດ ສະເພາະແຕ່ໃນເຂດຄຸ້ມຄອງ ປ່າຜະລິດ (ມາດຕາ 9)ທີ່ມີການ ໝາຍເຂດ ເທົ່ານັ້ນ. ຂໍ້ຂັດແຍ່ງ ແມ່ນຕ້ອງຖືກແກ້ໄຂ ໂດຍ ອຳນາດການປົກຄອງ ໃນຂອບເຂດກົດໝາຍ; ຂໍ້ຂັດ ແຍ່ງ ທີ່ບໍ່ສາມາດແກ້ໄຂ ໂດຍອຳນາດການປົກຄອງ ຕ້ອງຍື່ນໃຫ້ສານພິຈາລະນາ (ມາດຕາ 15).

### 3.3.5 ນ້ຳ ແລະ ຊັບພະຍາກອນນ້ຳ (1996)

ກົດໝາຍ ນ້ຳ ແລະ ຊັບພະຍາກອນນ້ຳ ນິຍາມ ຊັບພະຍາກອນນ້ຳ ໂດຍລວມເອົາ ພືດ ແລະສັດ ເຂົ້ານຳ.

> ... ຊັບພະຍາກອນນ້ຳ ແມ່ນຊັບພະຍາກອນທຳມະຊາດທີ່ມີຊີວິດ ຫຼືບໍ່ມີຊີວິດຢູ່ໃນນ້ຳ ຫຼື ຊັບພະຍາກອນນ້ຳ (ເຊັ່ນ): ພືດ, ສັດນ້ຳ, ຫີນ, ຫີນແຮ່, ຊາຍ, ດິນ, ບັນດາແຮ່ທາດ ແລະອື່ນໆ (ມາດຕາ 2).

ນອກນັ້ນ ກົດໝາຍ ຍັງໃຫ້ນິຍາມ "ແຫຼ່ງນ້ຳໜ້າດິນ" ແມ່ນແຫຼງນ້ຳທີ່ຢູ່ເທິງໜ້າດິນ ຊຶ່ງເປັນສາຍຍາວຕິດຕໍ່ກັນ ເປັນ ຈຸດ ເຊັ່ນ: ແມ່ນ້ຳ, ລຳເຊ, ຫ້ວຍ, ໜອງ, ຄອງ, ບຶງ, ທາມ, ເບືອມ, ນ້ຳອອກບໍ່ເປັນຕົ້ນ (ມາດຕາ 3).

"ແຫຼ່ງນ້ຳສະຫງວນ" ແມ່ນແຫຼ່ງນ້ຳ ຊຶ່ງຈັດສັນໄວ້ ເພື່ອປົກປັກຮັກສາ ສັດ, ພືດ, ສິ່ງທີ່ມີຊີວິດ, ສິ່ງທີ່ບໍ່ມີຊີວິດ ແລະ ອື່ນໆ ລວມທັງ ສິ່ງແວດລ້ອມທຳມະຊາດ....(ມາດຕາ 9).

ບໍ່ມີກົດໝາຍ ແລະ ບໍ່ມີດຳລັດນາຍົກລັດຖະມົນຕີ ເພື່ອຈັດຕັ້ງປະຕິບັດ ສະບັບໃດ ນິຍາມ ການໃຊ້ນ້ຳ ແບບປະ ເພນີ, ແຕ່ວ່າການໃຊ້ນ້ຳຂະໜາດນ້ອຍ ດັ່ງທີໄດ້ນິຍາມໄວ້ໃນກົດໝາຍນັ້ນ ແມ່ນພົວພັນໃກ້ຊິດທີ່ສຸດ ກັບການໃຊ້ ນ້ຳແບບປະເພນີ:

> *ການໃຊ້ຂະໜາດນ້ອຍ ແມ່ນການໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ທີ່ບໍ່ແມ່ນລັກສະນະທຸລະກິດ ເພື່ອຈຸດປະ ສົງດັ່ງຕໍ່ໄປນີ້:*
> 1. *ການໃຊ້ສອຍໃນຄອບຄົວ (ທີ່ຢູ່ອາໄສ) ເພື່ອຜົນປະໂຫຍດສ່ວນລວມ ຂອງບ້ານ ຫຼື ເພື່ອຜົນປະໂຫຍດ ທາງວັດທະນະທຳແລະກິລາ.*
> 2. *ຫາປາ ແລະ ລ້ຽງປາ ຫຼື ສັດນ້ຳອື່ນໆ ;*
> 3. *ຂຸດຄົ້ນເອົາດິນ, ຫີນ, ຫີນແຮ່, ຊາຍ, ດິນ ແລະ ພືດຜັກອື່ນໆ ຢູ່ໃນ ຫຼື ອ້ອມແອ້ມ ແຫຼ່ງນ້ຳ;*
> 4. *ນຳໃຊ້ໃເຂົ້າໃນການຜະລິດ ກະສິກຳ-ປ່າໄມ້ ແລະ ລ້ຽງສັດ ຂັ້ນພື້ນຖານຂອງຄອບຄົວ (ມາດຕາ 15).*

ການນຳໃຊ້ຂະໜາດນ້ອຍບໍ່ຈຳເປັນຕ້ອງມີການອະນຸຍາດ (ມາດຕາ 18) ແລະ"....ຈະປະຕິບັດໄດ້ ກໍຕໍ່ເມື່ອຫາກບໍ່ມີການເກືອດຫ້າມ ຈາກກະຊວງ ຫຼື ອຳນາດການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ. (ມາດຕາ 15). ກົດໝາຍບໍ່ໄດ້ລະບຸຄ່າປັບໃໝ ແລະ ພຽງແຕ່ ລະບຸວ່າ ຜູ້ລະເມີດ ຈະຖືກລົງໂທດ ຕາມແຕ່ລະກໍລະນີ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການ ຂອງປະເທດ (ມາດຕາ 47).

### 3.3.5.1 ດຳລັດ ຈັດຕັ້ງປະຕິບັດກົດໝາຍ ນ້ຳ ແລະ ຊັບພະຍາກອນນ້ຳ, ເລກທີ 204/ນຍ, 9 ຕຸລາ 2001

ດຳລັດນາຍົກລັດຖະມົນຕີສະບັບນີ້ ລະບຸວ່າ ບັນດາກະຊວງກ່ຽວຂ້ອງ ທີ່ຮັບຜິດຊອບ ໃນການຄຸ້ມຄອງຊັບພະຍາກອນນ້ຳ ມີສິດ ກຳນົດເງື່ອນໄຂ ສຳລັບການນຳໃຊ້ຂະໜາດນ້ອຍ ແລະ ຕ້ອງປະຕິບັດສິດດັ່ງກ່າວ ໂດຍປະສານງານກັບ ຄະນະກຳມະການ ຄຸ້ມຄອງຊັບພະຍາກອນນ້ຳ ແລະອຳນາດການປົກຄອງທ້ອງຖິ່ນ (ມາດຕາ 11). ການນຳໃຊ້ ນ້ຳ ຂະໜາດກາງ ແລະ ຂະໜາດໃຫຍ່ ຕ້ອງໄດ້ຮັບອະນຸມັດຈາກລັດຖະບານ (ມາດຕາ 12).

ກະຊວງກະສິກຳ ແລະປ່າໄມ້ ຮັບຜິດຊອບໃນການ ຊຸກຍູ້ປະຊາຊົນທ້ອງຖິ່ນ ເພື່ອສ້າງ ອ່າງເກັບນ້ຳທຳມະຊາດ (ມາດຕາ 17). ບ່ອນໃດທີ່ ມີເງື່ອນໄຂ ທີ່ໂຄງການພັດທະນາຊັບພະຍາກອນນ້ຳ ຈະສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ປະຊາຊົນທ້ອງຖິ່ນ, ບັນດາກະຊວງ ແລະ ອຳນາດການປົກຄອງທ້ອງຖິ່ນ ຕ້ອງ ແຈ້ງໃຫ້ປະຊາຊົນຊາບ ຜູ້ທີ່ຈະໄດ້ຮັບຜົນກະທົບ ແລະ ຂໍຄຳເຫັນຈາກເຂົາເຈົ້າ (ມາດຕາ 19).

ກະຊວງກະສິກຳ ແລະ ປ່າໄມ້ ມີໜ້າທີ່ຮັບຜິດຊອບ ໃນການຮ່ວມມືກັບ ອົງການຂອງລັດ ທຸກລະດັບ ເພື່ອກຳນົດເຂດ ການປ້ອງກັນ ແລະ ອະນຸລັກ ຊັບພະຍາກອນນ້ຳ ແລະສ້າງ ລະບຽບການ ແລະ ແຜນຈັດຕັ້ງປະຕິບັດ ສຳລັບເຂດດັ່ງກ່າວ (ມາດຕາ 21).

ບັນດາກະຊວງມີໜ້າທີ່ຮັບຜິດຊອບ ໃນການກຳນົດ ມາດຕະຖານຄຸນນະພາບ ຂອງນ້ຳ ສຳລັບການນຳໃຊ້ຕ່າງໆ (ມາດຕາ 23) ແລະ ສຳລັບການປ້ອງກັນດິນເຊາະເຈື່ອນ ທີ່ສົ່ງຜົນກະທົບຕໍ່ຄຸນນະພາບນ້ຳ (ມາດຕາ 27).

### 3.3.6 ກົດໝາຍວ່າດ້ວຍກະສິກຳ (1998)

ກົດໝາຍວ່າດ້ວຍກະສິກຳ ກຳນົດວ່າ ກະສິກຳ ລວມເອົາ ການປະສົມພັນສັດ ແລະ ການປະມົງ ເຂົ້ານຳ.

> ກະສິກຳແມ່ນ ການປູກຝັງ, ການລ້ຽງສັດ ແລະ ການປະມົງ ເພື່ອຕອບສະໜອງທາງດ້ານທັນຍາຫານ ແລະອາຫານໃຫ້ແກ່ສັງຄົມ, ເປັນວັດຖຸດິບ ປ້ອນໂຮງງານປຸງແຕ່ງ ລວມທັງເປັນສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ. (ມາດຕາ 2)

ກົດໝາຍບັງຄັບ ໃຫ້ທຸກຄົນທີ່ດຳເນີນກິດຈະການ ກະສິກຳ ຈະຕ້ອງເອົາໃຈໃສ່ປ້ອງກັນ ສິ່ງແວດລ້ອມ ສັງຄົມ ແລະສິ່ງແວດລ້ອມ ທຳມະຊາດ ເຊັ່ນ: ຄົນ, ສັດ, ດິນ, ນ້ຳ, ປ່າໄມ້, ອາກາດ (ມາດຕາ 65) ແລະຕ້ອງປ້ອງກັນຜົນກະທົບອັນບໍ່ດີ ຕໍ່ຄົນ, ສັດ, ດິນ, ນ້ຳ, ປ່າໄມ້, ອາກາດ ແລະ ສິ່ງແວດລ້ອມ (ມາດຕາ 66).

ມາດຕາ 67 ລະບຸວ່າ ບໍ່ຄວນເຮັດຄອກສັດ ໃສ່ໃກ້ນ້ຳສ້າງ ຫຼື ໃກ້ຫ້ວຍນ້ຳ, ໜອງ, ຄອງ ຫຼື ບຶງ ຂອງ ສາທາລະນະ. ຫ້າມນຳໃຊ້ ອຸປະກອນ ຫຼືວິທີການ ທີ່ມີລັກສະນະທຳລາຍ ດັບສູນພັນປາ ເຊັ່ນ ການໃຊ້ຢາເບື່ອ ແລະ ລະເບີດແຫຖີ່, ມອງຖີ່, ໜ້າກາກ, ລວມທັງການໃຊ້ຕ້ອນ, ລີ່, ໂຕ່ງ ຕາມຫ້ວຍຮ່ອງ ເພື່ອຮິບໂຮມເອົາປານ້ອຍ, ປາໃຫຍ່ເປັນຕົ້ນໃນລະດູແຜ່ພັນ (ມາດຕາ 68). ເງື່ອນໄຂຕ່າງໆໃນມາດຕາ 68 ແມ່ສອດຄ່ອງ ກັບກົດໝາຍການປະມົງ.

ການລະເມີດ ກົດໝາຍສະບັບນີ້ ຈະຕ້ອງຖືກປັບໃໝ ທົບເທົ່າ ຕາມມູນຄ່າຄວາມເສຍຫາຍຕົວຈິງ ທີ່ໄດ້ກໍ່ຂຶ້ນ (ມາດຕາ 81). ກົດໝາຍລະບຸວ່າ ຜູ້ໃດ ກະທຳຜິດທາງອາຍາ ກໍຈະຕ້ອງຖືກລົງໂທດ ຕາມກົດໝາຍອາຍາ (ມາດຕາ

82) ແລະ ກຳນົດ ມາດຕະການເພີ່ມເຕີມ ເຊິ່ງລວມມີ ການໂຈະກິດຈະການ ກະສິກຳ, ຖອນໃບອະນຸຍາດ, ຮິບພາຫະນະ ທີ່ໃຊ້ເຂົ້າໃນການກະທຳຜິດນັ້ນ (ມາດຕາ 83).

ກົດໝາຍວ່າດ້ວຍກະສິກຳ ໄດ້ມີການທົບທວນຄືນ ໃນປີ 2012 ພ້ອມທັງ ຄາດວ່າຈະມີການດັດແກ້ ໃນອະນາຄົດອັນໃກ້ນີ້.

### 3.3.6.1 ດຳລັດຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍກະສິກຳ, ສະບັບເລກທີ 83/ ນຍ, 9 ພຶດສະພາ 2001

ເມື່ອໃດກົດໝາຍ ວ່າດ້ວຍກະສິກຳ ຫາກຖືກດັດແກ້, ດຳລັດ ນາຍົກລັດຖະມົນຕີ ຈັດຕັ້ງປະຕິບັດ ສະບັບປັດຈຸບັນນີ້ ກໍຈະມີການດັດແກ້ ຫຼື ຖືກຍົກເລີກ.

### 3.3.7 ກົດໝາຍ ວ່າດ້ວຍ ການປົກປັກຮັກສາ ສິ່ງແວດລ້ອມ (1999)

ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ກຳນົດ ຫຼັກການ, ລະບຽບການທົ່ວໄປ ກ່ຽວກັບການປົກປ້ອງສິ່ງແວດລ້ອມ ໃນ ສປປ ລາວ ແລະ ສ້າງພັນທະທົ່ວໄປ ສຳລັບບຸກຄົນ ແລະ ອົງການຈັດຕັ້ງ ກ່ຽວກັບການອະນຸລັກທຳມະຊາດ ແລະ ປົກປັກຮັກສາ ສິ່ງແວດລ້ອມ. ພາຍໃຕ້ກົດໝາຍສະບັບນີ້:

- ການປົກປັກຮັກສາ ສິ່ງແວດລ້ອມ ປະກອບດ້ວຍ ທຸກການເຄື່ອນໄຫວ ທີ່ບໍ່ກໍ່ຄວາມເສຍຫາຍ ຕໍ່ສິ່ງແວດລ້ອມ ແລະ ບໍ່ກໍ່ຜົນສະທ້ອນທີ່ບໍ່ດີ ຕໍ່ສຸຂະພາບ ຂອງ ຄົນ, ສັດ , ພືດ ແລະ ຄວາມດຸນດ່ຽງ ຂອງລະບົບວິທະຍາ (ມາດຕາ 3);

- ພົນລະເມືອງລາວ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ທີ່ດຳເນີນການຜະລິດ ຫຼື ວຽກງານໃດໜຶ່ງ ຢູ່ ສປປ ລາວ ລ້ວນແຕ່ມີພັນທະ ໃນການປົກປັກຮັກສາ ສິ່ງແວດລ້ອມ, ເຂດທີ່ເປັນມໍລະດົກທາງວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ແລະປະຕິບັດຕາມ ລະບຽບການ ແລະ ມາດຕະການຕ່າງໆ ທີ່ຂະແໜງການ ແລະ ອຳນາດການປົກຄອງທີ່ກ່ຽວຂ້ອງ ວາງອອກ ຢ່າງເຂັ້ມງວດ (ມາດຕາ 4 ແລະ 16);

- ອົງການທີ່ກ່ຽວຂ້ອງ ລັດຖະບານ ຕ້ອງກຳນົດເຂດ ອະນຸລັກ ແລະປົກປ້ອງ ຊີວະນາໆພັນ (ມາດຕາ 15).

ພາຍໃຕ້ກົດໝາຍ ຂອງ ສປປ ລາວ, ຄຳວ່າ "ເຂດມໍລະດົກທາງວັດທະນະທຳ" ແມ່ນບໍ່ຈຳກັດ ສະເພາະແຕ່ ເຂດທີ່ຖືກກຳນົດ ພາຍໃຕ້ ສົນທິສັນຍາ ວ່າດ້ວຍ ມໍລະດົກໂລກເທົ່ານັ້ນ; ເຂດຣຳຊາ ກໍຖືວ່າ ເປັນເຂດມໍລະດົກທຳມະຊາດ.

ກົດໝາຍບໍ່ລວມເອົາ ເງື່ອນໄຂສະເພາະເຈາະຈົງ ກ່ຽວກັບ ກົດໝາຍປະເພນີ, ແຕ່ວ່າ ກຳນົດ ອົງການຄຸ້ມຄອງ ສິ່ງແວດລ້ອມ ຂັ້ນບ້ານ, ເຊິ່ງລວມມີ ການວາງແຜນ ແລະ ຕິດຕາມກວດການການຈັດຕັ້ງປະຕິບັດແຜນການ, ແລະສຶກສາ ແລະ ປຸກລະດົມ ຊາວບ້ານ ໃຫ້ເຂົ້າຮ່ວມ ໃນກິດຈະການ ທີ່ພົວພັນ ກັບການປົກປັກຮັກສາ, ການບັນເທົາ ແລະ ການຟື້ນຟູ ສິ່ງແວດລ້ອມຂອງບ້ານ (ມາດຕາ 40). ກົດໝາຍວ່າດ້ວຍການປົກປັກຮັກສາ ສິ່ງແວດລ້ອມອະທິບາຍລວມ ກ່ຽວກັບການລົງໂທດ ລວມເອົາ ການສຶກສາອົບຮົມ, ການປັບໃໝ ແລະການປະຕິບັດທາງແພ່ງ ຫຼືການລົງໂທດທາງອາຍາ (ມາດຕາ 44).

### 3.3.7.1 ດຳລັດຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການປົກປັກຮັກສາ ສິ່ງແວດລ້ອມ, ເລກທີ 402/ນຍ, 4 ມິຖຸນາ 2001

ມາດຕາ 3 ຂອງດຳລັດ ສະບັບນີ້, ອີງຕາມມາດຕາ 4 ຂອງກົດໝາຍ, ສືບຕໍ່ກຳນົດລະອຽດ ພັນທະ ເພື່ອປົກປັກຮັກສາ ສິ່ງແວດລ້ອມ ດ້ວຍຄວາມເອົາໃຈໃສ່ເປັນພິເສດ ຕໍ່ຜົນກະທົບຕໍ່ສິ່ງແວດລ້ອມ ທີ່ເກີດຈາກ ການກະທຳຂອງມະນຸດ.

ມາດຕາ 10 ລະບຸວ່າ ອຳນາດການປົກຄອງທ້ອງຖິ່ນ ມີສິດແລະໜ້າທີ່ຮັບຜິດຊອບ ໂດຍສະເພາະ ໃນການຄຸ້ມຄອງບັນດາເງື່ອນໄຂ ຂອງກົດໝາຍ ທີ່ຄຸ້ມຄອງການອະນຸລັກ ແລະ ການນຳໃຊ້ແບບຍືນຍົງ ຊັບພະຍາກອນຊີວະນາໆພັນ.

### 3.3.8 ກົດໝາຍອາຍາ (2005)

ກົດໝາຍອາຍາ ກຳນົດໂທດ ສຳລັບການ ລະເມີດ ທີ່ກ່ຽວຂ້ອງ ກັບບົດວິເຄາະສະບັບນີ້, ລວມມີ:

ສຳລັບການທຳລາຍປ່າໄມ້:

ບຸກຄົນໃດ ຫາກຕັດໄມ້ ຫຼື ຖາງປ່າ ໂດຍບໍ່ຖືກຕ້ອງຕາມລະບຽບການ ກ່ຽວກັບ ປ່າໄມ້ ຫຼືຜູ້ທີ່ເຈູດ ປ່າ ຫຼື ທຳລາຍປ່າໄມ້ໃດໜຶ່ງ ດ້ວຍວິທີໃດໜຶ່ງ ຈະຖືກລົງໂທດ ຕັດອິດສະລະພາບ ແຕ່ສາມເດືອນຫາ ໜຶ່ງປີ ແລະ ຈະຖືກປັບໃໝ ຕາມທີ່ໄດ້ລະບຸໄວ້ໃນລະບຽບການ ກ່ຽວກັບປ່າໄມ້. ບ່ອນໃດທີ່ ການກະທຳຜິດ ຫາກກໍ່ຄວາມເສຍຫາຍຢ່າງໜັກ, ຜູ້ກະທຳຜິດ ຈະຖືກຄັດອິດສະລະພາບ ແຕ່ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບການກ່ຽວກັບປ່າໄມ້ (ມາດຕາ 139).

ສຳລັບການລັກລອບລ່າສັດ:

ບຸກຄົນໃດ ຫາກລ່າສັດ ຢ່າງບໍ່ຖືກຕ້ອງຕາມ ລະບຽບການກ່ຽວກັບລ່າສັດ, ເຊັ່ນ ລ່າສັດຊະນິດພັນ ປະເພດຫວງຫ້າມ , ລ່າສັດໃນລະດູ ຫຼືເຂດທີ່ຫວງຫ້າມ, ລ່າສັດດ້ວຍ ເຄື່ອງມື ເກືອດຫ້າມ ແລະ ອື່ນໆ ຈະຖືກລົງໂທດ ດ້ວຍການຕັດອິດສລະພາບ ແຕ່ສາມເດືອນ ຫາສອງປີ ແລະ ຈະຖືກປັບໃໝ ຕາມລະບຽບການກ່ຽວກັບການລ່າສັດ (ມາດຕາ 141).

ສຳລັບການລັກລອບຫາປາ:

ບຸກຄົນໃດ ຫາກໄດ້ຫາປາ (ຫຼືຈັບສັດນ້ຳອື່ນໆ)ຢ່າງບໍ່ຖືກຕ້ອງຕາມລະບຽບການກ່ຽວກັບການປະມົງ, ເຊັ່ນ: ດ້ວຍການໃຊ້ ລະເບີດ, ຢາເບື່ອ, ສານເຄມີຕ່າງໆ ຫຼື ເຄື່ອງມືທີ່ຖືກເກືອດຫ້າມ ຈະຖືກລົງໂທດ ດ້ວຍການຕັດອິດສະລະພາບ ແຕ່ສາມເດືອນ ຫາ ໜຶ່ງປີ ແລະຈະຖືກປັບໃໝ ຕາມທີ່ໄດ້ກຳນົດ ໂດຍລະບຽບການກ່ຽວກັບການປະມົງ (ມາດຕາ 142

ສຳລັບ ການຂຸດຄົ້ນ ຊັບພະຍາກອນທຳມະຊາດ ໂດຍບໍ່ຖືກຕ້ອງຕາມກົດໝາຍ:

ບຸກຄົນໃດ ທີ່ໄດ້ຂຸດຄົ້ນເອົາ ຊັບພະຍາກອນທຳມະຊາດ, ເຊັ່ນ: ໂລຫະທາດ, ແຮ່ທາດ, ຫີນຕ່າງໆທີ່ມີຄຸນຄ່າ ແລະ "ເຄື່ອງປ່າ-ຂອງດົງ" ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກປັບໃໝ ແຕ່ 100,000 ກີບ ຫາ 1,000,000 ກີບ, ບ່ອນໃດທີ່ ການກະທຳຜິດແບບນີ້ ຫາກກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ, ຜູ້ກະທຳຜິດ

จะຖືກລົງໂທດ ໂດຍການຕັດອິດສະລະພາບ ແຕ່ສອງປີ ຫາ ຫ້າປີ ແລະຈະຖືກປັບໃໝ ແຕ່ 500,000 ກີບ ຫາ 5,000,000 ກີບ. (ມາດຕາ 143)

ການລົງໂທດເຫຼົ່ານີ້ ແມ່ນເວົ້າລວມ, ແຕ່ ບັນດາເງື່ອນໄຂ ທີ່ໃຊ້ໂດຍກົງ ໃນເຂດຣໍາຊາ ເຊຈໍາພອນ ແມ່ນນໍາໃຊ້ຢ່າງເຂັ້ມງວດ. ຕາມປົກກະຕິ ກົດໝາຍ ອາຍາບໍ່ມີການຍົກເວັ້ນ ສໍາລັບການລະເມີດ ທີ່ຕົກຢູ່ໃນບັນດາເງື່ອນໄຂເຫຼົ່ານີ້, ແຕ່ວ່າມາດຕາ 139, 141, ແລະ 142 ແມ່ນອີງໃສ່ ບັນດາລະບຽບການ ທີ່ກໍານົດ ການກະທໍາຜິດ. ມາດຕາ 143, ທີ່ໃຊ້ກັບ ການນໍາໃຊ້ ເຄື່ອງປ່າຂອງດົງ, ແມ່ນພຽງແຕ່ອີງໃສ່ "ກົດໝາຍ" ເທົ່ານັ້ນ. ເຖິງຢ່າງໃດກໍຕາມ, ຕ້ອງໃຫ້ຂໍ້ສັງເກດວ່າ ກົດໝາຍອາຍາ ບໍ່ອະນຸຍາດໃຫ້ຜ່ອນໂທດ ພາຍໃຕ້ ລະບຽບການສະເພາະ.

## 3.4 ດໍາລັດ ແລະ ຂໍ້ຕົກລົງ ຂອງນາຍົກລັດຖະມົນຕີ

ນອກຈາກ ກົດໝາຍ ແລະ ດໍາລັດ ທົ່ວໄປ ທີ່ໄດ້ກ່າວມາຂ້າງເທິງນັ້ນແລ້ວ, ແຕ່ລະກະຊວງທີ່ກ່ຽວຂ້ອງ ອາດຈະອອກ ລະບຽບການເພີ່ມເຕີມ ດັ່ງທີ່ໄດ້ຖືກມອບໝາຍ ຈາກດໍາລັດ ນາຍົກລັດຖະມົນຕີ. ໃນເມື່ອບໍ່ມີ ກົດໝາຍ ສະເພາະ ຂອງ ສະພາແຫ່ງຊາດ ທີ່ແນໃສ່ ເຂດສະຖານທີ່ໃດໜຶ່ງສະເພາະ, ບັນດາກະຊວງທີ່ກ່ຽວຂ້ອງ ອາດຈະ ອອກ ລະບຽບການ ສໍາລັບ ເຂດສະເພາະ, ລວມທັງ ເຂດທີ່ດິນ ບໍລິເວນນໍ້າ ເຊຈໍາພອນ. ໃນປີ 2011, ລັດຖະບານໄດ້ອອກ ດໍາລັດ ນາຍົກລັດຖະມົນຕີ ເລກທີ 50/ນຍ ວ່າດ້ວຍ ການແຕ່ງຕັ້ງ ແລະ ໜ້າທີ່ຮັບຜິດຊອບ ຂອງຄະນະກໍາມະການແຫ່ງຊາດ ເພື່ອຄຸ້ມຄອງ ທີ່ດິນບໍລິເວນນໍ້າ ຂອງ ເຂດທີ່ຕັ້ງຣໍາຊາ ໃນ ສປປ ລາວ. ອີງຕາມ ດໍາລັດ ຂອງນາຍົກລັດຖະມົນຕີ, ຄວາມຮັບຜິດຊອບ ຂອງຄະນະກໍາມະການ ກ່ອນອື່ນໝົດ ແມ່ນ ການກໍາກັບດູແລະ ແລະການໃຫ້ຄໍາປຶກສາ. ປະຕິບັດຕາມ ພາກປະຕິບັດ ຂອງລັດຖະບານ, ຄະນະກໍາມະການ ອາດແນະນໍາແຂວງ ກ່ຽວກັບ ການຈັດຕັ້ງປະຕິບັດ ການຄຸ້ມຄອງ ເຂດທີ່ຕັ້ງ ຣໍາຊາ, ລວມທັງ ໂດຍການເນັ້ນ ບັນດາເງື່ອນໄຂ ຂອງການມີດໍາລັດ ແລະ ລະບຽບການ ຂອງກະຊວງ ຫຼື ອາດຈະໂດຍການ ລວມເອົາ ກົດໝາຍປະເພນີຕ່າງໆ ເຂົ້າໃນບັນດາກົດລະບຽບຄຸ້ມຄອງສະເພາະ ສໍາລັບ ການຄຸ້ມຄອງ ສະຖານທີ່ຕັ້ງ ຣໍາຊາ.

## 3.5 ລະບຽບການ ນິຕິບັນຍັດ ສະເພາະ ທີ່ໃຊ້ ສໍາລັບ ພື້ນທີ່ ເຊຈໍາພອນ

ຂໍ້ຍ່ອຍນີ້ ແມ່ນຄົ້ນຄວ້າກວດສອບ ບັນດາ ເອກະສານນິຕິກໍາ ໃນລະດັບ ແຂວງ ແລະລະດັບທ້ອງຖິ່ນ ທີ່ ຄຸ້ມຄອງໂດຍສະເພາະ ເຂດທີ່ຕັ້ງ ຣໍາຊາ ເຊຈໍາພອນ. ບົດລາຍງານ ຂອງໂຄງການ ກົດໝາຍປະເພນີ MoJ/UNDP ຊີ້ໃຫ້ເຫັນວ່າມີຫຼາຍຕົວຢ່າງ ໃນພາກປະຕິບັດ ຢູ່ຕາມບ່ອນທີ່ ການຮ່ວມມື ໄດ້ມີການພັດທະນາຂຶ້ນ ລະຫວ່າງ ລະບົບປະເພນີ ແລະ ລະບົບນິຕິບັນຍັດ, ກ່ຽວກັບບັນຫາ ທີ່ ບົດສຶກສານີ້ໄດ້ຄົ້ນຄວ້າ.[13] ບົດສຶກສາບົດນີ້ ໄດ້ພົບບັນດາຕົວຢ່າງຄ້າຍຄືກັນ ຂອງການຢູ່ຮ່ວມກັນ ຂອງກົດໝາຍປະເພນີ ແລະ ບັນດາລະບຽບການນິຕິບັນຍັດ ທີ່ຄຸ້ມຄອງຊັບພະຍາກອນທໍາມະຊາດ.

### 3.5.1 ຢູ່ຂັ້ນແຂວງ

ເຈົ້າແຂວງໆ ສະຫວັນນະເຂດ ໄດ້ອອກ ຂໍ້ຕົກລົງສະບັບໜຶ່ງ ວ່າດ້ວຍ ການຄຸ້ມຄອງ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ, ໂດຍມີການແຕ່ງຕັ້ງ ກອງເລຂານຸການ ແລະ ຄະນະຈັດຕັ້ງປະຕິບັດ ຂອງ ແຂວງ. ກອງເລຂາ ທີ່ຂໍ້ຕົກລົງສະບັບນີ້ ໄດ້ສ້າງຂຶ້ນ ມານັ້ນມີ ຮອງຫົວໜ້າ ຫ້ອງການ ຊັບພະຍາກອນທໍາມະຊາດ ແລະ ຊັບພະຍາກອນນໍ້າ ແຂວງ

---

[13] MoJ/UNDP ໂຄງການພັດທະນາ ຂອງ ອົງການ ສະຫະປະຊາຊາດ (MoJ/UNDP). (2011). ໂຄງການກົດໝາຍປະເພນີ, ພາກສັງລວມ ພາຍໃຕ້ຫົວຂໍ້ "ສາຍພົວພັນ ກັບກົດໝາຍແຫ່ງຊາດ ແລະກົດໝາຍສາກົນ" ( ບໍ່ມີໝາຍເລກໜ້າ).

ເປັນຫົວໜ້າ ແລະ ມີສິດຢ່າງເຕັມສ່ວນ ໃນການຄວບຄຸມ ການປະຕິບັດງານ ຢູ່ ເຂດ ຣໍາຊາ ເຊຈໍາພອນ, ພາຍໃຕ້ ການກໍາກັບດູແລ ຂອງຄະນະກໍາມະການແຫ່ງຊາດ.

### 3.5.2 ຢູ່ຂັ້ນເມືອງ

ຂໍ້ຕົກລົງ ຂອງເຈົ້າແຂວງ ທີ່ແຕ່ງຕັ້ງ ທີມງານຈັດຕັ້ງປະຕິບັດ ສໍາລັບ ເຊຈໍາພອນ ໄດ້ແຕ່ງຕັ້ງ ຮອງຫົວໜ້າຫ້ອງການ ເມືອງ ເປັນຫົວໜ້ານໍາພາທີມງານ.

ວິທີປະຕິບັດ ມາດຕະຖານ ໃຫ້ ອໍານາດ ແກ່ຫົວໜ້າຫ້ອງການ ເມືອງ ເປັນຫົວໜ້າ ດູແລຢ່າງໃກ້ຊິດ ດິນແດນທີ່ຢູ່ ໃນ ເມືອງ ແລະ ດູແລ ບ້ານຕ່າງໆ ແລະ ທຸກໆການດໍາເນີນການ ທີ່ຢູ່ໃນດິນແດນຂອງເມືອງ, ລວມທັງ ທົບທວນ ບັນດາຂໍ້ສະເໜີ ຈາກບ້ານ ເພື່ອສ້າງຕັ້ງປ່າສະຫງວນ ແລະ ກົດລະບຽບໃນການຄຸ້ມຄອງປ່າສະຫງວນ ຢູ່ໃນແຕ່ລະ ບ້ານ.

ເຖິງຢ່າງໃດກໍຕາມ, ໃນກໍລະນີ ເຂດ ຣໍາຊາ ເຊຈໍາພອນ, ທີມງານຈັດຕັ້ງປະຕິບັດ ຣໍາຊາ, ແທນທີ່ຈະແມ່ນຫົວໜ້າ ຫ້ອງການເມືອງ, ຈະເປັນຜູ້ທົບທວນບັນດາຂໍ້ສະເໜີ ສ້າງກົດລະບຽບໃດໜຶ່ງ ສໍາລັບ ເຂດ ຣໍາຊາ ເຊຈໍາພອນ.

### 3.5.3 ຢູ່ຂັ້ນບ້ານ

ສໍາລັບ ຈຸດປະສົງສະເພາະ ຂອງ ການວິເຄາະ ບັນດາກົດໝາຍ ປະເພນີ ແລະ ກົດໝາຍ ນິຕິບັນຍັດ ວ່າດ້ວຍການ ຄຸ້ມຄອງ ຊັບພະຍາກອນທໍາມະຊາດນັ້ນ, ຂັ້ນບ້ານ ຂອງ ລະບົບການຈັດຂັ້ນ ຂອງກົດໝາຍ ຈະຕ້ອງມີຄວາມ ເອົາໃຈໃສ່ທີ່ສຸດ. ທັງກົດໝາຍ ປະເພນີ ແລະ ກົດໝາຍ ນິຕິບັນຍັດ ແມ່ນດໍາເນີນການຢູ່ຂັ້ນບ້ານ ໃນເຂດເຊຈໍາ ພອນ ແລະ ສົ່ງຜົນກະທົບ ຕໍ່ການດໍາລົງຊີວິດປະຈໍາວັນ ຂອງປະຊາຊົນທີ່ອາໄສຢູ່ໃນເຂດນັ້ນ.

ນອກຈາກ ບັນດາກົດໝາຍ ປະເພນີ ທີ່ຄວບຄຸມ ຊັບພະຍາກອນທໍາມະຊາດແລ້ວ, ການສໍາຫຼວດ ຂອງ ໂຄງການ ຍັງ ໄດ້ພົບ ບັນດາລະບຽບການ ນິຕິບັນຍັດ ຢູ່ໃນ 6 ບ້ານ. ລະບຽບການທັງໝົດ ເຫຼົ່ານັ້ນ ແມ່ນໄດ້ຖືກຮັບຮອງ ພາຍໃນໄລຍະເວລາ 1 ປີ, ຄື 2011 – 2012, ຫຼັງຈາກ ສປປ ລາວ ໄດ້ເຂົ້າເປັນພາຄີ ຂອງ ສົນທິສັນຍາ ຣໍາຊາ. 4 ບ້ານໃນຈໍານວນ 6 ບ້ານເຫຼົ່ານັ້ນ ແມ່ນຢູ່ຂ້າງໃນ ຂອງ ເຂດ ຣໍາຊາ ເຊຈໍາພອນ; ຫຼັງເຮືອນ ຂອງໜຶ່ງໃນ ບັນດາບ້ານ ເຫຼົ່ານີ້ ແມ່ນຕັ້ງຢູ່ ຂ້າງນອກ ຂອງເຂດແດນ ຂອງ ເຂດ ຣໍາຊາ, ແຕ່ວ່າ ຄັງ ແລະ ທົ່ງນາ ເປັນຂອງຊາວບ້ານ ທີ່ຢູ່ຂ້າງ ໃນ ຂອງສະຖານທີ່ຕັ້ງ. ໃນຈໍານວນບ້ານທີ່ ມີ ລະບຽບການນັ້ນ, ມີແຕ່ກຸ່ມບ້ານດຽວເທົ່ານັ້ນ ທີ່ຢູ່ນອກ ເຂດທີ່ຕັ້ງ ຣໍາຊາ ຄືບ້ານ: ດົງແໜ່ງ/ຊາຄຸນໃຕ້/ໂພນທອງ.

ສີ່ບ້ານ ທີ່ມີ ລະບຽບການ ນິຕິບັນຍັດ ຊຶ່ງຢູ່ໃນຈໍານວນບ້ານ ທີ່ໂຄງການໄດ້ລົງສໍາຫຼວດ ເພື່ອສຶກສາກ່ຽວກັບ ກົດໝ າຍປະເພນີນັ້ນ, ມີຄື: ຕາແຫຼວ/ນາຕ່າຍ; ຕານສູມ; ຫົວເມືອງ; ແລະ ແກ້ງກອກດົງ. ໜຶ່ງບ້ານ ແລະ ໜຶ່ງກຸ່ມບ້ານ ທີ່ ມີ ລະບຽບການ ນິຕິບັນຍັດ ແມ່ນບໍ່ຢູ່ໃນໝູ່ບ້ານທີ່ໂຄງການໄດ້ລົງສໍາຫຼວດ ເພື່ອສຶກສາ ກົດໝາຍປະເພນີນັ້ນມີຄື: ກະດັນ ແລະ ດົງແໜ່ງ/ຊາຄຸນໃຕ້/ໂພນທອງ.

ໃນ 4 ບ້ານ ທີ່ທັງໝົດ ແມ່ນຢູ່ໃນ ສະຖານທີ່ຕັ້ງ ຣໍາຊາ ( ຕານສູມ, ກະດັນ, ແກ້ງກອກ-ດົງ, ແລະ ຕາແຫຼວ), ລະບຽບການ ບາງສ່ວນ ແມ່ນ ອີງໃສ່ ບັນດາ ບົດບັນທຶກຄວາມເຂົ້າໃຈ (MoU) ຫຼາຍໆບົດ, ບົດທໍາອິດ ແມ່ນໄດ້ ເຊັນ ໃນປີ 2010, ລະຫວ່າງ ລັດຖະບານ ແລະ ສະມາຄົມ ອະນຸລັກ ສັດປ່າ (WCS). MoU ເຫຼົ່ານີ້ ສຸມໃສ່ ການອະນຸລັກ ແຂ້ສະຫຍາມ ທີ່ໃກ້ຈະສູນພັນ.[14] ຢູ່ບ້ານຫົວເມືອງ, ແລະ ຢູ່ ກຸ່ມບ້ານ ດົງແໜ່ງ/ຊາຄຸນ-ໃຕ້/ໂພນ

[14] MoU ທີ່ມີຜົນບັງຄັບໃຊ້ສໍາລັບ ປີ 2012-2013 ໄດ້ເຊັນກັນ ລະຫວ່າງ ຫ້ອງການ ກະສິກໍາ ແລະ ປ່າໄມ້ ເມືອງເຊຈໍາພອນ ແລະ WCS, ສໍາລັບໄລຍະ 19 ເມສາ 2012 – 18 ເມສາ 2013. ບໍລິສັດ ລ້ານຊ້າງ ມິເນໂຣ ຈໍາກັດ, ໂຄງການ Sepon Gold Mining ແລະ WCS ເປັນຜູ້ສະໜັບສະໜູນທຶນ. MoU ກວມເອົາ 10 ບ້ານ ໃນ 4 ເມືອງ, ເຊິ່ງລວມມີ ເຊຈໍາພອນ; ໃນເມືອງ ເຊຈໍາພອນ ແມ່ນ

ທອງ, ທີ່ຢູ່ນອກ ສະຖານທີ່ຕັ້ງ ຣໍາຊາ, ລະບຽບການ ບໍ່ໄດ້ສຸມໃສ່ ການອະນຸລັກ ແຂ້ສະຫຍາມ ແຕ່ວ່າ ຄຸ້ມຄອງ ການລ່າສັດ, ການຫາປາ ແລະ ການຮັກສາ ຄອງນໍ້າ ແລະ ສາຍນໍ້າ ໃນໄລຍະລະດູແຜ່ພັນ.

ບໍ່ມີແຜນທີ່ ທາງການ ຂອງ ເຂດແດນຕ່າງໆຂອງບ້ານ. ເຂດແດນ ຂອງ ທັງໝົດ ເຂດອະນຸລັກ ທີ່ລະບຽບການໄດ້ ສ້າງຂຶ້ນ ແມ່ນຖືກກໍານົດໂດຍ ຫຼັກໝາຍທີ່ດິນ.

### 3.5.3.1 ບ້ານຕາແຫຼວ ແລະ ນາຕ່າຍ

*ບັນດາລະບຽບການ ກ່ຽວກັບ ການຄຸ້ມຄອງ ເຂດອະນຸລັກ ອ່າງຮັບນໍ້າທໍາມະຊາດ ສໍາລັບ ການອະນຸລັກ ແຂ້ ສະຫຍາມ (09.03.2012)*

ເຂດອະນຸລັກ ທີ່ຖືກສ້າງຂຶ້ນ ໂດຍ ບັນດາລະບຽບການເຫຼົ່ານີ້ ມີຄວາມກວ້າງ 55 ແມັດ, ຍາວ 1 km ແລະ ໃນ ລະດູແລ້ງ, ຄວາມເລິກ ແມ່ນ 3 m. ລະບຽບການເຫຼົ່ານີ້ ລະບຸແຈ້ງ ເຂດແດນຕ່າງໆ ແລະ ເກືອດຫ້າມ ຄົນເຮັດ ກິດຈະກໍາ 6 ຢ່າງ ດັ່ງລຸ່ມນີ້ ຢູ່ໃນເຂດອະນຸລັກ:

1. ຫາປາດ້ວຍອຸປະກອນຫາປາ ທົ່ວໄປ;
2. ຫາປາ ດ້ວຍການໃຊ້ລະເບີດ, ຢາເບື່ອ, ກະແສໄຟຟ້າ, ແລະ ວິທີການອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
3. ຈັບ ຫຼື ຂ້າແຂ້;
4. ລ່າສັດດ້ວຍປືນລ່າສັດ ແລະ ອາວຸດທຸກຊະນິດ;
5. ສ້າງຄວາມເສຍຫາຍ ແກ່ສິ່ງແວດລ້ອມ ຢູ່ອ້ອມແອ້ມ ເຂດອະນຸລັກ ໂດຍການຈູດປ່າ ຫຼື ຖາງປ່າເຮັດໄຮ່; ແລະ
6. ສູບ/ລະບາຍນໍ້າຈາກບຶງອອກຈົນເກີນຄວນ.

ພະນັກງານປ້ອງກັນຄວາມສະຫງົບ ຂອງບ້ານ ມີໜ້າທີ່ຮັບຜິດຊອບ ການເຝົ້າຮັກສາ ເຂດອະນຸລັກ ແລະ ມີສິດອໍາ ນາດຍຶດເອົາ ອຸປະກອນ ການລ່າສັດ ຫຼື ຫາປາ ທຸກຊະນິດ ທີ່ໃຊ້ເຂົ້າໃນການກະທໍາຜິດນັ້ນ. ນາຍບ້ານ ມີໜ້າທີ່ ຮັບຜິດຊອບໃນການສືບສວນ ການກະທໍາຜິດ ແລະ ປະຕິບັດການລົງໂທດຜູ້ກະທໍາຜິດ.

ຄ່າປັບໃໝ ສໍາລັບ ການກະທໍາຜິດ ຄັ້ງທໍາອິດ, ຄັ້ງທີສອງ ແລະ ຄັ້ງທີສາມ ແມ່ນແຕກຕ່າງກັນໄປ ຂຶ້ນກັບວ່າ ແມ່ນ ການລະເມີດການເກືອດຫ້າມຂໍ້ໃດ ແລະ ຈະເລີ້ມແຕ່ 200,000 ກີບ ສໍາລັບເທື່ອທໍາອິດ ໃນການສ້າງຄວາມເສຍ ຫາຍ ແກ່ສະພາບແວດລ້ອມ ຫາ 30,000,000 ກີບ ສໍາລັບການລະເມີດເທື່ອທີສາມ ໃນການຈັບແລະຂ້າແຂ້. ສໍາ ລັບການກະທໍາຜິດ ເທື່ອທໍາອິດ ແລະ ເທື່ອທີສອງ ຈະອອກໜັງສືເຕືອນຢ່າງເປັນທາງການ. ສໍາລັບການລະເມີດ ເທື່ອທີສາມ , ຜູ້ລະເມີດ ຈະຖືກກັກຂັງ ແລະ ລາຍງານການກະທໍາຜິດ ຕໍ່ ອໍານາດການປົກຄອງເມືອງ ເພື່ອດໍາເນີນ ການຕໍ່ໄປ.

ລະບຽບການ ລະບຸລະອຽດ ວ່າຖືກສ້າງຂຶ້ນມາ ດ້ວຍຄວາມເຫັນດີເຫັນພ້ອມ ຂອງ ອໍານາດການປົກຄອງ ແລະ ຊາວບ້ານທຸກຄົນ ໃນບ້ານ, ເມືອງ ເຊຈໍາພອນ.

---

ກວມເອົາບ້ານ ໂພນກໍ, ນອກຈາກ 4 ບ້ານທີໄດ້ສໍາຫຼວດເພື່ອບົດສຶກສານີ້. ການດັດແກ້ໃດໜຶ່ງ ໃນ MoU ນັ້ນ ຕ້ອງມີການຮັບຮອງຢ່າງ ເປັນລາຍລັກອັກສອນ ຂອງ ກະຊວງການຕ່າງປະເທດ. ບໍ່ມີການລົງໂທດ ສໍາລັບການບໍ່ປະຕິບັດຕາມ ໄລຍະເວລາ ຂອງ MoU; ທຸກໆ ກໍລະນີຂັດແຍ່ງກັນ ລະຫວ່າງ ບັນດາຝ່າຍສັນຍາ ແມ່ນຕ້ອງຖືກແກ້ໄຂ ໂດຍການປຶກສາຫາລື ຫຼື ສອດຄ່ອງກັບ ກົດໝາຍ ຂອງ ສປປ ລາວ. ການກະທໍາໃດໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ ທີ່ກ່ຽວຂ້ອງ ກັບ ແຂ້ສະຫຍາມ ແມ່ນຈະຖືກລົງໂທດ ພາຍໃຕ້ກົດໝາຍຂອງປະເທດ.

### 3.5.3.2 ບ້ານຕານສຸມ

*ບັນດາລະບຽບການ ກ່ຽວກັບການຄຸ້ມຄອງ ເຂດອະນຸລັກ ອ່າງເກັບນ້ຳ ທຳມະຊາດ ສຳລັບ ແຂ້ສະຫຍາມ (10.03.2012)*

ບັນດາລະບຽບການເຫຼົ່ານີ້ ສ້າງ ເຂດອະນຸລັກສອງເຂດ:

- ບຶງໝາກແຜວ, ກວ້າງ 100m , ຍາວ 1.2km ແລະ ໃນລະດູແລ້ງ ເລິກ 3m;
- ບຶງພີນ້ອຍ, ກວ້າງ 50m, ຍາວ 700m ແລະ ໃນລະດູແລ້ງ ເລິກ 3m.



ບຶງໝາກແຜວ ຢູ່ບ້ານ ຕານສຸມ

ບັນດາລະບຽບການ ໄດ້ລະບຸຊັດເຈນ ເຂດແດນຕ່າງໆ ແລະ ຫ້າມການກະທຳ ຂອງຄົນ 10 ຢ່າງໃນເຂດອະນຸລັກ:

- ຂະຫຍາຍ ກິດຈະການດ້ານກະສິກຳ;
- ໃຫ້ສຳປະທານທີ່ດິນ ເພື່ອຈຸດປະສົງໃດກໍຕາມ;
- ນຳໃຊ້ສານເຄມີ;
- ຕັດໄມ້, ຈູດ ຫຼື ທຳລາຍປ່າດ້ວຍວິທີຕ່າງໆ;
- ຫາປາ ແລະ ລ່າສັດ;
- ລ່າສັດ ແລະ ຫາປາ ດ້ວຍການໃຊ້ອຸປະກອນຊະນິດໃດກໍຕາມ;
- ສູບນ້ຳອອກເພື່ອ ທຸກຈຸດປະສົງການຜະລິດ;
- ຄ້າຂາຍ ແຂ້ ແລະ ສ້າງຄວາມເສຍຫາຍ ແກ່ບ່ອນຢູ່ອາໄສ ຂອງແຂ້ ດ້ວຍວິທີໃດກໍຕາມ;
- ທຸກການກະທຳ ທີ່ກີດຂວາງ ທາງທ່ຽວ ຂອງແຂ້; ແລະ
- ສ້າງຄວາມເສຍຫາຍ ແກ່ ປ້າຍ ເຄື່ອງໝາຍ.

ສຳລັບ ການລະເມີດຂໍ້ຫ້າມເຫຼົ່ານີ້ ເທື່ອທຳອິດ ແລະ ເທື່ອທີສອງ, ຜູ້ກະທຳຜິດ ຈະຖືກປັບໃໝ ຈຳນວນ 500,000 ກີບ ແລະ 1,000,000 ກີບ ຕາມລຳດັບ ແລະ ກ່າວຕັກເຕືອນຢ່າງເປັນທາງການ. ຖ້າຫາກມີການລະເມີດເທື່ອທີສາມ, ຜູ້ລະເມີດ ຈະຖືກກັກຂັງ ແລະ ລາຍງານການກະທຳຜິດ ຕໍ່ອຳນາດການປົກຄອງເມືອງ ເພື່ອດຳເນີນການຕໍ່ໄປ.

ການເຮັດໃຫ້ແຂ້ ໄດ້ຮັບບາດເຈັບ, ການຈັບ ແລະ ຂ້າແຂ້ ແມ່ນຖືກເກືອດຫ້າມ ທັງຢູ່ພາຍໃນ ແລະ ນອກ ເຂດອະນຸລັກ. ຄ່າປັບໃໝ ສຳລັບການລະເມີດ ຂໍ້ຫ້າມ ນີ້ ແມ່ນ 5,000,000 ກີບ ສຳລັບ ການກະທຳຜິດເທື່ອທຳອິດ , 10,000,000 ກີບ ສຳລັບການລະເມີດເທື່ອທີສອງ, ແລະ 30,000,000 ກີບ ສຳລັບການລະເມີດເທື່ອທີສາມ.

ການລະເມີດເທື່ອທຳອິດ ແລະ ເທື່ອທີສອງ ຈະມີການອອກແຈ້ງເຕືອນ ຢ່າງເປັນທາງການ. ສຳລັບການລະເມີດເທື່ອທີສາມ, ຜູ້ລະເມີດ ຈະຖືກກັກຂັງ ແລະ ລາຍງານການກະທຳຜິດ ຕໍ່ອຳນາດການປົກຄອງເມືອງ ເພື່ອດຳເນີນການຕໍ່ໄປ.

ພະນັກງານ ປ້ອງກັນຄວາມສະຫງົບຂອງບ້ານ ມີໜ້າທີ່ຮັບຜິດຊອບ ໃນການເຝົ້າດູແລ ເຂດອະນຸລັກ ແລະ ມີສິດອຳນາດ ຍຶດເອົາ ອຸປະກອນ ລ່າສັດ ແລະ ຫາປາ ທຸກຊະນິດ ທີ່ໃຊ້ ໃນການກະທຳຄວາມຜິດ. ນາຍບ້ານມີໜ້າທີ່ບຜິດຊອບ ໃນການສືບສວນ ການລະເມີດ ແລະ ລົງໂທດຜູ້ກະທຳຜິດ.

ບັນດາລະບຽບການ ໄດ້ລະບຸຊັດເຈນວ່າ ລະບຽບການເຫຼົ່ານັ້ນ ຖືກສ້າງຂຶ້ນມາ ໂດຍມີຄວາມເຫັນດີເຫັນພ້ອມ ຂອງອຳນາດການປົກຄອງ ທຸກຂັ້ນ ແລະຊາວບ້ານໝົດທຸກຄົນ ຢູ່ໃນທຸກໆບ້ານ ໃນເມືອງ ຈຳພອນ.




ການອະນຸລັກ ແຂ້ ຢູ່ບ້ານຕານສຸມ




ເຂດອະນຸລັກປາ ຢູ່ບ້ານ ທົ່ງເມືອງ

### 3.5.3.3 ບ້ານທົ່ງເມືອງ

*ບັນດາລະບຽບການ ກ່ຽວກັບ ການຄຸ້ມຄອງ ແລະ ໃຊ້ ແບບອະນຸລັກ ຊັບພະຍາກອນ ສັດນ້ຳ (04.05.2011)*

ບັນດາ ລະບຽບການເຫຼົ່ານີ້ ສ້າງ ເຂດອະນຸລັກ ແຫ່ງໜຶ່ງ ກວ້າງ 700m , ຍາວ 1 km ແລະ, ໃນລະດູແລ້ງ ເລິກ 3 m. ບັນດາລະບຽບການ ລະບຸຢ່າງຊັດເຈນ ເຂດແດນຕ່າງໆ ແລະ ຫ້າມ ກິດຈະການຂອງມະນຸດ 2 ຢ່າງ ໃນເຂດອະນຸລັກ:

1. ຈັບສັດນ້ຳ ແລະ ລ່າສັດ ແລະ ນົກ ທຸກຊະນິດ ເພື່ອຈຸດປະສົງໃດກໍ່ຕາມ, ໂດຍບໍ່ຄຳນຶງ ເຖິງປະເພດ ຂອງອຸປະກອນທີ່ໃຊ້ ໃນການຫາປາ ຫຼື ລ່າສັດ ຕະຫຼອດປີ; ແລະ
2. ຕັນທາງໄຫຼ ຂອງນ້ຳໃນ ຄອງ ຫຼື ສາຍນ້ຳ ທີ່ເຊື່ອມຕໍ່ ໃສ່ ເຊຈຳພອນ ໃນໄລຍະລະດູ ປະສົມພັນ ແຕ່ເດືອນ ມິຖຸນາ ຫາເດືອນ ສິງຫາ.

ຄ່າປັບໃໝ ສໍາລັບການລະເມີດ ຂໍ້ຫ້າມ ໃນການຫາປາ ແລະ ລ່າສັດ ສໍາລັບເທື່ອທໍາອິດ ແມ່ນ 300,000 ກີບ ແລະ ເທື່ອທີສອງ 1,000,000 ກີບ. ສໍາລັບການກະທໍາຜິດ ເທື່ອທີສາມ ແມ່ນບໍ່ມີຄ່າປັບໃໝ; ຜູ້ ກະທໍາຜິດ ຈະ ຖືກກັກຂັງ ແລະ ການກະທໍາຜິດນັ້ນ ຈະຖືກລາຍງານ ຫາອໍານາດການປົກຄອງ ເມືອງ ເພື່ອດໍາເນີນການຕໍ່ໄປ. ຄ່າປັບໃໝ ສໍາລັບ ການລະເມີດ ຂໍ້ຫ້າມ ຕັນທາງນໍ້າໄຫຼ ໃນໄລຍະລະດູ ປະສົມພັນ ແມ່ນ 500,000 ກີບ ສໍາລັບ ການລະເມີດ ເທື່ອທໍາອິດ ແລະ 1,500,000 ກີບ ສໍາລັບການລະເມີດ ເທື່ອທີສອງ. ໃນການລະເມີດເທື່ອທີສອງ ນັ້ນ, ຜູ້ລະເມີດ ຈະຖືກກັກຂັງ ແລະ ການກະທໍາຜິດ ຈະຖືກລາຍງານຕໍ່ ອໍານາດການປັກຄອງເມືອງ ເພື່ອດໍາເນີນ ການຕໍ່ໄປ.

ພະນັກງານ ປ້ອງກັນຄວາມສະຫງົບຂອງບ້ານ ມີໜ້າທີ່ຮັບຜິດຊອບ ໃນການເຝົ້າດູແລ ເຂດອະນຸລັກ ແລະ ມີສິດອໍານາດ ຍຶດເອົາ ອຸປະກອນ ລ່າສັດ ແລະ ຫາປາ ທຸກຊະນິດ ທີ່ໃຊ້ ໃນການກະທໍາຄວາມຜິດ. ນາຍບ້ານມີໜ້າທີ່ຮັບ ຜິດຊອບ ໃນການສືບສວນ ການລະເມີດ ແລະ ລົງໂທດຜູ້ກະທໍາຜິດ.

ບັນດາລະບຽບການ ໄດ້ລະບຸຊັດເຈນວ່າ ລະບຽບການເຫຼົ່ານັ້ນ ຖືກສ້າງຂຶ້ນມາ ໂດຍມີຄວາມເຫັນດີເຫັນພ້ອມ ຂອງ ອໍານາດການປົກຄອງ ທຸກຂັ້ນ ແລະຊາວບ້ານໝົດທຸກຄົນ ຢູ່ໃນທຸກໆບ້ານ ໃນເມືອງ ຈໍາພອນ.

### 3.5.3.4 ບ້ານແກ້ງກອກ-ດົງ

*ບັນດາລະບຽບການ ກ່ຽວກັບ ການຄຸ້ມຄອງ ເຂດ ອະນຸລັກ ອ່າງເກັບນໍ້າ ທໍາມະຊາດ ສໍາລັບ ແຂ້ ສະຫຍາມ (10.03.2012)*

ລະບຽບການເຫຼົ່ານີ້ ໄດ້ສ້າງ ສອງເຂດອະນຸລັກ:

- ໜອງແມ່ຮ້າງ, ກວ້າງ 80 ແມັດ, ຍາວ 750 ແມັດ ແລະ ໃນລະດູແລ້ງ ເລິກ 3 ແມັດ; ແລະ
- ໜອງກ່ານ, ຍາວ 23 ແມັດ, ກວ້າງ 350 ແມັດ ແລະ ໃນລະດູແລ້ງ ເລິກ 3 ແມັດ.



*ໜອງແມ່ຮ້າງ ຢູ່ບ້ານແກ້ງກອກ-ດົງ*

*ບ້ານແກ້ງກອກ-ດົງ ສະຫງວນໄວ້ ສາມໜອງ, ແລະ ເຂດອ້ອມແອ້ມຂອງໜອງເຫຼົ່ານັ້ນ ດ້ວຍເຫດຜົນຕ່າງໆ. ໜອງ ແມ່ຮ້າງ ຜ່ານຫ້ວຍນໍ້າ ສາຍໜຶ່ງ ທີ່ເຊື່ອມຕໍ່. ຢູ່ໜອງກ່ານ ມີແຂ້ໜ້ອຍກວ່າ ຢູ່ໜອງແມ່ຮ້າງ ແລະ ໂດຍທົ່ວໄປ*

*ການຈັບເຕົ່າ ຢູ່ ໜອງ ປູຕາ ແລະ ການຕັດໄມ້ ຢູ່ເຂດອ້ອມແອ້ມໜອງ ແມ່ນບໍ່ໄດ້ຮັບ ອະນຸຍາດ, ແຕ່ວ່າ ພວກຊາວບ້ານ ແມ່ນໄດ້ຮັບອະນຸຍາດ ໃຫ້ຫາປາ. ເຂດທີ່ຢູ່ອ້ອມແອ້ມຫໍຜີ ຂອງບ້ານ ແລະ ອາຄານຫ້ອງການປົກຄອງບ້ານ ກໍຖືກສະຫງວນໄວ້ເໝືອນກັນ. ບໍ່ມີຜູ້ໃດ ໄດ້ຮັບອະນຸຍາດ ໃຫ້ຕັດຕົ້ນໄມ້ ໃນທີ່ນັ້ນ.*

*ການຫາປາ ແມ່ນບໍ່ໄດ້ຮັບ ອະນຸຍາດ ຢູ່ໜອງແມ່ຮ້າງ ແລະ ການລ່າສັດ ຢູ່ເຂດອ້ອມແອ້ມໜອງດັ່ງກ່າວ ກໍບໍ່ໄດ້ຮັບ ອະນຸຍາດ. ພວກຊາວບ້ານ ອາດ ໃຊ້ນໍ້າ ຈາກໜອງນັ້ນ ເພື່ອການຊົນລະປະທານ ແລະ ອາດ ໃຊ້ເຮືອ ຢູ່ໜອງນັ້ນໄດ້.*

*ສັງເກດເຫັນວ່າ ມີຫ້ວຍນໍ້າ ສາຍໜຶ່ງ ອອກຈາກໜອງນັ້ນ ເຊິ່ງປະຊາຊົນໄດ້ ຂວ່າງ ແຫ ແຊ່ມອງ. ແລະ ໄດ້ສັງເກດເຫັນ ເດັກນ້ອຍ ລ່າສັດຢູ່ຕາມແຄມຫ້ວຍນັ້ນ ໃຊ້ ກະຖຸນ. ນອກຈາກນັ້ນ, ປ່າໄມ້ ທີ່ຢູ່ ຕິດດ້ານໜຶ່ງຂອງໜອງ ແມ່ນ ມີເຈົ້າຂອງ ແບບເອກະຊົນ.*

*ຕັ້ງແຕ່ ປີ 2008 ເປັນຕົ້ນມາ, ພວກຊາວບ້ານ ໄດ້ພາກັນຮ່ວມມືກັບ WCS ປົກປັກຮັກສາ ໜອງກ່ານ. ໜອງແຫ່ງນີ້ເປັນບ່ອນຢູ່ອາໄສ ຂອງພວກແຂ້ ທີ່ເຄື່ອນຍ້າຍ ຈາກ ໜອງແມ່ຮ້າງ.*

*ຈະເຫັນພວກແຂ້ເຫຼົ່ານັ້ນ ແຕ່ຍາມລະດູຝົນເທົ່ານັ້ນ.*

*ທັງໜອງ ແລະ ແຂ້ ແມ່ນບໍ່ຖືກຖືວ່າ ເປັນສິ່ງ ສັກສິດ.*

*ພາຍໃຕ້ຂໍ້ຕົກລົງສະບັບໜຶ່ງ, WCS ສະໜອງງົບປະມານປະຈໍາ ປີໃຫ້ບ້ານ ເພື່ອປົກປັກຮັກສາ ໜອງກ່ານ. ພວກຊາວບ້ານ ແມ່ນບໍ່ໄດ້ຮັບອະນຸຍາດ ໃຫ້ຫາປາ ຢູ່ໃນໜອງແຫ່ງນີ້ ຍົກເວັ້ນແຕ່ ບາງໂອກາດທີ່ຫາຍາກ ສໍາລັບຈຸດປະສົງ ການໃຊ້ຮ່ວມໝູ່ເທົ່ານັ້ນ. ກົງກັນຂ້າມ ປີໜຶ່ງຈະມີການປ່ອຍປາເທື່ອໜຶ່ງ ເພື່ອຮັກສາ ຈໍານວນປະຊາກອນ ປາໃນໜອງ ໃຫ້ຄົງທີ່ ແລະ ສະນັ້ນ ຈຶ່ງມີ ແຫຼ່ງອາຫານ ທີ່ໝັ້ນຄົງ ສໍາລັບ ພວກແຂ້.*

*ປະມານ 10 ປີກ່ອນ, "ຫຍ້າຈັງໄຣ" ໄດ້ແຜ່ກວມໜອງ , ອາດເປັນໄປໄດ້ທີ່ແຜ່ມາຈາກ ໜອງແມ່ຮ້າງ ແລະ ເຊຈໍາພອນ ແລະໄດ້ແຜ່ຂະຫຍາຍຢ່າງໄວວາ.*

*ພາຍໃຕ້ຂໍ້ຕົກລົງ ກັບ WCS, ພວກຊາວບ້ານ ແມ່ນບໍ່ໄດ້ຮັບອະນຸຍ່ດໃຫ້ຈູດ ຫຼື ຮື້ "ຫຍ້າຈັງໄຣ" ນັ້ນອອກ ເພາະວ່າພວກແຂ້ ພາກັນມັກຫຍ້ານັ້ນຫຼາຍ. ເຖິງຢ່າງໃດກໍຕາມ, ມີການອະນຸຍາດ ໃຫ້ ງົວ ແລະ ຄວາຍ ຂອງພວກຊາວບ້ານ ກິນຫຍ້າ ຢູ່ຕາມເຂດອ້ອມແອ້ມໜອງນັ້ນ ແລະ ກໍກິນ "ຫຍ້າຈັງໄຣ" ນັ້ນເອງ.*



*ໜອງກ່ານ ຢູ່ບ້ານແກ້ງກອກ-ດົງ*

ບັນດາລະບຽບການ ໄດ້ລະບຸຊັດເຈນ ເຂດແດນຕ່າງໆ ແລະ ຫ້າມການກະທໍາ ຂອງຄົນ 6 ຢ່າງຢູ່ໃນເຂດອະນຸລັກ:

- ການໃຊ້ສານເຄມີທຸກປະເພດ;
- ການໃຊ້ ອາວຸດທຸກຊະນິດເພື່ອຍິງສັດ;
- ການຄ້າ ແຂ້ ຫຼື ສ້າງຄວາມເສຍຫາຍ ແກ່ບ່ອນຢູ່ອາໄມຂອງພວກມັນ;
- ການຫາປາ ແລະ ການລ່າສັດ ທຸກຊະນິດ;

- ການຫາປາ ດ້ວຍອຸປະກອນຫາປາທົ່ວໄປ ແລະ ດ້ວຍຢາເບື່ອ ແລະ ວິທີການອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ; ແລະ
- ການສາງຄວາມເສຍຫາຍ ແກ່ກະດານ ຂາວ ແລະ ເຄື່ອງໝາຍຕ່າງໆ.

ໂທດສໍາລັບ ການລະເມີດ ບັນດາຂໍ້ຫ້າມເຫຼົ່ານີ້ ແຕກຕ່າງກັນໄປຕາມແຕ່ກໍລະນີ, ຂຶ້ນກັບວ່າໄດ້ກະທໍາຜິດ ຢູ່ໜອງແມ່ຮ້າງ ຫຼື ຢູ່ໜອງກ່ານ:

- ສໍາລັບ ການກະທໍາຜິດຢູ່ໜອງແມ່ຮ້າງ, ຄ່າປັບໃໝ ແມ່ນ 500,000 ກີບ ສໍາລັບເທື່ອທໍາອິດ ແລະ 1,000,000 ກີບ ສໍາລັບເທື່ອທີສອງ. ສ່ວນສໍາລັບການກະທໍາຜິດ ເທື່ອທີສາມ, ຄ່າປັບໃໝແມ່ນ ຄວາຍໜຶ່ງຕົວ, ຜູ້ກະທໍາຜິດ ຖືກກັກຂັງ ແລະ ກ່ຽວກັບການກະທໍາຜິດ ຈະຖືກລາຍງານຕໍ່ ອໍານາດການປົກຄອງເມືອງ ເພື່ອດໍາເນີນການຕໍ່ໄປ; ແລະ
- ສໍາລັບການລະເມີດ ຢູ່ໜອງ ກ່ານ, ຄ່າປັບໃໝ ແມ່ນ 300,000 ກີບ ສໍາລັບການ ເຮັດຜິດເທື່ອທໍາອິດ, 500,000 ກີບ ສໍາລັບເທື່ອທີສອງ. ສ່ວນສໍາລັບເທື່ອທີສາມ, ຈະບໍ່ມີຄ່າປັບໃໝ; ຜູ້ລ່ວງລະເມີດ ຈະຖືກກັກຂັງ ແລະ ຈະມີການລາຍງານ ການລະເມີດຂອງຜູ້ກ່ຽວ ຕໍ່ອໍານາດການປົກຄອງເມືອງ ເພື່ອດໍາເນີນການຕໍ່ໄປ.

ການເຮັດໃຫ້ ແຂ້ ໄດ້ຮັບບາດເຈັບ: ການຈັບເອົາ ຫຼື ການຂ້າແຂ້ ແມ່ນຖືກເກືອດຫ້າມ ຢູ່ທັງພາຍໃນ ແລະ ນອກເຂດອະນຸລັກທັງສອງແຫ່ງ. ຄ່າປັບໃໝ ສໍາລັບການລ່ວງລະເມີດ ຂໍ້ຫ້າມເຫຼົ່ານີ້ແມ່ນ 5,000,000 ກີບ ສໍາລັບເທື່ອທໍາອິດ, 10,000,000 ກີບ ສໍາລັບ ເທື່ອທີສອງ ແລະ 30,000,000 ກີບ ສໍາລັບເທື່ອທີສາມ. ສໍາລັບເທື່ອທໍາອິດ ແລະເທື່ອທີສອງ ຈະມີການອອກໜັງສືເຕືອນຢ່າງເປັນທາງການ. ສໍາລັບການລ່ວງລະເມີດເທື່ອທີສາມ , ຜູ້ທີ່ລ່ວງລະເມີດ ຈະຖືກກັກຂັງ ແລະ ຈະລາຍງານການລ່ວງລະເມີດນັ້ນ ເຖິງອໍານາດການປົກຄອງເມືອງ ເພື່ອດໍາເນີນການຕໍ່ໄປ.

ພະນັກງານ ປ້ອງກັນຄວາມສະຫງົບຂອງບ້ານ ມີໜ້າທີ່ຮັບຜິດຊອບ ໃນການເຝົ້າດູແລ ເຂດອະນຸລັກ ແລະ ມີສິດອໍານາດ ຍຶດເອົາ ອຸປະກອນ ລ່າສັດ ແລະ ຫາປາ ທຸກຊະນິດ ທີ່ໃຊ້ ໃນການກະທໍາຄວາມຜິດ. ນາຍບ້ານມີໜ້າທີ່ຮັບຜິດຊອບ ໃນການສືບສວນ ການລະເມີດ ແລະ ລົງໂທດຜູ້ກະທໍາຜິດ.

ບັນດາລະບຽບການ ໄດ້ລະບຸຊັດເຈນວ່າ ລະບຽບການເຫຼົ່ານັ້ນ ຖືກສ້າງຂຶ້ນມາ ໂດຍມີຄວາມເຫັນດີເຫັນພ້ອມ ຂອງອໍານາດການປົກຄອງ ທຸກຂັ້ນ ແລະຊາວບ້ານໝົດທຸກຄົນ ຢູ່ໃນທຸກໆບ້ານ ໃນເມືອງ ຈໍາພອນ.

### 3.5.3.5 ບ້ານກະດັນ

*ບັນດາລະບຽບການ ກ່ຽວກັບ ການຄຸ້ມຄອງ ເຂດ ອະນຸລັກ ອ່າງເກັບນໍ້າ ທໍາມະຊາດ ສໍາລັບ ແຂ້ ສະຫຍາມ (10.03.2012)*

ບ້ານກະດັນ ຕັ້ງຢູ່ ໃນສະຖານທີ່ຕັ້ງ ຣໍາຊາ, ເຊຈໍາພອນ ແຕ່ວ່າ ບໍ່ຖືກລວມເຂົ້າໃນ ການສໍາຫຼວດ ກົດໝາຍປະເພນີສໍາລັບໂຄງການນີ້.

ບັນດາລະບຽບການເຫຼົ່ານີ້ ໄດ້ສ້າງ ເຂດອະນຸລັກຂຶ້ນ ສອງ ເຂດ:

- ໜອງ ລາດກະດັນ, ກວ້າງ 50 ແມັດ, ຍາວ 1 ກິໂລແມັດ ແລະ ໃນລະດູແລ້ງ ເລິກ 3 ແມັດ; ແລະ

ໜອງ ຜີນ້ອຍ, ກວ້າງ 50 ແມັດ, ຍາວ 700 ແມັດ ແລະ ໃນລະດູແລ້ງ ເລິກ 3 ແມັດ:

ບັນດາລະບຽບການ ໄດ້ກຳນົດຢ່າງຊັດເຈນ ເຂດແດນຕ່າງໆ ແລະ ຫ້າມການກະທຳຂອງມະນຸດ 3 ຢ່າງ ຢູ່ໃນເຂດອະນຸລັກ:

- ການໃຊ້ ອຸປະກອນຫາປາ ທົ່ວໄປ;
- ການໃຊ້ ອຸປະກອນຫາປາ ທີ່ບໍ່ຖືກຕ້ອງຕາມກົດໝາຍ; ແລະ
- ການເອົານ້ຳເກີນປະລິມານທີ່ ອະນຸຍາດ ເພື່ອເຮັດການກະສິກຳ.

ຄ່າປັບໃໝຕ່າງໆ ແມ່ນບໍ່ຄືກັນ ສຳລັບ ການລ່ວງລະເມີດ ແຕ່ລະຂໍ້ຫ້າມເຫຼົ່ານີ້:

- ສຳລັບການໃຊ້ ອຸປະກອນຫາປາ ແບບທົ່ວໄປ, ຄ່າປັບໃໝ ສຳລັບການລ່ວງລະເມີດ ເທື່ອທຳອິດ ແມ່ນ 500,000 ກີບ ແລະ ສຳລັບ ເທື່ອທີສອງ ແມ່ນ 1,000,000 ກີບ. ອອກໜັງສືຕັກເຕືອນຢ່າງເປັນທາງການ ສຳລັບເທື່ອທຳອິດ ແລະ ເທື່ອທີສອງ. ສຳລັບການລ່ວງລະເມີດເທື່ອທີສາມ , ຈະບໍ່ມີການປັບໃໝ. ຜູ້ທີ່ລ່ວງລະເມີດ ຈະຖືກກັກຂັງ ແລະ ຈະລາຍງານການລ່ວງລະເມີດນັ້ນ ເຖິງອຳນາດການປົກຄອງເມືອງ ເພື່ອດຳເນີນການຕໍ່ໄປ.
- ສຳລັບການໃຊ້ ອຸປະກອນຫາປາ ທີ່ບໍ່ຖືກຕ້ອງຕາມກົດໝາຍ, ຄ່າປັບໃໝສຳລັບ ການລ່ວງລະເມີດ ເທື່ອທຳອິດ ແມ່ນ 5,000,000 ກີບ ແລະ ສຳລັບເທື່ອທີສອງ ແມ່ນ 10,000,000 ກີບ. ສຳລັບການລ່ວງລະເມີດເທື່ອທີສາມ, ຜູ້ລ່ວງລະເມີດ ຈະຖືກກັກຂັງ ແລະ ລາຍງານການກະທຳຜິດ ເຖິງອຳນາດການປົກຄອງເມືອງ ເພື່ອດຳເນີນການຕໍ່ໄປ; ແລະ
- ສຳລັບການເອົານ້ຳ ເກີນປະລິມານ ທີ່ອະນຸຍາດ, ການກະທຳຜິດ ເທື່ອທຳອິດ ແມ່ນ 1,000,000 ກີບ ແລະ ເທື່ອທີສອງ 2,000,000 ກີບ. ສຳລັບ ການລ່ວງລະເມີດ ເທື່ອທຳອິດ ແລະ ເທື່ອທີສອງ ຈະມີການອອກໜັງສືເຕືອນຢ່າງເປັນທາງການ; ແລະ ການລ່ວງລະເມີດເທື່ອທີສາມ ຈະໄດ້ລາຍງານ ການກະທຳຜິດຕໍ່ອຳນາດການປົກຄອງເມືອງ ເພື່ອດຳເນີນການ

ການເຮັດແນວໃດແນວໜຶ່ງ ທີ່ສົ່ງຜົນກະທົບ ຕໍ່ແຂ້ ແມ່ນຖືກຫ້າມ ຢູ່ໃນ ແລະ ນອກ ເຂດອະນຸລັກ. ຄ່າປັບໃໝສຳລບການລ່ວງລະເມີດ ຂໍ້ຫ້າມນີ້ ແມ່ນ 5,000,000 ກີບ ສຳລັບເທື່ອທຳອິດ ແລະ 10,000,000 ກີບ ສຳລັບເທື່ອທີສອງ; ສຳລັບ ເທື່ອທີສາມ ແມ່ນ 30,000,000 ກີບ. ສຳລັບການລ່ວງລະເມີດ ເທື່ອທຳອິດ ແລະ ເທື່ອທີສອງ ຈະມີການອອກໜັງສືເຕືອນ ຢ່າງເປັນທາງການ. ສຳລັບການລ່ວງລະເມີດເທື່ອທີສາມ, ຜູ້ທີ່ລ່ວງລະເມີດ ຈະຖືກກັກຂັງ ແລະ ຈະລາຍງານການກະທຳຜິດນັ້ນ ຕໍ່ອຳນາດການປົກຄອງເມືອງ ເພື່ອດຳເນີນການຕໍ່ໄປ.

ພະນັກງານ ປ້ອງກັນຄວາມສະຫງົບຂອງບ້ານ ມີໜ້າທີ່ຮັບຜິດຊອບ ໃນການເຝົ້າດູແລ ເຂດອະນຸລັກ ແລະ ມີສິດອຳນາດ ຍຶດເອົາ ອຸປະກອນ ລ່າສັດ ແລະ ຫາປາ ທຸກຊະນິດ ທີ່ໃຊ້ ໃນການກະທຳຄວາມຜິດ. ນາຍບ້ານມີໜ້າທີ່ຮັບຜິດຊອບ ໃນການສືບສວນ ການລະເມີດ ແລະ ລົງໂທດຜູ້ກະທຳຜິດ.

ບັນດາລະບຽບການ ໄດ້ລະບຸຊັດເຈນວ່າ ລະບຽບການເຫຼົ່ານັ້ນ ຖືກສ້າງຂຶ້ນມາ ໂດຍມີຄວາມເຫັນດີເຫັນພ້ອມ ຂອງອຳນາດການປົກຄອງ ທຸກຂັ້ນ ແລະຊາວບ້ານໝົດທຸກຄົນ ຢູ່ໃນທຸກໆບ້ານ ໃນເມືອງ ຈຳພອນ.

### 3.5.3.6 ກຸ່ມບ້ານ ດົງແໜ່ງ / ຊະຄູນ-ໃຕ້ / ໂພນທອງ

*ບັນດາລະບຽບການ ກ່ຽວກັບ ການຄຸ້ມຄອງ ແລະ ໃຊ້ ແບບອະນຸລັກ ຊັບພະຍາກອນ ສັດນ້ຳ (04.05.2011)*

ເຂດອະນຸລັກ ທີ່ຖືກສ້າງຂຶ້ນ ໂດຍບັນດາ ລະບຽບການເຫຼົ່ານີ້ ກວ້າງ 1 ກິໂລແມັດ, ຍາວ 1 ກິໂລແມັດ ແລະ ໃນລະດູແລ້ງ ເລກ 4 ແມັດ.

ບັນດາລະບຽບການ ໄດ້ກຳນົດຢ່າງຊັດເຈນ ເຂດແດນຕ່າງໆ ແລະ ຫ້າມການກະທຳຂອງມະນຸດ 3 ຢ່າງ ຢູ່ໃນເຂດອະນຸລັກ:

- ການຫາປາ ແລະ ການລ່າສັດປີກ, ສັດນ້ຳ ແລະ ນົກ ຕະຫຼອດປີ ບໍ່ສຳຄັນວ່າໃຊ້ ອຸປະກອນຊະນິດໃດ.
- ການໃຊ້ ອຸປະກອນ ທຸກຊະນິດ ຫຼືທຸກ ວິທີການ ທີ່ບໍ່ຖືກຕ້ອງຕາມກົດໝາຍ ທີ່ເປັນອັນຕະລາຍ ຕໍ່ສັດນ້ຳ; ແລະ
- ຕັນຮ່ອງ ຫຼື ຫ້ວຍນ້ຳ ທີ່ເຊື່ອມຕໍ່ ກັບ ເຊຈຳພອນ ໃນໄລຍະລະດູ ປະສົມພັນ ແຕ່ເດືອນ ມິຖຸນາ ຫາເດືອນ ສິງຫາ.

ຄ່າປັບໃໝ ສຳລັບການ ລ່ວງລະເມີດ ບັນດາຂໍ້ຫ້າມເຫຼົ່ານີ້ ກ່ຽວກັບການຫາປາ ແລະ ລ່າສັດ ແລະ ການຕັນທາງນ້ຳໄຫຼ ແມ່ນ 500,000 ກີບ ສຳລັບ ເທື່ອທຳອິດ, 2,000,000 ກີບ ສຳລັບເທື່ອທີສອງ ແລະ 5,000,000 ກີບ ສຳລັບເທື່ອທີສາມ. ຈະມີການອອກໜັງສືເຕືອນຢ່າງເປັນທາງການ ສຳລັບ ການລ່ວງລະເມີດ ເທື່ອທຳອິດ ແລະ ເທື່ອທີສອງ. ຕໍ່ການລ່ວງລະເມີດເທື່ອທີສາມ, ຜູ້ທີ່ລ່ວງລະເມີດ ຈະຖືກກັກຂັງ ແລະ ຈະລາຍງານການກະທຳຜິດ ຕໍ່ອຳນາດການປົກຄອງ ເມືອງ ເພື່ອດຳເນີນການຕໍ່ໄປ.

ຄ່າປັບໃໝ ສຳລັບການລ່ວງລະເມີດ ຂໍ້ຫ້າມກ່ຽວກັບ ການໃຊ້ ອຸປະກອນ ແລະ ວິທີການ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແມ່ນ 200,000 ກີບ ສຳລັບເທື່ອທຳອິດ ແລະ 10,000,000 ກີບ ສຳລັບເທື່ອທີສອງ. ສຳລັບເທື່ອທີສາມ ຜູ້ທີ່ລ່ວງລະເມີດ ຈະຖືກກັກຂັງ ແລະ ຈະລາຍງານການກະທຳຜິດ ຕໍ່ອຳນາດການປົກຄອງ ເມືອງ ເພື່ອດຳເນີນການຕໍ່ໄປ.

ພະນັກງານ ປ້ອງກັນຄວາມສະຫງົບຂອງບ້ານ ມີໜ້າທີ່ຮັບຜິດຊອບ ໃນການເຝົ້າດູແລ ເຂດອະນຸລັກ ແລະ ມີສິດອຳນາດ ຍຶດເອົາ ອຸປະກອນ ລ່າສັດ ແລະ ຫາປາ ທຸກຊະນິດ ທີ່ໃຊ້ ໃນການກະທຳຄວາມຜິດ. ນາຍບ້ານມີໜ້າທີ່ຮັບຜິດຊອບ ໃນການສືບສວນ ການລະເມີດ ແລະ ລົງໂທດຜູ້ກະທຳຜິດ.

ບັນດາລະບຽບການ ໄດ້ລະບຸຊັດເຈນວ່າ ລະບຽບການເຫຼົ່ານັ້ນ ຖືກສ້າງຂຶ້ນມາ ໂດຍມີຄວາມເຫັນດີເຫັນພ້ອມ ຂອງອຳນາດການປົກຄອງ ທຸກຂັ້ນ ແລະຊາວບ້ານໝົດທຸກຄົນ ຢູ່ໃນທຸກໆບ້ານ ໃນເມືອງ ຈຳພອນ.

ນອກນັ້ນ, ບັນດາລະບຽບການເຫຼົ່ານີ້ ຍັງລະບຸວ່າ, ສາມປີທຳອິດ ຫຼັງຈາກການສ້າງຕັ້ງ ເຂດອະນຸລັກແລ້ວ, ບ້ານຈະປຶກສາຫາລືກັນແຕ່ລະປີ ວ່າຈະສະເໜີ ຕໍ່ອຳນາດການປົກຄອງເມືອງຫຼືບໍ່ ວ່າເຂົາເຈົ້າຈະໄດ້ຮັບ ອະນຸຍາດ ໃຫ້ຈັບປາຮ່ວມກັນໄດ້ຫຼືບໍ່.

ບັນດາບ້ານເຫຼົ່ານີ້ ບໍ່ຖືກລວມເຂົ້າໃນຈຳນວນບ້ານ ທີ່ໂຄງການໄດ້ລົງສຳຫຼວດ ເພື່ອເຮັດບົດລາຍງານສະບັບນີ້.

### 3.5.3.7 ບ້ານ ນານົກຂຽນ

ບ້ານນານົກຂຽນ ບໍ່ມີລະບຽບການ ນິຕິບັນຍັດ ຂອງຕົນເອງ, ແຕ່ວ່າເປັນພຽງ ບ້ານດຽວໃນ 11 ບ້ານທີ່ຖືກລົງສຳຫຼວດ ທີ່ຢູ່ຕິດກັບປ່າ ທີ່ ອຳນາດການປົກຄອງເມືອງ ປົກປັກຮັກສາ. ໃນປີ 2006 ອຳນາດການປົກຄອງເມືອງ ໄດ້ຈັດສັນ ທີ່ດິນ 300 ເຮັກຕາ ໃຫ້ບໍລິສັດນ້ຳຕານ ສຳປະທານເປັນເວລາ 40 ປີ. ພວກຊາວບ້ານພາກັນ ຄັດຄ້ານ ບົນພື້ນຖານທີ່ວ່າ ບ້ານເຂົາເຈົ້າ ນຳໃຊ້ບາງສ່ວນ ຂອງເນື້ອທີ່ ສຳປະທານ ເພື່ອຄ້ຳຊູ ການດຳລົງຊີວິດ. ຫຼັງຈາກນັ້ນ ອຳນາດການປົກຄອງເມືອງ ຈຶ່ງໄດ້ ຫຼຸດເນື້ອທີ່ສຳປະທານ ລົງເປັນ 200 ເຮັກຕາ, ໂດຍໄດ້ຈັດສັນ 100 ເຮັກຕາ ໃຫ້ບ້ານ ນານົກຂຽນ ໃຫ້ເປັນ ປ່າສະຫງວນ ຂອງເມືອງ ທີ່ພວກຊາວບ້ານ ໄດ້ອ້າງວ່າເປັນ ປ່າຂອງບ້ານເຂົາເຈົ້າ.

ບ້ານນາພິກຊຽນ ຕັ້ງຢູ່ຕອນລຸ່ມ ຂອງ ສວນປູກອ້ອຍ ແລະ ໂຮງງານຜະລິດນໍ້າຕານ ທີ່ ປຸງແຕ່ງອ້ອຍ, ແລະ ໄດ້ຮັບຜົນກະທົບ ຈາກສານເຄມີ ທີ່ໃຊ້ເຂົ້າໃນ ທັງການປູກ ແລະ ການປຸງແຕ່ງ ຕັ້ງແຕ່ໂຮງງານໄດ້ມາຕັ້ງຢູ່ທີ່ນັ້ນ ໃນປີ 2006.

### 3.5.4 ສັງລວມ ບັນດາ ລະບຽບການຂອງບ້ານ

ຫ້າບ້ານ ໃນຈໍານວນບ້ານທີ່ ໄດ້ຮັບຮອງເອົາ ລະບຽບການ ຂອງບ້ານ ນັ້ນແມ່ນຢູ່ ຂ້າງໃນ ຂອງ ເຂດ ຣໍາຊາ ເຊຈໍາພອນ ມີຄື: ບ້ານ ຕານສຸມ, ບ້ານແກ້ງກອກ-ດົງ, ບ້ານຕາແຫຼວ, ບ້ານ ຫົວເມືອງ ແລະ ບ້ານ ກະດັນ.

ບັນດາລະບຽບການຂອງບ້ານ ໄດ້ສ້າງ ເຂດອະນຸລັກ ສອງແຫ່ງ ຢູ່ໃນສາມບ້ານ ຄື: ບ້ານຕານສຸມ, ບ້ານກະດັນ ແລະ ບ້ານແກ້ງກອກ-ດົງ, ເຊິ່ງທັງໝົດ ແມ່ນຢູ່ ຂ້າງໃນ ຂອງ ເຂດ ຣໍາຊາ. ບັນດາລະບຽບການ ໃນສາມບ້ານອື່ນນັ້ນ ສ້າງເຂດອະນຸລັກ ໜຶ່ງ ແຫ່ງ.

ຈໍາພວກແຂ້ ແລະ ທີ່ຢູ່ອາໄສ ຂອງພວກມັນ ບໍ່ຖືກຄວບຄຸມ ຢູ່ບ້ານ ຫົວເມືອງ, ເຊິ່ງເປັນບ້ານທີ່ຢູ່ໃນ ເຂດ ຣໍາຊາ ແລະ ຢູ່ກຸ່ມບ້ານ ດົງແໜ່ງ / ຊະຄູນ-ໃຕ້/ໂພນທອງ ເຊິ່ງຢູ່ ຂ້າງນອກ:

ຂອບເຂດ ຂອງ ບັນດາລະບຽບການຂອງບ້ານ ແຕກຕ່າງກັນຫຼາຍ ຈາກບ້ານ ຕໍ່ບ້ານ.

- ບ້ານຕານສຸມ - ມີ 11 ຂໍ້ຫ້າມ ແລະ ການລົງໂທດ ທີ່ກ່ຽວຂ້ອງ;
- ບ້ານກະດັນ - ມີ 5 ຂໍ້ຫ້າມ ແລະ ການລົງໂທດທີ່ກ່ຽວຂ້ອງ; ແລະ
- ກຸ່ມບ້ານ ຕາແຫຼວ / ນາຕ່າຍ, ບ້ານແກ້ງກອກ-ດົງ, ແລະ ບ້ານ ຫົວເມືອງ ແລະ ກຸ່ມບ້ານ ດົງ ແໜ່ງ / ຊະຄູນ-ໃຕ້/ໂພນທອງ – ມີ 4 ຂໍ້ຫ້າມ ແລະ ການລົງໂທດ.

## 4. ສົມທຽບ ກົດໝາຍ ປະເພນີ ກັບ ກົດໝາຍນິຕິບັນຍັດ

ບັນດາກົດໝາຍ ນິຕິບັນຍັດ ເປັນການສ້າງຂຶ້ນມາຂ້ອນຂ້າງຫຼັງໆມານີ້, ຖ້າສົມທຽບໃສ່ ບັນດາກົດໝາຍປະເພນີ ທີ່ມີມາແຕ່ເວລາທີ່ຊ້ານານ. ກົດໝາຍປະເພນີ ໄດ້ຮັບການປະຕິບັດກັນມາແລ້ວ ຫຼາຍເຊັ່ນຄົນ, ມີສິ່ງຈູງໃຈສໍາລັບປະຊາຊົນ ເພື່ອເຂົ້າຮ່ວມ ໃນການປົກປັກຮັກສາສິ່ງແວດລ້ອມ ແລະ ໃນການເຮັດແນວນັ້ນ ມັນກໍຊ່ວຍສິ່ງເສີມວັດທະນະທໍາຊົນເຜົ່າ ເພື່ອຄົນຮຸ່ນຕໍ່ໄປ ຂອງເຂົາເຈົ້າ. ພິທີກໍາ ທີ່ມີການປະຕິບັດ ຢູ່ ຕາມເຂດ ສັກສິດ ທີ່ໝົດທັງຊຸມຊົນ ໄດ້ຖະນຸຖະໜອມໄວ້, ເຊັ່ນ ພິທີກໍາຕ່າງໆປະຈໍາປີ ເພື່ອບູຊາຜີ ເຈົ້ານໍ້າ ຫຼື ເຈົ້າປ່າ, ແມ່ນເຮັດໃຫ້ ຊຸມຊົນມີການຕັດສິນໃຈທີ່ເຂັ້ມແຂງ ຕໍ່ການຮັບປະກັນໃຫ້ ຄວາມສະຫງົບສຸກ, ຄວາມປອງດອງ ແລະ ຢູ່ດີກິນດີ ຂອງຊຸມຊົນ ຈະໄດ້ຮັບການຖະນຸຖະໜອມ ແລະ ເຫັນໄດ້ວ່າເປັນສິ່ງທີ່ມີຄຸນຄ່າ.

ຢູ່ ເຊຈໍາພອນ ການກະທໍາຫຼາຍຢ່າງ ແມ່ນຖືກເກືອດຫ້າມ ພາຍໃຕ້ກົດໝາຍປະເພນີ ເຊັ່ນ ການລ່າສັດ, ການຫາປາ ແລະ ການຕັດໄມ້ ຢູ່ຕາມສະຖານທີ່ໃດໜຶ່ງ ກໍແມ່ນຖືກຫ້າມ ໂດຍກົດໝາຍ ປະເພນີເຊັ່ນດຽວກັນ. ປະຊາຊົນບັນດາເຜົ່າ ທີ່ມີຄວາມເຊື່ອ ທາງ ຜີສາງ ນາງໄມ້ ຢ່າງໜັກແໜ້ນ ຈະບໍ່ກະທໍາສິ່ງທີ່ ເປັນໄພຕໍ່ ສະຖານທີ່ ແລະ ສັດທີ່ເຂົາເຈົ້າ ເຄົາຣົບບູຊາ; ກົດໝາຍ ນິຕິບັນຍັດ ແລະ ກົດໝາຍອາຍາ ແມ່ນສອດຄ່ອງກັບ ຄວາມເຊື່ອຖືຂອງເຂົາເຈົ້າ. ຢູ່ຂັ້ນບ້ານ ຊຸມຊົນ ເປັນຂໍກະແຈ ສໍາຫຼັບ ການຄຸ້ມຄອງ ກົດໝາຍ ນິຕິບັນຍັດ ກໍຄື ກົດໝາຍ ປະເພນີ, ເພາະວ່າບັນດາຕົວແທນ ຂອງ ກຸ່ມຊົນເຜົ່າ ມັກຈະເປັນ ເຈົ້າໜ້າທີ່ ກົດໝາຍປະເພນີ ແລະ ທັງເປັນເຈົ້າໜ້າທີກົດໝາຍນິຕິບັນຍັດນໍາອີກ. ບ້ານສ່ວນຫຼາຍ ຕາງກໍມີກົນໄກຂອງຕົນເອງ ສໍາລັບ ການແກ້ໄຂ ກໍລະນີຂັດແຍ້ງກັນ ເຊິ່ງແທດເໝາະກັບລັກສະນະ ຫຼາຍຊົນເຜົ່າ ຂອງແຕ່ລະບ້ານ.

ໂຄງການ ກົດໝາຍປະເພນີ MoJ/UNDP ພົບວ່າ ທໍານຽມປະຕິບັດ ທາງປະເພນີ ທີ່ດັ່ງເດີມ ໄດ້ມີການປ່ຽນແປງຜ່ານນະໂຍບາຍ ຂອງລັດຖະບານ, ກົດໝາຍນິຕິບັນຍັດ ແລະ ການພັດທະນາ ສັງຄົມ-ເສດຖະກິດ ໂດຍລວມ. ສິ່ງທີ່ຄົ້ນພົບ ສໍາລັບເຜົ່າ ມະກອງ ຢູ່ເຂດທີ່ໄດ້ສໍາຫຼວດ ສໍາລັບ ໂຄງການ ຂອງ ກະຊວງຍຸດຕິທໍາ ນັ້ນ ຊີ້ໃຫ້ເຫັນວ່າ ສໍາລັບບັນຫາ ທີ່ເປັນຈຸດສຸມ ຂອງ ບົດສຶກສາ ຂອງ MoJ/UNDP, ນັ້ນ ຄົນເຜົ່າ ມະກອງ ຫຼາຍຄົນ ແມ່ນຫັນໄປຫາກົດໝາຍນິຕິບັນຍັດ ໃນຄະດີອາຍາ, ພ້ອມດຽວກັນ ເຂົາເຈົ້າ ກໍສືບຕໍ່ເລືອກ ເອົາການແກ້ໄຂ ຄະດີ ແພ່ງ ໂດຍໃຊ້ກົດໝາຍປະເພນີ.[15] ໃນກໍລະນີ ກົດໝາຍ ຄຸ້ມຄອງ ຊັບພະຍາກອນທໍາມະຊາດ, ບ້ານຕ່າງໆ ທີ່ມີຄົນເຜົ່າ ມະກອງອາໄສຢູ່ ທີ່ໄດ້ລົງສໍາຫຼວດ ເພື່ອໂຄງການນີ້, ລາຍງານວ່າ 100% ຂອງ ປະຊາກອນບ້ານນັ້ນ ແມ່ນປະຕິບັດຕາມກົດໝາຍ ປະເພນີ ( ເບິ່ງ ຕາຕະລາງ 2).

ສ່ວນ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ ເອງ ແມ່ນຖືກປົກປັກຮັກສາ ດ້ວຍກົດໝາຍນິຕິບັນຍັດ ຄືກັບ ເຂດອະນຸລັກຕ່າງໆ ທີ່ຖືກສ້າງຂຶ້ນມາ ໂດຍ ບັນດາລະບຽບການຂອງບ້ານ ທີ່ໄດ້ ອະທິບາຍຢູ່ໃນບັນດາ ຂໍ້ຍ່ອຍ **3.5.3.1 – 3.5.3.7** ຂ້າງເທິງ. 4 ເຂດ ຂອງ ບັນດາເຂດ ອະນຸລັກ ທີ່ຖືກສ້າງຂຶ້ນມາ ພາຍໃຕ້ ລະບຽບການຂອງບ້ານ ຄື ສອງເຂດ ຢູ່ຍ້ານ ຕານສູມ ແລະ ສອງເຂດ ຢູ່ ບ້ານແກ້ງກອກ-ດົງ ແມ່ນຢູ່ຂ້າງໃນ ຂອງ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ.

ຢູ່ບ້ານຕ່າງໆ ທີ່ໄດ້ລົງສໍາຫຼວດ ສໍາລັບໂຄງການນີ້, ມີ 16 ເຂດ ຢູ່ໃນ ສະຖານທີ່ຕັ້ງ ຣໍາຊາ ແລະ 7 ເຂດ ຢູ່ລຽບຕາມ ສາຍນໍ້າ ຈໍາພອນ ແມ່ນຢູ່ພາຍໃຕ້ການປົກປັກຮັກສາ ແບບປະເພນີ. ອີກໜຶ່ງເຂດເພີ້ມເຕີມ ທີ່ຢູ່ພາຍໃຕ້ ການປົກປັກຮັກສາ ແບບປະເພນີ ແມ່ນ ບ້ານນາມີກຂຽນ, ຢູ່ໄກຈາກ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ ປະມານ 15 ກິໂລແມັດ.

---

[15] MoJ/UNDP (2011) ບົດລາຍງານ ໂຄງການກົດໝາຍປະເພນີ. ໜ້າ101

ມີແຕ່ກໍລະນີດຽວເທົ່ານັ້ນ ທີ່ເຂດສະຫງວນ ແບບປະເພນີ ຖືກກຳນົດໃຫ້ເປັນ ເຂດອະນຸລັກເໝືອນກັນ ພາຍໃຕ້ ລະບຽບການ ຂອງບ້ານ: ໜອງແມ່ຮ້າງ ຢູ່ ບ້ານ ແກ້ງກອກ-ດົງ.

ພື້ນຖານ ສຳລັບ ລະບຽບການ ແມ່ນແຕກຕ່າງກັນ ລະຫວ່າງ ກົດໝາຍ ນິຕິບັນຍັດ, ກົດໝາຍ ປະເພນີ, ແລະ ບັນດາລະບຽບການຂອງບ້ານ. ກົດໝາຍນິຕິບັນຍັດ ແຫ່ງຊາດ, ໂດຍທົ່ວໄປ, ມີພື້ນຖານກວ້າງຂວາງທີ່ສຸດ ສຳລັບ ການຄວບຄຸມ, ກວມລວມບັນດາຊະນິດພັນຢ່າງຮັດກຸມ, ສະຖານທີ່, ວິທີ, ຈຸດປະສົງ ແລະຜົນສະທ້ອນ ຂອງການ ໃຊ້. ກົດໝາຍປະເພນີ, ໂດຍທີ່ມີຈຸດສຸມ ໃສ່ບັນດາສະຖານທີ່ສັກສິດ, ຕົ້ນຕໍ ແມ່ນຄຸ້ມຄອງ ສະເພາະສະຖານທີ່ ແລະ ໃນບາງກໍລະນີ ກໍຄຸ້ມຄອງສະເພາະ ແຕ່ ຊະນິດພັນ. ນອກນັ້ນ, ລະບຽບການຂອງບ້ານ ຕົ້ນຕໍ ກໍຄຸ້ມຄອງແຕ່ ສະຖານທີ່; ແຂ້ສະຫຍາມ ເປັນພຽງຊະນິດພັນດຽວ ທີ່ມີການຄຸ້ມຄອງ ແລະ ຫຼາຍໆບ້ານ ແມ່ນຄຸ້ມຄອງ ວິທີຫາ ປາ. ເບິ່ງຕາຕະລາງ 3.

ເຖິງແມ່ນວ່າ ລະບຽບການຂອງບ້ານ ທີ່ມີຂອບເຂດການໃຊ້ກວ້າງຂວາງທີ່ສຸດ (ເບິ່ງ ຂໍ້ຍ່ອຍ 3.4.5) ກໍບໍ່ຄວບຄຸມ ໝົດທຸກແງ່ ຂອງ ການໃຊ້ ຊັບພະຍາກອນທຳມະຊາດ ທີ່ຖືກຄຸ້ມຄອງ ໂດຍກົດໝາຍປະເພນີ ຢູ່ໃນບ້ານດຽວກັນ. ການໃຫ້ສັດກິນຫຍ້າ ແລະ ການເກັບເຄື່ອງປ່າ ຂອງດົງ, ໂດຍສະເພາະ ແມ່ນບໍ່ຖືກໃຫ້ຄວາມສຳຄັນ ຈາກລະບຽບ ການຂອງບ້ານ ທັງໝົດເລີຍ ເຖິງແມ່ນວ່າ ການລ້ຽງສັດ ເປັນພູດສ່ວນໃຫຍ່ທີ່ສຸດ ຂອງລາຍຮັບປະຈຳປີຂອງຄົວ ເຮືອນ ຂອງບ້ານຕ່າງໆ ທີ່ໄດ້ລົງສຳຫຼວດ ແລະ ເກືອບ 100% ຂອງປະຊາຊົນໃນບ້ານເຫຼົ່ານັ້ນ ແມ່ນອາໄສ ເຄື່ອງ ປ່າຂອງດົງ (ເບິ່ງ ໃບຊ້ອນທ້າຍ 2, ຂໍ້ 3.7.4, ຕາຕະລາງ 8 ແລະ 9).

ພື້ນທີ່ຂອງປ່າໄມ້ ແລະ ຕົ້ນໄມ້ແຕ່ລະຕົ້ນ ເປັນຊັບພະຍາກອນ ສິ່ງດຽວທີ່ສຳຄັນທີ່ສຸດ ທີ່ຖືກຄຸ້ມຄອງໂດຍ ກົດ ໝາຍ ປະເພນີ ຢູ່ 9 ໃນຈຳນວນ 11 ບ້ານ ທີ່ໄດ້ລົງສຳຫຼວດ, ແຕ່ວ່າ ການອະນຸລັກ ຂອງເຂົາເຈົ້າ ແມ່ນຖືກລວມ ເຂົ້າໃນ ລະບຽບການ ສຳລັບແຕ່ສອງບ້ານເທົ່ານັ້ນ. ຄວາມບໍ່ກ້ຳເກິ່ງກັນດັ່ງກ່າວນີ້ ອາດເປັນຍ້ອນ ການສຸມໃສ່ ສັດປ່າ ຂອງ ບັນດາອົງການຈັດຕັ້ງສາກົນ ທີ່ໄດ້ໃຫ້ການສະໜັບສະໜູນ ໃນການສ້າງ ລະບຽບການຂອງບ້ານ ກໍອາດ ເປັນໄດ້.

ລະບຽບການ ຂອງ ແຕ່ລະບ້ານ ຄຸ້ມຄອງໜຶ່ງ ຫຼື ຫຼາຍແງ່ ຂອງການໃຊ້ຊັບພະຍາກອນທຳມະຊາດ ທີ່ບໍ່ຖືກຄຸ້ມ ຄອງ ໂດຍ ກົດໝາຍປະເພນີ: ການຂະຫຍາຍ ກະສິກຳ, ການອະນຸມັດໃຫ້ສຳປະທານ, ການຕັນທາງທ່ຽວຂອງ ແຂ້, ການໃຊ້ສານເຄມີ, ການໃຊ້ກະແສໄຟຟ້າ, ຢາເບື່ອ, ວັດຖຸລະເບີດ ແລະ ວິທີຫາປາອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ ພາຍໃຕ້ ກົດໝາຍນິຕິບັນຍັດ, ແລະ ການສ້າງຄວາມເສຍຫາຍແກ່ປ້ານເຄື່ອງໝາຍ.

ບໍ່ມີລະບຽບການຂອງບ້ານ ຈັກສະບັບ ສະທ້ອນໃຫ້ເຫັນຢ່າງຄົບຖ້ວນ ກົດໝາຍປະເພນີ ທີ່ຄຸ້ມຄອງ ຊັບພະຍາກອນທຳມະຊາດ ຢູ່ໃນບ້ານນັ້ນໆ;

ຕາຕະລາງ **3** ພື້ນຖານສຳລັບ ລະບຽບການ

| ການເຄື່ອນໄຫວ | ພື້ນຖານສຳລັບ ລະບຽບການ | | |
|---|---|---|---|
| | ກົດໝາຍນິຕິບັນຍັດ ແຫ່ງຊາດ | ກົດໝາຍປະເພນີ | ລະບຽບການຂອງບ້ານ |
| ການລ່າສັດ | 1. ຊະນິດພັນ<br>2. ສະຖານທີ່<br>3. method | 1. ສະຖານທີ່<br>2. ຊະນິດພັນ | 1. ສະຖານທີ່<br>2. ຊະນິດພັນ (ແຂ້ສະຫຍາມ ເທົ່ານັ້ນ)<br>3. ວິທີ (ຕາແຫຼວ, ແກ້ງກອກ-ດົງ ບ່ອນດຽວ) |

| ການເຄື່ອນໄຫວ | ພື້ນຖານສຳລັບ ລະບຽບການ | | |
|---|---|---|---|
| ການຫາປາ | 1. ຊະນິດພັນ<br>2. ສະຖານທີ່<br>3. ວິທີ | ສະຖານທີ່ | 1. ສະຖານທີ່<br>2. ວິທີ |
| ຕົ້ນໄມ້/ເນື້ອທີ່ປ່າ/ເຄື່ອງປ່າ ຂອງດົງ | 1. ສະຖານທີ່<br>2. ຊະນິດພັນ | 1. ສະຖານທີ່<br>2. ຊະນິດພັນ | ສະຖານທີ່ |
| ການເອົານໍ້າ | 1. ຈຸດປະສົງການໃຊ້<br>2. ຜົນສະທ້ອນຈາກການໃຊ້<br>3. ສະຖານທີ່ | ສະຖານທີ່ | 1. ສະຖານທີ່<br>2. ຕຸດປະສົງຂອງການໃຊ້ |
| ການໃຊ້ເຮືອ | ບໍ່ມີລະບຽບການ | ສະຖານທີ່ | ບໍ່ມີລະບຽບການ |
| ການໃຫ້ສັດກິນຫຍ້າ | ບໍ່ມີລະບຽບການ | ສະຖານທີ່ | ບໍ່ມີລະບຽບການ |

## 4.1 ຂໍ້ຫ້າມ ແລະ ຂໍ້ຈຳກັດ

ຢູ່ໃນບ້ານທີ່ ໄດ້ລົງສຳຫຼວດນັ້ນ, ກົດໝາຍປະເພນີ ຍິ່ງມີຄວາມແຕກຕ່າງນ້ອຍ ກວ່າກົດໝາຍນິຕິບັນຍັດ. ຢູ່ໃນເຂດທີ່ຂ້ອນຂ້າງ ຈຳກັດ ພາຍໃຕ້ເຂດປົກຄອງຂອງບ້ານ, ອາດຈະມີ ເຖິງ 5 ເຂດ ທີ່ຖືກຮັບຮູ້ພາຍໃຕ້ ກົດໝາຍປະເພນີ, ທີ່ມີລະບອບ ການອະນຸຍາດ ແລະ ການປົກປັກຮັກສາ ສຳລັບແຕ່ລະເຂດ. ຕົວຢ່າງ, ຢູ່ໃນເຂດ ປົກປັກຮັກສາ ພາຍໃຕ້ກົດໝາຍປະເພນີຢູ່ໃນບ້ານ, ໜຶ່ງປະເພດ ຂອງ ກິດຈະກຳ ອາດຈະ ຖືກຫ້າມຢ່າງ ຂາດຕົວ ຢູ່ໃນເຂດໜຶ່ງ ຫຼື ຫຼາຍເຂດ ສະຫງວນແບບປະເພນີ, ຈຳກັດຢູ່ບ່ອນອື່ນ ແລະ ໄດ້ຮັບອະນຸຍາດ ຢູ່ອີກບ່ອນໜຶ່ງ.

ກົດໝາຍ ປະເພນີ ຢູ່ຕາມບ້ານຕ່າງໆ ທີ່ຢູ່ໃນ ແລະ ອ້ອມແອ້ມ ສະຖານທີ່ຕັ້ງ ຮຳຊາ ເຊຈຳພອນ ຄຸ້ມຄອງ ການເຄື່ອນໄຫວ 6 ຢ່າງ: ການລ່າສັດ, ການຫາປາ, ການຕັດໄມ້. ການເກັບເຄື່ອງປ່າຂອງດົງ ການເອົານໍ້າ, ການໃຊ້ເຮືອ ແລະ ການໃຫ້ສັດລົງກິນຫຍ້າ. ມີແຕ່ ການເຄື່ອນໄຫວ 3 ຢ່າງ ຂອງ ການເຄື່ອນໄຫວທັງໝົດ ຄື: ການລ່າສັດ, ການຫາປາ ແລະ ການເອົານໍ້າ ແມ່ນຖືກຄຸ້ມຄອງ ໂດຍ ລະບຽບການຂອງບ້ານ ທີ່ຫາກໍຖືກຮັບຮອງເອົາ ເມື່ອ ບໍ່ດົນມານີ້. ການເຄື່ອນໄຫວ 7 ຢ່າງທີ່ແຕກຕ່າງກັນ ທີ່ຖືກຄຸ້ມຄອງ ພາຍໃຕ້ ລະບຽບການຂອງບ້ານ ຈຳນວນໜຶ່ງ ແມ່ນບໍ່ຖືກຄຸ້ມຄອງ ໂດຍ ກົດໝາຍປະເພນີ: ການສ້າງຄວາມເສຍຫາຍ ໃຫ້ແກ່ບ່ອນຢູ່ອາໄສຂອງແຂ້; ຕັນທາງທ່ຽວຂອງແຂ້; ການຂະຫຍາຍ ກະສິກຳ; ການໃຊ້ສານເຄມີ; ການຕັນທາງໄຫຼຂອງນໍ້າ ໃນໄລຍະລະດູ ປະສົມພັນ; ການອະນຸມັດ ໃຫ້ສຳປະທານ ແລະ ການສ້າງຄວາມເສຍຫາຍ ແກ່ປ້າຍເຄື່ອງໝາຍ.

ຕາຕະລາງໃນ ຂໍ້ຍ່ອຍຕໍ່ໄປນີ້ ໃຫ້ເຫັນ ສັງລວມ ການປຽບທຽບ ບັນດາເງື່ອນໄຂ (ມາດຕາ) ໃນກົດໝາຍນິຕິບັນຍັດ ແຫ່ງຊາດ, ກົດໝາຍປະເພນີ ແລະ ລະບຽບການຂອງບ້ານ. ຕາຕະລາງ 11 ສະແດງໃຫ້ເຫັນ ການສັງ

ລວມ ການປຽບທຽບ ກົດໝາຍປະເພນີ ກັບ ລະບຽບການຂອງບ້ານ ທີ່ໄດ້ລົງສຳຫຼວດ ທີ່ຢູ່ໃນ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ. ຂໍ້ມູນລະອຽດເພີ່ມເຕີມ ມີຢູ່ໃນ ໃບຊ້ອນທ້າຍ 3 ແລະ 4.

### 4.1.1 ການລ່າສັດ

ກົດໝາຍນິຕິບັນຍັດແຫ່ງຊາດ - ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ຄຸ້ມຄອງ ການລ່າສັດ ບົນພື້ນຖານ ຂອງ ຊະນິດພັນ ແລະ ສະຖານທີ່: ການລ່າສັດ ແມ່ນຖືກເກືອດຫ້າມ ຫຼື ຖືກຈຳກັດ ໂດຍອີງຕາມ ໝວດ ແລະ ສະຖານະພາບ ການອະນຸລັກ ຂອງສັດແຕ່ລະປະເພດ; ແລະ ການລ່າສັດ ໂດຍທົ່ວໄປ ແມ່ນຖືກຫ້າມ ຢູ່ຕາມ ເຂດທີ່ຖືກກຳນົດໃຫ້ເປັນເຂດ ອະນຸລັກ, ເຊິ່ງແຕ່ລະບ່ອນ ຕ້ອງມີ ລະບຽບການສະເພາະ ຂອງຕົນ. ບໍ່ມີຄວາມກະຈ່າງແຈ້ງວ່າ ສະຖານທີ່ຕັ້ງ ຣຳຊາ ກໍຖືກຖືວ່າ " ເປັນເຂດ ອະນຸລັກ / ພື້ນທີ່ ທີ່ຖືກເກືອດຫ້າມ " ພາຍໃຕ້ກົດໝາຍ ຫຼືບໍ່. ກົດໝາຍ ຮັບຮູ້ ແລະ ອະນຸຍາດໃຫ້ມີ ການນຳໃຊ້ ແບບປະເພນີ ແລະ ແບບຄົວເຮືອນ ພາຍໃຕ້ ບັນດາເງື່ອນໄຂສະເພາະ, ໂດຍອີງຕາມ ຊະນິດພັນ ທີ່ກ່ຽວຂ້ອງ. ກົດໝາຍ ເກືອດຫ້າມ ການລ່າສັດ ໃນໄລຍະລະດູ ປະສົມພັນ ຫຼື ເມື່ອສັດເພດແມ່ ມີລູກນ້ອຍ, ແຕ່ບໍ່ຄຸ້ມຄອງ ການລ່າສັດ ບົນພື້ນຖານ ຂະໜາດຂອງສັດ.

ແຂ້ ສະຫຍາມ, ເຊິ່ງອາໄສຢູ່ ທີ່ດິນບໍລິເວນນ້ຳ, ແມ່ນຖືກຂຶ້ນບັນຊີລາຍຊື່ຢູ່ໃນ ໃບຊ້ອນທ້າຍ I ຂອງ CITES ວ່າເປັນຊະນິດພັນທີ່ຖືກຂົ່ມຂູ່ ດ້ວຍການສູນພັນ ແລະ ຖືກບັນຈຸ ເຂົ້າໃນໝວດທີ I ພາຍໃຕ້ກົດໝາຍ ວ່າດ້ວຍສັດນຳ ແລະ ສັດປ່າ. ເພາະສະນັ້ນ ມັນຈຶ່ງຖືກປົກປັກຮັກສາ ຢູ່ທຸກບ່ອນ ທີ່ມັນຖືກພົບເຫັນ, ບໍ່ວ່າຈະຢູ່ໃນ ຫຼື ນອກ ເຂດອະນຸລັກບ່ອນໃດບ່ອນໜຶ່ງ.

ກົດໝາຍ ປະເພນີ ຄຸ້ມຄອງ ການລ່າສັດ ກ່ອນອື່ນແມ່ນບົນພື້ນຖານ ສະຖານທີ່, ໂດຍມີການເກືອດຫ້າມ ແລະ ຈຳກັດ ໂດຍອີງຕາມສະຖານະພາບ ຂອງ ສະຖານທີ່. ຕົວຢ່າງ: ການລ່າສັດ ແມ່ນຖືກເກືອດຫ້າມ ຢ່າງສິ້ນເຊີງ ຢູ່ທຸກໆ ປ່າສັກສິດ ໃນທຸກບ້ານ ທີ່ໄດ້ລົງສຳຫຼວດ. ແຕ່ວ່າ ຢູ່ຕາມປ່າໄມ້ຂອງບ້ານ ແລະ ປ່າຊ້າ ຈຳນວນໜຶ່ງ ການລ່າສັດ ແມ່ນຖືກເກືອດຫ້າມ ບາງກໍລະນີ ບົນພື້ນຖານ ຂອງຂະໜາດ: ອາດບໍ່ອະນຸຍາດໃຫ້ລ່າສັດໃຫຍ່, ແຕ່ ອະນຸຍາດໃຫ້ລ່າ ແຕ່ ສັດນ້ອຍ ເທົ່ານັ້ນ ເຊັ່ນ: ກະຮອກ/ໜູ ,ແລະ ແລນ

ໃນບາງກໍລະນີ ກົດໝາຍປະເພນີ ກໍຄຸ້ມຄອງ ການລ່າສັດ ບົນພື້ນຖານ ຊະນິດພັນ ເໝືອນກັນ. ຕົວຢ່າງ: ການຈັບເອົາເຕົ່າ ແມ່ນຖືກຫ້າມ ຢູ່ ບ້ານ ຕານສຸມ; ຢູ່ ໜອງສັກສິດ / ໜອງປູຕາ ຢູ່ບ້ານແກ້ງກອກ-ດົງ; ແລະ ຢູ່ ໜອງເຄົ່າ/ ໜອງປາຝາ ຢູ່ ບ້ານດອນແດງ. ບ້ານເຫຼົ່ານີ້ ຕັ້ງຢູ່ ໃນສະຖານທີ່ຕັ້ງ ຣຳຊາ.

ລະບຽບການ ຂອງບ້ານ ຫ້າມການລ່າສັດ ທຸກປະເພດ ໃນເຂດອະນຸລັກ ທີ່ຖືກສ້າງຂຶ້ນ ໂດຍ ລະບຽບການດັ່ງກ່າວ. ພ້ອມດຽວກັນ ກໍຫ້າມ ການຈັບເອົາ, ການເຮັດໃຫ້ສັດຊະນິດພັນໃດໜຶ່ງ ໄດ້ຮັບບາດເຈັບ ຫຼື ຕາຍ - ສຳລັບ ແຂ້ສະຫຍາມແມ່ນຫ້າມຢູ່ ທຸກໆບ່ອນ. ກົດໝາຍ ນິຕິບັນຍັດ ຄຸ້ມຄອງ ການລ່າສັດ ແລະ ການຫາປາ ໂດຍເອົາ ຊະນິດພັນ ເປັນພື້ນຖານຕົ້ນຕໍ, ໃນຂະນະ ທີ່ ກົດໝາຍ ປະເພນີ ແລະ ລະບຽບການຂອງບ້ານ ຄຸ້ມຄອງ ບົນພື້ນຖານ ສະຖານທີ່ ເປັນຕົ້ນຕໍ. ນອກນັ້ນ, ກົດໝາຍປະເພນີ ຍັງ ຄຸ້ມຄອງ ການລ່າສັດ ຢູ່ບາງບ່ອນ ບົນພື້ນຖານ ຂອງ ຂະ ໜາດ ຂອງສັດ, ເຊິ່ງ ກົດໝາຍນິຕິບັນຍັດ ແຫ່ງຊາດ ແລະ ລະບຽບການຂອງບ້ານ ບໍ່ຄຸ້ມຄອງ. ແຕ່ວ່າ " ສັດນ້ອຍ" ພາຍໃຕ້ ກົດໝາຍປະເພນີ ຂອງ ບັນດາບ້ານ ທີ່ໄດ້ລົງສຳຫຼວດ ໃນຕົວຈິງ ແມ່ນສະເພາະ ຊະນິດພັນ, ເຊິ່ງໝາຍເຖິງ ປະເພດ ກະຮອກ/ໜູ ແລະ ແລນ. ເນື່ອງຈາກວ່າ ຍັງບໍ່ທັນມີ ການເຮັດບັນຊີ ຊະນິດພັນ ທີ່ຖືກພົບເຫັນຢູ່ໃນ ເຂດທີ່ດິນບໍລິເວນນ້ຳ ເຊຈຳພອນ, ສະນັ້ນ ຈຶ່ງບໍ່ທັນເວົ້າໄດ້ ວ່າ ທຸກໆຊະນິດພັນ ຂອງສັດນ້ອຍ ທີ່ສາມາດຖືກລ່າໄດ້ນັ້ນ ຖືກປົກປ້ອງຢູ່ ພາຍໃຕ້ ກົດໝາຍແຫ່ງຊາດ ຫຼື CITES ຫຼືບໍ່.

**ຕາຕະລາງ 4 ການລ່າສັດ: ການອະນຸຍາດ, ການຫ້າມ ແລະ ການຈຳກັດ**

| **ການລ່າສັດ** | | |
|---|---|---|
| **ກົດໝາຍນິຕິບັນຍັດ ແຫ່ງຊາດ**[16] (ທົ່ວໄປ) | **ກົດໝາຍ ປະເພນີ** (ສະຖານທີ່ສະເພາະ) | **ລະບຽບການຂອງບ້ານ** (ເຂດອະນຸລັກ ທີ່ລະບຸແຈ້ງ) |
| ອະນຸຍາດ ໃຫ້ໃຊ້ແບບປະເພນີ, ມີການຈຳກັດບາງຢ່າງ ທີ່ພົວພັນກັບຊະນິດພັນສະເພາະ. | | |
| ອະນຸຍາດ ໃຫ້ໃຊ້ແບບຄົວເຮືອນ, ໃນລະດູການ ແລະ ເຂດ ສະເພາະ ແລະດ້ວຍອຸປະກອນ ປະເພດໃດໜຶ່ງສະເພາະ. | | |
| ຫ້າມ ການລ່າສັດໃນໝວດທີ I/ ບັນດາຊະນິດພັນ ທີ່ໃກ້ຈະສູນພັນ. | ຫ້າມ ທຸກໆການລ່າສັດໃນປ່າສັກສິດ ແລະ ໃນປ່າຂອງບາງບ້ານ, ບໍ່ສຳຄັນ ວ່າຊະນິດພັນໃດ. ໆງບ້ານ ຫ້າມການລ່າສັດ ໃນຊະນິດພັນສະເພາະ. | ຫ້າມ ການຈັບ/ ການເຮັດບາດເຈັບ/ ການເຮັດໃຫ້ ແຂ້ ຕາຍ ຢູ່ໃນ ຫຼື ນອກ ເຂດອະນຸລັກ ທີ່ລະບູສະເພາະ. |
| ຈຳກັດ ການລ່າສັດ ຊະນິດພັນ ທີ່ຢູ່ໃນໝວດ II & III. | ການລ່າສັດ ຢູ່ຕາມ ປ່າຊ້າ ແລະໃນປ່າຂອງບ້ານ ຈຳນວນໜຶ່ງ ແມ່ນຈຳກັດໃຫ້ລ່າໄດ້ແຕ່ສັດນ້ອຍ. | |
| | | ທຸກໆການລ່າສັດ ໃນເຂດອະນຸລັກທີ່ໄດ້ລະບຸໄວ້ , ບໍ່ສຳຄັນວ່າຊະນິດພນໃດ, ແມ່ນຖືກຫ້າມ. |

### 4.1.2 ການຫາປາ

ພາຍໃຕ້ກົດໝາຍ ວ່າດ້ວຍ ສັດນ້ຳ ແລະ ສັດປ່າ, ການຫາປາ, ກໍເຊັ່ນດຽວກັບ ການລ່າສັດ ແມ່ນຖືກຄຸ້ມຄອງ ບົນພື້ນຖານ ຂອງ ຊະນິດພັນ ແລະ ສະຖານທີ່. ກົດໝາຍ ການປະມົງຄຸ້ມຄອງ ການຫາປາ ບົນພື້ນຖານ ສະຖານທີ່ ແລະນອກນັ້ນ ຍັງ ຫ້າມການໃຊ້ ອຸປະກອນ ແລະ ວິທີ ການຫາປາ ສະເພາະ. ເຊັ່ນດຽວກັນກັບ ຊະນິດພັນ ສັດບົກ , ເນື່ອງຈາກວ່າ ຍັງບໍ່ທັນມີ ການເຮັດບັນຊີ ສຳລັບປາ ແລະ ຊະນິດພັນ ສັດນ້ຳອື່ນໆ ທີ່ຖືກພົບເຫັນຢູ່ໃນ ເຂດທີ່ດິນບໍລິເວນນ້ຳ ເຊຈຳພອນ, ແລະເພາະ ສະນັ້ນ ຈຶ່ງບໍ່ທັນເວົ້າໄດ້ ວ່າ ທຸກໆຊະນິດພັນ ຂອງປາ ທີ່ອາໄສຢູ່ ໃນເຂດທີ່ດິນບໍລິເວນນ້ຳ ນັ້ນ ຖືກປົກປ້ອງຢູ່ ພາຍໃຕ້ ກົດໝາຍການປະມົງ ຫຼື CITES ຫຼືບໍ່.

[16] ໂດຍອີງຕາມຄຳນິຍາມ ມີສາມກົດໝາຍ, ປະກົດວ່າຄຸ້ມຄອງ ພືດ ແລະ ສັດນ້ຳ – ກົດໝາຍທີ່ດິນ, ກົດໝາຍນ້ຳ ແລະ ຊັບພະຍາກອນນ້ຳ ແລະ ກົດໝາຍ ສັດນ້ຳ ແລະ ສັດປ່າ. ມາດຕາ 2 ຂອງກົດໝາຍນ້ຳ ແລະ ຊັບພະຍາກອນນ້ຳ ເວົ້າວ່າ ຊັບພະຍາກອນນ້ຳ ປະກອບດ້ວຍ ສິ່ງທີ່ອາໄສຢູ່ໃນນ້ຳ ຫຼື ຊັບພະຍາກອນນ້ຳ ທີ່ມີຊີວິດ ຫຼື ບໍ່ມີຊີວິດ, ລວມທັງ ພືດ ແລະ ສັດນ້ຳ.. ໝວດຄຳເວົ້າສຸດທ້າຍ ຂອງຄຳນິຍາມ ຂອງ "ທີດິນຈົມນ້ຳ" ໃນດຳລັດ ຈັດຕັ້ງປະຕິບັດ ກົດໝາຍທີ່ດິນເວົ້າວ່າ ທີດິນຈົມນ້ຳ ປະກອບດ້ວຍ ສັດດນ້ຳດ ພືດນ້ຳ, ແຮ່ທາດ ແລະ ສິ່ງອື່ນໆ. ເຖິງແມ່ນວ່າ ຄຳນິຍາມ, ຈຸດປະສົງ ຂອງ ກົດໝາຍ ສັດນ້ຳ ແລະ ສັດປ່າ ແມ່ນເພື່ອຄຸ້ມຄອງ ພືດ ແລະ ສັດ, ໃນຂະນະທີ່ ຈຸດປະສົງ ຂອງກົດໝາຍອື່ນ ສອງສະບັບ ແມ່ນເພື່ອຄຸ້ມຄອງ ທີດິນ ແລະ ນ້ຳ ຕາມລຳດັບ.

ບ້ານຕ່າງໆ ທີ່ໄດ້ລົງສຳຫຼວດສຳລັບ ໂຄງການນີ້ ບໍ່ໄດ້ລາຍງານ ວ່າມີກົດໝາຍປະເພນີໃດໆ ທີ່ຄຸ້ມຄອງການຫາປາ ຕາມຊະນິດພັນ, ມີແຕ່ຕາມສະຖານທີ່ເທົ່ານັ້ນ. ພາຍໃຕ້ ກົດໝາຍປະເພນີ, ການຫາປາທັງໝົດ ແມ່ນຖືກຫ້າມ ຢູ່ ຕາມ ໜອງສັກສິດ ຢູ່ບ້ານ ຕາແຫຼວ ແລະ ຢູ່ ໜອງແມ່ຮ້າງ ຢູ່ ບ້ານ ແກ້ງກອກ-ດົງ. ກົດໝາຍປະເພນີ ອະນຸຍາດ ໃຫ້ຫາປາຮ່ວມໝູ່ ຢູ່ຕາມໜອງສະຫງວນ ຢູ່ ບ້ານດອນແດງ, ບ້ານ ນານົກຂຽນ, ບ້ານນາກະທາງ ແລະ ບ້ານດອນ ຕະແບ່ງ ເທົ່ານັ້ນ.

ລະບຽບການຂອງບ້ານ ທັງໝົດ ແມ່ນຫ້າມ ການຫາປາ ຕາມ ເຂດອະນຸລັກ ທີ່ຖືກສ້າງຂຶ້ນໂດຍ ບັນດາລະບຽບ ການເຫຼົ່ານັ້ນ. ນອກຈາກການຫ້າມ ທຸກປະເພດຂອງການຫາປາ ຢູ່ຕາມເຂດອະນຸລັກ ທີ່ຖືກກຳນົດນັ້ນແລ້ວ, ຍັງມີ ລະບຽບການຂອງ 5 ບ້ານ - ຄືບ້ານ ຕານສຸມ, ບ້ານ ແກ້ງກອກ-ດົງ, ບ້ານຕາແຫຼວ ແລະ ບ້ານກະດັນ ທີ່ຢູ່ໃນ ເຂດ ຮໍາຊາ ເຊຈຳພອນ ແລະ ຢູ່ ກຸ່ມບ້ານ ດົງແໜ່ງ/ຊະຄູນໃຕ້/ໂພນທອງ ທີ່ຢູ່ນອກ - ໄດ້ຂະຫຍາຍ ການເກືອດຫ້າມ ອອກ ໂດຍໄດ້ລະບຸແຈ້ງ ການລົງໂທດ ສຳລັບການຫາປາ ດ້ວຍອຸປະກອນຫາປາ ທົ່ວໄປ ແລະ ສຳລັບການຫາປາ ດ້ວຍວິທີການທີ່ທຳລາຍ, ທີ່ລວມມີ ການໃຊ້ຢາເບື່ອ, ກະແສໄຟຟ້າ ແລະ ລະເບີດ. ລະບຽບການຂອງບ້ານ ຫຼື ເມືອງ ພຽງແຕ່ ລະບຸວ່າ ການຫາປາ ແມ່ນຖືກຫ້າມ ບໍ່ສຳຄັນວ່າຈະໃຊ້ ອຸປະກອນ ຊະນິດໃດ. ເບິ່ງ ຂໍ້ຍ່ອຍ **4.1.1** ສຳລັບ ການວິເຄາະ ສາຍພົວພັນ ລະຫວ່າງ ກົດໝາຍ ນິຕິບັນຍັດ, ກົດໝາຍປະເພນີ ແລະ ລະບຽບການ ຂອງບ້ານ.

ເຊັ່ນດຽວກັບ ການລ່າສັດ, ກົດໝາຍນິຕິບັນຍັດ ແຫ່ງຊາດ, ກົດໝາຍປະເພນີ ແລະ ລະບຽບການຂອງບ້ານ ໂດຍ ພື້ນຖານ ແມ່ນສອດຄ່ອງ ກັນແລະກັນ ແລະ ກັບພັນທະຕໍ່ສາກົນ ສຳລັບ ການຫາປາ.



ປາຫ້ອງຖິ່ນ ຈາກທີ່ດິນບໍລິ້ອນນ້ຳ

**ຕາຕະລາງ 5 ການຫາປາ: ການອະນຸຍາດ, ການຫ້າມ ແລະ ການຈຳກັດ**

| ການຫາປາ | | |
|---|---|---|
| **ກົດໝາຍນິຕິບັນຍັດ ແຫ່ງຊາດ**<br>(ທົ່ວໄປ) | **ກົດໝາຍປະເພນີ**<br>(ສະຖານທີ່ສະເພາະ) | **ລະບຽບການຂອງບ້ານ**<br>(ເຂດອະນຸລັກທີ່ໄດ້ລະບຸ) |
| ອະນຸຍາດ ໃຫ້ໃຊ້ແບບປະເພນີ, ມີບາງຂໍ້ຈຳກັດ ທີ່ກ່ຽວຕິດພັນກັບຊະນິດພັນສະເພາະ. | ຈຳກັດ ການຫາປາ ຢູ່ບາງໜອງສະຫງວນ ຢູ່ບາງບ້ານ ໃຫ້ມີແຕ່ການຫາປາຮ່ວມໝູ່ເພື່ອໂອກາດ ທີ່ມີງານສະເພາະ. | |
| ອະນຸຍາດ ໃຫ້ໃຊ້ແບບຄົວເຮືອນ, ໃນລະດູການ ແລະ ເຂດ ທີ່ລະບຸສະເພາະ ແລະ ດ້ວຍອຸປະກອນຊະນິດໃດໜຶ່ງ. | | |
| ຫ້າມ ການຫາປາ ໃນໝວດ I / ຊະນິດພັນ ທີ່ໃກ້ຈະສູນພັນ. | ຫ້າມ ການຫາປາທັງໝົດ ຢູ່ ຕາມໜອງສັກສິດ ຢູ່ ບາງບ້ານ ບໍ່ສຳຄັນວ່າຊະນິດພັນໃດ. | ຫ້າມ ການຫາປາທັງໝົດ ຢູ່ຕາມເຂດ ອະນຸລັກ |
| ຈຳກັດ ໃຫ້ຫາປາ ແຕ່ຊະນິດພັນໃນໝວດ II & III. | | |

### 4.1.3 ການຕັດໄມ້ / ການສ້າງຄວາມເສຍຫາຍແກ່ປ່າໄມ້

ມີສາມກົດໝາຍ ທີ່ຄຸ້ມຄອງ ການໃຊ້ທີ່ດິນປ່າໄມ້ ແລະ ຕົ້ນໄມ້: ກົດໝາຍສະບັບໜຶ່ງ ແມ່ນຄຸ້ມຄອງທົ່ວໄປ ແລະ ສອງກົດໝາຍ ຄຸ້ມຄອງສະເພາະ ແຕ່ ເຂດດນບໍລິເວນນ້ຳ. ກົດໝາຍ ປ່າໄມ້ ເປັນກົດໝາຍຄຸ້ມຄອງທົ່ວໄປ; ມັນໃຫ້ຄຳນິຍາມ "ທີ່ດິນປ່າໄມ້", ບໍ່ວ່າຈະມີປ່າໄມ້ປົກຫຸ້ມຫຼືບໍ່ມີ. ກົດໝາຍທີ່ດິນ ຄຸ້ມຄອງປ່າໄມ້ ແລະ ຕົ້ນໄມ້ ຢູ່ເຂດດິນບໍລິເວນນ້ຳ, ສ່ວນ ກົດໝາຍນ້ຳ ແລະ ຊັບພະຍາກອນນ້ຳ ຫ້າມຢ່າງເດັດຂາດ ການຕັດຕົ້ນໄມ້ ຢູ່ອ້ອມແອ້ມ "ແຫຼ່ງນ້ຳ", ເຊິ່ງ ໄດ້ຖືກກຳນົດຄວາມ ໃຫ້ລວມເອົາ ທີ່ດິນບໍລິເວນນ້ຳ. ຄືກັນກັບ ການລ່າສັດ ແລະ ການຫາປາ, ການໃຊ້ຊະນິດພັນ ຂອງ ປ່າໄມ້ ກໍແມ່ນຖືກຄວບຄຸມ ບົນພື້ນຖານ ຂອງສະຖານທີ່ ( ທັງສອງກົດໝາຍ ປ່າໄມ້ ແລະ ກົດໝາຍທີ່ດິນ ) ແລະ ຊະນິດພັນ (ກົດໝາຍປ່າໄມ້).

ກົດໝາຍປ່າໄມ້ ຮັບຮູ້ ການໃຊ້ ປ່າໄມ້ ແລະ ຜະລິດຕະພັນປ່າໄມ້ ແບບປະເພນີ ແລະ ອະນຸຍາດ ໃຫ້ມີການໃຊ້ດັ່ງກ່າວ ຢູ່ຕາມປ່າໄມ້ ທີ່ບໍ່ຖືກກຳນົດ ໃຫ້ເປັນປ່າຜະລິດ, ໂດຍສອດຄ່ອງຕາມແຜນ ແລະ ລະບຽບການຂອງບ້ານ ເຊິ່ງຕ້ອງ ສອດຄ່ອງກັບ ກົດໝາຍປ່າໄມ້ ແລະ ລະບຽບການຂອງກົດໝາຍດັ່ງກ່າວ. ການຕັດຕົ້ນໄມ້ ຫຼື ເຮັດແນວອື່ນ ທີ່ເປັນການທຳລາຍປ່າໄມ້ ຢູ່ ເຂດ ອ່າງຮັບນ້ຳ ຂອງ ທີ່ດິນບໍລິເວນນ້ຳ ແມ່ນຖືກຫ້າມ ແລະ ບໍ່ອະນຸຍາດ ໃຫ້ຕັດ ໄມ້ຊະນິດທີ່ໃກ້ຈະສູນພັນ ແລະ ຊະນິດພັນໄມ້ ທີ່ຖືກສະຫງວນໄວ້ ໂດຍບໍ່ມີການ ການອະນຸຍາດ.

ມາດຕາ 82 ຂອງກົດໝາຍປ່າໄມ້ ແລະ ມາດຕາ 16 ຂອງດຳລັດ ນາຍົກລັດຖະມົນຕີ ວ່າດ້ວຍການປົກປັກຮັກສາປ່າໄມ້ (2010) ຊີ້ໃຫ້ເຫັນວ່າ ປ່າສັກສິດ ແລະ ປ່າຊ້າ ທັງຫຼາຍ ແມ່ນຖືກຮັບຮູ້ ໂດຍອັດຕະໂນມັດ ພາຍໃຕ້ ກົດໝາຍນິຕິບັນຍັດ ໃຫ້ເປັນປ່າອະນຸລັກ ຂອງບ້ານ, ເຊິ່ງ ເປັນໜຶ່ງໃນສອງ ປະເພດຂອງປ່າ ປ້ອງກັນ ທີ່ຖືກຈັດສັນໃຫ້ບ້ານ ຄຸ້ມຄອງ ພາຍໃຕ້ກົດໝາຍ ປ່າໄມ້ ແລະ ໜຶ່ງໃນສີ່ຂັ້ນ ຂອງປ່າປ້ອງກັນ ພາຍໃຕ້ ການປົກຄອງຂອງບ້ານ ທີ່

ຖືກກຳນົດ ໂດຍ ດຳລັດນາຍົກ ລັດຖະມົນຕີ. ເຖິງຢ່າງໃດກໍຕາມ, ຍັງບໍ່ຈະແຈ້ງວ່າ ໜ້າທີ່ການປົກປັກຮັກສາ ແບບນິຕິບັນຍັດ ໂດຍອັດຕະໂນມັດ ໃນພາກປະຕິບັດ ຕົວຈິງ ນັ້ນຈະເປັນແນວໃດ.

ກົດໝາຍປະເພນີ ໃນບ້ານທີ່ໄດ້ລົງສຳຫຼວດນັ້ນ ຄຸ້ມຄອງ ຕົ້ນໄມ້ ຕົ້ນຕໍແມ່ນບົນພື້ນຖານ ຂອງສະຖານທີ່, ບໍ່ແມ່ນບົນພື້ນຖານ ຊະນິດພັນໄມ້; ມີແຕ່ບ້ານ ຫຼືເມືອງທີ່ລາຍງານວ່າ ປ່າສັກສິດຂອງບ້ານຕົນ ປົກປັກຮັກສາຕົ້ນໄມ້ສັກສິດຕົ້ນໜຶ່ງໂດຍສະເພາະ.[17] ການຕັດໄມ້ ແມ່ນຖືກຫ້າມ ຢູ່ ທຸກປ່າສັກສິດ ໃນທຸກໆບ້ານ. ບ້ານແກ້ງກອກ-ດົງ ກໍຫ້າມ ການຕັດໄມ້ ຢູ່ປ່າຊ້າ ເໝືອນກັນ ໃນຂະນະດຽວກັນ ບ້ານຕາແຫຼວ ຊ້ຳພັດ ອະນຸຍາດ ໃຫ້ຄັດໄມ້ໃນປ່າຊ້າ. ບ້ານ ນານົກຂຽນ ອະນຸຍາດໃຫ້ເກັບໄມ້ນອນຂອນຕາຍ ໃນປ່າສັກສິດ. ຢູ່ໃນປ່າໄມ້ ຂອງບ້ານ ຕາແຫຼວ ແລະ ປ່າໄມ້ ແລະ ປ່າຊ້າ ຂອງບ້ານ ນານົກຂຽນ, ບ້ານ ຊະຄູນ-ເໜືອ, ບ້ານດອນແດງ ແລະ ບ້ານ ນາກະທາງ, ການຕັດໄມ້ແມ່ນຖືກຫ້າມເປັນຕາມກໍລະນີ ອີງຕາມ ຂະໜາດຂອງ ຕົ້ນໄມ້: ຄື ອາດຈະບໍ່ອະນຸຍາດໃຫ້ ຕັດຕົ້ນໄມ້ໃຫຍ່ ແຕ່ອະນຸຍາດໃຫ້ຕັດຕົ້ນໄມ້ ນ້ອຍ ແລະ ໄມ້ເປັນພູ່ມເທົ່ານັ້ນ.



*ປ່າສັກສິດ ຢູ່ບ້ານ ແກ້ງກອກ-ດົງ*

ລະບຽບການ ຢູ່ບ້ານຕາແຫຼວ ແລະ ບ້ານຕານສູມ ຫ້າມ ການສ້າງຄວາມເສຍຫາຍ ຫຼື ການທຳລາຍ ປ່າໄມ້ ໃນທຸກວິທີ ຢູ່ຕາມເຂດທີ່ ຖືກກຳນົດໃຫ້ເປັນ ເຂດອະນຸລັກ. ເຊັ່ນດຽວກັບ ກົດໝາຍ ປະເພນີ, ລະບຽບການ ຂອງບ້ານ ກໍຕັ້ງຂໍ້ຫ້າມ ໂດຍອີງຕາມ ສະຖານທີ່ເທົ່ານັ້ນ, ບໍ່ແມ່ນຕາມ ຊະນິດພັນ.

ໃນທຸກໆບ້ານ ແມ່ນມີ ທ່າແຮງ ທີ່ຈະເກີດຄວາມຂັດແຍ້ງ ລະຫວ່າງ ກົດໝາຍປ່າໄມ້ ກັບ ກົດໝາຍປະເພນີ, ຂຶ້ນກັບສະຖານະພາບ ຂອງຕົ້ນໄມ້ ແລະ ເນື້ອທີ່ປ່າໄມ້ ໃນປ່າສັກສິດ ແລະ ປ່າຊ້າ. ຢູ່ບ້ານ ຕາແຫຼວ ມີທ່າແຮງຈະເກີດຄວາມຂັດແຍ້ງ ລະຫວ່າງ ກົດໝາຍປະເພນີ ເຊິ່ງ ອະນຸຍາດໃຫ້ຕັດໄມ້ນ້ອຍ ຢູ່ປ່າ ເສືອໂຄກ ທີ່ຢູ່ອ້ອມແອ້ມ ໜອງສັກສິດ - ແລະ ກົດໝາຍນ້ຳ ແລະ ຊັບພະຍາກອນນ້ຳດ ເຊິ່ງຫ້າມເດັດຂາດ ການຕັດໄມ້ ຢູ່ອ້ອມແອ້ມ ແຫຼ່ງນ້ຳ ເຊິ່ງຖືກ ກຳນົດວ່າໃຫ້ກວມ ເອົາ ທີ່ດິນບໍລິເວນນ້ຳເຂົ້ານຳ.

[17] ປະມານ 20 ປີຜ່ານມາ, ບ້ານຫຼືເມືອງ ໄດ້ຫຼຸດຂະໜາດປ່າສັກສິດຂອງຕົນລົງ ຍ້ອນຊາວບ້ານເຫັນວ່າ ປ່ານັ້ນກວ້າງໂພດ. ພວກຊາວບ້ານ ໄດ້ຕົກລົງເຫັນດີ ນຳການປ່ຽນແປງດັ່ງກ່າວ ແລະ ໄດ້ຈັດພິທີ ຂໍອະນຸຍາດນຳຜີເຈົ້າປ່າ. ເນື້ອທີ່ປ່າ ທີ່ສະຫງວນໄວ້ໃນເມື່ອກ່ອນ ຖືກໃຊ້ເຂົ້າໃນການປູກຝັງໃນປັດຈຸບັນ.

**ຕາຕະລາງ 6   ການຕັດໄມ້: ການອະນຸຍາດ, ຂໍ້ຫ້າມ ແລະ ຂໍ້ຈຳກັດ**

| **ການຕັດໄມ້** | | |
|---|---|---|
| **ກົດໝາຍນິຕິບັນຍັດ ແຫ່ງຊາດ** (ທົ່ວໄປ) | **ກົດໝາຍປະເພນີ** (ສະຖານທີ່ສະເພາະ) | **ລະບຽບການຂອງບ້ານ** (ເຂດອະນຸລັກທີ່ໄດ້ລະບຸ) |
| | | |
| ອະນຸຍາດ ໃຫ້ນຳໃຊ້ປ່າໄມ້ ແບບປະເພນີ ໃນປ່າທີ່ບໍ່ມີການຈຳກັດ, ແລະໃນປ່າທີ່ມີການຈຳກັດ ໂດຍສອດຄ່ອງຕາມແຜນ. | ອະນຸຍາດໃຫ້ເກັບໄມ້ຕາຍ ເພື່ອໄປໃຊ້ ສ່ວນບຸກຄົນ ແລະ/ຫຼື ໃນຊຸມຊົນ ຢູ່ໃນປ່າສັກສິດ ແລະ ປ່າຂອງບ້ານ ບາງບ່ອນ. | |
| ຫ້າມ ການຕັດຕົ້ນໄມ້ ໃນເຂດອ່າງຮັບນໍ້າ. | ຫ້າມ ຕັດຕົ້ນໄມ້ ໃນປ່າສັກສິດ. | ຫ້າມ ສ້າງຄວາມເສຍຫາຍແກ່ປ່າໄມ້ ໃນເຂດອະນຸລັກ ທີ່ໄດ້ລະບຸໄວ້ສະເພາະ ຢູ່ ສອງບ້ານ. |
| ຫ້າມ ຕັດໄມ້ ໃນເຂດອ້ອມແອ້ມແຫຼ່ງນໍ້າ. | | |
| ຫ້າມຕັດຕົ້ນໄມ້ / ຊະນິດພັນທີ່ຖືກຈຳກັດ. | ຫ້າມຕັດຕົ້ນໄມ້ໃຫຍ່ຢູ່ໃນປ່າຂອງບາງບ້ານ;<br>ອະນຸຍາດໃຫ້ຕັດຕົ້ນໄມ້ນ້ອຍ. | |

### 4.1.4   ການເກັບ ເຄື່ອງປ່າ ຂອງດົງ

ການເກັບເຄື່ອງປ່າ ຂອງດົງ ແລະ ຜະລິດຕະພັນ ທີ່ດິນບໍລິເວນນໍ້າ ມີອັດຕາສ່ວນຂ້ອນຂ້າງນ້ອຍ ຂອງ ລາຍຮັບຂອງຄົວເຮືອນ ໃນບ້ານທີ່ ໄດ້ລົງໄປສຳຫຼວດ, ແຕ່ວ່າ 97% ຂອງບັນດາຄົວເຮືອນ ທີ່ໄດ້ສຳຫຼວດນັ້ນ ແມ່ນອີງອາໄສ ສິ່ງເຫຼົ່ານັ້ນ ເພື່ອການລ້ຽງຊີບໃຫ້ຢູ່ໄດ້ໄປແຕ່ລະວັນ (ເບິ່ງ ໃບຊ້ອນທ້າຍ 2, ຂໍ້ 3.7.4).



ປາ ແລະ ເຄື່ອງປ່າຂອງດົງ ຈາກສະຖານທີ່ຕັ້ງ ຣຳຊາ ຕະຫຼາດໃນທ້ອງຖິ່ນ

ມີສອງກົດໝາຍ ແຫ່ງຊາດ ທີ່ຄຸ້ມຄອງ ການໃຊ້ ເຄື່ອງປ່າຂອງດົງ. ກົດໝາຍ ປ່າໄມ້ ແມ່ນກົດໝາຍ ທີ່ຄຸ້ມຄອງລວມ ແລະ ກົດໝາຍນໍ້າ ແລະ ຊັບພະຍາກອນນໍ້າ ແມ່ນຄຸ້ມຄອງ ພືດພັນ ທີ່ຢູ່ໃນ ແລະ ອ້ອມແອ້ມ ແຫຼ່ງນໍ້າ. ເບິ່ງຂໍ້ຍ່ອຍ 4.1.3 ເພື່ອຄຳອະທິບາຍ ລະບຽບການ ນິຕິບັນຍັດ ສຳລັບ ເຄື່ອງປ່າຂອງດົງ ພາຍໃຕ້ ກົດໝາຍປ່າໄມ້.

ກົດໝາຍ ນໍ້າ ແລະ ຊັບພະຍາກອນນໍ້າ ຮັບຮູ້ ການນໍາໃຊ້ ຂະໜາດນ້ອຍ ແລະ ລະບຸວ່າ ບໍ່ຈໍາເປັນຕ້ອງມີການ ອະນຸມັດ ຕາບໃດ ທີ່ມັນບໍ່ຖືກເກືອດຫ້າມ ໂດຍ ກະຊວງອື່ນ ຫຼື ອໍານາດການປົກຄອງທ້ອງຖິ່ນ. ການນໍາໃຊ້ ຂະໜາດນ້ອຍ ດັ່ງທີ່ໄດ້ ໃຫ້ຄໍານິຍາມ ຢູ່ໃນກົດໝາຍ ແມ່ນລວມເອົາທັງ ການເກັບພືດພັນ ຢູ່ໃນ ຫຼື ເຂດອ້ອມແອ້ມ ແຫຼ່ງນໍ້າ.

ກົດໝາຍປະເພນີ ທີ່ຄຸ້ມຄອງ ເຄື່ອງປ່າຂອງດົງ ແຕກຕ່າງກັນ ໄປຈາກບ້ານສູ່ບ້ານ. ການເກັບ ເຄື່ອງປ່າຂອງດົງ. ແມ່ນຖືກຫ້າມ ຢູ່ຕາມປ່າສັກສິດ ຂອງ ບ້ານຕາແຫຼວ, ບ້ານດອນແດງ, ບ້ານນາກະທາງ (ປ່າສັກສິດຢູ່ຂ້າງໃນຂອງບ້ານ) ແລະ ບ້ານດອນ ຕະແບ່ງ. ສ່ວນ ຢູ່ປ່າສັກສິດ ໃນບ້ານ ແກ້ງກອກ-ດົງ, ບ້ານ ນາກະທາງ ( ປ່າສັກສິດຢູ່ນອກບ້ານ), ບ້ານ ນານົກຂຽນ, ບ້ານດອນແດງ, ແລະ ບ້ານເຊ; ຢູ່ປ່າ ຂອງ ວັດ ທີ່ບ້ານຕາແຫຼວ; ແລະ ຢູ່ປ່າຊ້າ ບ້ານ ຕາແຫຼວ, ບ້ານແກ້ງກອກ-ດົງ ແລະບ້ານເຊ ແມ່ນອະນຸຍາດ ໃຫ້ເກັບໄດ້.

ຢູ່ທັງໝົດທຸກບ້ານ ມີທ່າແຮງຈະເກີດ ຄວາມຂັດແຍ້ງ ລະຫວ່າງ ກົດໝາຍປ່າໄມ້ ແລະກົດໝາຍ ປະເພນີ ກ່ຽວກັບ ການເກັບເຄື່ອງປ່າຂອງດົງ, ເຊິ່ງຂຶ້ນກັບ ສະຖານະພາບ ຂອງ ປ່າສັກສິດ ແລະ ປ່າຊ້າ ເຫຼົ່ານັ້ນ.

ລະບຽບການຂອງບ້ານ ບໍ່ເວົ້າເຖິງ ເຄື່ອງປ່າຂອງດົງ, ເຖິງແມ່ນວ່າ ມັນເປັນເລື່ອງສໍາຄັນ ສໍາລັບ ການລ້ຽງຊີບພໍກຸ້ມກິນ ຂອງບັນດາຄົວເຮືອນ.

ຕາຕະລາງ 7 ການເກັບ ເຄື່ອງປ່າຂອງດົງ: ການອະນຸຍາດ, ຂໍ້ຫ້າມ ແລະ ຂໍ້ຈໍາກັດ

| ການເກັບ ເຄື່ອງປ່າ ຂອງດົງ | | |
|---|---|---|
| **ກົດໝາຍນິຕິບັນຍັດ ແຫ່ງຊາດ**<br>(ທົ່ວໄປ) | **ກົດໝາຍປະເພນີ**<br>(ສະຖານທີ່ສະເພາະ) | **ລະບຽບການຂອງບ້ານ**<br>(ເຂດອະນຸລັກທີ່ໄດ້ລະບຸ) |
| ອະນຸຍາດ ການໃຊ້ ຜະລິດຕະພັນ ປ່າໄມ້ ແບບປະເພນີ ຢູ່ຕາມປ່າທີ່ບໍ່ມີຂໍ້ຈໍາກັດ, ແລະ ປ່າທີ່ມີຂໍ້ຈໍາກັດ ໂດຍສອດຄ່ອງຕາມແຜນ | ຫ້າມ ການເກັບ ເຄື່ອງປ່າຂອງດົງຢູ່ ປ່າ ສັກສິດ ແລະປ່າຂອງບ້ານ ຈໍານວນໜຶ່ງ, ແລະ ອະນຸຍາດ ໃຫ້ ເກັບໄດ້ ຢູ່ປ່າບ່ອນອື່ນໆ. | ບໍ່ມີມາດຕາ ທີ່ພົວພັນ ກັບ ເຄື່ອງປ່າຂອງດົງ. |
| ການເກັບ ພືດພັນ ໃນຈໍານວນນ້ອຍ ຢູ່ໃນ ແລະ ອ້ອມແອ້ມ ແຫຼ່ງນໍ້າ ບໍ່ຈໍາເປັນຕ້ອງມີ ການອະນຸມັດ | ອະນຸຍາດ ໃຫ້ ເກັບເຄື່ອງປ່າ ຂອງດົງ ໃນປ່າຊ້າ | |

## 4.1.5 ການເອົານໍ້າ

ມີສອງກົດໝາຍ ທີ່ຄຸ້ມຄອງ ການໃຊ້ນໍ້າ. ກົດໝາຍນໍ້າ ແລະ ຊັບພະຍາກອນນໍ້າ ເປັນ ກົດໝາຍຄຸ້ມຄອງໂດຍລວມ ແລະ ກົດໝາຍທີ່ດິນ ຄຸ້ມຄອງ ສະເພາະ ການໃຊ້ນໍ້າ ໃນເຂດທີ່ດິນບໍລິເວນນໍ້າ. ທັງສອງ ກົດໝາຍ ຄອບຄຸມ ບົນພື້ນຖານ ຈຸດປະສົງ ຂອງການໃຊ້ ແລະ ຜົນສະທ້ອນ ຂອງການໃຊ້ ແລະ ສະຖານທີ່. ທັງສອງກົດໝາຍ ໃຊ້ກັບ ທຸກໆການໃຊ້ນໍ້າ ຢູ່ ເຂດທີ່ດິນ ບໍລິເວນນໍ້າ ບໍ່ວ່າທີ່ດິນບໍລິເວນນໍ້ານັ້ນ ຈະຢູ່ເຂດ ອະນຸລັກ ຫຼືບໍ່ຢູ່ກໍຕາມ.

ກົດໝາຍ ນໍ້າ ແລະ ຊັບພະຍາກອນນໍ້າ ຮັບຮູ້ ການໃຊ້ນໍ້າ ໃນຂະໜາດນ້ອຍ ແລະ ລະບຸວ່າ ບໍ່ຈໍາເປັນຕ້ອງມີ ການ ອະນຸມັດ ຕາບໃດ ທີ່ມັນບໍ່ຖືກຫ້າມ ຈາກ ກະຊວງອື່ນ ຫຼື ອໍານາດການປົກຄອງທ້ອງຖິ່ນ. ການໃຊ້ ຂະໜາດນ້ອຍ ດັ່ງທີ່ໄດ້ນິຍາມ ຢູ່ໃນກົດໝາຍ ແມ່ນລວມເອົາ ການໃຊ້ນໍ້າ ຂອງ ຄົວເຮືອນ, ການຫາປາ ແລະ ການລ້ຽງປາ, ການເກັບພືດພັນ ຢູ່ໃນ ຫຼື ເຂດອ້ອມແອ້ມ ແຫຼ່ງນໍ້າ ແລະ ການໃຊ້ສໍາລັບ ການກະສິກໍາປ່າໄມ້ ແລະ ການລ້ຽງສັດ ຂອງ

ຄົວເຮືອນ.  ກົດໝາຍ ນໍ້າ ແລະ ຊັບພະຍາກອນນໍ້າ ມີການຫ້າມ ຢ່າງເດັດຂາດ ກ່ຽວກັບ ທຸກການກະທຳ ທີ່ຈະກໍ່ໃຫ້ ແຫຼ່ງນໍ້າ ຕື້ນເຂີນ ຫຼື ບົກແຫ້ງ; ກົດໝາຍທີ່ດິນ ກໍມີມາດຕາ ທີ່ຄ້າຍຄືກັນ ທີ່ລະບຸວ່າ ການໃຊ້ນໍ້າ ໃນເຂດທີ່ດິນບໍລິເວນນໍ້າ ຕ້ອງບໍ່ກໍ່ໃຫ້ເກີດ ການຫຼຸດລົງ ຂອງລະດັບນໍ້າ ຫຼື ກໍ່ໃຫ້ເກີດນໍ້າຖ້ວມ.

ກົດໝາຍປະເພນີ ທີ່ຄຸ້ມຄອງ ການໃຊ້ນໍ້າ ແມ່ນອີງຕາມ ສະຖານທີ່, ຫຼາຍກວ່າອີງໃສ່ ປະເພດ ແລະ ຜົນສະທ້ອນຂອງ ການນຳໃຊ້. ການເອົານໍ້າ ເພື່ອຈຸດປະສົງໃດກໍຕາມ ຈາກໜອງສັກສິດ ຢູ່ ບ້ານຕາແຫຼວ ແລະ ຈາກ ໜອງເຕົ່າ ຢູ່ ບ້ານດອນແດງ ແມ່ນຖືກຫ້າມ. ບໍ່ດັ່ງນັ້ນ, ການເອົານໍ້າ ແມ່ນ ໄດ້ຮັບອະນຸຍາດ ພາຍໃຕ້ກົດໝາຍ ປະເພນີ ຢູ່ໝົດທຸກບ້ານອື່ນໆ.  ບ້ານ ທີ່ໄດ້ລົງສຳຫຼວດ ທີ່ອະນຸຍາດ ໃຫ້ເອົານໍ້ານັ້ນ ບໍ່ໄດ້ລາຍງານ ການຈຳກັດໃນການເອົານໍ້າ ແຕ່ປະການໃດ.

ລະບຽບການ ໃນ ສອງບ້ານ  ຄື ບ້ານຕາແຫຼວ ແລະ ບ້ານກະດັບ ມີການຈຳກັດ ປະລິມານນໍ້າ ທີ່ສາມາດເອົາໄດ້. ລະບຽບການ ຂອງ ບ້ານ ຕານສຸມ ຫ້າມຢ່າງເຄັ່ງຄັດ ການເອົານໍ້າ ເພື່ອຈຸດປະສົງໃດກໍຕາມ. ເນື່ອງຈາກວ່າ ທັງສາມບ້ານເຫຼົ່ານີ້ ຢູ່ໃນ ເຂດ ຣໍາຊາ ເຊຈຳພອນ, ສະນັ້ນ ລະບຽບການ ຂອງເຂົາເຈົ້າ ຈຶ່ງສອດຄ່ອງກັບ ກົດໝາຍ ນິຕິບັນຍັດ ແຫ່ງຊາດ ທີ່ຄຸ້ມຄອງ ການໃຊ້ນໍ້າ ໃນ ທີ່ດິນບໍລິເວນນໍ້າ.

ໂດຍຖືວ່າ ການໃຊ້ນໍ້າ ທີ່ໄດ້ຮັບອະນຸຍາດ ພາຍໃຕ້ ກົດໝາຍປະເພນີ ແມ່ນ ການໃຊ້ຂະໜາດນ້ອຍ ດັ່ງທີ່ ກົດໝາຍນໍ້າ ແລະ ຊັບພະຍາກອນນໍ້າ ໄດ້ກຳນົດນິຍາມນັ້ນ, ກໍສະແດງວ່າ ກົດໝາຍປະເພນີ ໃນບ້ານທີ່ໄດ້ລົງສຳຫຼວດນັ້ນ - ທັງຢູ່ໃນ ແລະ ຢູ່ ນອກ ເຂດ ຣ□າຊາ - ແມ່ນ ສອດຄ່ອງຕາມກົດໝາຍ ນິຕິບັນຍັດ ແຫ່ງຊາດ.

ຕາຕະລາງ **8** ການເອົານໍ້າ:  ການອະນຸຍາດ, ການຫ້າມ ແລະ ການຈຳກັດ

| **ການເອົານໍ້າ** | | |
|---|---|---|
| **ກົດໝາຍນິຕິບັນຍັດ ແຫ່ງຊາດ** (ທົ່ວໄປ) | **ກົດໝາຍປະເພນີ** (ສະຖານທີ່ສະເພາະ) | **ລະບຽບການຂອງບ້ານ** (ເຂດອະນຸລັກທີ່ໄດ້ລະບຸ) |
| ການໃຊ້ນໍ້າ ຂະໜາດນ້ອຍ ບໍ່ຈຳເປັນຕ້ອງ ມີການອະນຸມັດກ່ອນໜ້າ. | ອະນຸຍາດ ໃຫ້ເອົານໍ້າ ຈາກບັນດາໜອງ ແລະ ຫ້ວຍຕ່າງໆ ພາຍໃຕ້ ການປົກປັກຮັກສາ ແບບປະເພນີຢູ່ຕາມບ້ານສ່ວນຫຼາຍ. | |
| ການເອົານໍ້າ ຕ້ອງບໍ່ ກໍ່ໃຫ້ລະດັບນໍ້າຫຼຸດລົງ. | | ການສູບເອົານໍ້າ ເກີນປະລິມານຫຼືການເອົານໍ້າ ເພື່ອເຮັດການກະສິກຳ ຈາກ ເຂດອະນຸລັກສະເພາະ ຖືກຫ້າມ ຢູ່ບາງບ້ານ. |
| ຫ້າມ ທຸກການກະທຳ ທີ່ຈະພາໃຫ້ແຫຼ່ງນໍ້າ ຕື້ນເຂີນ ຫຼື ບົກແຫ້ງ. | ຫ້າມ ການເອົານໍ້າ ຈາກ ໜອງສັກສິດ ຢູ່ບ້ານໜຶ່ງ ແລະ ຈາກ ໜອງສະຫງວນ ຢູ່ອີກບ້ານໜຶ່ງ. | |
| ທຸກການດຳເນີນການ ທີ່ປ່ຽນທາງນໍ້າໄຫຼ ຫຼື ກິດຂວາງການໄຫຼຂອງນໍ້າ ຕ້ອງໄດ້ຮັບອະນຸຍາດ. | | ໃນໄລຍະ ລະດູການ ປະສົມພັນຂອງປາ ແຕ່ເດືອນ ມິຖຸນາ-ສິງຫາ, ການຕັນ ຄອງ ແລະ ສາຍນໍ້າທີ່ເຊື່ອມຕໍ່ກັບ ສາຍນໍ້າ ເຊຈຳພອນ ຖືກຫ້າມ ຢູ່ ສອງບ້ານ. |

### 4.1.6 ການໃຊ້ເຮືອ

ບໍ່ມີກົດໝາຍ ນິຕິບັນຍັດ ແຫ່ງຊາດ ທີ່ຄຸ້ມຄອງການໃຊ້ເຮືອ ຢ່າງຊັດເຈນ, ແຕ່ວ່າການໃຊ້ເຮືອ ອາດມີການຄວບຄຸມ ໃນເຂດ ທີ່ມີ ລະບຽບການສະເພາະ. ກົດໝາຍປະເພນີ ທີ່ຄຸ້ມຄອງ ການໃຊ້ເຮືອ ແມ່ນອີງຕາມສະຖານທີ່ ແລະ ຄືກັນກັບ ກົດໝາຍປະເພນີ ທີ່ຄຸ້ມຄອງ ການໃຊ້ນໍ້າ. (ເບິ່ງ ຂໍ້ຍ່ອຍ 4.1.5).

ລະບຽບການຂອງບ້ານ ບໍ່ເວົ້າເຖິງ ການໃຊ້ເຮືອ.

**ຕາຕະລາງ 9 ການໃຊ້ເຮືອ: ການອະນຸຍາດ, ການຫ້າມ ແລະ ການຈຳກັດ**

| ການໃຊ້ເຮືອ | | |
|---|---|---|
| **ກົດໝາຍນິຕິບັນຍັດ ແຫ່ງຊາດ** (ທົ່ວໄປ) | **ກົດໝາຍປະເພນີ** (ສະຖານທີ່ສະເພາະ) | **ລະບຽບການຂອງບ້ານ** (ເຂດອະນຸລັກທີ່ໄດ້ລະບຸ) |
| ບໍ່ມີມາດຕາກ່ຽວກັບການໃຊ້ເຮືອ. | ອະນຸຍາດ ໃຫ້ໃຊເຮືອ ຢູ່ເທິງໜອງ ແລະ ນໍ້າຫ້ວຍ ພາຍໃຕ້ການປົກປັກຮັກສາ ແບບປະເພນີ ຢູ່ບ້ານສ່ວນຫຼາຍ.<br>ຫ້າມ ການໃຊ້ເຮືອ ຢູ່ເທິງໜອງສັກສິດແຫ່ງໜຶ່ງ ຢູ່ໃນບ້ານໜຶ່ງ ແລະຢູ່ ໜອງສະຫງວນ ທີ່ຢູ່ອີກບ້ານໜຶ່ງ. | ບໍ່ມີມາດຕາ ກ່ຽວກັບການໃຊ້ເຮືອ |

### 4.1.7 ການໃຫ້ສັດລ້ຽງກິນຫຍ້າ

ບໍ່ມີກົດໝາຍ ນິຕິບັນຍັດແຫ່ງຊາດ ທີ່ຄຸ້ມຄອງຄຸ້ມຄອງ ການກິນຫຍ້າຢ່າງຊັດເຈນ ການໃຫ້ສັດລ້ຽງກິນຫຍ້າ, ແຕ່ວ່າການໃຫ້ສັດລ້ຽງກິນຫຍ້າ ອາດມີການຄວບຄຸມ ຢູ່ໃນເຂດ ທີ່ມີ ລະບຽບການ ສະເພາະເຂດ. ກົດໝາຍວ່າດ້ວຍ ການກະສິກຳ ເກືອດຫ້າມການເຮັດຄອກຂັງສັດ ຢູ່ໃກ້ຫ້ວຍນໍ້າ, ໜອງ, ຄອງນໍ້າ ຫຼື ໜອງບຶງ, ແຕ່ວ່າບໍ່ມີມາດຕາ ກ່ຽວກັບການໃຫ້ສັດລ້ຽງກິນຫຍ້າ. ກົດໝາຍທີ່ດິນ ຫ້າມທຸກການເຄື່ອນໄຫວ ຢູ່ທີ່ດິນບໍລິເວນນໍ້າ ທີ່ກໍ່ໃຫ້ເກີດການເຊາະເຈື່ອນ ເຊິ່ງອາດຈະເປັນ, ຫຼື ບໍ່ແມ່ນຍ້ອນ ການໃຫ້ສັດລ້ຽງກິນຫຍ້າ.



ຄວາຍ ຢູ່ເຂດຣຳຊາ ເຊຈຳພອນ

ການລ້ຽງສັດ ປະກອບສ່ວນເກືອບ 30% ຂອງ ລາຍຮັບ ຂອງບັນດາຄົວເຮືອນ ຢູ່ໃນບ້ານຕ່າງໆ ທີ່ໄດ້ລົງໄປສໍາຫຼວດ ( ເບິ່ງ ໃບຊ້ອນທ້າຍ 2, ຂໍ້ 3.7.4) ແລະ ກົດໝາຍປະເພນີ ຄວບຄຸມ ກິດຈະການ ຢູ່ໃນໝົດທຸກບ້ານ ຍົກເວັ້ນແຕ່ສອງບ້ານ ຄື: ບ້ານນານົກຂຽນ ແລະ ບ້ານດອນຕະແບ່ງ. ການໃຫ້ສັດລົງກິນຫຍ້າ ແມ່ນຖືກຫ້າມ ຢູ່ໃນປ່າສັກສິດ ທີ່ບ້ານຕາແຫຼວ ແລະ ນາກະທາງ ( ປ່າສັກສິດ ຢູ່ໃນບ້ານ) ແລະ ຢູ່ໃນປ່າວັດ ຢູ່ບ້ານຕາແຫຼວ. ສ່ວນຢູ່ໃນປ່າສັກສິດ ຂອງໝົດທຸກບ້ານອື່ນໆ ທີ່ໄດ້ລົງສໍາຫຼວດນັ້ນ ແມ່ນອະນຸຍາດ, ແລະ ຢູ່ໃນປ່າໄມ້ ແລະ ປ່າຊ້າ ຂອງໝົດທຸກບ້ານ ທີ່ຄວບຄຸມ ການໃຫ້ສັດລົງກິນຫຍ້າ.

ລະບຽບການ ຂອງບ້ານ ບໍ່ເວົ້າເຖິງ ການໃຫ້ສັດລົງກິນຫຍ້າ.

**ຕາຕະລາງ 10 ການໃຫ້ສັດກິນຫຍ້າ: ການອະນຸຍາດ, ການຫ້າມ ແລະ ການ ຈໍາກັດ**

<table>
<tr><th colspan="3">ການໃຫ້ສັດລົງກິນຫຍ້າ</th></tr>
<tr><th>ກົດໝາຍນິຕິບັນຍັດ ແຫ່ງຊາດ<br>(ທົ່ວໄປ)</th><th>ກົດໝາຍປະເພນີ<br>(ສະຖານທີ່ສະເພາະ)</th><th>ລະບຽບການຂອງບ້ານ<br>(ເຂດອະນຸລັກທີ່ໄດ້ລະບຸ)</th></tr>
<tr><td>ສັດຕ້ອງບໍ່ຖືກຂັງຄອກ ຢູ່ໃກ້ຫ້ວຍນໍ້າ, ຄອງນໍ້າ, ໜອງ, ຫຼື ບຶງ.</td><td>ການໃຫ້ສັດກິນຫຍ້າ ໃນປ່າສັກສິດ ຖືກຫ້າມຢູ່ 2 ບ້ານ.<br>ອະນຸຍາດ ໃຫ້ ສັດກິນຫຍ້າ ຢູ່ ປ່າສັກສິດ, ປ່າໄມ້ຂອງບ້ານ, ແລະ ປ່າຊ້າ ໃນບ້ານ ອື່ນໝົດທຸກບ້ານ.</td><td rowspan="2">ບໍ່ມີມາດຕາ ກ່ຽວກັບ ການໃຫ້ສັດລົງກະນຫຍ້າ.</td></tr>
<tr><td>ບັນດາກິດຈະການ ໃນເຂດທີ່ດິນບໍລິເວນນໍ້າ ຕ້ອງບໍ່ກໍ່ໃຫ້ເກີດດິນເຊາະເຈື່ອນ.</td><td></td></tr>
</table>

ຕາຕະລາງ 11 ການສົມທຽບ ກົດໝາຍປະເພນີ ກັບ ລະບຽບການຂອງບ້ານ ສໍາລັບບ້ານ ທີ່ໄດ້ລົງໄປສໍາຫຼວດຢູ່ໃນ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ

| ການຫ້າມ | ຕາແຫຼວ ແລະ ນາຕ່າຍ | | ຕານສູມ | | ທົ່ວເມືອງ | | ແກ້ງກອກ-ດົງ | | ດອນແດງ | | ນາກະທາງ | | ກະດັນ | |
|---|---|---|---|---|---|---|---|---|---|---|---|---|---|---|
| | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ[17] | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ[18] | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ[19] | ກົດໝາຍ ປະເພນີ[20] | ລະບຽບ ການຂອງ ບ້ານ |
| ການລ່າສັດ | 21 | | | | | | | | 22 | | 23 | | | |
| ການຫາປາ, ໂດຍໃຊ້ ອຸປະກອນທົ່ວ ໄປ ຫຼື ບໍ່ ຖືກຕ້ອງຕາມ ກົດໝາຍ | | | | | | | 24 | | 25 | | 26 | | | |
| ການຕັດໄມ້. ການສ້າງ ຄວາມເສຍ | 27 | | | | | | | | 28 | | 29 | | | |

[17] ຢູ່ໃນລະບຽບການຂອງໝົດທຸກບ້ານ ການເກືອດຫ້າມ ໃຊ້ສະເພາະແຕ່ ເຂດອະນຸລັກທີ່ລະບຸຊັດເຈນ ຢູ່ໃນລະບຽບການເທົ່ານັ້ນ.

[18] ບ້ານດອນແດງ ບໍ່ມີລະບຽບການຂອງບ້ານ.

[19] ນາກະທາງ ບໍ່ມີລະບຽບການຂອງບ້ານ.

[20] ບ້ານກະດັນ ບໍ່ຖືກລົງສໍາຫຼວດ ສໍາລັບໂຄງການນີ້.

[21] ຢູ່ບ້ານ ຕາແຫຼວ ແລະ ນາຕ່າຍ ການລ່າສັດແມ່ນຖືກຫ້າມທັງໝົດ ພາຍໃຕ້ກົດໝາຍປະເພນີ ຢູ່ໃນປ່າວັດ ແລະ ປ່າທໍາບ້ານ. ຢູ່ ປ່າ ເສືອໂຄກ ແລະ ປ່າບ້ານ ປ່າສອງ ປ່າແດງ ການລ່າສັດໃຫຍ່ ແມ່ນຖືກຫ້າມ, ແຕ່ວ່າອະນຸຍາດໃຫ້ລ່າສັດນ້ອຍ ເຊັ່ນ ກະຮອກ ແລະ ແລນ. ອະນຸຍາດ ໃຫ້ລ່າສັດໃນປ່າຊ້າໄດ້.

[22] ຢູ່ບ້ານດອນແດງ ການລ່າສັດ ແມ່ນຖືກຫ້າມ ຢູ່ໃນປ່າສັກສິດ, ການຈັບເອົາເຕົ່າ ແມ່ນຖືກຫ້າມ ຢູ່ໜອງເຕົ່າສັກສິດ , ແລະ ການລ່າສັດ ຢູ່ໃນປ່າຊ້າ ຕ້ອງໄດ້ຂໍອະນຸຍາດ ຈາກຜີເຈົ້າປ່າເສຍກ່ອນ..

[23] ຢູ່ບ້ານນາກະທາງ ການລ່າສັດແມ່ນຖືກຫ້າມ ຢູ່ປ່າສັກສິດໃນບ້ານ. ການລ່າສັດໃຫຍ່ ແມ່ນຖືກຫ້າມຢູ່ປ່າສັກສິດ ນອກບ້ານ ແລະ ອະນຸຍາດໃຫ້ ລ່າສັດນ້ອຍ. ການລ່າສັດ ຢູ່ໃນປ່າຊ້າ ຖືກຫຼີກເວັ້ນ ຍ້ອນຄວາມຢ້ານ ແລະເຄົາຣົບ..

[24] ຢູ່ບ້ານແກ້ງກອກ-ດົງ ການຫາປາ ແມ່ນຖືກຫ້າມ ຢູ່ ໜອງແມ່ຮ້າງ ແຕ່ວ່າ ອະນຸຍາດໃຫ້ຫາປາ ຢູ່ ໜອງກ່ານ.

[25] ຢູ່ບ້ານດອນແດງ ອະນຸຍາດ ໃຫ້ ຫາປາຮ່ວມໝູ່ ຢູ່ໜອງ ເຕົ່າ ແຕ່ວ່າມີແຕ່ ການອະນຸຍາດ ຂອງຜີເຈົ້າຖິ່ນເຈົ້າຖານ.

[26] ຢູ່ບ້ານ ນາກະທາງ ອະນຸຍາດໃຫ້ແຕ່ ການຫາປາຮ່ວມໝູ່ເທົ່ານັ້ນ ຢູ່ໜອງ ຝາງແດງ.

[27] ຢູ່ບ້ານ ຕາແຫຼວ ແລະ ນາຕ່າຍ ການຕັດຕົ້ນໄມ້ ແມ່ນຖືກຫ້າມທັງໝົດ ພາຍໃຕ້ກົດໝາຍປະເພນີ ຢູ່ໃນປ່າ ວັດ ແລະປ່າຜີ. ຢູ່ ປ່າເສືອໂຄກ ແລະ ຢູ່ ໃນປ່າ ຂອງ ບ້ານ ປ່າ ສ່ອງ ປ່າແດງ ຫ້າມຕັດໄມ້ໃຫຍ່ ພາຍໃຕ້ກົດໝາຍປະເພນີ, ແຕ່ວ່າ ອະນຸຍາດໃຫ້ຕັດໄມ້ນ້ອຍ ແລະ ເກັບໄມ້ນອນຂອນຕາຍໄດ້. ອະນຸຍາດໃຫ້ຕັດໄມ້ ຢູ່ໃນປ່າຊ້າ

[28] ຢູ່ດອນແດງ ການຕັດໄມ້ ແມ່ນຖືກຫ້າມ ຢູ່ໃນປ່າສັກສິດ ແລະ ອະນຸຍາດ ໃຫ້ຕັດ ໄມ້ໃຫຍ່ ໃນປ່າຊ້າ ໄດ້ແຕ່ເພື່ອຈຸດປະສົງ ການປົງສົບເທົ່ານັ້ນ.

[29] ຢູ່ບ້ານນາກະທາງ ການຕັດໄມ້ ແມ່ນຖືກຫ້າມ ຢູ່ທັງສອງ ປ່າສັກສິດ. ຢູ່ໃນປ່າຊ້າ ການຕັດໄມ້ ໃຫຍ່ ແມ່ນຖືກຫ້າມ; ການຕັດໄມ້ແບບອື່ນ ອາດຈະໄດ້ຮັບອະນຸຍາດໃຫ້ຕັດ ເພື່ອສ່ວນຮ່ວມເທົ່ານັ້ນ.;

| ການຫ້າມ | ຕາແຫຼວ ແລະ ນາຕ່າຍ | | ຕານສູມ | | ທົ່ວເມືອງ | | ແກ້ງກອກ-ດົງ | | ດອນແດງ | | ນາກະທາງ | | ກະດັນ | |
|---|---|---|---|---|---|---|---|---|---|---|---|---|---|---|
| | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ[17] | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ[18] | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ[19] | ກົດໝາຍ ປະເພນີ[20] | ລະບຽບ ການຂອງ ບ້ານ |
| ຫາຍ, ການທຳລາຍ ປ່າໄມ້ | | | | | | | | | | | | | | |
| ການເກັບ ເຄື່ອງປ່າ ຂອງດົງ | [30] | | | | | [31] | | | [32] | | [33] | | | |
| ການເອົານ້ຳ | | | | | | | | | [34] | | [35] | | | |
| ການໃຊ້ເຮືອ | | | | | | | | | [36] | | | | | |
| ການໃຫ້ສັດ ກິນຫຍ້າ | [37] | | | | | [38] | | | [39] | | [40] | | | |

30 ຢູ່ບ້ານຕາແຫຼວ ແລະ ນາຕ່າຍ ການເກັບເຄື່ອງປ່າຂອງດົງ ແມ່ນຖືກຫ້າມ ພາຍໃຕ້ກົດໝາຍ ປະເພນີ ຢູ່ປ່າເສືອໂຄກ, ປ່າຜີ ແລະ ປ່າ ບ້ານ ປ່າສ່ອງ ປ່າ ແດງ.

31 ຢູ່ ປ່າຊ້າ ບ້ານ ທົ່ວເມືອງ ນາຍບ້ານ ລາຍງານວ່າ ຊາວບ້ານ ໄດ້ຮັບອະນຸຍາດ ໃຫ້ຕັດໄມ້ໄຜ່ ແລະ ຫາໜໍ່ໄມ້ ສໍາລັບ ການໃຊ້ໃນ ຄົວເຮືອນ ຫຼັງຈາກ ໄດ້ຮັບການອະນຸຍາດ ຈາກ ອໍານາດການປົກຄອງບ້ານ, ທັງໆທີ່ ເລື້ອງນີ້ ບໍ່ໄດ້ລະບຸ ຢູ່ໃນ
ລະບຽບການຂອງບ້ານ. ຄົນນອກ ບໍ່ໄດ້ຮັບອະນຸຍາດ ໃຫ້ຕັດໄມ້ ຫຼື ເກັບໜໍ່ໄມ້ຢູ່ໃນປ່າຊ້າ.

32 ຢູ່ບ້ານ ດອນແດງ ການເກັບ ເຄື່ອງປ່າ ຂອງດົງ ແມ່ນຖືກຫ້າມ ຢູ່ໃນປ່າສັກສິດ, ແຕ່ວ່າ ອະນຸຍາດໃຫ້ເກັບຢູ່ໃນປ່າຊ້າ.

33 ຢູ່ ບ້ານ ນາກະທາງ ການເກັບ ເຄື່ອງປ່າ ຂອງດົງ ແມ່ນຖືກຫ້າມ ຢູ່ໃນປ່າສັກສິດ ຂ້າງໃນຂອງບ້ານ, ແຕ່ວ່າ ອະນຸຍາດ ຢູ່ໃນປ່າສັກສິດ ທີ່ຢູ່ນອກບ້ານ. ການເກັບເຄື່ອງປ່າຂອງດົງ ຢູ່ໃນປ່າຊ້າ ແມ່ນຖືກຫຼີກເວັ້ນ ຍ້ອນຄວາມຢ້ານ ແລະ ຄວາມເຄົາຣົບ.

34 ຢູ່ບ້ານ ດອນແດງ ການເອົານ້ຳ ຈາກ ໜອງເຕົ່າ ແມ່ນຖືກຫ້າມ.

35 ຢູ່ ບ້ານ ນາກະທາງ ອະນຸຍາດ ໃຫ້ເອົານ້ຳ ຈາກ ໜອງຝາງແດງ ໄດ້.

36 ຢູ່ບ້ານດອນແດງ , ການໃຊ້ເຮືອ ຢູ່ ໜອງເຕົ່າ ແມ່ນຖືກຫ້າມ.

37 ຢູ່ບ້ານ ຕາແຫຼວ ແລະ ນາຕ່າຍ ການໃຫ້ ງົວຄວາຍ ກິນຫຍ້າ ຢູ່ ປ່າ ວັດ ແລະ ປ່າ ຜີ ແມ່ນຖືກຫ້າມ.

38 ນາຍບ້ານ ບ້ານ ທົ່ວເມືອງ ລາຍງານວ່າ ບ້ານ ອະນຸຍາດ ໃຫ້ ສັດກິນຫຍ້າໄດ້ ຢູ່ໃນປ່າຊ້າ, ເຖິງແມ່ນວ່າ ເລື້ອງນີ້ ບໍໄດ້ລະບຸ ຢູ່ໃນ ລະບຽບການຂອງບ້ານ.

39 ຢູ່ ບ້ານ ດອນແດງ ການໃຫ້ສັດ ກິນຫຍ້າ ຢູ່ໃນປ່າ ສັກສິດ ແລະ ປ່າຊ້າ ແມ່ນໄດ້ຮັບ ອະນຸຍາດ.

40 ຢູ່ ບ້ານ ນາກະທາງ ຫ້າມ ການໃຫ້ສັດ ກິນຫຍ້າພູ່ ໃນປ່າສັກສິດ ທີ່ຢູ່ ຂ້າງໃນບ້ານ, ແຕ່ວ່າ ອະນຸຍາດໃຫ້ ສັດກິນຫຍ້າໄດ້ ຢູ່ໃນປ່າສັກສິດ ທີ່ຢູ່ ນອກບ້ານ. ການໃຫ້ສັດ ກິນຫຍ້າ ຢູ່ໃນປ່າຊ້າ ແມ່ນ ກ່ຽວກັບຄວາມຢ້ານ ແລະ ຄວາມເຄົາຣົບ.

| ການຫ້າມ | ຕາແຫຼວ ແລະ ນາຕ່າຍ | | ຕານສູມ | | ທົ່ວເມືອງ | | ແກ້ງກອກ-ດົງ | | ດອນແດງ | | ນາກະທາງ | | ກະດັນ | |
|---|---|---|---|---|---|---|---|---|---|---|---|---|---|---|
| | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ[17] | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ[18] | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ[19] | ກົດໝາຍ ປະເພນີ[20] | ລະບຽບ ການຂອງ ບ້ານ |
| ການເຮັດໃຫ້ແຂ້ບາດເຈັບ/ ການຈັບເອົາ/ ການເຮັດໃຫ້ແຂ້ຕາຍ | | | | | | | | | | | | | | |
| ການສ້າງຄວາມເສຍຫາຍແກ່ບ່ອນຢູ່ອາໄສ ຂອງແຂ້ | | | | | | | | | | | | | | |
| ການຕັນທາງທ່ຽວ ຂອງແຂ້ | | | | | | | | | | | | | | |
| ການຂະຫຍາຍການກະສິກໍາ | | | | | | | | | | | | | | |
| ການໃຊ້ສານເຄມີ | | | | | | | | | | | | | | |
| ການຕົນຄອງນໍ້າໃນລະດູປະສົມພັນ ຂອງ ປາ | | | | | | | | | | | | | | |
| ການອະນຸມັດທີ່ສໍາປະທານທີ່ດິນ | | | | | | | | | | | | | | |
| ການສ້າງຄວາມເສຍຫາຍໃຫ້ແກ່ເປົ້າຍຄື່ອງ | | | | | | | | | | | | | | |

| ການຫ້າມ | ຕາແຫຼວ ແລະ ນາຕ່າຍ | | ຕານສູມ | | ຫົວເມືອງ | | ແກ້ງກອກ-ດົງ | | ດອນແດງ | | ນາກະທາງ | | ກະດັນ | |
|---|---|---|---|---|---|---|---|---|---|---|---|---|---|---|
| | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ[17] | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ[18] | ກົດໝາຍ ປະເພນີ | ລະບຽບ ການຂອງ ບ້ານ[19] | ກົດໝາຍ ປະເພນີ[20] | ລະບຽບ ການຂອງ ບ້ານ |
| ໝາຍ ຕ່າງໆ | | | | | | | | | | | | | | |

## 4.2 ການລົງໂທດ

ກົດໝາຍປະເພນີ ແລະ ກົດໝາຍ ນິຕິບັນຍັດ ທັງສອງແມ່ນມີ 'ການລົງໂທດດ້ານບໍລິຫານ' ຫຼື ຄ່າປັບໃໝ. ພາຍໃຕ້ ກົດໝາຍ ປະເພນີ ຢູ່ບ້ານຕ່າງໆ ທີ່ໄດ້ລົງສຳຫຼວດ, ຄ່າປັບໃໝ ຕາມປົກກະຕິ ແມ່ນຖືກຊຳລະ ໂດຍ ການຂ້າສັດບູຊາ ເຊິ່ງວ່າຊີ້ນສັດນັ້ນ ໄດ້ຖືກແບ່ງປັນກັນ ໂດຍ ກວານຈຳບ້ານ. ບ້ານຕາແຫຼວ ວາງຄ່າປັບໃໝ ແບບປະເພນີ ສຳລັບການ ລ່າສັດ ໃນປ່າສັກສິດ , ແຕ່ວ່າໃຊ້ ຄ່າປັບໃໝແບບປະສົມ ລະຫວ່າງ ຄ່າປັບໃໝແບບປະເພນີ ແລະ ນິຕິບັນຍັດ ສຳລັບການລ່າສັດໃຫຍ່ ຢູ່ ປ່າ ເສືອໂຄກ ທີ່ຢູ່ອ້ອມ ໜອງສັກສິດ, ເຊິ່ງຄ່າປັບໃໝ ສຳລັບ ການລ່ວງລະເມີດ ເປັນເງິນ ພ້ອມດ້ວຍ ເຫຼົ້າຂາວໜຶ່ງກວດ. ບ້ານນານົກຂອຽນ ວາງຄ່າປັບໃໝ ແບບປະເພນີ ສຳລັບການລ່າສັດ ໃນປ່າສັກສິດ, ແຕ່ວ່າ ວາງຄ່າປັບໃໝເປັນເງິນ ສຳລັບ ການລ່າສັດໃນປ່າຂອງບ້ານ ທີ່ຖືກຈັດສັນໂດຍ ອຳນາດການປົກຄອງເມືອງ.

ກົດໝາຍ ນິຕິບັນຍັດ ແຫ່ງຊາດ ແລະ ລະບຽບການຂອງບ້ານ ສ້າງກົນໄກຂຶ້ນມາ ທີ່ເຮັດໃຫ້ ອົງກອນປົກຄອງ ຂອງບ້ານ ສາມາດ ຕິດຕາມກວດກາ ການປະຕິບັດຕາມ ແລະ ບັງຄັບໃຊ້ກົດໝາຍ, ແລະ ອາໄສ ສານ ເພື່ອແກ້ໄຂຄວາມຂັດແຍ້ງ. ໃນກໍລະນີ ຂອງ ກົດໝາຍ ນິຕິບັນຍັດ ເຈົ້າໜ້າທີ່ຂອງລັດ ກຳນົດ ທັງການຮຽກເກັບຄ່າປັບໃໝ ແລະ ກຳນົດ ການລົງໂທດ ທາງອາຍາ.

ພາຍໃຕ້ກົດໝາຍປະເພນີ, ຊຸມຊົນເປັນຜູ້ຮຽກເກັບຄ່າປັບໃໝ, ແຕ່ວ່າແມ່ນວິນຍານ ທີ່ເປັນຜູ້ ຕັດສິນໂທດທີ່ໜັກກວ່າ. ນີ້ແມ່ນກໍລະນີ ເໝືອນກັນ ສຳລັບ ແຕ່ເຂດດຽວທີ່ ຢູ່ໃຕ້ການປົກປັກຮັກສາ ແບບປະເພນີ ທີ່ຖືກກຳນົດ ເປັນເຂດອະນຸລັກພາຍໃຕ້ ລະບຽບການຂອງບ້ານ - ເຊັ່ນ ໜອງ ແມ່ ຮ້າງ ຢູ່ ບ້ານແກ້ງກອກ-ດົງ. ກົດໝາຍ ນິຕິບັນຍັດ ລະບຸ ການຕັດອິດສະລະພາບ (ການຂັງຄຸກ) ເປັນການລົງໂທດ ສຳລັບ ການກະທຳຜິດທາງອາຍາ. ພາຍໃຕ້ກົດໝາຍ ປະເພນີ ຢູ່ໃນບ້ານທີ່ໄດ້ລົງໄປສຳຫຼວດນັ້ນ ມັນແມ່ນວິນຍານ-ແທນທີ່ ຈະແມ່ນລັດ ຫຼື ຊຸມຊົນ - ທີ່ເປັນຜູ້ວາງໂທດໜັກທີ່ສຸດ, ທີ່ເລີ້ມແຕ່ ເຄາະເວນເຂັນຮ້າຍ ໄປຫາ ການເຈັບປ່ວຍ ເຖິງຄວາມຕາຍ. ສະນັ້ນ ວິນຍານຈຶ່ງເປັນຜູ້ພິພາກສາ ພາຍໃຕ້ກົດໝາຍ ປະເພນີ; ສ່ວນກວານຈຳບ້ານ ເຮັດບົດບາດ ໃນນາມວິນຍານທີ່ເປັນຜູ້ພິພາກສາ. ຜູ້ກະທຳຜິດ ບໍ່ໄດ້ຖືກກັກຂັງໄວ້, ແຕ່ຈະປະສົບ ກັບການລົງໂທດ ຂອງວິນຍານ ຢູ່ພາຍໃນຊຸມຊົນ ບ່ອນທີ່ໝົດທຸກຄົນສາມາດເປັນສັກຂີ ພະຍານໄດ້. ຄວາມເຊື່ອ ຂອງ ພວກຊາວບ້ານ ຕໍ່ອຳນາດລິດເດດ ຂອງວິນຍານ ທີ່ພາໃຫ້ເກີດເຄາະຮ້າຍ ຫຼື ເຄາະຮ້າຍ ຈົນເຖິງ ການຕາຍ ນັ້ນ ໝາຍຄວາມວ່າ ກົດໝາຍ 'ອາຍາ' ປະເພນີ ໃຊ້ການ ເປັນຕຳຫຼວດເອງ ແລະ ບັງຄັບໃຊ້ເອງ ເປັນຕົ້ນຕໍ.

ຖ້າຜູ້ໃດຜູ້ໜຶ່ງ ທີ່ລ່ວງລະເມີດກົດໝາຍປະເພນີ ບໍ່ຖືກຈັບໄດ້ຄາໜັງຄາເຂົາ, ກໍອາດເປັນໄປໄດ້ ທີ່ວ່າ ບໍ່ມີຜູ້ໃດ, ນອກຈາກຜູ້ກະທຳຜິດເອງນັ້ນ, ຈະຮູ້ສຳນຶກການກະທຳຜິດ ຈົນກວ່າ ເຫດຮ້າຍຈະເກີດຂຶ້ນ. ໃນຈຸດນີ້, ຜູ້ທີ່ພວມປະສົບເຄາະຮ້າຍນັ້ນ ຈະເຮັດຕາມຄຳແນະນຳ ຂອງໝໍຜີ ແລະ ກວານຈຳບ້ານ, ທີ່ຈະອະທິບາຍ ວ່າການບູຊານັ້ນຈະຕ້ອງເຮັດຫຍັງແດ່ ເພື່ອ ປອບໃຈວິນຍານ ແລະ ຫຼີກລຽງການລົງໂທດໃດໆອີກຕໍ່ໄປ. ເພາະສະນັ້ນ, ກົດໝາຍ 'ອາຍາ' ປະເພນີ ບໍ່ຈຳເປັນຕ້ອງມີ ຫຼັກນິຕິທຳ ທີ່ເອົາຫຼັກຖານເປັນສິ່ງຢັ້ງຢືນ. ຂໍ້ເທັດຈິງທີ່ເຄາະຮ້າຍເກີດຂຶ້ນ ນັ້ນເອງ ເປັນຫຼັກຖານ ຂອງການລະເມີດ. ກົດໝາຍປະເພນີ ກໍມີ 'ວິທີພິຈາລະນາຄະດີອາຍາ' ເໝືອນກັນ. ກວານຈຳບ້ານ ສື່ສານກັບວິນຍານ ເພື່ອໃຫ້ເຂົ້າໃຈ ວ່າຈະຕ້ອງເຮັດຫຍັງແດ່ ເພື່ອປົວແປງ ການກະທຳຜິດ ນັ້ນ ແລະ ການດຳເນີນພິທີກຳ ທີ່ຈຳເປັນ.

ກໍຄືກັບ ກົດໝາຍ ນິຕິບັນຍັດ, ຄວາມເຂັ້ມງວດ ຂອງຄ່າປັບໃໝ ແບບປະເພນີ ແລະການລົງໂທດຂອງວິນຍານ ນັ້ນຂຶ້ນກັບຄວາມຮ້າຍແຮງຂອງ ການກະທຳຜິດ. ຄ່າປັບໃໝ ແລະ ການລົງໂທດຂອງວິນຍານ ພາຍໃຕ້ກົດໝາຍປະເພນີ ແຕກຕ່າງກັນໄປຈາກບ້ານສູ່ບ້ານ. ຄ່າປັບໃໝແບບປະເພນີ ແລະ ການລົງໂທດ ຂອງວິນຍານ ແມ່ນຄ້າຍຄືກັນກັບຢູ່ໃນບ້ານທີ່ໄດ້ລົງສຳຫຼວດ ແລະ ບໍ່ປະກົດວ່າ ກ່ຽວຂ້ອງກັບຊົນເຜົ່າໃດໜຶ່ງສະເພາະ. ບ້ານ ນາກະທາງ ແລະ

ບ້ານ ດົງຕະແບ່ງ, ເຊິ່ງປະຊາຊົນ ໃນບ້ານເປັນເຜົ່າ ກະຕາງ 100% ແລະ ບ້ານ ນານົກຂຽນ ທີ່ມີປະຊາຊົນ ເຜົ່າ ມະກອງ 100%, ກໍລາຍງານວ່າມີ ຄ່າປັບໃໝ ແລະ ການລົງໂທດຂອງວິນຍານ ແບບດຽວກັນ ກັບບ້ານ ທີ່ມີປະຊາຊົນເປັນເຜົ່າ ໄທ ກະໄດ 100% ແລະ ບ້ານທີ່ ປະຊາຊົນ ຈາກສອງເຜົ່າ ຫຼື ຫຼາຍເຜົ່າກວ່າ

ກົດໝາຍປະເພນີ ຢູ່ໃນບ້ານ ທີ່ໄດ້ລົງສຳຫຼວດ ນັ້ນ ໃນກໍລະນີສ່ວນຫຼາຍ ແມ່ນໃຊ້ ກັບຊາວບ້ານ ແລະ ກັບຄົນພາຍນອກ ແບບສະເໝີພາບກັນ. ມີການຍົກເວັ້ນ ສຳລັບ ແຕ່ ບ້ານດອນແດງ ແລະ ບ້ານ ດົງຕະແບ່ງ. ຢູ່ບ້ານ ດອນແດງ , ການລົງໂທດ ແບບປະເພນີ ຂອງວິນຍານ ຕໍ່ກັບຊາວບ້ານ ແມ່ນຮ້າຍແຮງກວ່າ ຕໍ່ກັບຄົນພາຍນອກ. ຖ້າວ່າຊາວບ້ານຈັບເອົາເຕົ່າ, ເອົານ້ຳ, ປາ ຫຼື ໃຊ້ເຮືອ ຢູ່ ໜອງເຕົ່າ / ໜອງປາຝາ ການລົງໂທດຂອງວິນຍານ ແມ່ນ ຄວາມເຈັບປ່ວຍ ຫຼື ຄວາມຕາຍ. ຖ້າວ່າຄົນພາຍນອກ ເຮັດຜິດແບບດຽວກັນ ການລົງໂທດຂອງວິນຍານ ແມ່ນ ຄວາມເຈັບປ່ວຍ ຫຼື ເຄາະຮ້າຍ. ກົງກັນຂ້າມ, ຢູ່ ບ້ານ ດົງຕະແບ່ງ ການລົງໂທດ ຂອງວິນຍານ ຕໍ່ກັບຄົນພາຍນອກ ແມ່ນ ໜັກກວ່າ ຕໍ່ຊາວບ້ານ. ຢູ່ ບ້ານ ດົງ ຕະແບ່ງ, ຖ້າວ່າ ຊາວບ້ານຕັດຕົ້ນໄມ້ ຫຼື ເກັບ ເຄື່ອງປ່າຂອງດົງ ໃນປ່າສັກສິດ ດອນ ແຮ້ວ, ການລົງໂທດຂອງວິນຍານ ແມ່ນ ຄວາມໂຊກຮ້າຍ ຫຼື ເຈັບປ່ວຍ; ຖ້າຄົນພາຍນອກ ເຮັດຜິດແບບດຽວກັນ ການລົງໂທດຂອງວິນຍານ ອາດແມ່ນຄວາມຕາຍ.

ກົດໝາຍປະເພນີ ອະນຸຍາດ ໃຫ້ຜູ້ກະທຳຜິດ ບັນເທົາການລົງໂທດ ຕໍ່ຕົນ ໂດຍການຖາມ ໝໍຜີ/ໝໍດູ ວ່າຈະຕ້ອງໄດ້ເຮັດຫຍັງແດ່ ເພື່ອປອບໃຈ ວິນຍານ ແລະ ຂໍໃຫ້ ກວານຈ້ຳບ້ານ ສື່ສານກັບວິນຍານ ແລະຈັດພິທີກຳ ໃຫ້ເໝາະສົມ.

ຂໍ້ຍ່ອຍ 4.2.1-4.2.6 ສະແດງໃຫ້ ເຫັນ ການປຽບທຽບ ການລົງໂທດ ພາຍໃຕ້ ກົດໝາຍ ປະເພນີ; ກົດໝາຍນິຕິບັນຍັດ ແຫ່ງຊາດ; ແລະ ລະບຽບການຂອງບ້ານ. 7 ໃນ 13 ບ້ານ ທີ່ ໂຄງການນີ້ ໄດ້ຮັບໂຮມ ແລະ ວິໄຈ ຂໍ້ມູນ ກ່ຽວກັບ ກົດໝາຍປະເພນີ, ລະບຽບການຂອງບ້ານ ຫຼື ທັງສອງຢ່າງ ນັ້ນ ແມ່ນຕັ້ງຢູ່ ໃນ ສະຖານທີ່ຕັ້ງ ຣຳຊາເຊຈຳພອນ. ໃນນັ້ນ 3 ບ້ານ ເຊິ່ງຖືກລວມເຂົ້າ ໃນການສຳລວດ ກົດໝາຍປະເພນີ ສຳລັບໂຄງການນີ້ ມີຄື: ບ້ານຕານສູມ, ບ້ານ ຫົວເມືອງ, ແລະ ບ້ານ ຊະຄູນ-ເໜືອ ບໍ່ໄດ້ລາຍງານ ການປັບໃໝ ຫຼື ການລົງໂທດແບບປະເພນີ. ບ້ານຊະຄູນ-ເໜືອ ມີປ່າສັກສິດ ຮ່ວມກັນກັບ ບ້ານ ດົງມ່ວງ. ປ່າສັກສິດຢູ່ ບ້ານ ຫົວເມືອງ ມີເນື້ອທີ່ນ້ອຍໆ ເຊິ່ງມີຕົ້ນໄມ້ໃຫຍ່ ແຕ່ຕົ້ນດຽວເທົ່ານັ້ນ, ສະນັ້ນ ຈຶ່ງບໍ່ເຄີຍມີຄວາມຈຳເປັນ ສຳລັບ ກົດໝາຍປະເພນີ ເພື່ອຄຸ້ມຄອງ ການລ່າສັດ ຫຼື ການຕັດໄມ້. ບ້ານຕານສູມ ບໍ່ມີປ່າສັກສິດ ເປັນຂອງຕົນເອງຊ້ຳ ແຕ່ວ່າຮ່ວມປ່າສັກສິດ ຂອງບ້ານອື່ນ ແລະ ປະຕິບັດຕາມ ລະບຽບການ ຂອງ ບ້ານນັ້ນ. ບ້ານກະດັນ ບໍ່ໄດ້ຖືກລວມເຂົ້າໃນ ການສຳຫຼວດ ກົດໝາຍປະເພນີ.

ໃນຊ້ອນທ້າຍ 5 ມີ ຂໍ້ມູນພາບລວມ ຂອງ ການລົງໂທດ ນິຕິບັນຍັດ ລະດັບຊາດ ແລະ ຂັ້ນບ້ານ ທັງໝົດ ແລະ ການລົງໂທດ ແບບປະເພນີ ທັງໝົດ.

### 4.2.1 ການລ່າສັດ

ຄ່າປັບໃໝ ດ້ານບໍລິຫານ ແລະ ໂທດ ອາຍາ ພາຍໃຕ້ກົດໝາຍ ວ່າດ້ວຍ ສັດນຳ ແລະ ສັດປ່າ ແມ່ນໃຊ້ໃນທົ່ວປະເທດ. ບໍ່ມີການລົງໂທດ ດ້ານບໍລິຫານ ຖ້າວ່າ ມູນຄ່າຂອງ ຄວາມເສຍຫາຍ ໜ້ອຍກວ່າ 200,000 ກີບ. ເມື່ອໃດທີ່ເກີນກາຍ ຂີດນີ້ແລ້ວ, ຄ່າປັບໃໝແມ່ນເຈາະຈົງໃສ່ມູນຄ່າ ຄວາມເສຍຫາຍ ແລະ ປະເພດສັດປ່າ ທີ່ກ່ຽວຂ້ອງນັ້ນໂລດ. ຖ້າວ່າ ມູນຄ່າຄວາມເສຍຫາຍ ຫຼາຍກວ່າ 200,000 ກີບ, ສຳລັບການກະທຳຜິດ ເທື່ອທຳອິດ ແມ່ນສອງເທົ່າຂອງມູນຄ່າຄວາມເສຍຫາຍ, ບໍ່ສຳຄັນວ່າສັດປ່າ ທີ່ກ່ຽວຂ້ອງນັ້ນຢູ່ໝວດໃດ.

ມີແຕ່ກໍລະນີ ການລະເມີດອີກເທື່ອໃໝ່ ເທົ່ານັ້ນ ທີ່ຄ່າປັບໃໝ ຈຶ່ງຖືກເກາະຕິດ ກັບໝວດ ຂອງ ສັດປ່າ ທີ່ໄດ້ຮັບຜົນກະທົບ, ເຊັ່ນ: ສາມເທົ່າ ຂອງມູນຄ່າຄວາມເສຍຫາຍ ສຳລັບ ສັດປ່າ ໃນໝວດ I; ສອງເທົ່າ ຂອງ ມູນຄ່າຄວາມ

ເສຍຫາຍ ສໍາລັບສັດປ່າ ໃນໝວດ II ( ເຊິ່ງຄືກັບຄ່າປັບໃໝສໍາລັບການກະທໍາຜິດເທື່ອທໍາອິດ); ແລະ ເທົ່າກັບມູນຄ່າ ຄວາມເສຍຫາຍ ຂອງສັດປ່າ ໃນໝວດ III, ເຊິ່ງໝາຍຄວາມວ່າ ຄ່າປັບໃໝ ສໍາລັບ ການກະທໍາຜິດອີກເທື່ອໃໝ່ ທີ່ກ່ຽວຂ້ອງກັບ ສັດປ່າໃນ ໝວດ III ໜ້ອຍກວ່າ ຄ່າປັບໃໝ ສໍາລັບ ການເຮັດຄວາມຜິດເທື່ອທໍາອິດ. ການລົງໂທດ ດ້ານບໍລິຫານ ລວມມີ ການຍຶດ ຊັບສິນ. ການລົງໂທດ ອາຍາ ສໍາລັບ ທຸກໆການລ່າສັດ ທີ່ສອດຄ່ອງ ກັບ ລະບຽບການ ແມ່ນການຕັດອິດສະລະພາບ ແຕ່ສາມເດືອນ ຫາ ສອງປີ. ການລົງໂທດ ທາງອາຍາ ບໍ່ພົວພັນ ກັບຄ່າປັບໃໝ ດ້ານບໍລິຫານ ແລະ ສາມາດ ຖືກວາງໃສ່ສໍາລັບ ການກະທໍຜິດ ເທື່ອທໍາອິດ.

ຄ່າປັບໃໝ ສໍາລັບການ ລ່າສັດ ທີ່ເປັນການລະເມີດ ກົດໝາຍ ປະເພນີ ແມ່ນເຈາະຈົງໃສ່ ການລະເມີດ ແລະ ໃນບາງກໍລະນີ ແມ່ນເຈາະຈົງ ໃສ່ສະຖານທີ່ ບ່ອນທີ່ໄດ້ກະທໍາຄວາມຜິດນັ້ນ. ກົດໝາຍ ປະເພນີ ຄຸ້ມຄອງ ການລ່າສັດໂດຍທົ່ວໄປ, ແລະໂດຍສະເພາະ ການເອົາແຂ້, ຢູ່ໃນ 9 ບ້ານ. ສອງ ໃນ ເກົ້າບ້ານເຫຼົ່ານັ້ນ ຄືບ້ານ ແກ້ງກອກ-ດົງ ແລະ ບ້ານ ດອນແດງ ແມ່ນ ຢູ່ໃນ ເຂດ ຣໍາຊາ ເຊຈໍາພອນ. ຄ່າປັບໃໝ ແບບປະເພນີ ແມ່ນແຕກຕາງກັນໄປ ຈາກບ້ານສູ່ບ້ານ, ຂຶ້ນກັບສະຖານະພາບ ຂອງແຕ່ ລະເຂດສະຫງວນ ທີ່ຢູ່ໃນບ້ານ.

ບໍ່ເໝືອນກັບ ກົດໝາຍນິຕິບັນຍັດ ແຫ່ງຊາດ, ເຊິ່ງບໍ່ຕິດພັນ ກັບຄ່າປັບໃໝ ດ້ານບໍລິຫານ ແລະ ການລົງໂທດທາງອາຍາ, ບ້ານສ່ວນຫຼາຍ ວາງຄ່າປັບໃໝ ແບບປະເພນີ ເປັນການຂ້າສັດລ້ຽງວິນຍານ ໃນຂະນະ ທີ່ ວິນຍານອາດຈະວາງ ໂທດ ທີ່ເລີ່ມແຕ່ ການມີເຄາະ ຈົນຮອດຄວາມຕາຍ.

ການຍົກເວັ້ນ ກໍມີ ຢູ່ ບ້ານ ແກ້ງກອກ-ດົງ ແລະ ບ້ານ ຕາແຫຼວ. ຢູ່ ແກ້ງກອກ-ດົງ ແມ່ນບໍ່ມີ ການປັບໃໝ ສໍາລັບການຈັບເອົາເຕົ່າ ຢູ່ ໜອງສັກສິດ / ໜອງ ປູ່ຕາ ຫຼື ສໍາລັບ ການລ່າສັດໃຫຍ່ ຢູ່ໃນປ່າຊ້າ: ມີແຕ່ ການລົງໂທດຂອງວິນຍານ ທີ່ເລີ່ມແຕ່ ການມີເຄາະຮ້າຍ, ການເຈັບປ່ວຍ ຈົນຮອດ ຄວາມຕາຍ ສໍາລັບ ການລະເມີດ ຢູ່ ໜອງ ປູ່ ຕາ ແລະ ຄວາມເຈັບປ່ວຍ ຫຼື ເຄາະຮ້າຍ ສໍາລັບ ການລ່ວງລະເມີດ ໃນປ່າຊ້າ. ບ້ານ ຕາແຫຼວ ມີການປັບໃໝ ແບບປະເພນີ ແລະ ການລົງໂທດ ສໍາລັບ ການລ່າສັດ ຢູ່ປ່າ ສັກສິດ ; ບໍ່ມີການປັບໃໝ ຫຼື ການລົງໂທດ ສໍາລັບ ການລ່າສັດໃຫຍ່ ຢູ່ໃນ ປ່າຂອງບ້ານ ຄື ປ່າ ສ່ອງ ປາ ແດງ, ເຖິງແມ່ນວ່າ ການລ່າສັດ ແບບນັ້ນ ແມ່ນຖືກຫ້າມ; ແລະ ການລົງໂທດ ປະສົມ ແບບປະເພນີ/ນິຕິບັນຍັດ ທີ່ໄດ້ ອະທິບາຍ ມາຂ້າງເທິງນີ້ ສໍາລັບ ການລ່າ ສັດໃຫຍ່ ຢູ່ ປ່າ ເສືອ ໂຄກຊຶ່ງຢູ່ອ້ອມ ໜອງສັກສິດ.

ຄ່າປັບໃໝ ທີ່ຕັ້ງໄວ້ ໂດຍ ລະບຽບການ ຂອງບ້ານ ແມ່ນ ເຈາະຈົງໃສ່ ແຕ່ການລະເມີດ ແລະ ບໍ່ພົວພັນ ກັບມູນຄ່າຄວາມເສຍຫາຍ, ຄືກັບ ຄ່າປັບໃໝ ທີ່ຕັ້ງໂດຍ ກົດໝາຍ ວ່າດ້ວຍສັດນໍ້າ ແລະ ສັດປ່າ. ຄ່າປັບໃໝ ພາຍໃຕ້ລະບຽບການຂອງບ້ານ ແມ່ນເກາະຕິດ ໃສ່ໝວດ ຂອງສັດປ່າ ທີ່ກ່ຽວຂ້ອງ ສະເພາະ ແຕ່ ການລ່ວງລະເມີດ ທີ່ກ່ຽວຂ້ອງ ກັບ ແຂ້ ສະຍາມ ຢູ່ ບ້ານ ຕານສູມ, ບ້ານແກ້ງກອກ-ດົງ ແລະ ບ້ານ ຕາແຫຼວ. ຄ່າປັບໃໝ ໃນທຸກໆບ້ານອື່ນໆ ແມ່ນ 5,000,000 ກີບ ສໍາລັບ ການລະເມີດເທື່ອທໍາອິດ, 10,000,000 ກີບ ສໍາລັບເທື່ອທີສອງ ແລະ 30,000,000 ກີບ ສໍາລັບ ການລະເມີດເທື່ອທີສາມ. ລະບຽບການ ອື່ນໆ ຂອງບ້ານ ທີ່ຄຸ້ມຄອງ ການລ່າສັດ ພຽງແຕ່ຫ້າມ ທຸກການລ່າສັດໃນເຂດ ອະນຸລັກ ທີ່ ລະບຽບການ ໄດ້ອອກແບບມາ.

ຄ່າປັບໃໝ ພາຍໃຕ້ ລະບຽບການຂອງບ້ານ ແຕກຕ່າງກັນຫຼາຍ ໄປຕາມແຕ່ລະບ້ານ. ຜູ້ລະເມີດ ຄັ້ງທໍາອິດ ຢູ່ ບ້ານຫົວເມືອງ ແມ່ນຈະຖືກປັບໃໝ 300,000 ກີບ, ໃນຂະນະທີ່ ຄ່າປັບໃໝ ສໍາລັບການ ເຮັດຜິດ ເທື່ອທໍາອິດ ຢູ່ບ້ານຕານສູມ ແມ່ນ 500,000 ກີບ ແລະ ຢູ່ບ້ານ ຕາແຫຼວ ແມ່ນ 1,500,000 ກີບ. ລະບຽບການຢູ່ໃນ ສາມບ້ານນີ້ໄດ້ສ້າງເຂດອະນຸລັກ ສອງເຂດ ຢູ່ໃນແຕ່ລະບ້ານ. ມີແຕ່ ຢູ່ ແກ້ງກອກ-ດົງ ທີ່ມີ ລະບຽບການ ໃຫ້ຕັ້ງ ຄ່າປັບໃໝຕ່າງໆ ສໍາລັບ ແຕ່ລະເຂດ ອະນຸລັກ ຟູ່ໃນບ້ານ, ເຊິ່ງວ່າ ການລະເມີດ ຢູ່ ໜອງ ແມ່ ຮ້າງ ແມ່ນສູງກວ່າ ການລະເມີດ ຢູ່ ໜອງ ກ່ານ.

ນອກນັ້ນ, ບ້ານແກ້ງກອກ-ດົງ ເປັນພຽງບ້ານດຽວ ທີ່ລະບຽບການຂອງ ບ້ານ ວາງຄ່າປັບໃໝແບບປະເພນີ ຄື: ຄ່າປັບ ໃໝ ສໍາລັບ ການລະເມີດເທື່ອທີ່ສາມ ແມ່ນ ຄວາຍ ໜຶ່ງຕົວ, ແທນການປັບໃໝດ້ວຍເງິນ. ຢູ່ບ້ານ ຕານສຸມ ແລະ ບ້ານ ຫົວເມືອງ ແລະ ສໍາລັບ ການລະເມີດ ຢູ່ໜອງ ກ່ານ, ບ້ານ ແກ້ງກອກ-ດົງ, ແມ່ນບໍ່ມີຄ່າປັບໃໝ ສໍາລັບ ການລະເມີດເທື່ອທີສາມ ໃນການລ່າສັດ: ຜູ້ລ່ວງລະເມີດ ຈະຖືກກັກຂັງ ແລະ ຄະດີ ຈະຖືກລາຍງານ ຕໍ່ອໍານາດການປົກຄອງເມືອງ. ບ້ານຕາແຫຼວ ເປັນພຽງບ້ານດຽວ ທີ່ມີລະບຽບການຂອງບ້ານ ໄດ້ວາງຄ່າປັບໃໝ ສໍາລັບ ການລະເມີດ ການເກືອດຫ້າມ ການລ່າສັດທົ່ວໄປ.

ພາຍໃຕ້ ລະບຽບການຂອງບ້ານ ໝົດທຸກບ້ານ, ສໍາລັບທຸກໆ ການລະເມີດ ໃນການລ່າສັດ ຈະມີການຍຶດ ໄວ້ເປັນຫຼັກຖານແລະຈະອອກໜັງສືເຕືອນ ຢ່າງເປັນທາງການ ສໍາລັບການລະເມີດ ເທື່ອທໍາອິດ ແລະ ເທື່ອທີສອງ. ຜູ້ລະເມີດເທື່ອທໍາອິດ ຈະຖືກສຶກສາອົບຮົມ ຢູ່ທຸກໆບ້ານ, ຍົກເວັ້ນ ສໍາລັບການລະເມີດ ການຫ້າມລ່າສັດ ຢູ່ບ້ານ ຕາແຫຼວ, ເຊິ່ງບໍ່ໄດ້ລະບຸໄວ້. ລະບຽບການຂອງບ້ານ ບໍ່ໄດ້ລວມເອົາ ການລົງໂທດ ອາຍາ ແລະບໍ່ເວົ້າເຖິງ ການລົງໂທດຂອງວິນຍານ.

ສັງລວມ ຄວາມກ່ຽວພັນກັນ ແລະ ຄວາມແຕກຕ່າງກັນ ລະຫວ່າງ ຄ່າປັບໃໝ ທີ່ວາງໄວ້ ໃນລະດັບຊາດ, ແບບປະເພນີ ແລະ ໂດຍລະບຽບການ ຂອງ ບ້ານ ສໍາລັບການລ່າສັດ:

- ຄ່າປັບໃໝ ຕາມກົດໝາຍແຫ່ງຊາດ ແມ່ນອີງຕາມ ມູນຄ່າ ຂອງຄວາມເສຍຫາຍ ແລະ ຕາມໝວດ ຂອງສັດປ່າ ທີ່ກ່ຽວຂ້ອງ;
- ຄ່າປັບໃໝ ແບບປະເພນີ ແມ່ນເຈາະຈົງ ໃສ່ແຕ່ ການລະເມີດ ແລະ ໃນບາງກໍລະນີ ເຈາະຈົງໃສ່ສະຖານທີ່ຂອງການ ກະທໍາຜິດ. ຄືກັບ ຄ່າປັບໃໝຕາມກົດໝາຍ ແຫ່ງຊາດ, ຄ່າປັບໃໝ ແບບປະເພນີ ແມ່ນອີງຕາມຄວາມຮ້າຍແຮງ ຂອງການລະເມີດ ແລະ ໃນບາງກໍລະນີ ແມ່ນຂຶ້ນກັບ ຊະນິດພັນ (ແຕ່ບໍ່ແມ່ນຕາມໝວດຂອງສັດ ທີ່ລະບຸໃນກົດໝາຍ) ຂອງສັດປ່າ ທີ່ກ່ຽວຂ້ອງ;
- ຄ່າປັບໃໝ ພາຍໃຕ້ ລະບຽບການ ຂອງບ້ານ ແມ່ນເຈາະຈົງ ໃສ່ແຕ່ການລະເມີດ, ບໍ່ພົວພັນ ກັບ ມູນຄ່າຄວາມເສຍຫາຍ ແລະ ພົວພັນກັບ ໝວດຂອງສັດປ່າ ທີ່ກ່ຽວຂ້ອງ ສະເພາະແຕ່ ໃນກໍລະນີ ການລະເມີດກ່ຽວຂ້ອງ ກັບ ແຂ້ ສະຫຍາມ ເທົ່ານັ້ນ.

### 4.2.2 ການຫາປາ

ກົດໝາຍ ການປະມົງ, ບໍ່ຄືກັບ ກົດໝາຍວ່າດ້ວຍ ສັດນໍ້າ ແລະ ສັດປ່າ, ລະບຸ ການລົງໂທດທາງບໍລິຫານ ສໍາລັບການລະເມີດ ທີ່ກໍ່ຄວາມເສຍຫາຍ ທີ່ມີມູນຄ່າບໍ່ຫຼຸດ 200,000 ກີບ. ຖ້າເກີນນັ້ນ ຄ່າປັບໃໝ ແມ່ນເຈາະຈົງໃສ່ມູນຄ່າຄວາມເສຍຫາຍ ແລະ ໝວດຂອງສັດນໍ້າທີ່ກ່ຽວຂ້ອງ. ຖ້າມູນຄ່າ ຄວມເສຍຫາຍ ຫຼາຍກວ່າ 200,000 ກີບ , ສໍາລັບ ການລະເມີດເທື່ອທໍາອິດ ແມ່ນສອງເທົ່າ ຂອງມູນຄ່າຄວາມເສຍຫາຍ, ບໍ່ສໍາຄັນວ່າສັດນໍ້າທີ່ກ່ຽວຂ້ອງຈະຢູ່ໃນໝວດໃດ.

ມີແຕ່ກໍລະນີ ການລະເມີດແບບບໍ່ເຂັດຫຼາບ ເທົ່ານັ້ນ ທີ່ຄ່າປັບໃໝ ຈຶ່ງຖືກເກາະຕິດ ກັບໝວດ ຂອງ ສັດນໍ້າ ທີ່ໄດ້ຮັບຜົນກະທົບ, ເຊັ່ນ: ສາມເທົ່າ ຂອງມູນຄ່າຄວາມເສຍຫາຍ ສໍາລັບ ສັດນໍ້າທີ່ຖືກປົກປັກຮັກສາ/ໝວດທີ I; ສອງເທົ່າ ຂອງ ມູນຄ່າຄວາມເສຍຫາຍ ສໍາລັບສັດນໍ້າທີ່ຢູ່ໃນການຄວບຄຸມ/ໝວດ II ( ເຊິ່ງຄືກັບຄ່າປັບໃໝສໍາລັບການກະທໍາຜິດເທື່ອທໍາອິດ); ແລະ ເທົ່າກັບມູນຄ່າ ຄວາມເສຍຫາຍ ຂອງສັດນໍ້າ ທົ່ວໄປ/ໝວດ III, ເຊິ່ງໝາຍຄວາມວ່າ ຄ່າປັບໃໝ ສໍາລັບ ການກະທໍາຜິດອີກເທື່ອໃໝ່ ທີ່ກ່ຽວຂ້ອງກັບ ສັດນໍ້າທົ່ວໄປ/ໝວດ III ໜ້ອຍກວ່າ ຄ່າປັບໃໝ

ສໍາລັບ ການເຮັດຄວາມຜິດເທື່ອທໍາອິດ ເຊິ່ງມູນຄ່າ ຄວາມເສຍຫາຍ ທີ່ໄດ້ກໍ່ຂຶ້ນຈາກ ການກະທໍາຜິດ ເທື່ອທໍາອິດ ນັ້ນ ຫຼາຍກວ່າ 200,000 ກີບ. ການລົງໂທດ ດ້ານບໍລິຫານ ລວມມີ ການຍຶດ ຊັບສິນ. ພາຍໃຕ້ ກົດໝາຍ ການ ປະມົງ ແລະ ກົດໝາຍອາຍາ, ໂທດ ອາຍາ ສໍາລັບ ການຫາປາໂດຍບໍ່ຖືກຕ້ອງຕາມກົດໝາຍ - ແມ່ນການຕັດອິດ ສະລະພາບ ແຕ່ສາມເດືອນ ຫາ ໜຶ່ງປີ - ໜ້ອຍກວ່າ ໂທດສໍາລັບການລ່າສັດ ໂດຍບໍ່ຖືກຕ້ອງຕາມກົດໝາຍ. ການ ລົງໂທດ ທາງອາຍາ ບໍ່ກ່ຽວຂ້ອງ ກັບຄ່າປັບໃໝ ດ້ານບໍລິຫານ ແລະ ສາມາດ ຖືກວາງໃສ່ສໍາລັບ ການກະທໍຜິດ ເທື່ອທໍາອິດ.

ກົດໝາຍປະເພນີ ຄຸ້ມຄອງ ການຫາປາ ຢູ່ໃນ ເຈັດບ້ານ, ເຊິ່ງລວມມີ ບ້ານແກ້ງກອກ-ດົງ ແລະ ບ້ານດອນແດງ ທີ່ຢູ່ ໃນ ເຂດ ຣໍາຊາ ເຊຈໍາພອນ. ຄ່າປັບໃໝ ສໍາລັບ ການລະເມີດໃນການຫາປາ ສະທ້ອນໃຫ້ເຫັນ ການປະສົມປະສານ ກັບກົດໝາຍນິຕິບັນຍັດ ຫຼາຍກວ່າ ໃນກໍລະນີ ຂອງ ຄ່າປັບໃໝ ສໍາລັບການລະເມີດ ກົດໝາຍປະເພນີ ທີ່ຄຸ້ມຄອງ ການລ່າສັດ.

ຄ່າປັບໃໝ ແບບປະເພນີລ້ວນໆ ແມ່ນຖືກວາງໃສ່ ຢູ່ແຕ່ບ້ານດອນແດງເທົ່ານັ້ນ, ບ່ອນທີ່ຄ່າປັບໃໝ ສໍາລັບການຫາ ປາ ຂອງບຸກຄົນ ຢູ່ ໜອງເຕົ່າ / ໜອງປາຝາ ຕ້ອງແມ່ນ ການຂ້າສັດໜຶ່ງຕົວ, ເຊິ່ງເລີ່ມແຕ່ ໄກ່ໜຶ່ງຕົວ, ໄປຫາ ໝູ ໜຶ່ງຕົວ ຈົນຮອດຄວາຍ ໜຶ່ງຕົວ ຂຶ້ນກັບ ຄວາມເບົາຫຼືໜັກ ຂອງການລະເມີດ ບວກໃສ່ ການລົງໂທດ ຂອງວິນ ຍານ ທີ່ເຮັດໃຫ້ໄດ້ຮັບຄວາມເຈັບປ່ວຍ ຫຼື ຄວາມຕາຍ.

ບ້ານ ເຊ ວາງຄ່າປັບໃໝ ແບບປະສົມ ສໍາລັບບຸກຄົນ ທີ່ຫາປາ ຢູ່ໜອງ ຊຽງ ເຂດ, ເຊິ່ງຕິດ ກັບປ່າສັກສິດ ດອນ ແຮ້ວ / ປ່າມະເຫສັກ ດັ່ງນີ້: ສໍາລັບການລະເມີດເທື່ອທໍາອິດ, ຄ່າປັບໃໝ ແມ່ນ 100,000 ກີບ; ສໍາລັບເທື່ອທີສອງ 200,000 ກີບ; ແລະ ສໍາລັບເທື່ອທີສາມ ແມ່ນ 300,000 ກີບ ບວກໃສ່ ການຂ້າສັດໜຶ່ງຕົວ ເຊິ່ງ ອາດຈະແມ່ນ ໄກ່, ໝູ, ງົວ, ຈົນຮອດຄວາຍ, ຂຶ້ນກັບ ຄວາມເບົາ ຫຼື ໜັກ ຂອງການລະເມີດ. ແຕ່ລະຄ່າປັບໃໝ ເຫຼົ່ານີ້ ຕິດຕາມ ດ້ວຍ ການລົງໂທດ ຂອງ ວິນຍານ ຄືຄວາມເຈັບປ່ວຍ ຫຼື ຄວາມມີເຄາະຮ້າຍ.

ຄ່າປັບໃໝ ປະສົມ ແບບອື່ນໆ ມີຄື:

- ຢູ່ບ້ານ ແກ້ງກອກ-ດົງ, ສໍາລັບການຫາປາ ຢູ່ ໜອງ ແມ່ ຮ້າງ ແມ່ນຄວາຍໜຶ່ງຕົວ ຫຼື ເງິນສົດທີ່ມີຄ່າທຽບ ເທົ່າກັບຄວາຍໜຶ່ງຕົວ;
- ຢູ່ ບ້ານ ຕາແຫຼວ, ສໍາລັບການຫາປາ ໃນໜອງສັກສິດ, ຄ່າປັບໃໝ ແມ່ນ 100,000 ກີບ ແລະ ເຫຼົ້າຂາວ ໜຶ່ງກວດ ສໍາລັບການເຮັດຜິດ ເທື່ອທໍາອິດ; 200,000 ກີບ ກັບເຫຼົ້າຂາວ ໜຶ່ງກວດ ສໍາລັບເທື່ອທີສອງ; ແລະ ເທື່ອທີ່ສາມ ເງິນສົດ 300,000 ກີບ ກັບ ເຫຼົ້າຂາວ ໜຶ່ງກວດ.
- ຢູ່ບ້ານ ດົງຕະແບ່ງ, ສໍາລັບ ການຫາປາຂອງບຸກຄົນ ຢູ່ໜອງ ທາຍູງນ້ອຍ ແລະ ຫ້ວຍລາດ, ຄ່າປັບໃໝ ແມ່ນ 200,000 ກີບ, ໝູ ໜຶ່ງຕົວ ແລະ ເຫຼົ້າຂາວ ໜຶ່ງ ກວດ; ແລະ
- ຢູ່ບ້ານ ນາກະທາງ, ສໍາລັບ ການຫາປາ ຂອງ ບຸກຄົນ ຢູ່ໜອງ ຝາງແດງ, ຄ່າ ປັບໃໝ ແມ່ນ 1,000,000 ກີບ.

ມີສອງບ້ານ - ຄື: ບ້ານ ຕາແຫຼວ ແລະ ບ້ານ ກະດັນ ທີ່ມີລະບຽບການ ທີ່ຕັ້ງ ໂທດ ແຕກຕ່າງກັນ ສໍາລັບ ການຫາ ປາ ດ້ວຍ ອຸປະກອນການຫາປາ ທົ່ວໄປ ແລະ ສໍາລັບການຫາປາ ດ້ວຍວິທີ ແລະ ອຸປະກອນ ທີ່ບໍ່ຖືກຕ້ອງຕາມກົດ ໝາຍ, ເຊັ່ນ ວັດຖຸລະເບີດ, ຢາເບື່ອ ແລະ ໄຟຟ້າ. ຢູ່ບ້ານ ກະດັນ ແລະ ບ້ານ ຕາແຫຼວ, ຄ່າປັບໃໝ ສໍາລັບການລະ ເມີດ ເທື່ອທໍາອິດ ການຫາປາດ້ວຍ ອຸປະກອນ ທົ່ວໄປ ແມ່ນ 500,000 ກີບ ແລະ ຄ່າປັບໃໝ ສໍາລັບ ການລະເມີ ດເທື່ອທີສອງ ແມ່ນ 1,000,000 ກີບ. ບ້ານກະດັນ ເຊິ່ງ ເປັນບ້ານຢູ່ໃນ ສະຖານທີ່ຕັ້ງ ຣຊາຊາ ເຊຈໍາພອນ ແມ່ນ ບໍ່ປັບໃໝ ການກະທໍາຜິດ ເທື່ອທີ່ສາມ, ແຕ່ວ່າກັກຂັງ ຜູ້ກະທໍາຜິດ ແລະ ລາຍງານ ກໍລະນີກະທໍາຜິດນັ້ນ ເຖິງ ອໍາ

ນາດການປົກຄອງ ເມືອງ. ບ້ານ ຕາແຫຼວ ກໍກັກຂັງ ຜູ້ ກະທຳຜິດ ແລະ ລາຍງານຄະດີກ່ຽວກັບການກະທຳຜິດ ເທື່ອທີສາມ ເຖິງອຳນາດ ການປົກຄອງ ເມືອງ, ພ້ອມທັງປັບໃໝເປັນເງິນສົດ ອີກ 1,500,000 ກີບ.

ສຳລັບ ການຫາປາ ດ້ວຍ ວິທີ ທີ່ບໍ່ຖືກຕ້ອງຕາມກົດໝາຍ, ແມ່ນມີຄວາມແຕກຕ່າງກັນຫຼາຍ ໃນຄ່າປັບໃໝ ທີ່ໄດວາງ ພາຍໃຕ້ ລະບຽບການຂອງບ້ານ. ການເຮັດຜິດ ເທື່ອທຳອິດ ຢູ່ບ້ານ ກະດັນ ຈະຖືກປັບໃໝ ດ້ວຍເງິນສົດ 5,000,000 ກີບ ໃນຂະນະທີ່ ຄ່າປັບໃໝ ສຳລັບ ການເຮັດຜິດ ເທື່ອທຳອິດ ຢູ່ ບ້ານ ຕາແຫຼວ ແມ່ນ 1,500,000 ກີບ. ຢູ່ບ້ານ ຕາແຫຼວ, ຄ່າປັບໃໝ ສຳລັບ ການເຮັດຜິດເທື່ອທີສອງ ແມ່ນ 3,000,000 ກີບ ແລະ ສຳລັບ ການ ລະເມີດ ເທື່ອທີສາມ ແມ່ນ 5,000,000 ກີບ, ຜູ້ກະທຳຜິດ ຖືກກັກຂັງ ແລະ ຄະດີຂອງຜູ້ກ່ຽວ ຖືກລາຍງານ ເຖິງ ອຳນາດ ການປົກຄອງ ເມືອງ. ສ່ວນ ບ້ານ ກະດັນ ບໍ່ລະບຸ ກ່ຽວກັບການລະເມີດ ເທື່ອທີສາມ. ໃນການລະເມີດເທື່ອທີສອງ, ຜູ້ລ່ວງລະເມີດ ຖືກປັບໃໝ 10,000,000 ກີບ, ຖືກກັກຂັງ ແລະ ຄະດີຂອງຜູ້ກ່ຽວຖືກລາຍງານເຖິງ ອຳນາດ ການປົກຄອງເມືອງ.

ສອງບ້ານ ຄື: ບ້ານ ຕານສຸມ ແລະ ບ້ານ ຫົວເມືອງ, ທັງສອງບ້ານ ແມ່ນຢູ່ ຂ້າງໃນ ຂອງ ສະຖານທີ່ຕັ້ງ ທຳຊາ ເຊຈຳພອນ ກໍມີ ຄ່າປັບໃໝ ຄ້າຍຄືກັນ ສຳລັບ ການຫາປາ ໃນເຂດ ອະນຸລັກ ທີ່ຖືກສ້າງຂຶ້ນ ໂດຍ ລະບຽບການຂອງບ້ານ. ຄ່າປັບໃໝ ສຳລັບ ການກະທຳຜິດ ເທື່ອທຳອິດ ແມ່ນ 500,000 ກີບ ແລະ 300,000 ກີບ ຕາມລຳດັບ.ຄ່າປັບໃໝ ສຳລັບ ການກະທຳຜິດ ເທື່ອທີສອງ ແມ່ນຄືກັນ: 1,000,000 ກີບ. ສຳລັບ ການກະທຳຜິດ ເທື່ອທີສາມ ຢູ່ ທັງສອງບ້ານແມ່ນບໍ່ມີ ການປັບໃໝ, ແຕ່ວ່າຜູ້ກະທຳຜິດ ຖືກກັກຂັງ ແລະ ຄະດີຂອງຜູ້ກ່ຽວ ຖືກລາຍງານເຖິງອຳນາດການປົກຄອງ.

ລະບຽບການ ໃນບ້ານ ແກ້ງກອກ-ດົງ, ຊຶ່ງກໍເປັນບ້ານໜຶ່ງ ທີ່ຢູ່ຂ້າງໃນ ຂອງ ສະຖານທີ່ຕັ້ງ ທຳຊາ ເຊຈຳພອນ ເໝືອນກັນ, ໄດ້ສ້າງ ເຂດ ອະນຸລັກ ຂຶ້ນ ສອງເຂດ ແລະ ມີລະບອບການລົງໂທດ ໃນແຕ່ລະເຂດ ແຕກຕ່າງກັນ.ສຳລັບ ການເຮັດຜິດ ເທື່ອທຳອິດ ຢູ່ ໜອງ ກ່ານ, ຄ່າປັບໃໝ ແມ່ນ 300,000 ກີບ; ສ່ວນການເຮັດຜິດເທື່ອທຳອິດ ຢູ່ ໜອງ ແມ່ ຮ້າງ, ຄ່າປັບໃໝ ແມ່ນ 500,000 ກີບ. ການເຮັດຜິດ ເທື່ອທີ່ສອງ ຢູ່ໜອງ ກ່ານ, ຄ່າປັບໃໝ ແມ່ນ 500,000 ກີບ ແລະ ຢູ່ ໜອງ ແມ່ ຮ້າງ, ຄ່າປັບໃໝ ແມ່ນ 1,000,000 ກີບ. ສຳລັບການ ເຮັດຄວາມຜິດ ເທື່ອທີສາມ ຢູ່ ໜອງກ່ານ ແມ່ນບໍ່ມີການປັບໃໝ, ຜູ້ເຮັດຄວາມຜິດ ຖືກກັກຂັງ ແລະ ຄະດີ ຂອງຜູ້ກ່ຽວ ຖືກລາຍງານ ເຖິງ ອຳນາດ ການປົກຄອງເມືອງ. ສ່ວນ ການເຮັດຄວາມຜິດ ເທື່ອທີສາມ ຢູ່ ໜອງ ແມ່ ຮ້າງ ແມ່ນ ໃຊ້ການປັບໃໝ ແບບປະເພນີ ຄື: ຄວາຍໜຶ່ງຕົວ ແລະ ຜູ້ເຮັດຜິດ ຖືກກັກຂັງ ແລະ ຄະດີ ຂອງຜູ້ເຮັດຜິດ ຖືກລາຍງານ ເຖິງ ອຳນາດ ການປົກຄອງເມືອງ.

ຄືກັນ ກັບ ການປັບໃໝ ສຳລັບ ການລ່າສັດ ທີ່ເປັນການລະເມີດ ລະບຽບການ ຂອງບ້ານ, ຂອບເຂດ ຂອງ ຄ່າປັບໃໝ ສຳລັບ ການຫາປາ ທີ່ຖືກເກືອດຫ້າມ ແມ່ນກວ້າງ ແລະ ບໍ່ເປັນໄປໄດ້ ທີ່ຈະພົວພັນກັນກັບ ຄ່າປັບໃໝ ພາຍໃຕ້ ກົດໝາຍ ນິຕິບັນຍັດ ແຫ່ງຊາດ.

### 4.2.3 ການຕັດໄມ້ ແລະ ການສ້າງຄວາມເສຍຫາຍ ຫຼື ການທຳລາຍ ປ່າ

ຄ່າປັບໃໝ ດ້ານບໍລິຫານ ແລະ ໂທດອາຍາ ພາຍໃຕ້ ກົດໝາຍທີ່ດິນ, ກົດໝາຍ ປ່າໄມ້ ແລະ ກົດໝາຍ ອາຍາ ແມ່ນໃຊ້ ໃນຂອບເຂດທົ່ວປະເທດ. ພາຍໃຕ້ກົດໝາຍປ່າໄມ້, ຂີດກຳນົດຄວາມເສຍຫາຍ ຍັງສູງກວ່າຂີດຈຳກັດທີ່ຢູ່ພາຍໃຕ້ກົດໝາຍ ວ່າດ້ວຍ ສັດນ້ຳ ອີກດ້ວຍ. ບໍ່ມີການລົງໂທດ ທາງບໍລິຫານ ຖ້າວ່າ ມູນຄ່າຄວາມເສຍຫາຍໜ້ອຍກວ່າ 1,000,000 ກີບ. ເວລາໃດທີ່ ມີການກາຍຂີດຈຳກັດດັ່ງກ່າວ ການກະທຳຄວາມຜິດ ເທື່ອທຳອິດ ຈະຖືກປັບໃໝ ເທົ່າກັບມູນຄ່າຂອງ ຊັບພະຍາກອນ ປ່າໄມ້ ທີ່ໄດ້ຮັບຄວາມເສຍຫາຍນັ້ນ; ສຳລັບ ເທື່ອຕໍ່ໄປ ຫຼື ການລະເມີດ ທີ່ບໍ່ຮູ້ເຂັດຫຼາບ, ຄ່າປັບໃໝ ຈະເປັນສອງເທົ່າ ຂອງ ມູນຄ່າຂອງຊັບພະຍາກອນປ່າໄມ້ ທີ່ໄດ້ຮັບຄວາມເສຍຫາຍ. ທັງກົດໝາຍ ປ່າໄມ້ ແລະ ກົດໝາຍທີ່ດິນ ແມ່ນຕ້ອງມີການ ຈ່າຍທົດແທນຄວາມເສຍຫານຍທີ່ໄດ້ກໍ່

ຂຶ້ນ. ກົດໝາຍ ອາຍາ ກໍານົດການລົງໂທດ ແບບດຽວກັນ ກັບສໍາລັບ ການລະເມີດໃນການຫາປາ ຄື ຕັດອິດສະລະພາບ ແຕ່ສາມເດືອນ ຫາ ໜຶ່ງປີ ແລະ ເພີ້ມ ໂທດໜັກກວ່າເກົ່າ ຄືຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ສໍາລັບການ ກະທໍາຜິດ ທີ່ກໍ່ໃຫ້ເກີດຄວາມ 'ເສຍຫາຍ ຢ່າງຫຼວງຫຼາຍ'.

ກົດໝາຍ ປະເພນີ ຄຸ້ມຄອງ ຕົ້ນໄມ້ ແລະ ປ່າໄມ້ ຢູ່ໃນ 9 ບ້ານ. ໃນນັ້ນ ສາມບ້ານ ຄື ບ້ານ ຕານສຸມ, ບ້ານ ແກ້ງກອກ-ດົງ ແລະ ບ້ານ ດອນແດງ ແມ່ນຢູ່ໃນ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ. ການປັບໃໝ ແບບປະເພນີ ເຊິ່ງຖືກໃຊ້ຢູ່ໃນ ບ້ານສ່ວນຫຼາຍ, ໃນຄະດີສ່ວນຫຼາຍ ແມ່ນຄືກັນ ກັບ ການປັບໃໝ ສໍາລັບການລະເມີດ ໃນການລ່າສັດ ແລະ ຫາປາ. ບ້ານ ຕາແຫຼວ ໃຊ້ການປັບໃໝປະສົມກັນສອງແບບ. ສໍາລັບການຕັດໄມ້ ຢູ່ ປ່າ ເສືອ ໂຄກ ອ້ອມໜອງສັກສິດ ນັ້ນ ຄ່າປັບໃໝ ແມ່ນຢູ່ ໃນລະຫວ່າງ ແຕ່ 100,000 ກີບ ສໍາລັບ ການ ເຮັດຜິດ ເທື່ອທໍາອິດ ຫາ 300,000 ກີບ ສໍາລັບ ການກະທໍາຄວາມຜິດ ເທື່ອທີສາມ ແລະ ລວມທັງ ເຫຼົ້າຂາວ ໜຶ່ງກວດ ສໍາລັບ ແຕ່ລະຂັ້ນຂອງ ການເຮັດຄວາມຜິດ.

ຍັງມີ ການລົງໂທດເພີ້ມ ຂອງວິນຍານ ທີ່ບໍ່ເຈາະຈົງ ສໍາລັບຊາວບ້ານ. ຄ່າປັບໃໝ ສໍາລັບ ການຕັດໄມ້ໃຫຍ່ ຢູ່ ປ່າຂອງບ້ານ ຄື ປ່າສ່ອງ ປາແດງ ແມ່ນຖືກປັບໃໝ 100,000 ກີບ ແລະ ເຫຼົ້າຂາວ ໜຶ່ງກວດ, ໂດຍບໍ່ມີ ໂທດເພີ້ມຂອງ ວິນຍານ ແຕ່ຢ່າງໃດ. ການຕັດໄມ້ ຢູ່ໃນປ່າ ວັດ ແມ່ນຖືກຫ້າມ, ແຕ່ວ່າບໍ່ມີ ການລາຍງານ ວ່າມີການປັບໃໝ ຫຼື ການລົງໂທດ ແບບປະເພນີ. ບ້ານ ນາມີກຊຽນ ໃຊ້ ຄ່າປັບໃໝ 100,000 ກີບ ສໍາລັບ ການຕັດໄມ້ ໃນປ່າຂອງບ້ານ ທີ່ຖືກກໍານົດ/ຈັດສັນ ພາຍໃຕ້ ກົດໝາຍ ນິຕິບັນຍັດ; ບໍ່ມີການລົງໂທດເພີ້ມ ຂອງວິນຍານ.

ລະບຽບການ ຂອງ ບ້ານ ຄຸ້ມຄອງ ປ່າໄມ້ ແຕ່ສະເພາະ ສອງບ້ານເທົ່ານັ້ນ ຄືບ້ານ ຕານສຸມ ແລະ ບ້ານ ຕາແຫຼວ. ຢູ່ບ້ານຕານສຸມ ຄ່າປັບໃໝ ສໍາລັບ ການກະທໍາຄວາມຜິດ ໃນການຕັດໄມ້, ຈູດປ່າ ຫຼື ອື່ນໆ ທີ່ເປັນການທໍາລາຍປ່າໄມ້ແມ່ນ 500,000 ກີບ, ສໍາລັບ ເທື່ອທີສອງ 1,000,000 ກີບ ແລະ ສໍາລັບເທື່ອທີສາມ ແມ່ນບໍ່ມີການປັບໃໝ - ຜູ້ກະທໍາຄວາມຜິດ ຈະຖືກກັກຂັງ ແລະ ຄະດີຂອງຜູ້ກ່ຽວ ຈະຖືກລາຍງານ ເຖິງ ອໍານາດການປົກຄອງ ເມືອງ. ຢູ່ບ້ານ ຕາແຫຼວ, ຄ່າປັບໃໝ ສໍາລັບ ການກະທໍາຄວາມຜິດ ເທື່ອທໍາອິດ ແລະ ເທື່ອທີສອງ ໃນການຈູດປ່າ ແມ່ນຕໍ່າກວ່າ ຄື: 200,000 ກີບ ແລະ 500,000 ກີບ ຕາມລໍາດັບ. ຄ່າປັບໃໝ ສໍາລັບ ການກະທໍາຄວາມຜິດ ເທື່ອທີສາມ-ຄື: 1,000,000 ກີບ ແລະ ຜູ້ກະທໍາຄວາມຜິດ ຈະຖືກກັກຂັງ ແລະ ຄະດີ ຂອງຜູ້ກ່ຽວ ກໍຈະຖືກລາຍງານ ເຖິງ ອໍານາດການປົກຄອງ ເມືອງ.

ການປົກປັກຮັກສາ ຕົ້ນໄມ້ ແລະປ່າໄມ້ ເປັນບັນຫາສໍາຄັນທີ່ສຸດ ສໍາລັບ ກົດໝາຍປະເພນີ ໃນບ້ານຕ່າງໆ ທີ່ໄດ້ລົງໄປສໍາຫຼວດ. ກົດໝາຍປະເພນີ ຄຸ້ມຄອງ 9 ບ້ານ - ແຕ່ວ່າມີແຕ່ ລະບຽບການ ຂອງ ສອງບ້ານ ເທົ່ານັ້ນ ທີ່ເວົ້າເຖິງບັນຫາດັ່ງກ່າວ. ດັ່ງທີ່ ໄດ້ບັນທຶກໄວ້ໃນ ພາກສະເໜີ ຂອງ ຂໍ້ນີ້, ຄວາມບໍ່ກ້ຳເກິ່ງກັນນີ້ ອາດສະທ້ອນໃຫ້ເຫັນ ວ່າຈຸດສຸມ ຂອງ ບັນດາ ອົງການຈັດຕັ້ງສາກົນ ທີ່ໃຫ້ການສະໜັບສະໜູນ ໃນການສ້າງ ແລະ ຮັບຮອງ ເອົາ ລະບຽບການຂອງບ້ານນັ້ນ ແມ່ນແນໃສ່ ສັດ ຫຼາຍກວ່າ ພືດ.

### 4.2.4 ການເກັບ ເຄື່ອງປ່າ ຂອງດົງ

ບັນດາກົດໝາຍດຽວກັນ ທີ່ຄຸ້ມຄອງ ປ່າໄມ້ ກໍຄູ້ມຄອງ ເຄື່ອງປ່າຂອງດົງ ເຊັ່ນດຽວກັນ. ທຸກໆ ການປັບໃໝ ທາງບໍລິຫານ ກໍແມ່ນ ອັນດຽວກັນ ກັບສໍາລັບ ເຄື່ອງປ່າ ຂອງດົງ ຄືກັບສໍາລັບ ຊັບພະຍາກອນປ່າໄມ້ອື່ນໆ. ເບິ່ງ ຂໍ້ຍ່ອຍ 4.2.3 ສໍາລັບຄໍາອະທິບາຍ ແລະ ການວິເຄາະ ການປັບໃໝ ແລະ ການລົງໂທດ ທີ່ວາງໄວ້ ພາຍໃຕ້ ບັນດາກົດໝາຍ ທີ່ສາຍພົວພັນຂອງພວກມັນ ກັບ ກົດໝາຍ ປະເພນີ ແລະ ລະບຽບການ ຂອງບ້ານ. ການເກັບເຄື່ອງປ່າ ຂອງດົງ ໂດຍບໍ່ໄດ້ຮັບ ອະນຸຍາດ ເປັນ ການກະທໍາຄວາມຜິດ ຢ່າງດຽວ ທີ່ພົວພັນ ກັບ ຊັບພະຍາກອນທໍາມະຊາດ ເຊິ່ງກົດ

ໝາຍ ອາຍາ (ມາດຕາ 143) ກໍໄດ້ ລະບຸຊັດເຈນ ການປັບໃໝ ແລະ ການລົງໂທດ ສຳລັບ ການກະທຳຄວາມຜິດ ທີ່ກ່ຽວຂ້ອງ ( ເບິ່ງ ຂໍ້ 3.3.8).

ກົດໝາຍ ປະເພນີ ຢູ່ໃນສີ່ບ້ານ ຄຸ້ມຄອງ ເຄື່ອງປ່າ ຂອງດົງ; ໜຶ່ງໃນນັ້ນ ແມ່ນ ບ້ານ ດອນແດງ ເຊິ່ງຢູ່ ຂ້າງໃນຂອງ ເຂດ ຮໍາຊາ ເຊຈໍາພອນ. ຢູ່ໃນ ສາມບ້ານ - ບ້ານ ຕາແຫຼວ, ບ້ານ ນາກະທາງ ແລະ ບ້ານດົງຕະແບ່ງ - ການປັບໃໝ ແບບປະເພນີ ແລະ ການລົງໂທດ ຂອງ ວິນຍານ ແມ່ນຖືກວາງໃສ່ ສໍາລັບການລ່ວງລະເມີດ ທີ່ກ່ຽວຂອງ ກັບ ເຄື່ອງປ່າ ຂອງດົງ. ບ້ານ ຕາແຫຼວ ກໍ ວາງໂທດ ປະສົມສໍາລັບ ການເກັບ ເຄື່ອງປ່າ ຂອງດົງ ທີ່ຄືກັນ ກັບ ການປັບ ໃໝ ແລະ ການລົງໂທດສໍາລັບ ການຕັດໄມ້ ຢູ່ປ່າ ເສືອ ໂຄກ ອ້ອມໜອງ ສັກສິດ ແລະ ສໍາລັບການຕັດໄມ້ໃຫຍ່ ຢູ່ ປ່າຂອງບ້ານ ປ່າສ່ອງ ປ່າແດງ.

ບໍ່ມີ ລະບຽບການ ຂອງບ້ານ ຈັກສະບັບ ເວົ້າເຖິງ ບັນຫາ ເຄື່ອງປ່າຂອງດົງ.

### 4.2.5 ການເອົານ້ຳ ແລະ ການໃຊ້ເຮືອ

ກົດໝາຍນ້ຳ ແລະ ຊັບພະຍາກອນນ້ຳ ແລະ ກົດໝາຍທີ່ດິນ ຄຸ້ມຄອງ ການໃຊ້ນ້ຳ. ບໍ່ມີກົດໝາຍສະບັບໃດ ລະບຸ ການລົງໂທດ ທາງບໍລິຫານ ສໍາລັບ ການລະເມີດ, ແຕ່ວ່າ ທັງສອງກົດໝາຍ ຕ່າງກໍກໍານົດວ່າ ການລົງໂທດ ຕ້ອງ ເໝາະສົມ ກັບສະຖານເບົາຫຼື ໜັກ ຂອງ ການລ່ວງລະເມີດ. ກົດໝາຍ ນ້ຳ ແລະ ຊັບພະຍາກອນນ້ຳ ລະບຸວ່າ ການ ລົງໂທດ ທາງບໍລິຫານ ຕ້ອງຖືກກໍານົດ ຕາມແຕ່ກໍລະນີ. ກົດໝາຍທີ່ດິນ ລະບຸວ່າ ຜູ້ກະທໍາຄວາມຜິດ ອາດຈະຖືກ ສັ່ງໃຫ້ຈ່າຍ ຄ່າທົດແທນ ແລະ ອາດຈະເສຍສິດທິຕໍ່ທີດິນ. ກົດໝາຍອາຍາ ບໍ່ມີ ມາດຕາສະເພາະ ກ່ຽວກັບ ການ ລ່ວງລະເມີດ ກົດໝາຍນ້ຳ. ບໍ່ມີກົດໝາຍແຫ່ງຊາດ ສະບັບໃດ ລະບຸແຈ້ງ ການລົງໂທດ ສໍາລັບ ການໃຊ້ ເຮືອ.

ສອງບ້ານ ຄືບ້ານ ແກ້ງກອກ-ດົງ ແລະ ບ້ານ ຕາແຫຼວ ຄວບຄຸມ ການໃຊ້ນ້ຳ ແລະ ການໃຊ້ ເຮືອ ຢູ່ ບັນດາໜອງ ສັກສິດ. ບ້ານ ແກ້ງກອກ-ດົງ ຮຽກເກັບຄ່າປັບໃໝ ແບບປະເພນີ ດ້ວຍການ ເອົາສັດ ເປັນເຄື່ອງບູຊາວິນຍານ ສໍາ ລັບ ການເອົານ້ຳ ຈາກ ໜອງ ເຕົ່າ/ໜອງປາ ຝາ ຫຼື ໃຊ້ ເຮືອ ຢູ່ໃນໜອງດັ່ງກ່າວ. ການລົງໂທດ ຂອງວິນຍານ ແມ່ນ ຄວາມເຈັບປ່ວຍ, ຫຼື ຄວາມຕາຍ. ສໍາລັບ ການເອົານ້ຳ ຈາກ ໜອງສັກສິດ ຢູ່ ບ້ານ ຕາແຫຼວ ຫຼື ການໃຊ້ເຮືອ ຢູ່ ໜ ອງ ດັ່ງກ່າວ, ຄ່າປັບໃໝ ແມ່ນແບບ ປະສົມ ຄື 100,000 – 300,000 ກີບ ສໍາລັບ ການລະມີດ ເທື່ອທໍາອິດ, ສໍາ ລັບການ ເຮັດຜິດ ເທື່ອທີ່ສອງ ແລະ ເທື່ອທີສາມ ບວກກັບ ເຫຼົ້າ ຂາວ ໜຶ່ງກວດ ສໍາລັບ ແຕ່ລະ ຂັ້ນ ຂອງ ການ ເຮັດຜິດ. ບໍ່ມີການລົງໂທດຂອງວິນຍານ ຮ່ວມຢູ່ນໍາ.

ລະບຽບການ ຢູ່ໃນ ສອງບ້ານ –ບ້ານຕານສຸມ ແລະ ບ້ານ ກະດັນ–ຄຸ້ມຄອງ ການເອົານ້ຳ ແຕ່ວ່າບໍ່ເວົ້າເຖິງ ການໃຊ້ ເຮືອ. ຢູ່ບ້ານ ຕານສຸມ, ຕ່າປັບໃໝ ສໍາລັບການເອົານ້ຳ ເພື່ອຈຸດປະສົງ ການຜະລິດ ແມ່ນ 500,000 ກີບ ສໍາລັບ ການເຮັດຄວາມຜິດ ເທື່ອທໍາອິດ ແລະ 1,000,000 ກີບ ສໍາລັບເທື່ອທີ ສອງ. ສໍາລັບ ການເຮັດຄວາມຜິດ ເທື່ອທີ ສາມ ແມ່ນບໍ່ມີການປັບໃໝ; ຜູ້ເຮັດຄວາມຜິດ ຈະຖືກກັກຂັງ ແລະ ຄະດີ ກໍຈະຖືກລາຍງານ ເຖິງ ອໍານາດການ ປົກຄອງເມືອງ. ຢູ່ບ້ານ ກະດັນ, ສໍາລັບການເອົານ້ຳ ເພື່ອການກະສິກໍາ ທີ່ເກີນ ປະລິມານທີ່ອະນຸຍາດ ນັ້ນແມ່ນຈະ ຖືກປັບໃໝ ສອງເທົ່າ ຂອງຄ່າປັບໃໝ ສໍາລັບ ການລະເມີດ ຢູ່ ບ້ານ ຕານສຸມ, ໝາຍຄວາມວ່າ: 1,000,000 ກີບ ສໍາລັບ ການເຮັດຄວາມຜິດ ເທືອທໍາອິດ ແລະ 2,000,000 ກີບ ສໍາລັບ ເທື່ອທີສອງ. ຕໍ່ການເຮັດຄວາມຜິດ ເທື່ອ ທີສອງ, ຈະລາຍງານ ຄະດີ ເຖິງອໍານາດການປົກຄອງ ເມືອງດ ແຕ່ວ່າ ຜູ້ ເຮັດຄວາມຜິດ ບໍ່ຖືກກັກຂັງ.

ກົດໝາຍ ປະເພນີ ໃນບ້ານຕ່າງໆ ທີ່ໄດ້ລົງສໍາຫຼວດນັ້ນ ຄ້າຍໆ ກັບກົດໝາຍ ນິຕິບັນຍັດແຫ່ງຊາດ ທີ່ຄຸ້ມຄອງ ການ ໃຊ້ນ້ຳ, ແກ້ໄຂການລ່ວງລະເມີດ ເປັນໄປຕາມກໍລະນີ ຂຶ້ນກັບ ສະຖານເບົາຫຼື ໜັກ ຂອງການເຮັດຄວາມຜິດ. ລະບຽບການຂອງບ້ານ ບໍ່ອະນຸຍາດ ໃຫ້ປັບໃໝ ແລະ ລົງໂທດ ໂດຍເປັນໄປຕາມແຕ່ລະກໍລະນີ.

### 4.2.6 ການໃຫ້ສັດກິນຫຍ້າ (ການລ້ຽງສັດ)

ບໍ່ມີການລົງໂທດ ທາງບໍລິຫານ ທີ່ມີລັກສະນະນິຕິບັນຍັດ ຫຼື ທາງ ອາຍາ ທີ່ປັບໃໝສະເພາະ ການໃຫ້ສັດກິນຫຍ້າ (ການລ້ຽງສັດ) ທີ່ມີຜົນກະທົບທາງລົບ ຕໍ່ສິ່ງແວດລ້ອມ, ແລະ ກົດໝາຍ ອາຍາ ກໍບໍ່ເວົ້າເຖິງເລື້ອງນີ້.

ກົດໝາຍປະເພນີ ຢູ່ໃນສອງບ້ານ ຄື ບ້ານ ຕາແຫຼວ ແລະ ບ້ານ ນາກະທາງ, ເຊິ່ງບໍ່ມີບ້ານໃດ ຢູ່ ຂ້າງໃນ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ - ຄຸ້ມຄອງ ການໃຫ້ສັດກິນຫຍ້າ ດ້ວຍການປັບໃໝ ທີ່ໃຊ້ຢູ່ໃນສອງບ້ານດັ່ງກ່າວ. ການລົງໂທດ ຂອງວິນຍານ ຢູ່ໃນສອງບ້ານນີ້ ແມ່ນ ຄວາມເຈັບປ່ວຍ ຫຼື ເຄາະຮ້າຍ, ແທນທີ່ ຄວາມເຈັບປ່ວຍ ຫຼື ຄວາມຕາຍ.

ບໍ່ມີລະບຽບການຂອງບ້ານ ສະບັບໃດ ລະບຸກ່ຽວກັບການໃຫ້ສັດກິນຫຍ້າ (ການລ້ຽງສັດຢູ່ທົ່ງຫຍ້າ).

## 5. ຄວາມໝາຍ ສໍາລັບ ການຄຸ້ມຄອງ ສະຖານທີ່ຕັ້ງ ຣໍາຊາ ຢູ່ ສປປ ລາວ

ຂໍ້ສົມມຸດຖານ ຂອງ ບົດສຶກສາບົດນີ້ ແມ່ນໄດ້ອີງໃສ່ ການຄາດຄະເນ ທີ່ວ່າ ມັນຈະເກີດຄວາມຂັດແຍ້ງ ລະຫວ່າງ ກົດໝາຍ ປະເພນີ ກັບກົດໝາຍ ນິຕິບັນຍັດ ແຫ່ງຊາດ.ຂໍ້ສົມມຸດຖານ, ທີ່ຖືກຮ່າງຂຶ້ນ ໃນປີ 2010, ບໍ່ໄດ້ຄາດຫວັງວ່າ ລະບຽບການຂອງບ້ານ ທີ່ໄດ້ຖືກຮັບຮອງເອົາ ໃນປີ 2011 ແລະ 2012. ບົດສຶກສາ ແລະ ບົດວິເຄາະບົດນີ້ ໄດ້ລະບຸ ຄໍາຖາມ ກ່ຽວກັບວ່າ ກົດໝາຍນິຕິບັນຍັດ ແຫ່ງຊາດ ຈະຖືກຕີຄວາມໝາຍ ໃນສະພາບແວດລ້ອມຂອງສົນທິສັນຍາ ຣໍາຊາ ແລະ ດໍາລັດນາຍົກລັດຖະມົນຕີ ເລກທີ 50/ນຍ ແນວໃດ.

ນອກນັ້ນ, ບົດວິເຄາະບົດນີ້ ຍັງໄດ້ລະບຸ ຂົງເຂດ ຕົວຈິງ ແລະ ຂົງເຂດ ທີ່ມີທ່າແຮງ ທີ່ຈະເກີດຄວາມຂັດແຍ້ງ ລະຫວ່າງ ບັນດາ ກົດໝາຍ ນິຕິບັນຍັດ ແຫ່ງຊາດ, ລະຫວ່າງກົດໝາຍນິຕິບັນຍັດ ແຫ່ງຊາດ ກັບ ກົດໝາຍປະເພນີ ທີ່ ຄຸ້ມຄອງ ຊັບພະຍາກອນທໍາມະຊາດ ຢູ່ໃນບ້ານຕ່າງໆ ທີ່ຢູ່ໃນ ແລະ ອ້ອມແອ້ມ ເຂດ ຣໍາຊາ ເຊຈໍາພອນ, ແລະ ລະຫວ່າງ ກົດໝາຍ ນິຕິບັນຍັດ ກັບ ບັນດາລະບຽບການຂອງບ້ານ.

ຜົນຂອງບົດສຶກສາ ຊີ້ໃຫ້ເຫັນວ່າ:

- ກົດໝາຍປະເພນີ ຢູ່ໃນບ້ານທີ່ໄດ້ລົງສໍາຫຼວດນັ້ນ ໄດ້ຮັບການປະຕິບັດຕາມ ຈາກປະຊາກອນ ໃນອັດຕາສ່ວນທີ່ສູງກວ່າ ອັດຕາສ່ວນ ຂອງປະຊາກອນ ທີ່ປະຕິບັດຕາມ ກົດໝາຍນິຕິບັນຍັດ ນັ້ນຫຼາຍ ແລະ ເພາະສະນັ້ນ, ຈະໃຫ້ພື້ນຖານທີ່ມີປະສິດທິຜົນກວ່າສໍາລັບການອະນຸລັກ ແລະ ປົກປັກຮັກສາ ຊັບພະຍາກອນ ທີ່ດິນບໍລິເວນນໍ້າ.
- ມີຄວາມຂັດແຍ້ງຕົວຈິງ ຫຼື ຄວາມຂັດແຍ້ງ ທີ່ອາດຈະເກີດຂຶ້ນໄດ້ ບໍ່ຫຼາຍ ລະຫວ່າງ ກົດໝາຍ ນິຕິບັນຍັດກັບກົດໝາຍປະເພນີ; ແລະ
- ໃນຄວາມເປັນຈິງ, ມີຄວາມຂັດແຍ້ງ ຕົວຈິງ ແລະ ຄວາມຂັດແຍ້ງ ທີ່ອາດເກີດຂຶ້ນ ຫຼາຍກວ່າ ລະຫວ່າງບັນດາກົດໝາຍ ນິຕິບັນຍັດ ທີ່ ຄຸ້ມຄອງ ແງ່ຕ່າງໆ ຂອງ ເຂດ ຣໍາຊາ, ແລະ ລະຫວ່າງ ລະບຽບການຂອງບ້ານ ທີ່ຫາກໍຖືກຮັບຮອງ ເມື່ອບໍ່ດົນມານີ້ ກັບ ກົດໝາຍນິຕິບັນຍັດ ແລະ ກົດໝາຍປະເພນີ.

ມີຫຼາຍໆກົດໝາຍ ນິຕິບັນຍັດ ແລະ ສະຖາບັນ ຂອງ ລັດຖະບານ ໃນລະດັບຊາດ ແລະ ລະດັບແຂວງ ທີ່ຄອບຄຸມໂດຍກົງ ແລະ ທາງອ້ອມ ແລະ ບໍລິຫານ (ຄຸ້ມຄອງ) ບັນດາ ເຂດ ຣໍາຊາ ໃນ ສປປ ລາວ. ດໍາລັດນາຍົກລັດຖະມົນຕີ ເລກທີ 50 / ນຍ ເປັນພື້ນຖານ ສໍາລັບ ວິທີການຂອງໂຄງການນີ້ ເພື່ອຊ່ວຍເຫຼືອ ອົງການລັດຖະບານຢູ່ ສູນກາງ ເພາະ ເຂົາເຈົ້າ ຮ່ວມມືກັບ ອໍານາດການປົກຄອງ ແຂວງ ແລະ ບ້ານ ເພື່ອຮັບປະກັນ ການມີສ່ວນຮ່ວມ ຂອງປະຊາຊົນ ທ້ອງຖິ່ນ ໃນການສ້າງ ລະບຽບການສໍາລັບ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ.

ຢ່າງໃດກໍຕາມ, ດຳລັດນາຍົກລັດຖະມົນຕີ ເລກທີ 50 / ນຍ ບໍ່ເປັນພື້ນຖານ ໃຫ້ແກ່ ການແກ້ໄຂ ຄວາມຂັດແຍ້ງທີ່ ອາດເກີດຂຶ້ນໄດ້ ລະຫວ່າງ ບັນດາກົດໝາຍ ແຫ່ງຊາດ ທີ່ ອາດຖືກຕີຄວາມໝາຍ ໃຫ້ ຄຸ້ມຄອງ ບັນດາສະຖານທີ່ ຕັ້ງ ຣຳຊາ. ໃນເມື່ອບໍ່ມີ ກົດໝາຍສະເພາະ ຂອງ ສະພາແຫ່ງຊາດ ຫຼື ດຳລັດນາຍົກລັດຖະມົນຕີ ຄຸ້ມຄອງ ທີ່ດິນບໍລິ ເວນນໍ້າ ແລະ ບັນດາສະຖານທີ່ຕັ້ງຣຳຊາ, ກະຊວງໃດໜຶ່ງ ທີ່ກ່ຽວຂ້ອງ ອາດອອກ ລະບຽບການ, ເຊິ່ງສ້າງທ່າແຮງ ສຳລັບ ພາລະບົດບາດທີ່ທັບຊ້ອນກັນ ແລະ ລະບຽບການ ທີ່ຂັດແຍ້ງກັນ.

ເພາະສະນັ້ນ, ຈຶ່ງຂໍແນະນຳວ່າ ຄວນ ອອກດຳລັດນາຍົກລັດຖະມົນຕີ ຄຸ້ມຄອງ ທີ່ດິນ ບໍລິເວນນໍ້າ ແລະ ສະຖານທີ່ ຕັ້ງ ຣາຊາ ຢູ່ ສປປ ລາວ ເພື່ອໃຫ້ຄວາມແນ່ນອນ ທາງກົດໝາຍ ສຳລັບ ລະບຽບການຕໍ່ໄປ ຂອງ ທີ່ດິນບໍລິເວນນໍ້າ ແລະ ບັນດາສະຖານທີ່ຕັ້ງ ຣຳຊາ ໃນ ສປປ ລາວ. ດຳລັດນາຍົກລັດຖະມົນຕີ ສະບັບນີ້ ຈະເປັນພື້ນຖານໃຫ້ແກ່ ບັນດາລະບຽບການ ຄຸ້ມຄອງ ບັນດາສະຖານທີຕັ້ງ ຣຳຊາ ແຕ່ລະແຫ່ງ. ດຳລັດ ທີ່ສະເໜີ ນັ້ນ ຈະ: ເສີມເຕີມແລະ ສະໜັບສະໜູນ ດຳລັດ ນາຍົກລັດຖະມົນຕີ ເລກທີ 50/ນຍ; ຈະໃຫ້ທິດຊີ້ນຳ ສຳລັບ ການຈັດຕັ້ງປະຕິບັດ ພັນທະ ຂອງ ສປປ ລາວ ພາຍໃຕ້ ສົນທິສັນຍາ ຣຳຊາ ແລະ ສົນທິສັນຍາ ສາກົນ ອື່ນໆ ທີ່ຄຸ້ມຄອງ ລະບົບນິເວດ ຂອງ ທີ່ ດິນບໍລິເວນນໍ້າ ແລະ ບັນດາຊະນິດພັນ; ຈະແກ້ໄຂ ຄວາມຂັດແຍ້ງ ຕົວຈິງ ແລະ ທີ່ອາດເກີດຂຶ້ນ ລະຫວ່າງ ບັນດາ ກົດໝາຍ ນິຕິບັນຍັດ ກ່ຽວກັບ ບັນດາສະຖານທີ່ຕັ້ງ ຣຳຊາ; ແລະ ສ້າງຕັ້ງ ຂອບວຽກ ສຳລັບ ລະບຽບການ ທີ່ຄຸ້ມ ຄອງ ບັນດາສະຖານທີ່ຕັ້ງ ຣຳຊາ ແຕ່ລະແຫ່ງ.

## 5.1 ສະຖານະພາບ ຂອງ ສະຖານທີ່ຕັ້ງ ຣຳຊາ ໃນສະພາບແວດລ້ອມ ຂອງ ກົດໝາຍ ນິຕິບັນຍັດ ແຫ່ງຊາດ

ບັນຫາ ການພົວພັນກັນແລະກັນ ລະຫວ່າງ ພັນທະ ພາຍໃຕ້ ສົນທິສັນຍາ ຣຳຊາ, ບັນດາເງື່ອນໄຂ ມາດຕາ ຂອງກົດ ໝາຍ ນິຕິບັນຍັດ ແຫ່ງຊາດ ແລະ ອຳນາດ ເພື່ອເຮັດໃຫ້ ບັນດາລະບຽບການ ທີ່ສົ່ງຜົນກະທົບ ຕໍ່ ສະຖານທີ່ຕັ້ງ ຣາ ຊາ ເປັນ ບັນຫາພື້ນຖານ ທຳອິດ ທີ່ຈຳເປັນຕ້ອງໄດ້ຮັບການແກ້ໄຂ.

ລັດຖະທຳມະນູນ ແມ່ນຈະແຈ້ງ ທີ່ວ່າພັນທະ ໃນບັນດາ ຂໍ້ຕົກລົງ ຫຼາຍຝ່າຍ ດ້ານສິ່ງແວດລ້ອມ ທີ່ ສປປ ລາວ ເປັນພາຄີໜຶ່ງ ແມ່ນມີຜົນສັກສິດ ໂດຍກົງ ຢູ່ ໃນປະເທດ. ຢ່າງໃດກໍຕາມ, ວິທີທາງ ທີ່ແຕ່ລະມາດຕາ ເງື່ອນໄຂ ຂອງ ບັນດາ ຂໍ້ຕົກລົງເຫຼົ່ານີ້ ພົວພັນກັນແລະກັນ ກັບ ບັນດາມາດຕາ ຂອງ ກົດໝາຍນິຕິບັນຍັດ ແຫ່ງຊາດນັ້ນ ແມ່ນບໍ່ຄ່ອຍແຈ້ງ.

ສະຖານະພາບ ຂອງ ບັນດາສະຖານທີ່ຕັ້ງ ຣຳຊາ ແມ່ນຖືກກຳນົດ ໂດຍ ລະບຽບການ ບົນພື້ນຖານສະຖານທີ່. ຣຳ ຊາ ແລະ CBD ແມ່ນ ຂໍ້ຕົກລົງ ສາກົນ ທີ່ໃຊ້ ແລະ ສອງກົດໝາຍນິຕິບັນຍັດ ແຫ່ງຊາດ ທີ່ ຄວບຄຸມ ບົນພື້ນຖານ ສະຖານທີ່ ແມ່ນ ສອດຄ່ອງ ກັບ ບັນດາ ຂໍ້ຕົກລົງສາກົນ ເຫຼົ່ານັ້ນ. ພັນທະ ທຳອິດ ຂອງ ພາຄີ ຂອງ ສົນທິສັນຍາ ຣຳຊາ ແມ່ນ ການອະນຸລັກ ບັນດາເຂດ ຣຳຊາ ຂອງຕົນ ແລະ ການສະຫຼາດໃຊ້ ທີ່ດິນບໍລິເວນນໍ້າ ຂອງຕົນ ໂດຍລວມ. ກົດໝາຍ ວ່າດ້ວຍ ສັດນໍ້າ ແລະ ສັດປ່າ ລະບຸວ່າ ບັນດາ ອົງການຂອງ ລັດຖະບານຂັ້ນສູນກາງ ຖືກຖື ວ່າ ຈະຮ່ວມມືກັບ ບັນດາ ອົງການທ້ອງຖິ່ນ ເພື່ອ ລະບຸ "ເຂດອະນຸລັກ". ກົດໝາຍ ວ່າດ້ວຍ ສັດນໍາ ແລະ ສັດປ່າ ກນິຍາມ ການອະນຸລັກ ດ້ວຍວິທີ ທີ່ເສີມເຕີມ ໃຫ້ແກ່ ຄຳນິຍາມ " ການໃຊ້ແບບອະນຸລັກ" ຂອງ ຣຳຊາ ແລະ ການ ເກືອດຫ້າມ ຢູ່ ໃນ ກົດໝາຍທີ່ດິນ ຕໍ່ບັນດາກິດຈະກຳ ທີ່ບໍ່ສາມາດ ດຳເນີນການ ຢູ່ ໃນທີ່ດິນ ບໍລິເວນນໍ້າ ກໍ ສອດຄ່ອງ ກັບ ' Wise Use " ຂອງ ສົນທິສັນຍາ Ramsar.

ກົງກັນຂ້າມ, ກົດໝາຍ ປ່າໄມ້ - ໃນຂະນະທີ່ ມັນຄວບຄຸມ ໂດຍອີງຕາມ ສະຖານທີ່ - ກັບບໍ່ໃຫ້ຄຳນິຍາມ "ການ ອະນຸລັກ" ແລະ ນິຍາມ "ທີ່ດິນປ່າໄມ້" ທີ່ໝາຍຄວາມວ່າ ຕອນໃດຕອນໜຶ່ງ, ບໍ່ວ່າຈະມີ ປ່າໄມ້ປົກຫຸ້ມ ຫຼືບໍ່ມີກໍ ຕາມ, ທີ່ ລັດຖະບານ ປະກາດໃຫ້ເປັນ ທີ່ດິນປ່າໄມ້. ອາດເປັນໄປໄດ້ ເໜືອນກັນ ວ່າ ພື້ນທີ່ໃດໜຶ່ງ ທີ່ຖືກ

ສະຫງວນ ພາຍໃຕ້ກົດໝາຍ ປະເພນີ - ປ່າສັກສິດ ແລະ ປ່າຊ້າ-ອາດຈະ ຖືກຈັດ ໃຫ້ເປັນ ໝວດ(ປະເພດຮອງ) ຂອງປ່າ ປ້ອງກັນ ພາຍໃຕ້ ກົດໝາຍປ່າໄມ້ ໂດຍອັດຕະໂນມັດ (ເບິ່ງ ຂໍ້ 5.4, ຂ້າງລຸ່ມນີ້).

ເພື່ອຮັບປະກັນໃຫ້ ການຄຸ້ມຄອງ ທີ່ດິນບໍລິເວນນໍ້າ ແລະ ຄຸ້ມຄອງ ບັນດາສະຖານທີ່ຕັ້ງ ຣຳຊາ ທັງໝົດ ໃນ ປັດຈຸບັນ ແລະ ໃນອະນາຄົດ ໃນປະເທດ ສອດຄ່ອງ ກັບ ບັນດາຫຼັກການ ແລະ ທິດນຳ ຂອງ ຣຳຊາ, ຈຶ່ງຂໍແນະນຳ ວ່າ ດຳລັດນາຍົກລັດຖະມົນຕີ:

- ລະບຸ ຢ່າງຊັດເຈນວ່າ ລະບົບນິເວດ ຂອງທີ່ດິນບໍລິເວນນໍ້າ ໃນ ສປປ ລາວ ຄວນຖືກຈັດການ ໃຫ້ ສອດຄ່ອງກັບ ຂໍ້ແນະນຳ *wise use* ທີ່ຖືກຮັບຮອງ ເອົາ ໂດຍ ຣຳຊາ ແລະ ໃຫ້ ລະບຽບການ ເຈາະຈົງ ໃສ່ ແຕ່ລະ ເຂດ ຣຳຊາ ຈະໃຊ້ ບັນດາກົດໝາຍ ຂອງຂະແໜງການ ແຫ່ງຊາດ ໄປຕາມແຕ່ລະກໍລະນີ ໂດຍທີ່ວ່າ ບັນດາມາດຕາເງື່ອນໄຂ ຂອງພວກມັນ ສອດຄ່ອງ ກັບຄູ່ມື *wise use* ພາຍໃຕ້ ຣຳຊາ; ແລະ
- ລະບຸ ຊັດເຈນວ່າ ເຊຈຳພອນ ແລະ ບັນດາສະຖານທີ ຣຳຊາ ທັງໝົດ ໃນປັດຈຸບັນ ແລະ ໃນ ອະນາຄົດ ໃນປະເທດ ແມ່ນຖືກ ຍົກເວັ້ນ ຈາກການຈະຖືກ ປະກາດ ໃຫ້ເປັນ ”ທີ່ດິນປ່າໄມ້” ເພື່ອຈຸດປະສົງ ຂອງ ກົດໝາຍປ່າໄມ້, ເພື່ອວ່າພວກມັນ ຈະສາມາດ ໄດ້ຮັບການຄຸ້ມຄອງ ແບບເອກະລາດ ຄືກັບ ລະບົບນິເວດ ທີ່ດິນ ບໍລິເວນນໍ້າ ພາຍໃຕ້ ລະບຽບການ ສະເພາະ ທີ່ຈະຖືກຮັບຮອງ ໂດຍ ຄະນະກຳມະການແຂວງ ແລະ ກຳມະການ ແຫ່ງຊາດ ແລະ ຫຼີກລຽງ ຂໍ້ຂັດແຍ້ງ ໃດໆ ກັບ ກົດໝາຍ ປ່າໄມ້.

## 5.2 ອີງການທີ່ຈະ ຮັບຮອງ ເອົາ ລະບຽບການ ທີ່ໃຊ້ ກັບ ສະຖານທີ່ຕັ້ງ ຣຳຊາ

ລະບຽບການ ສຳລັບ ບ້ານທີ່ຢູ່ ໃນ ແລະ ອ້ອມ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ທັງໝົດ ຫົກ ສະບັບ ທີ່ໄດ້ຖືກ ຮັບຮອງເອົາ ເມື່ອບໍ່ດົນມານີ້ ໄດ້ຮັບການອະນຸມັດ ຢູ່ຂັ້ນເມືອງ. ໄດ້ມີການລາຍງານວ່າ ກອງເລຂານຸການ ແລະ ໜ່ວຍງານ ຈັດຕັ້ງປະຕິບັດ ຂອງແຂວງ ທີ່ຮັຍຜິດຊອບ ໃນການຄຸ້ມຄອງ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ໄດ້ມີ ສ່ວນຮ່ວມ ໃນຂະບວນການສ້າງ ແລະ ການອະນຸມັດ ລະບຽບການ ສຳລັບບ້ານ, ເຖິງແມ່ນວ່າ ບໍ່ມີຈັກຄົນ ຈາກ ຄະນະກຳມະການ ແຂວງ ທີ່ຮັບຜິດຊອບ ຣຳຊາ ເປັນຜູ້ເຊັນ ລະບຽບການເຫຼົ່ານັ້ນ ກໍຕາມ. ບໍ່ເປັນທີ່ຊັດເຈນວ່າ ຄະນະກຳມະການ ແຂວງ ໄດ້ຮັບ ການປຶກສາຫາລື ຫຼື ໃຫ້ການອະນຸມັດ ຂອງຕົນ ຫຼືບໍ່. ທຸກໆລະບຽບການ ສຳ ລັບບ້ານ ທີ່ຢູ່ໃນ ສະຖານທີ່ຕັ້ງ ຣຳຊາ ໃດໜຶ່ງ ຄວນໄດ້ຮັບ ການອະນຸມັດ ຈາກຄະນະກຳມະການ ແຫ່ງຊາດ. ນີ້ ແມ່ນລວມທັງ ບັນດາລະບຽບການ ທີ່ມີຢູ່ ແລະ ທຸກການ ດັດແກ້ ທີ່ມີຕໍ່ ລະບຽບການເຫຼົ່ານັ້ນ, ແລະ ທຸກໆ ລະບຽບການ ທີ່ໄດ້ເຮັດ ໃນຕໍ່ໜ້າ.

- ດຳລັດນາຍົກລັດຖະມົນຕີ ທີ່ສະເໜີນັ້ນ ຕ້ອງເຮັດໃຫ້ເຂົ້າໃຈງ່າຍ ກ່ຽວກັບສາຍພົວພັນ ລະຫວ່າງ ຄະນະ ກໍມະການ ແຫ່ງຊາດ, ກອງເລຂານຸການ ແລະ ຄະນະໜ່ວຍງານຈັດຕັ້ງປະຕິບັດ ຂອງ ແຂວງ ສຳລັບ ສະຖານທີ່ຕັ້ງ ຣຳຊາ ແລະ ອຳນາດການປົກຄອງ ເມືອງ ກ່ຽວກັບ ສະຖານທີ່ຕັ້ງ ຣຳຊາ. ເລື່ອງນີ້ເປັນສິ່ງຈຳ ເປັນ ເພື່ອຫຼີກລຽງ ການຊໍ້າຊ້ອນ ຫຼື ຂັດແຍ້ງກັນ ເຂດອຳນາດໃນການຄວບຄຸມ ແລະ ພາລະບົດບາດ ທີ່ ສາມາດ ມີຜົນກະທົບທາງລົບ ຕໍ່ການຄຸ້ມຄອງ ສະຖານທີ່ຕັ້ງ ຣຳຊາ. ດຳລັດນາຍົກລັດຖະມົນຕີ ທີ່ສະເໜີ ນີ້ ຄວນລະບຸເໝືອນກັນ ວ່າ ການໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບ ສາຍພົວພັນ ດ້ານ ຂອບເຂດອຳນາດ ຕ້ອງ ຖືກແຈ້ງໂດຍກົງ ໄປຍັງອຳນາດການປົກຄອງ ຂອງ ທຸກໆແຂວງ ທີ່ກ່ຽວຂ້ອງ. ຄວາມ

## 5.3 ຄວາມຂັດແຍ່ງ ທີ່ອາດເກີດຂຶ້ນ ລະຫວ່າງ ກົດໝາຍ ນິຕິບັນຍັດ ແຫ່ງຊາດ, ກົດໝາຍປະເພນີ ແລະ ລະບຽບການຂອງບ້ານ: ການຫ້າມ ແລະ ການຈຳກັດ ກ່ຽວກັບ ການລ່າສັດ ແລະ ການຫາປາ

ຢູ່ ສະຖານທີ່ຕັ້ງ ຮຳຊາ ເຊຈຳພອນ, ກົດໝາຍປະເພນີ ແລະ ລະບຽບການ ຂອງ ບ້ານ ຄຸ້ມຄອງ ການລ່າສັດ ແລະ ການຫາປາ ໂດຍພື້ນຖານ ແມ່ນອີງຕາມສະຖານທີ່ ຍົກເວັ້ນ ແຕ່ ລະບຽບການ ຂອງບ້ານ ທີ່ຄຸ້ມຄອງ ແຂ້ ສະຫຍາມ. ກົດໝາຍ ນິຕິບັນຍັດ ແຫ່ງຊາດ ຄຸ້ມຄອງ ການລ່າສັດ ແລະ ການຫາປາ ບົນພື້ນຖານ ຊະນິດພັນ ແລະ ບົນພື້ນຖານ ສະຖານທີ່. ກົດໝາຍ ປະເພນີ ທີ່ຄຸ້ມຄອງ ການ ລ່າສັດ ແລະ ການຫາປາ ໃນບ້ານທີ່ໄດ້ລົງສຳຫຼວດ ສາມາດ ເວົ້າໄດ້ວ່າ ສອດຄ່ອງ ກັບ ບັນດາເງື່ອນໄຂ  ສຳລັບ ການໃຊ້ແບບປະເພນີ ແລະ ໃຊ້ແບບຄົວເຮືອນ ທີ່ໄດ້ລະບຸໄວ້ ໃນກົດໝາຍວ່າດ້ວຍ ສັດນ້ຳ ແລະ

ກົດໝາຍ ນິຕິບັນບັດ ອະນຸຍາດ ການໃຊ້ແບບປະເພນີ ແລະ ແບບຄົວເຮືອນ ມີແຕ່ຊະນິດພັນ ທີ່ຢູ່ໃນໝວດ II ແລະ ໝວດ III ເທົ່ານັ້ນ. ມີແຕ່ບ້ານດຽວ ໃນຈຳນວນບ້ານ ທີ່ໄດ້ລົງສຳຫຼວດ ຢູ່ໃນ ສະຖານທີ່ຕັ້ງ ຮຳຊາ ເຊຈຳພອນ ໄດ້ລາຍງານ ທຸກໆການ ປົກປັກຮັກສາ ແຂ້ ສະຫຍາມ ດ້ວຍປະເພນີ.   ເມື່ອຄຳນຶງເຖິງຜົນ ຂອງ ໂຄງການນີ້ແລ້ວ, ບໍ່ປະກົດວ່າ ຈະມີພື້ນຖານອັນໃດ ສຳລັບ ຄວາມຂັດແຍ້ງ ລະຫວ່າງ ກົດໝາຍ ນິຕິບັນຍັດແຫ່ງຊາດ, ກົດໝາຍ ປະເພນີ ແລະ ລະບຽບການຂອງບ້ານ ທີ່ມີຢູ່ໃນປັດຈຸບັນ ແລະ ໃນຕໍ່ໜ້າ ຕາບໃດ ທີ່ການລ່າສັດ ແລະ ການຫາປາ ຢູ່ ໃນສະຖານທີ່ຕັ້ງ ຮຳຊາ ມີການຄວບຄຸມ ບົນພື້ນຖານ ຊະນິດພັນ.

ເຖິງຢ່າງໃດກໍຕາມ, ຖ້າວ່າ ທັງໝົດ ຂອງສະຖານທີ່ຕັ້ງ ຮຳຊາ ຫາກຖືກຄວບຄຸມ ບົນພື້ນຖານ ສະຖານທີ່, ຄືກັບ ” ເຂດອະນຸລັກ” ພາຍໃຕ້ ກົດໝາຍ ວ່າດ້ວຍສັດນ້ຳ ແລະ ສັດປ່າ, ການເກືອດຫ້າມ ໂດຍທົ່ວໄປ ຂອງກົດໝາຍ ສຳລັບການ ລ່າສັດ ແລະ ການຫາປາ ໃນເຂດ ອະນຸລັກ ກໍຈະມີຜົນຕໍ່ທັງໝົດ ຂອງເຂດບ້ານ ທີ່ຕັ້ງຢູ່ ຂ້າງໃນ ຂອງ ສະຖານທີ່ຕັ້ງ ຮຳຊາ.  ນີ້ຈະລົບລ້າງການຮັບຮູ້ ແບບປະເພນີ ກ່ຽວກັບ  ຂໍ້ຈຳກັດຕ່າງໆ ແລະ ລະດັບ ຂອງການປົກປັກຮັກສາ ທີ່ສອດຄ່ອງ ກັບສະຖານທີ່ຕ່າງໆ ຢູ່ໃນບ້ານ. ນອກຈາກນັ້ນ ມັນຍັງຈະ ຄອບງຳ ບັນດາຂໍ້ຫ້າມ ສະເພາະ ເຂດ ສຳລັບ ເຂດອະນຸລັກ ທີ່ໄດ້ຖືກສ້າງຂຶ້ນ ພາຍໃຕ້ ລະບຽບການ ຢູ່ໃນບ້ານທັງຫຼາຍ ທີ່ຢູ່ໃນ ແລະອ້ອມແອ້ມ ສະຖານທີ່ຕັ້ງ ຮຳຊາ ເຊຈຳພອນ.

ເບິ່ງຄຳສະເໜີແນະ ພາຍໃຕ້ ຂໍ້ 5.1, ຂ້າງເທິງ. ຖ້າວ່າ ສິ່ງເຫຼົ່ານີ້ ໄດ້ບັນຈຸຢູ່ໃນ ດຳລັດນາຍົກລັດຖະມົນຕີ, ບັນດາ ລະບຽບການ ສຳລັບ ສະຖານທີ່ຕັ້ງ ຮຳຊາ ຈະສາມາດຄຸ້ມຄອງ ການລ່າສັດ ແລະ ການຫາປາ ໂດຍເອົາຊະນິດພັນ ເປັນພື້ນຖານ. ນີ້ຈະສອດຄ່ອງ ຢ່າງເຕັມສ່ວນ ກັບກົດໝາຍ ແຫ່ງຊາດ ທີ່ຄຸ້ມຄອງ ບັນດາຊະນິດພັນ ທີ່ໄດ້ຮັບການ ປົກປັກຮັກສາ ໂດຍລວມ. ນອກຈາກນັ້ນ, ມັນຍັງຈະສອດຄ່ອງ ກັບລະບຽບການ ຂອງບ້ານ ທີ່ຢູ່ໃນ ແລະ ອ້ອມແອ້ມ ເຂດ ຮຳຊາ ເຊຈຳພອນ ທີ່ຫ້າມທຸກການກະທຳ ທີ່ສົ່ງຜົນກະທົບ ຕໍ່ ແຂ້ ສະຫຍາມ ບໍ່ວ່າ ແຂ້ ຢູ່ໃນ ຫຼື ຢູ່ນອກ ເຂດອະນຸລັກ ທີ່ຖືກກຳນົດ ພາຍໃຕ້ ລະບຽບການເຫຼົ່ານັ້ນ. ມັນຍັງຈະສອດຄ່ອງ ກັບການທີ່ ຂໍ້ຫ້າມ ແລະ ຂໍ້ຈຳກັດ ສະເພາະແຕ່ລະສະຖານທີ່ຕັ້ງ ທີ່ມີຄວາມແຕກຕ່າງກັນໄປ ຕາມປະເພນີ ໃນແຕ່ລະບ້ານ ທີ່ຢູ່ໃນ ເຂດ ຮຳຊາ , ແລະ ຈະອະນຸຍາດ ໃຫ້ມີ ລະບຽບການ ສະເພາະສະຖານທີ່ຕັ້ງອື່ນໆ ຢູ່ໃນ ບັນດາເຂດ ຮຳຊາ ແຫ່ງອື່ນໆ.

## 5.4 ສະຖານະພາບ ຂອງ ປ່າສັກສິດ ແລະ ປ່າຊ້າ ຂອງບ້ານ

ກົດໝາຍ ປ່າໄມ້ ແລະ ດຳລັດວ່າດ້ວຍ ການປົກປັກຮັກສາ ປ່າໄມ້ ບໍ່ຊັດແຈ້ງ ກ່ຽວກັບບັນຫາ.

ຖ້າວ່າ ທຸກໆປ່າສັກສິດ ແລະ ປ່າຊ້າ ຖືກຮັບຮູ້ ໂດຍອັດຕະໂນມັດ ໃຫ້ເປັນ ປ່າອະນຸລັກ ຂອງບ້ານ, ເຊິ່ງເປັນປະເພດຍ່ອຍ ຂອງ ປ່າປ້ອງກັນ ພາຍໃຕ້ ກົດໝາຍປ່າໄມ້ ແລະ ບັນດາ ດຳລັດຈັດຕັ້ງປະຕິບັດ ຂອງມັນ, ກໍໝາຍຄວາມວ່າ ມີປ່າໄມ້ 12 ເຂດ ເປັນປ່າປ້ອງກັນ ທາງກົດໝາຍ ນິຕິບັນຍັດ ທີ່ຢູ່ໃນ ສະຖານທີ່ຕັ້ງ ຮຳຊາ ເຊຈຳພອນ ເຊິ່ງຕ້ອງຢູ່ໃຕ້ ຂໍ້ຫ້າມ ທີ່ເປັນກົດໝາຍ ກ່ຽວກັບການໃຊ້ ເຄື່ອງປ່າ ຂອງດົງ.

ໃນຂະນະ ທີ່ ກົດໝາຍປ່າໄມ້ ຮັບຮູ້ ການໃຊ້ປ່າໄມ້ ແລະ ຜະລິດຕະພັນປ່າໄມ້ ແບບປະເພນີ, ກົດໝາຍສະບັບນີ້ ກໍອະນຸຍາດ ໃຫ້ມີການໃຊ້ແບບນີ້ ສະເພາະແຕ່ຢູ່ ໃນປ່າ ທີ່ບໍ່ຖືກກໍານົດ ໃຫ້ເປັນປ່າປ້ອງກັນ, ປ່າອະນຸລັກ ຫຼື ປ່າ ຜະລິດ. ຖ້າວ່າປ່າສັກສິດ ແລະ ປ່າຊ້າ ບໍ່ຖືກກໍານົດ ໃຫ້ເປັນ ປ່າປ້ອງກັນ, ປ່າອະນຸລັກ ແລະປ່າ ຜະລິດ. ໃນຂະນະ ທີ່ກົດໝາຍປ່າໄມ້ ຮັບຮູ້ ຜະລິດຕະພັນ ປ່າໄມ້, ມັນກໍອະນຸຍາດ ການໃຊ້ ດັ່ງກ່າວ ສະເພາະແຕ່ຢູ່ໃນປ່າ ທີ່ບໍ່ຖືກກໍາ ນົດ ໃຫ້ເປັນປ່າປ້ອງກັນ, ປ່າອະນຸລັກ ແລະ ປ່າຜະລິດ ເທົ່ານັ້ນ. ຖ້າວ່າ ປ່າສັກສິດ ແລະ ປ່າຊ້າ ຖືກຈັດໃຫ້ເປັນ ປະເພດຍ່ອຍ ຂອງປ່າປ້ອງກັນ ໂດຍອັດຕະໂນມັດ, ການລົງໂທດສໍາລັບ ການລ່ວງລະເມີດ ກົດໝາຍປ່າໄມ້, ໂດຍ ສະເພາະ ໃນກໍລະນີ ເຄື່ອງປ່າຂອງດົງ ເປັນມູນຄ່າສູງ ແລະ ຈະເປັນພາລະແບກຫາບທີ່ສໍາຄັນ ໃຫ້ແກ່ປະຊາຊົນໃນ ເຂດ ເຊຈໍາພອນ ແລະ ເຂດ ຣໍາຊາ ແຫ່ງອື່ນໆ ທີ່ອາໄສ ການໃຊ້ ເຄື່ອງປ່າຂອງດົງ ແລະ ຜະລິດຕະພັນ ທີ່ດິນ ບໍລິເວນນໍ້າ ອື່ນໆ ເພື່ອລ້ຽງຊີບພໍກຸ້ມກິນ.

- ເບິ່ງຄໍາສະເໜີແນະ ໃນຂໍ້ 5.1, ຂ້າງເທິງ. ດໍາລັດນາຍົກລັດຖະມົນຕີ ຄວນລະບຸວ່າ ເຂດສະຫງວນ(ເຂດທີ່ ໄດ້ຮັບການປົກປັກຮັກສາ) ແບບປະເພນີ, ລວມທັງ ປ່າສັກສິດ ແລະ ປ່າຊ້າ, ທີ່ຢູ່ໃນ ບັນດາເຂດ ຣໍາຊາ. ດໍາລັດນາຍົກ ລັດຖະມົນຕີ ຄວນລະບຸ ວ່າ ປ່າສະຫງວນ ແບບປະເພນີ, ເຊິ່ງລວມທັງ ປ່າສັກສິດ ແລະ ປ່າຊ້າ ທີ່ຢູ່ໃນ ເຂດ ຣໍາຊາ ແມ່ນຖືກຍົກເວັ້ນ ຈາກການຈັດປະເພດ ພາຍໃຕ້ ກົດໝາຍປ່າໄມ້ ເພື່ອໃຫ້ ປ່າ ຈໍາພວກນັ້ນ ສາມາດໄດ້ຮັບການຄຸ້ມຄອງ ແບບເອກະລາດ ພາຍໃຕ້ ລະບຽບການ ສໍາລັບ ເຂດ ຣໍາຊາ ແຕ່ ລະແຫ່ງ ແລະ ກົດໝາຍປະເພນີ ໃນທ້ອງຖິ່ນ, ເພາະສະນັ້ນ ຈະເປັນການຫຼີກລຽງ ທຸກໆຄວາມຂັດແຍ້ງ ກັບ ກົດໝາຍ

## 5.5 ຄວາມຂັດແຍ້ງ ທີ່ອາດເກີດຂຶ້ນ ລະຫວ່າງ ກົດໝາຍນິຕິບັນຍັດ ແຫ່ງຊາດ, ກົດໝາຍປະເພນີ ແລະ ລະບຽບການຂອງບ້ານ - ການປັບໃໝ ແລະ ໂທດອື່ນໆ

ການປັບໃໝແບບປະສົມ, ໂດຍສະເພາະ ສໍາລັບການລ່ວງລະເມີດໃນການຫາປາ, ຊີ້ໃຫ້ເຫັນວ່າ ກົດໝາຍປະເພນີ ໄດ້ສ້າງ ກົນໄກໜຶ່ງຂຶ້ນມາແລ້ວ ເພື່ອລວບລວມ ລັກສະນະສະເພາະ ທາງປະເພນີເຂົ້າເປັນອັນລວມ. ນີ້ສາມາດເປັນ ພື້ນຖານໃຫ້ແກ່ ການສ້າງ ໂຄງປະກອບ ຂອງຄ່າປັບໃໝ ສໍາລັບ ການລ່ວງລະເມີດ ຢູ່ສະຖານທີ່ຕັ້ງ ຣໍາຊາ ເຊຈໍາ ພອນ, ແລະ ສະຖານທີ່ຕັ້ງ ຣໍາຊາ ແຫ່ງອື່ນໆ, ທີ່ຈະສອດຄ່ອງ ທັງສອງ ກົດໝາຍ ຄື ກົດໝາຍ ນິຕິບັນຍັດ ແລະ ກົດໝາຍປະເພນີ ຂອງທ້ອງຖິ່ນ.

### 5.5.1 ຄ່າປັບໃໝ

ມີສິ່ງທີ່ບໍ່ທໍາມະດາ ຢ່າງໜຶ່ງ ໃນໂຄງປະກອບ ຂອງ ຄ່າປັບໃໝ ພາຍໃຕ້ກົດໝາຍ ວ່າດ້ວຍ ສັດນໍ້າ ແລະ ສັດປ່າ. ຄ່າປັບໃໝສໍາລັບ ການເຮັດຄວາມຜິດເທື່ອໃໝ່ ທີ່ກ່ຽວຂ້ອງ ກັບ ສັດປ່າ ທີ່ຈັດຢູ່ໃນໝວດ III ໜ້ອຍກວ່າ ຄ່າປັບໃ ໝ ສໍາລັບ ການເຮັດຄວາມຜິດເທື່ອທໍາອິດ. ຂໍສະເໜີແນະ ໃຫ້ທົບທວນດັດແກ້ ໃນການດັດແກ້ ກົດໝາຍ ໃນຕໍ່ ໜ້າ.

ພາຍໃຕ້ກົດໝາຍ ປະເພນີ ຢູ່ໝົດທຸກບ້ານ ທີ່ໄດ້ລົງສໍາຫຼວດ ຢູ່ໃນ ແລະ ຢູ່ອ້ອມແອ້ມ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາ ພອນ, ບໍ່ມີການຈໍາແນກ ກ່ຽວກັບ ຄ່າປັບໃໝ: ຄ່າປັບໃໝ ດຽວກັນ ສໍາລັບ ຄົນພາຍນອກ ຄືກັບຄ່າປັບໃໝ ສໍາລັບ ປະຊາຊົນໃນບ້ານ. ເພາະສະນັ້ນ, ຈຶ່ງບໍ່ມີບັນຫາ ຫຼັກການນິຕິທໍາ ກ່ຽວກັບ ຄ່າປັບໃໝ ແບບປະເພນີ. ຄ່າປັບໃໝ ນັ້ນແມ່ນ ຖືກໃຊ້ແບບສະເໝີພາບກັນໝົດທຸກຄົນ ທີ່ລະເມີດກົດໝາຍ.

ຄ່າປັບໃໝ ພາຍໃຕ້ ລະບຽບການຂອງບ້ານ ທີ່ຢູ່ຂ້າງໃນ ຂອງ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ ທີ່ຫາກໍຖືກຮັບຮອງ ເອົາເມື່ອບໍ່ດົນມານີ້ ແຕກຕ່າງກັນ ຫຼາຍ ຈາກບ້ານສູ່ບ້ານ. ການລະເມີດ ເທື່ອທໍາອິດ ສໍາລັບ ການຫາປາ ດ້ວຍການ ໃຊ້ວິທີການ ທີ່ຖືກຫ້າມ ຢູ່ ບ້ານ ຕາແຫຼວ/ນາຕ່າຍ ແມ່ນສາມເທົ່າ ຂອງຄ່າປັບໃໝ ສໍາລັບ ການເຮັດຄວາມຜິດ

ແບບດຽວກັນ ຢູ່ບ້ານ ຕານສຸມ. ຄ່າປັບໃໝ ສໍາລັບການເຮັດຄວາມຜິດ ເທື່ອທໍາອິດ ໃນການເອົານໍ້າ ຢູ່ ບ້ານ ກະດັນ ແມ່ນ ສອງເທົ່າ ຂອງຄ່າປັບໃໝ ສໍາລັບ ການເຮັດຄວາມຜິດແບບດຽວກັນ ຢູ່ບ້ານ ຕານສຸມ. ເພາະວ່າ ຄ່າປັບໃໝ ມີຜົນເທົ່າກັນ ຕໍ່ພວກຊາວບ້ານ ແລະ ຄົນພາຍນອກ, ໂຄງປະກອບ ຂອງ ຄ່າປັບໃໝ ສ້າງສິ່ງຈູງໃຈ ທີ່ໄປທາງກົງກັນຂ້າມ ໃຫ້ລະເມີດ ລະບຽບການ ຢູ່ບ້ານຕານສຸມ ກວ່າຢູ່ບ້ານ ກະດັນ.

ຄ່າປັບໃໝ ພາຍໃຕ້ ລະບຽບການ ຂອງບ້ານ ບໍ່ສອດຄ່ອງ ກັນ ໃນທຸກໆ ກໍລະນີ ກັບຄ່າປັບໃໝ ພາຍໃຕ້ ກົດໝາຍນິຕິບັນຍັດ ແຫ່ງຊາດ. ຄ່າປັບໃໝ ສໍາລັບ ການລະເມີດ ໃນການລ່າສັດ ແລະ ຫາປາ ພາຍໃຕ້ ລະບຽບການ ຂອງບ້ານ ແມ່ນເຈາະຈົງໃສ່ແຕ່ການລະເມີດ ແລະ ບໍ່ກ່ຽວຂ້ອງ ກັບ ມູນຄ່າຄວາມເສຍຫາຍ, ຄືກັບຄ່າປັບໃໝ ທີ່ຖືກສ້າງຂຶ້ນໂດຍ ກົດໝາຍ ວ່າດ້ວຍ ສັດນໍ້າ ແລະ ສັດປ່າ ແລະ ຄ່າປັບໃໝ ທີ່ວາງໂດຍ ລະບຽບການຂອງບ້ານ, ແຕ່ວ່ານັ້ນ ແມ່ນເປັນໄປບໍ່ໄດ້ ທີ່ຈະກໍານົດ ຢ່າງຊັດເຈນ ໂດຍບໍ່ຮູ້ ມູນຄ່າ ຂອງຄວາມເສຍຫາຍ ທີ່ການລະເມີດ ແຕ່ລະເທື່ອໄດ້ກໍ່ຂຶ້ນ ແລະ ໃນກໍລະນີ ຄ່າປັບໃໝ ສໍາລັບການລະເມີດເທື່ອທີສາມ ໃນການຫາປາ ຢູ່ ໜອງ ແມ່ ຮ້າງ, ບ້ານແກ້ງກອກ-ດົງ, ແມ່ນ ເທົ່າກັບມູນຄ່າ ຂອງ ຄວາຍຕົວໜຶ່ງ.

ໃນຫຼາຍໆບ້ານ ທີ່ຢູ່ໃນ ແລະ ອ້ອມ ເຂດ ຣໍາຊາ ເຊຈໍາພອນ, ແລະ ໃນກໍລະນີ ການຫາປາ ຢູ່ໃນບ້ານເຫຼົ່ານັ້ນສ່ວນຫຼາຍ, ຄ່າປັບໃໝ ສໍາລັບການລະເມີດ ກົດໝາຍປະເພນີ, ແມ່ນການສົມທົບ ຄ່າປັບໃໝ ແບບປະເພນີ ແລະ ແບບນິຕິບັນຍັດ: ຕົວຢ່າງ, ຄ່າປັບໃໝ ເປັນສັດຕົວໜຶ່ງ ແລະ ເຫຼົ້າຂາວ ໜຶ່ງກວດ. ຕາມການປຶກສາຫາລື ກັບ ພວກຊາວບ້ານ ທີ່ຢູ່ໃນ ແລະ ອ້ອມແອ້ມ ເຂດ ຣໍາຊາ, ເຫັນວ່າ ຈະເປັນການແນະນໍາທີ່ດີ ທີ່ຈະເຮັດໃຫ້ ໂຄງປະກອບສໍາລັບ ຄ່າປັບໃໝ ແບບປະສົມ ລວບລວມເອົາ ທັງ ແງ່ປະເພນີ ແລະ ແງ່ນິຕິບັນຍັດ ຂອງຄ່າປັບ ໃໝ ແລະໃຫ້ສອດຄ່ອງ ກັບກົດໝາຍ ນິຕິບັນຍັດ ແຫ່ງຊາດ ແລະ ກົດໝາຍປະເພນີ.

ຄ່າປັບໃໝເປັນເງິນ ຄວນຖືກສ້າງຂຶ້ນ ໃນລະດັບໃຫ້ເກີດ ການສະກັດກັ້ນ ທີ່ມີປະສິດທິຜົນ. ກົງກັນຂ້າມ ກັບການສ້າງ ຄ່າປັບໃໝ ມູນຄ່າເປັນເງິນຢ່າງຕາຍຕົວ, ເຊິ່ງອາດຈະ ຫຼຸດຄວາມໝາຍອັນແທ້ຈິງ ລົງຕາມເວລາ, ກໍໜ້າຈະເປັນຄໍາສະເໜີທີ່ດີ ທີ່ຈະພິຈາລະນາ ຄວາມເປັນໄປໄດ້ ຂອງການ ສະແດງອອກ ຄ່າປັບໃໝ ເປັນເງິນ ໃນແງ່ຂອງ ລາຍຮັບ ຂອງ ຜູ້ທີ່ລ່ວງລະເມີດ ຫຼື ບົນພື້ນຖານ ມູນຄ່າຕະຫຼາດ. ການເຮັດແນວນີ້ ຈະເປັນການປະກອບສ່ວນ ຕໍ່ການຮັບປະກັນໃຫ້ ຄ່າປັບໃໝ ໃຫ້ສົມສ່ວນ ກັບຄວາມອາດສາມາດ ດ້ານເສດຖະກິດ ຂອງຜູ້ລ່ວງລະເມີດ ແລະ / ຫຼືກັບມູນຄ່າ ຕົວຈິງ ໃນທ້ອງຕະຫຼາດ ຂອງ ຊັບພະຍາກອນ ທໍາມະຊາດ ທີ່ກ່ຽວຂ້ອງ. ກົດໝາຍປ່າໄມ້ ເຊິ່ງເອົາໃຈໃສ່ ຕໍ່ການກໍານົດ ຄ່າປັບໃໝ ບົນພື້ນຖານ ຂອງມູນຄ່າຕະຫຼາດ ຂອງ ຊັບພະຍາກອນທໍາມະຊາດ ທີ່ກ່ຽວຂ້ອງ, ເປັນຕົວຢ່າງໜຶ່ງທີ່ບອກວ່າ ບັນຫານີ້ສາມາດເຮັດໃຫ້ສໍາເລັດໄດ້ແນວໃດ.

ພາຍໃຕ້ລະບຽບການຂອງບ້ານ ທີ່ຢູ່ໃນ ແລະ ອ້ອມແອ້ມ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ, ດັ່ງດຽວກັບພາຍໃຕ້ກົດໝາຍ ປະເພນີ, ຄ່າປັບໃໝ ແມ່ນຖືກແບ່ງປັນ ໃນໝູ່ ຊາວບ້ານ. ພາຍໃຕ້ ກົດໝາຍນິຕິບັນຍັດ ແຫ່ງຊາດ, ຄ່າປັບ ໃໝ ແມ່ນຕ້ອງ ຖືກສົ່ງເຂົ້າຄັງເງິນ ແຫ່ງຊາດ. ບໍ່ຈະແຈ້ງວ່າ ອໍານາດການປົກຄອງ ທ້ອງຖິ່ນ ທີ່ຮັບຮອງລະບຽບການຂອງບ້ານ ມີອໍານາດ ເພື່ອຮັກສາໄວ້, ແລະ ແບ່ງປັນໃນທ້ອງຖິ່ນ, ເງິນທີ່ເກັບເປັນຄ່າປັບໃໝ.

- ດໍາລັດນາຍົກລັດຖະມົນຕີ ຄວນເຮັດໃຫ້ ມີໂຄງປະກອບ ສໍາລັບຄ່າປັບໃໝ ທີ່ເຈາະຈົງໃສ່ ແຕ່ລະສະຖານທີ່ຕັ້ງ ຣໍາຊາ ແລະ ທີ່ ສ້າງສິ່ງກົດໜ່ວງ ເຊິ່ງເຈາະຈົງໃສ່ ຄວາມອາດສາມາດ ດ້ານເສດຖະກິດຂອງຜູ້ລ່ວງລະເມີດ ແລະ/ຫຼື ເຈາະຈົງໃສ່ມູນຄ່າຕະຫຼາດ ຂອງ ຊັບພະຍາກອນ ທໍາມະຊາດ ທີ່ກ່ຽວຂ້ອງໃນການລະເມີດ.

- ດໍາລັດນາຍົກລັດຖະມົນຕີ ຄວນລະບຸ ຄ່າປັບໃໝ ພາຍໃຕ້ ລະບຽບການສໍາລັບ ແຕ່ລະສະຖານທີ່ຕັ້ງ ຣໍາຊາ ນັ້ນ ດັ່ງນີ້: ຄ່າປັບໃໝ ສໍາລັບການລະເມີດ ຢູ່ຂ້າງໃນຂອງເຂດ ຫຼື ບັນດາເຂດຫຼັກແຫຼ່ງ ສາມາດສູງ

ກວ່າ ການລະເມີດ ຢູ່ນອກເຂດຫຼັກແຫຼ່ງ, ແຕ່ວ່າ ຄ່າປັບໃໝນັ້ນ ຕ້ອງມີຄວາມເໝາະສົມສຳລັບແຕ່ລະປະເພດຂອງເຂດ.

- ດຳລັດນາຍົກລັດຖະມົນຕີ ຄວນລະບຸ ຢ່າງຊັດເຈນວ່າ ຄ່າປັບໃໝ ສຳລັບການລ່ວງລະເມີດ ລະບຽບການ ຂອງ ສະຖານທີ່ຕັ້ງ ຣຳຊາ ສາມາດ ຖືກເກັບໄວ້ ໂດຍ ອີງການຮັບຜິດຊອບ ຣຳຊາ ແຂວງ ແລະ ຖືກແບ່ງປັນ ໃນໝູ່ຊາວບ້ານ ແລະ/ຫຼື ຖືກຈັດສັນ ເປັນຄ່າ ໃຊ້ຈ່າຍ ໃນການຄຸ້ມຄອງ ບັນດາສະຖານທີ່ຕັ້ງຣຳຊາ. ບັນຫາ ນີ້ຈຳເປັນຕ້ອງມີ ການແຈ້ງສະລະສິດ ໃນການນຳໃຊ້ ກົດໝາຍ ງົບປະມານແຫ່ງລັດ.
- ທຸກລະບຽບການ ຂອງບ້ານທີ່ມີຢູ່ ຕ້ອງໄດ້ຮັບການທົບທວນຄືນ ແລະ ເຮັດໃຫ້ມີຄວາມສອດຄ່ອງ ກົມກຽວກັນ ກັບ ດຳລັດນາຍົກລັດຖະມົນຕີ ແລະ ກັບ ລະບຽບການ ສຳລັບ ສະຖານທີ່ຕັ້ງຣຳຊາ ເຊຈຳພອນ.

### 5.5.2 ການລົງໂທດອື່ນໆ

ມີແຕ່ກົດາຍແຫ່ງຊາດເທົ່ານັ້ນ ວາງໂທດ ອາຍາ ລັກສະນະ ນິຕິບັນຍັດ; ລະບຽບການຂອງບ້ານ ບໍ່ສາມາດ ປະຕິບັດສິ່ງດັ່ງກ່າວ. ການລົງໂທດ ຂອງ ວິນຍານ ທາງປະເພນີ ແມ່ນເທົ່າກັນກັບ ການລົງໂທດອາຍາ ພາຍໃຕ້ ກົດໝາຍນິຕິບັນຍັດ. ການລົງໂທດຂອງວິນຍານ. ການລົງໂທດ ທາງວິນຍານ ເປັນຕົວຢ່າງດຽວ ພາຍໃຕ້ກົດໝາຍປະເພນີຢູ່ໃນບ້ານ ທີ່ໄດ້ລົງສຳຫຼວດ ເຊິ່ງວ່າ ການລົງໂທດ ຕໍ່ຊາວບ້ານ ແລະ ຄົນນອກບ້ານ ແມ່ນແຕກຕ່າງກັນ. ກໍລະນີແບບນີ້ ມີຢູ່ແຕ່ສອງບ້ານເທົ່ານັ້ນ, ແລະຢູ່ບ້ານໜຶ່ງ ໃນນັ້ນ ການລົງໂທດທາງວິນຍານ ສຳລັບຊາວບ້ານ ແມ່ນຮ້າຍແຮງກວ່າ ການລົງໂທດ ສຳລັບຄົນນອກບ້ານ.

ເນື່ອງຈາກວ່າ ການລົງໂທດທາງວິນຍານ ແມ່ນການບັງຄັບໃຊ້ເອງ, ຂຶ້ນກັບຄວາມເຊື່ອ ຂອງຜູ້ເຮັດຄວາມຜິດ, ມັນເປັນໄປບໍ່ໄດ້ ທີ່ຈະລວບລວມພວກມັນ ເຂົ້າໃນ ດຳລັດນາຍົກລັດຖະມົນຕີ ທີ່ສະເໜີ ຫຼືວ່າ ໃນໃນທີ່ສຸດ ເຂົ້າໃນລະບຽບການສຳລັບ ສະຖານທີ່ຕັ້ງຣຳຊາ. ນີ້ ໝາຍຄວາມວ່າ "ອັນຕະລາຍ-ທົບສອງ" ແມ່ນເປັນໄປໄດ້: ຖືກຕັດສິນສອງເທື່ອ ສຳລັບ ການເຮັດຄວາມຜິດອັນດຽວກັນ ແລະ ທົນທຸກຕໍ່ໂທດ ທາງວິນຍານ ພາຍໃຕ້ ກົດາຍ ປະເພນີ ຕື່ມໃສ່ ການຖືກຕັດ ອິດສາລະພາບ ພາຍໃຕ້ ກົດໝາຍ ນິຕິບັນຍັດ ແຫ່ງຊາດ. ເຖິງແມ່ນວ່າ ເປັນສິ່ງບໍ່ເພິ່ງປາຖະໜາ ທີ່ຈະລົງໂທດ ຜູ້ເຮັດຜິດ ສອງເທື່ອ ສຳລັບການເຮັດຜິດອັຍດຽວກັນ, ໃນກໍລະນີສະເພາະ ຂອງ ການລົງໂທດທາງວິນຍານ ແມ່ນຫຼີກລຽງບໍ່ໄດ້, ເພາະວ່າ ຜົນກຳ ຂອງ ການລົງໂທດແບບນີ້ ຂຶ້ນກັບຄວາມເຊື່ອ ຂອງຜູ້ເຮັດຜິດ ເອງທັງນັ້ນ ແລະບໍ່ມີອິດທິພົນຈາກພາຍນອກແຕ່ຢ່າງໃດ.

'ຄົນພາຍນອກ', ຜູ້ທີ່ ບໍ່ຄ່ອຍຖືກກະທົບກະທົບ ຈາກ ກົນໄກ ການບັງຄັບໃຊ້ເອງ, ສ່ວນຫຼາຍຈະເປັນຜູ້ທີ່ ລະເມີດທັງ ກົດໝາຍປະເພນີ ແລະ ກົດໝາຍນິຕິບັນຍັດ. ພວກເຂົາ ຈິງໃຈຝ່າຝືນ ກົດປະເພນີ ເພື່ອໃຫ້ໄດ້ຮັບຜົນປະໂຫຍດ ທີ່ເຂົາສະແຫວງຫາ, ບໍ່ວ່າຈະແມ່ນ ການຕັດໄມ້ ຫຼື ຫາປາ, ໂດຍຈ່າຍເງິນຄ່າປັບໃໝ ຫຼືຂ້າຄວາຍ, ໝູ ຫຼື ໄກ່ລ້ຽງຜີ. ສະນັ້ນ, ດ້ານວິທີປະຕິບັດ ແມ່ນພວກເຂົາ ປະຕິບັດຕາມ ກົດໝາຍ, ແຕ່ວ່າ ສືບຕໍ່ລະເມີດ ເພາະພວກເຂົາເຂົ້າໃຈວ່າ ການລົງໂທດນັ້ນ ບໍ່ມີຄວາມໝາຍສຳຄັນ. ໃນໄລຍະ ການສຳຫຼວດ ກົດໝາຍ ປະເພນີ, ພວກຊາວບ້ານໄດ້ເລົ່າ ຕົວຢ່າງ ຂອງ ຄົນພາຍນອກ ທີ່ຕ້ອງໂທດທາງວິນຍານ, ເຊິ່ງມີຮອດການຕາຍ. ເຖິງຢ່າງໃດກໍຕາມ, ມັນເປັນໄປບໍ່ໄດ້ ທີ່ຈະກຳນົດວ່າ ຄົນພາຍນອກ ໝົດທຸກຄົນ ຜູ້ທີ່ລະເມີດກົດໝາຍປະເພນີ ນັ້ນຕ້ອງໂທດທາງວິນຍານແທ້ບໍ່. ພາຍໃຕ້ ກົດໝາຍ ນິຕິບັນຍັດ, ລວມທັງ ລະບຽບການ ສຳລັບ ສະຖານທີ່ຕັ້ງ ຣຳຊາ, ພວກຊາວບ້ານ ແລະ ຄົນພາຍນອກ ກໍຄືກັນ ຕ້ອງປະຕິບັດຕາມຢ່າງເຕັມສ່ວນ ບໍ່ສຳຄັນວ່າ ພວກເຂົາ ເຄົາຣົບ ກົດໝາຍປະເພນີ ຫຼືບໍ່ເຄົາຣົບ.

## 6. ຄວາມໝາຍສຳລັບລະບຽບການຂອງ ເຂດ ຣຳຊາ ເຊຈຳພອນ

ຂອບວຽກນິຕິກຳ ທີ່ຄຸ້ມຄອງ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ລວມມີ: ສົນທິສັນຍາ ຣຳຊາ; ບັນດາກົດໝາຍແຫ່ງຊາດຈຳນວນມາກມາຍ; ບັນດາດຳລັດລະດັບຊາດ ແລະ ລະດັບແຂວງ ທີ່ສ້າງຕັ້ງ ບັນດາອົງກອນທີ່ຄຸ້ມຄອງ; ບັນດາລະບຽບການ ຂອງບ້ານ ຈຳນວນໜຶ່ງ ທີ່ຢູ່ໃນ ແລະ ອ້ອມແອ້ມ ສະຖານທີ່ຕັ້ງຣຳຊາ; ແລະ , ສຳຄັນທີ່ສຸດ, ບັນດາກົດໝາຍປະເພນີ ທີ່ໄດ້ອະທິບາຍຢູ່ ຂໍ້ 5. ເພື່ອໃຫ້ ຂອບວຽກດັ່ງກ່າວນີ້ ມີປະສິດທິຜົນກວ່າເກົ່າ, ອົງກອນທີ່ມີຢູ່ແລ້ວນັ້ນ ຂອງ ກົດໝາຍນິຕິບັນຍັດ ຈຳເປັນຕ້ອງຖືກເສີມເຕີມ ໂດຍ ດຳລັດນາຍົກລັດຖະມນົຕີ ສະບັບໜຶ່ງ, ແລະເຊຈຳພອນ ກໍຄື ບັນດາສະຖານທີ່ຕັ້ງ ຣຳຊາ ແຫ່ງອື່ນໆ ຈຳເປັນຕ້ອງມີ ລະບຽບການສະເພາະສະຖານທີ່ຕັ້ງ.

ເມື່ອກົດໝາຍ ນິຕິບັນຍັດ - ໃນກໍລະນນີ້ ລະບຽບການ ສຳລັບ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ - ບັນດາອົງປະກອບທີ່ຖືກລວບລວມເຂົ້າກັນ ຂອງ ກົດໝາຍປະເພນີ, ຄວາມຮັບຮູ້ ແລະເຂົ້າໃຈ ຂອງປະຊາຊົນ ຕໍ່ທັງສອງລະບົບກົດໝາຍ ໄດ້ປ່ຽນແປງໄປ. ນີ້ເປັນເລື້ອງດີ ສຳລັບ ທັງສອງລະບົບກົດໝາຍ. ບົດສຶກສາ ຂອງ MoJ/UNDP ໄດ້ສະແດງໃຫ້ເຫັນ ພັນທະ ຂອງລັດຖະບານ ທີ່ຈະດຳເນີນການເລື້ອງນີ້ ຢ່າງແນ່ນອນ. ບົດສຶກສານີ້ ໄດ້ຊີ້ໃຫ້ເຫັນວ່າ ກົດໝາຍປະເພນີ ໄດ້ຮັບຮອງ ເອົາບາງ ລັກສະນະ ຂອງ ກົດໝາຍ ນິຕິບັນຍັດແລ້ວ, ສ້າງໃຫ້ເກີດ ຕົວຢ່າງ ທີ່ ວາ“ສາມາດ ຖືກນຳໃຊ້ ໃນການສ້າງ ລະບຽບການອອກມາ.

ບົດສຶກສານີ້ ໄດ້ຄົ້ນຄວ້າ ແລະ ວິເຄາະ ບັນດາ ອົງປະກອບ ຂອງການຄຸ້ມຄອງ: ກົດໝາຍປະເພນີ ແລະ ກົດໝາຍນິຕິບັນຍັດ ແລະ, ໃນລະດັບໜຶ່ງ, ບັນດາສະຖາບັນ ແລະ ຂະບວນການທີ່ ກຳນົດ ວ່າ ການຕັດສິນບັນຫາ ແມ່ນເຮັດແນວໃດ ທີ່ສົ່ງຜົນກະທົບຕໍ່ ຊັບພະຍາກອນທຳມະຊາດ ຂອງ ທີ່ດິນບໍລິເວນນໍ້າ ເຊຈຳພອນ ແລະ ປະຊາຊົນເພິ່ງພາອາໄສພວກມັນ. ບັນດາຫຼັກການ ຂອງ ການຄຸ້ມຄອງ - (ຄວາມຮັບຜິດຊອບ) ສາມາດກວດສອບໄດ້, ຄວາມໂປ່ງໃສ, ການມີສ່ວນຮ່ວມ, ແລະ ຫຼັກບັງຄັບແຫ່ງກົດໝາຍ - ຕ້ອງໄດ້ຮັບການນຳໄປພິຈາລະນາ ໃນການພັດທະນາ ບັນດາລະບຽບການ ສຳລັບ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ. ບັນດາຫຼັກການເຫຼົ່ານີ້ ມີຄວາມສຳຄັນໂດຍສະເພາະ ຢູ່ ເຊຈຳພອນ ຖ້າສົມທຽບຈຳນວນປະຊາກອນ ທີ່ມີຂ້ອນຂ້າງຫຼາຍ ທີ່ອາໄສ ຢູ່ໃນ ແລະ ອ້ອມຮອບ ສະຖານທີ່ຕັ້ງ: ປະຊາຊົນ 2.000 ກວ່າຄົນ, 40 ບ້ານ, ບໍ່ນັບຄົນທີ່ບໍ່ຢູ່ ປະຈຳທ້ອງຖິ່ນ ທີ່ມາທ່ຽວຢາມສະຖານທີ່ຕັ້ງນັ້ນ ເປັນປົກກະຕິ,

ໂດຍລວມ, ບັນດາລະບຽບການ ສຳລັບ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ຕ້ອງ:

- ສອດຄ່ອງກັບ ດຳລັດນາຍົກລັດຖະມົນຕີ ທີ່ສະເໜີ ເຊິ່ງຈະລວບລວມ ບັນດາພັນທະສາກົນ ໃນສົນທິສັນຍາ ຣຳຊາ, ແລະ ຄຳແນະນຳ ກ່ຽວກັບການໃຊ້ແບບອະນຸລັກ ທີ່ຖືກສ້າງຂຶ້ນມາ ພາຍໃຕ້ Ramsar, CITES ແລະ CBD;
- ສອດຄ່ອງ ກັບ ກົດໝາຍ ນິຕິບັນຍັດ ແຫ່ງຊາດ;
- ຊຸກຍູ້ ການຄໍ້າປະກັນ ດ້ວຍລັດຖະທຳມະນູນ ຕໍ່ຄວາມເປັນເອກະພາບ, ຄວາມສະເໝີພາບ, ບໍ່ຈຳແນກ ແລະ ເສລີພາບ ໃນການເຊື່ອຖື ລະຫວ່າງ ບັນດາກຸ່ມຊົນເຜົ່າ ທີ່ ອາໄສ ຢູ່ໃນ ຫຼື ອ້ອມຮອບ ສະຖານທີ່ຕັ້ງຣຳຊາ;
- ຊຸກຍູ້ ການຮັກສາ ດ້ານຕັ້ງໜ້າ ຂອງ ກົດໝາຍປະເພນີ ເພື່ອຮັບປະກັນ ໃຫ້ການລົງໂທດ ມີຄວາມເປັນທຳ; ແລະ
- ໃຫ້ບັນດາ ອົງການທີ່ຮັບຜິດຊອບ ສະຖານທີ່ຕັ້ງ ຣຳຊາ ໃນລະດັບແຂວງ ແລະ ເມືອງ ສາມາດປະສານງານ ກັບ ອຳນາດການປົກຄອງບ້ານ ເພື່ອສືບຕໍ່ ກຳນົດ ລະບຽບການ ສະເພາະບ້ານ ທີ່ອາດລວບລວມເອົາກົດໝາຍປະເພນີ ຂອງແຕ່ລະບ້ານ;

ໂດຍສະເພາະ, ລະບຽບການ ສຳລັບ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ ຕ້ອງ:

- ລວມເອົາບັນດາ ມາດຕາ ທີ່ສະທ້ອນອອກໃຫ້ເຫັນ ທັງໝົດ ຂອງພື້ນຖານ ສຳລັບ ລະບຽບການ ທີ່ພົບຢູ່ ໃນ ກົດໝາຍ ນິຕິບັນຍັດ ແຫ່ງຊາດ ໂດຍບໍ່ສ້າງຄວາມເສຍຫາຍ ແກ່ ກົດໝາຍປະເພນີ ແລະ *ກົງກັນຂ້າມ* ບັນດາກຸ່ມຊົນເຜົ່າ ທີ່ອາໄສຢູ່ ໃນ ເຂດເຂດ ຣຳຊາ ບໍ່ຄວນຖືກບັງຄັບ ໃຫ້ ລະຖິ້ມກົດໝາຍປະເພນີ ຂອງ ເຂົາເຈົ້າ ຖ້າວ່າ ຫຼື ຈົນເຖິງ ເຂົາເຈົ້າ ເປັນຜູ້ເລືອກເອງ. ດຳລັດນາຍົກລັດຖະມົນຕີ ທີ່ສະເໜີ ນັ້ນ ຈະສ້າງ ພື້ນຖານ ສຳລັບການແກ້ໄຂ ຄວາມຂັດແຍ້ງ ລະຫວ່າງ ບັນດາກົດໝາຍ ນິຕິບັນຍັດ ແລະ ສຳລັບ ການປັບ ໃຫ້ ຄວາມຂັດແຍ້ງທີ່ອາດເກີດຂຶ້ນ ລະຫວ່າງ ກົດໝາຍ ນິຕິບັນຍັດ ແລະ ກົດໝາຍປະເພນີເຂົ້າກັນໄດ້ ດ້ວຍວິທີ ທີ່ຮັບປະກັນ ໃຫ້ ເຂດ ຣຳຊາ ສາມາດຖືກນຳໃຊ້ ຢ່າງມີປະສິດທິຜົນ.
- ລວມເອົາ ມາດຕາໜຶ່ງ ທີ່ຕ້ອງຖືກ ທົບທວນຄືນພ້ອມກັບ ພວກຊາວບ້ານ ທີ່ອາໄສຢູ່ໃນ ເຂດສະຖານທີ່ ຕັ້ງ, ເພື່ອເຮັດສອງຢ່າງດັ່ງນີ້:
  1. ທົບທວນ ແລະ ສົມທຽບ ປະສົບການ ໃນການຈັດຕັ້ງປະຕິບັດ ບັນດາລະບຽບການ ໃນທຸກໆບ້ານ; ແລະ
  2. ຄົ້ນຄວ້າ ລະດັບ ຂອງການປ່ຽນແປງ ລັກສະນະ ນິເວດວິທະຍາ ຂອງ ເຂດ ຣຳຊາ, ຍ້ອນການ ປ່ຽນແປງ ຂອງພູມອາກາດ, ບັນດາກິດຈະກຳ ຢູ່ນອກ ເຂດ ຣຳຊາ ແລະ ທຸກໆປັດໃຈອື່ນໆ ທີ່ ອາດ ຈະໄດ້ສົ່ງຜົນກະທົບ ຕໍ່ການນຳໃຊ້ ຢ່າງມີປະສິດທິຜົນ ທີ່ດິນບໍລິເວນນໍ້າ , ບໍ່ວ່າຈະທາງບວກ ຫຼື ທາງ ລົບ.
- ນຳເອົາໄປພິຈາລະນາ ຄວາມຈຳເປັນ ເພື່ອບັນເທົາ ຜົນກະທົບ ຂອງ ບັນດາ ກິດຈະກຳ ທີໄດ້ຖືກດຳເນີນ ການ ຢູ່ນອກ ສະຖານທີ່ຕັ້ງ. ເຖິງແມ່ນວ່າ ບ້ານ ນານົກຂຽນ ຕັ້ງຢູ່ ນອກ ເຂດ ຣຳຊາ, ແຕ່ກໍ່ຢູ່ໃນຂອບ ເຂດອ່າງ ທີ່ລວມມີ ທີດິນບໍລິເວນນໍ້າ ເຊຈຳພອນ. ສະຖານະພາບ ພາຍໃຕ້ ກົດໝາຍ ນິຕິບັນຍັດແຫ່ງຊາດ ຂອງ ປ່າສະຫງວນ ຂອງເມືອງ ທີ່ມີເນື້ອທີ່ 100 ເຮັກຕາ ທີ່ໄດ້ຖືກຈັດສັນໃຫ້ ແກ່ ບ້ານ ນານົກຂຽນ (ເບິ່ງ ຂໍ້ຍ່ອຍ 3.5.3.7) ຄວນຖືກອະທິບາຍໃຫ້ເຈົ້າໃຈໄດ້ງ່າຍ. ສະພາບການ ຢູ່ບ້ານ ນານົກຂຽນ, ທີ່ມີ ສວນປູກອ້ອຍ ແລະ ໂຮງງານ ຢູ່ໃກ້ໆນັ້ນ, ສະແດງໃຫ້ເຫັນວ່າ ການຄຸ້ມຄອງທີ່ມີປະສິດທິຜົນ ເຂດ ຣຳຊາ ເຊຈຳພອນ ຈະຕ້ອງການ ວິທີການ ຕາມຫຼັກວິທະຍາສາດ ທົ່ວອ່າງ ເພື່ອຖະນຸຖະໜອມ ທີ່ດິນບໍລິເວນນໍ້າ ແລະ ປະຊາຊົນ ຕະຫຼອດເຖິງ ບັນດາຊະນິດພັນ ທີໃກ້ຈະສູນພັນ ທີ່ອາໄສ ທີ່ດິນບໍລິເວນນໍ້າດັ່ງກ່າວ.
- ສອດຄ່ອງ ກັບ ລະບຽບການ ຂອງບ້ານ ສຳລັບບ້ານທີ່ຢູ່ຂ້າງໃນ ເຂດ ຣຳຊາ ເຊຈຳພອນ.

## 7. ການພິຈາລະນາສຸດທ້າຍ

*ຄວາມພະຍາຍາມຂອງລັດ ຈາກສູນກາງ ລົງສູ່ທ້ອງຖິ່ນ ເພື່ອຄວບຄຸມ ກົດໝາຍ ປະເພນີ ພາຍໃນ ຂອບຂອງ ລັດຖະທຳມະນູນ ມັກຖືກພິສູດຢູ່ສະເໝີວ່າ ບໍ່ມີປະສິດທິຜົນ ແລະ ເຖິງຂັ້ນວ່າ ບໍ່ສ້າງສັນ ໃນການບັນລຸ ເປົ້າໝາຍ ການປະສົມປະສານ ແຫຼ່ງຕ່າງໆ ຂອງ ຄວາມຍຸດຕິທຳ ແບບຍືນຍົງ ຢູ່ໃນ ຂອບຂ່າຍກົດໝາຍ.*[42]

ໂຄງການ ປັດຈຸບັນນີ້ ສືບຕໍ່ໂຄງການ MoJ/UNDP, ແລະກໍເປັນ ການທົດລອງ ເທື່ອທຳອິດ ຂອງການ ປະສົມປະສານກົດໝາຍ ປະເພນີ ແລະ ກົດໝາຍ ນິຕິບັນຍັດ ທີ່ຄຸ້ມຄອງ ການຈັດການ ຊັບພະຍາກອນທຳມະຊາດ ຢູ່ ສປປ ລາວ. ບົນພື້ນຖານ ຂອງ ຜົນການສຶກສາເທື່ອນີ້, ໂຄງການ ບໍ່ສະເໜີ ໃຫ້ໝົດທຸກກົດໝາຍປະເພນີ ຄວນຖືກຈັດໃຫ້ເປັນລະບົບ ແລະ ບົດສຶກສານີ້ ກໍເຫັນດີກັບ ບົດລາຍງານ ຂອງໂຄງການ MoJ/UNDP ໃນການ ສະເໜີແນະນຳ ທີ່ວ່າ ກົດໝາຍປະເພນີ ບໍ່ຄວນຖືກຄວບຄຸມຈາກລັດ. ກົງກັນຂ້າມ, ຫວັງວ່າ ຜົນຂອງໂຄງການນີ້ ຈະເປັນສິ່ງຈູງໃຈຢ່າງໜຶ່ງ ເພື່ອເຮັດໃຫ້ລະບອບ ການຄວບຄຸມ ສຳລັບທີ່ດິນບໍລິເວນນໍ້າ ແລະ ບັນດາ ສະຖານທີ່ຕັ້ງ ທຳຊາ ໃນ ສປປ ລາວ ເຂັ້ມແຂງຂຶ້ນ ແລະ ເພື່ອຂະຫຍາຍ ວຽກງານ ທີ່ໄດ້ລິເລີ່ມໂດຍ ບົດສຶກສາ ຂອງ MoJ/UNDP ເພື່ອ ລວມເຂົ້າໄວ້ທັງໝົດ ການສືບຕໍ່ສຶກສາ ໃຫ້ກວ້າງຂວາງ ແລະ ເລິກເຊິ່ງ ກວ່າເກົ່າ ກ່ຽວກັບກົດໝາຍ ປະເພນີ ທີ່ ຄຸ້ມຄອງ ຊັບພະຍາກອນທຳມະຊາດ.

ໃນການຈັດຕັ້ງປະຕິບັດ ຂໍ້ສະເໜີແນະ ຂອງບົດສຶກສາບົດນີ້, ບັນຫາເພີ່ມເຕີມ ທີ່ຈະຖືກນຳມາພິຈາລະນາ ລວມມີ:

- **ການແກ້ໄຂຂໍ້ຂັດແຍ້ງ:** ໃສ່ໃຈຂອງ ຄຳເວົ້າຈາກ ບົດລາຍງານ ຂອງ MoJ/UNDP ທີ່ໄດ້ ຖອດຕາມຄຳເວົ້າໃນຕອນຕົ້ນ ຂອງ ຂໍ້ນີ້, ທີ່ວ່າ ບໍ່ສະເໜີແນະນຳ ໃຫ້ສ້າງກົນໄກໃໝ່ ສຳລັບ ການແກ້ໄຂ ຂໍ້ຂັດແຍ້ງດ້ານນິຕິບັນຍັດ. ການອາໄສ ກົນໄກທີ່ມີຢູ່ ໃນລະດັບຊຸມຊົນ ເຊິ່ງລວມມີທັງ ໜ່ວຍໄກ່ເກ່ຍ ຂອງບ້ານ ແລະ ອົງການປົກຄອງບ້ານ ຈະມີປະສິດທິຜົນກວ່າ. ສິ່ງສຳຄັນ ແມ່ນຄວນ ຈັດການຝຶກອົບຮົມ ແລະ ໃຫ້ຂໍ້ມູນ ແກ່ເຂົາເຈົ້າ ກ່ຽວກັບ ການອະນຸລັກ ທີ່ດິນບໍລິເວນນໍ້າ.
- **ຈິດສຳນຶກ ສາທາລະນະ** – ບໍ່ພຽງແຕ່ ປະຊາຊົນ ທີ່ອາໄສຢູ່ໃນ ແລະ ອ້ອມຮອບ ສະຖານທີ່ຕັ້ງ ທຳຊາ ເທົ່ານັ້ນ, ຫາກແມ່ນພົນລະເມືອງ ທຸກຄົນ ຕ້ອງຮູ້ ຄຸນຄ່າຂອງ ທີ່ດິນບໍລິເວນນໍ້າ, ການບໍລິການທີ່ ພວກມັນໃຫ້ (ມັນໃຫ້ຫຍັງແກ່ຄົນເຮົາ), ແລະ ຮູ້ກ່ຽວ ກັບສະຖານະພາບ ຂອງ ສະຖານທີ່ຕັ້ງທຳຊາ ແລະ ພັນທະສາກົນ ທີ່ກ່ຽວຂ້ອງ ກັບພວກມັນ. ຈຳເປັນຕ້ອງມີ ຂໍ້ລິເລີ່ມ ທີ່ດຳເນີນການຢູ່ ເພື່ອປູກ ຈິດສຳນຶກ ໃຫ້ປະຊາຊົນຮູ້ ກ່ຽວກັບ ນະໂຍບາຍ ການຮູ້ນຳໃຊ້ ສະຖານທີ່ຕັ້ງ ທຳຊາ ແລະ ບັນດາລະບຽບການ ທີ່ຄຸ້ມຄອງ ສະຖານທີ່ຕັ້ງ ທຳຊາ ແຕ່ລະແຫ່ງ, ນອກຈາກ ເຮັດໃຫ້ປະຊາຊົນຮູ້ ກ່ຽວກັບ ລະບຽບກົດໝາຍແລ້ວ, ຕ້ອງພະຍາຍາມ ເຮັດໃຫ້ປະຊາຊົນເຂົ້າໃຈຕື່ມອີກ ກ່ຽວກັບຄວາມສຳຄັນ ຂອງ ທີ່ດິນບໍລິເວນນໍ້າ ແລະ ຊັບພະຍາກອນ ທີ່ດິນບໍລິເວນນໍ້າ ໂດຍຍົກໃຫ້ເຫັນ ຜົນປະໂຫຍດ ຈາກການເຂົ້າຮ່ວມ ຂອງເຂົາເຈົ້າ ໃນການອະນຸລັກ ແລະ ນຳໃຊ້ ພວກມັນ ໃຫ້ຍືນຍົງຍາວນານ. ຂໍ້ລິເລີ່ມ ເພື່ອການປູກຈິດສຳນຶກ ກ່ຽວກັບການອະນຸລັກ ທີ່ດິນບໍລິເວນນໍ້າ ແມ່ນສາມາດ ຈັດຕັ້ງປະຕິບັດ ໃນວັນທີ 2 ກຸມພາ ຂອງ ແຕ່ລະປີ, ເຊິ່ງເປັນວັນທີ່ຖືກ ກຳນົດໃຫ້ເປັນ **ວັນທີ່ດິນບໍລິເວນນໍ້າໂລກ.** ຂໍ້ລິເລີ່ມເຫຼົ່ານັ້ນ ສາມາດຖືກຈັດຕັ້ງປະຕິບັດ ໂດຍໃຊ້ ວັນຕ່າງໆ ຂອງຊາດ ທີ່ໄດ້ຖືກກຳນົດ ພາຍໃຕ້ ກົດໝາຍນິຕິບັນຍັດ, ເຊິ່ງລວມມີ ວັນທີ 1 ມິຖຸນາ ເປັນວັນ ປູກຕົ້ນໄມ້ແຫ່ງຊາດ ພາຍໃຕ້ກົດໝາຍປ່າໄມ້, ແລະ ວັນທີ 13 ກໍລະກົດ ເປັນວັນປ່ອຍ

[42] **UNDP-MoJ** ບົດລາຍງານ. (2011). *ໂຄງການ ກົດໝາຍປະເພນີ* , ໜ້າ. **99.**

ປາ ແຫ່ງຊາດ ພາຍໃຕ້ ກົດໝາຍ ວ່າດ້ວຍສັດນໍ້າ ແລະ ສັດປ່າ ສົມທົບກັບ ໄລຍະການອະນຸລັກ ຕາມປະເພນີ ທີ່ປະຕິບັດກັນ ພາຍໃຕ້ ປະຕິທິນຊາວພຸດ (ມິຖຸນາ ຫາ ກັນຍາ ).

- **ການວາງແຜນ ແລະ ການປຶກສາຫາລື:** – ແຜນທີ່ກວມລວມ ສໍາລັບ ການຄຸ້ມຄອງ ແລະ ການໃຊ້ຊັບພະຍາກອນ ທີ່ດິນບໍລິເວນນໍ້າ ຢ່າງມີປະສິດທິຜົນ ຢູ່ເຂດສະຖານທີ່ຕັ້ງ ຣໍາຊາ ຕ້ອງ ຖືກເຮັດໃຫ້ສອດຄ່ອງ ກັບບັນດາ ລະບຽບການສະເພາະ ແຕ່ລະ ສະຖານທີ່ຕັ້ງ. ແຜນຄຸ້ມຄອງ ຕ້ອງ ລວບລວມເອົາວິທີປະຕິບັດ ໃນການຄຸ້ມຄອງ ແບບປະເພນີ ໃຫ້ຍືນຍົງ ແລະ ການສ້າງແຜນຄຸ້ມຄອງດັ່ງກ່າວ ກໍຄ້ອງລວບລວມ ເອົາການປຶກສາຫາລື ແບບໂປ່ງໃສ ກັບປະຊາຊົນ ທີ່ອາໄສຢູ່ ໃນ ແລະ ອ້ອມຮອບ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ ແລະ ສະຖານທີ່ຕັ້ງແຫ່ງອື່ນໆ ເພື່ອດູແລປ້ອງກັນ ການດໍາລົງຊີວິດ ໃນທ້ອງຖິ່ນ ແລະ ທາງເລືອກເພີ້ມເຕີມ ສໍາລັບການດໍາລົງຊີວິດ ເຊັ່ນ ການທ່ອງທ່ຽວແບບຍືນຍົງ.

ການອະນຸລັກ ທໍາມະຊາດ ແລະ ການຖະໜອມຮັກສາ ວັດທະນະທໍາ ໄດ້ຮັບການສະໜັບສະໜູນ ຢ່າງແຂງແຮງຈາກ ລັດຖະທໍາມະນູນ, ນະໂຍບາຍຂອງລັດຖະບານ ແລະ ກົດໝາຍນິຕິບັນຍັດ ຂອງ ສປປ ລາວ. ປະເທດໄດ້ເລີ້ມ ຂະບວນທີ່ສໍາຄັນ ໃນການ ເຮັດໃຫ້ມີຄວາມເຂົ້າໃຈງ່າຍ ກ່ຽວກັບ ສາຍພົວພັນ ລະຫວ່າງ ໂຄງປະກອບ ຂອງກົດໝາຍ ນິຕິບັນຍັດ ແລະ ກົດໝາຍປະເພນີ. ການສ້າງຄວາມເຂັ້ມແຂງ ໃຫ້ແກ່ ລະບອບຄຸ້ມຄອງ ສໍາລັບສະຖານທີ່ຕັ້ງ ຣໍາຊາ ໃນປະເທດ ແລະ ການສ້າງ ລະບຽບການ ສໍາລັບ ສະຖານທີ່ຕັ້ງ ຣໍາຊາ ເຊຈໍາພອນ ແມ່ນໂອກາດ ຍຸດທະສາດໜຶ່ງ ເພື່ອ ຫຍັບ ຂະບວນວິວັດນີ້ທ້າຖືບໜ້າຕໍ່ໄປ.

## 8. ໃບຊ້ອນທ້າຍ

ໃບຊ້ອນທ້າຍ 1: ແຜນທີ່ ທາງການ ຂອງ ສະຖານທີ່ຕັ້ງ ທຳຊາ ເຊຈຳພອນ ແລະ ບ້ານຕ່າງໆ ທີ່ໄດ້ລົງສຳຫຼວດ



**ໃບຊ້ອນທ້າຍ 2: ບົດລາຍງານ ການລົງສຳຫຼວດ ພາກສະໜາມ ດ້ານສັງຄົມ-ເສດຖະກິດ : ວິທີການ ໃຊ້ສິດທິ ໃນການອະນຸລັກ ສະຖານທີ່ຕັ້ງ ຮໍາຊາ ເຊຈໍາພອນ, ສປປ ລາວ.**

# ບົດລາຍງານ ການລົງສຳຫຼວດພາກສະໜາມ ດ້ານສັງຄົມ-ເສດຖະກິດ

## ວິທີການ ສິດທິມະນຸດ ເພື່ອການອະນຸລັກ ຢູ່ສະຖານທີ່ຕັ້ງ ຮໍາຊາ ເຊຈໍາພອນ, ສປປ ລາວ

ພຶດສະພາ 2013



**ບົດລາຍງານ ການລົງສຳຫຼວດ ພາກສະໜາມ ດ້ານສັງຄົມ-ເສດຖະກິດ**
ວິທີການໃຊ້ສິດ ຕໍ່ການອະນຸລັກ ຢູ່ ສະຖານທີ່ຕັ້ງ ຣຳຊາ ເຊຈຳພອນ, ສປປ ລາວ

ພຶດສະພາ 2012

**ຄະນະທີ່ປຶກສາ**

| | |
|---|---|
| Patricia Moore | ທີ່ປຶກສາ |
| Raphaël Glémet | *ຜູ້ປະສານງານ ໂຄງການ ທັງເປັນ ຜູ້ຊ່ຽວຊານ ດ້ານແຜນທີ່ GIS* |
| ມິນາວັນ ພົນເສນາ | *ຜູ້ຊ່ຽວຊານ ດ້ານສັງຄົມ-ເສດຖະກິດ* |

**ຄະນະສຳຫຼວດ**

| | |
|---|---|
| ແກ້ວອຸດອນ ຈຸນລະມຸນຕຣີ | ສິ່ງແວດລ້ອມ ແລະ ຊັບພະຍາກອນນ້ຳ ເມືອງ, ຜູ້ປະສານງານ |
| ສຸພາພອນ ສູທະລາວົງ | ຜູ້ປະສານງານ, ກົມຊັບພະຍາກອນນ້ຳ, ກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ |
| ມະໂນທອງ ແຣມສະຫວັນ | ຜູ້ແຈ້ງນັບ |
| Marika Samuelsson | ຜູ້ແຈ້ງນັບ |
| ສີມມະນີ ພົນເສນາ | ຜູ້ແຈ້ງນັບ |
| ວານິດສາ ຍົງວົງສິດທິ | ຜູ້ແຈ້ງນັບ |

**ຄຳຂອບໃຈ**

ບົດສຶກສາບົດນີ້ ຈະບໍ່ສາມາດເກີດຂຶ້ນມາໄດ້ ຖ້າບໍ່ມີການສະໜັບສະໜູນ ຈາກກົມສົ່ງເສີມ ຄຸນນະພາບສິ່ງແວດລ້ອມ ແລະ ກົມ ຊັບພະຍາກອນນໍ້າ, ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ, ສປປ ລາວ.
ໃນໄລຍະ ການລົງໄປຢັ້ງມຢາມສະໜາມ ເພື່ອດຳເນີນການສຳພາດ, ການປຶກສາຫາລື ກັບກຸ່ມຈຸດສຸມ ແລະ ການແຕ້ມແຜນທີ ໂດຍໃຊ້ GIS ໃນບັນດາຊຸມຊົນ, ອຳນາດ ການປົກຄອງບ້ານ ທີ່ລວມຢູ່ໃນ ການສຶກສາ ໄດ້ອາສາສະໝັກ ສະລະເວລາ ຂອງພວກຕົນ ຊ່ວຍການຈັດຕັ້ງ.
ພວກເຮົາ ຂໍສະແດງ ຄວາມຂອບໃຈ ມາຍັງ ທ່ານ ນາງ ແກ້ວອຸດອນ ຈຸນລະມຸນຕຣີ, ຮອງຫົວໜ້າ ຫ້ອງການຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ ຂອງ ເມືອງ ທີ່ໄດ້ໃຫ້ການສະໜັບສະໜູນ ອຳນວຍຄວາມສະດວກ ໃນການຈັດຕັ້ງ ການລົງຢັ້ງມຢາມ, ການປຶກສາຫາລື ກັບກຸ່ມຈຸດສຸມ ແລະ ການສຳພາດ ຄົວເຮືອນ ກັບບັນດາຊຸມຊົນ.
ບົດລາຍງານບົດນີ້ ແນ່ນອນຈະບໍ່ສຳເລັດໄດ້ ຖ້າບໍ່ມີ ການເຮັດວຽກຢ່າງໜັກ ຂອງບັນດາຜູ້ແຈ້ງນັບ ໃນໄລຍະການສຳຫຼວດ.
ໂດຍສະເພາະ ພວກເຮົາ ຂໍສະແດງຄວາມຂອບໃຈ ມາຍັງ ປະຊາຊົນໃນ 10 ບ້ານ ຂອງ ເມືອງ ຈຳພອນ ທີ່ໄດ້ຕອບສະໜອງຂໍ້ມູນ ສຳຄັນ ທີ່ບັນຈຸຢູ່ໃນ ບົດສຶກສາບົດນີ້.

**ສາລະບານ**

**1 ເປີດເລື່ອງ.......................................................................................86**

1.1 ຈຸດປະສົງ ແລະ ຂອບເຂດ ຂອງບົດລາຍງານ ............................................. 86

1.2 ໂຄງປະກອບຂອງບົດລາຍງານ ......................................................... 86

2 ວິທີການ.....................................................................................86

2.1 ການປຶກສາຫາລື ກຸ່ມຈຸດສຸມ ........................................................ 87

2.2 ການສໍາພາດ ຄົວເຮືອນ ............................................................... 88

2.3 ການເຮັດແຜນທີ່ ໂດຍໃຊ້ຂໍ້ມູນ GIS................................................... 88

**3 ຂໍ້ມູນດ້ານສັງຄົມ-ເສດຖະກິດ.......................................................... 88**

3.1 ທີ່ຕັ້ງ.........................................................................................89

3.2 ລັກສະນະພິເສດ ຂອງ ຊັບພະຍາກອນທໍາມະຊາດ ....................................... 90

3.3 ຄວາມຮູ້ກ່ຽວກັບ ເຂດອະນຸລັກ ຂອງຊຸມຊົນ.............................................. 90

3.4 ໄພຂົ່ມຂູ່ ຕໍ່ຊັບພະຍາກອນທຊາມະຊາດ................................................... 92

3.5 ປະຊາກອນ ............................................................................... 94

3.6 ບັນດາອົງການຈັດຕັ້ງສັງຄົມ ........................................................... 95

3.7 ກິດຈະກໍາດ້ານເສດຖະກິດ ............................................................. 95

*3.7.1 ການກະສິກໍາ*..............................................................................96

*3.7.2 ການບໍລິການ* ............................................................................96

*3.7.3 ອຸດສາຫະກໍາ*..............................................................................96

*3.7.4 ແຫຼ່ງຕົ້ນຕໍຂອງລາຍຮັບ* .................................................................96

3.8 ເຂົ້າໃຈກ່ຽວກັບຄວາມທຸກຍາກ ຢູ່ ເຊຈໍາພອນ .......................................... 98

**4 ກົດໝາຍປະເພນີ ທີ່ຄຸ້ມຄອງ ຊັບພະຍາກອນທໍາມະຊາດ ຢູ່ ທີ່ດິນບໍລິເວນນໍ້າ ເຊຈໍາພອນ...................99**

4.1 ປ່າສະຫງວນ ປະເພດຕ່າງໆ ອ້ອມຮອບ ທີ່ດິນບໍລິເວນນໍ້າ ............................... 99

*4.1.1 ປ່າສະຫງວນລວມໝູ່ ທີ່ບໍ່ ມີວິນຍານເຝົ້າຮັກສາ* ....................................... 100

*4.1.2 ປ່າສະຫງວນ ທີ່ມີວິນຍານເຝົ້າຮັກສາ*................................................... 100

4.2 ກົນໄກການຄຸ້ມຄອງປ່າສະຫງວນ...................................................... 100

*4.2.1 ການຄຸ້ມຄອງ ປ່າສະຫງວນສ່ວນລວມ ທີ່ບໍ່ມີວິນຍານເຝົ້າຮັກສາ*........................ 101

*4.2.2 ການຄຸ້ມຄອງ ປ່າສະຫງວນທີ່ມີວິນຍານເຝົ້າຮັກສາ* ..................................... 101

**ບັນຊີ ຮູບພາບ ແລະ ຕົວເລກ**

ຮູບ 1: ແຜນທີ່ ຂອງ ບ້ານ ທີ່ໄດ້ລົງສໍາຫຼວດ........................................................ 89

ຮູບ 2: ສິ່ງກະຕຸ້ນ ສໍາລັບ ການສ້າງຕັ້ງ ເຂດອະນຸລັກ ຂອງຊຸມຊົນ........................................ 91

ຮູບ 3: ບັນຫາຫຼັກດ້ານສິ່ງແວດລ້ອມ............................................................... 93

## ບັນຊີ ຕາຕະລາງ

ຕາຕະລາງ 1: ບ້ານຕົວຢ່າງ.................................................................................................................... 87
ຕາຕະລາງ 2: ຄວາມຮູ້ ກ່ຽວກັບ ເຂດອະນຸລັກ ຂອງຊຸມຊົນ ...................................................................... 90
ຕາຕະລາງ 3: ປະເພດຂອງລະບົບນິເວດ ທີ່ບ້ານເປັນຜູ້ຄຸ້ມຄອງ (ອັດຕາສ່ວນຂອງຜູ້ຕອບຄໍາຖາມ)..................... 92
ຕາຕະລາງ 4: ການມີບັນຫາສິ່ງແວດລ້ອມ (ອັດຕາສ່ວນ ຂອງຜູ້ຕອບຄໍາຖາມ)................................................ 93
ຕາຕະລາງ 5: ໝວດຊົນເຜົ່າໃນບັນດາຄົວເຮືອນຕົວຢ່າງ ............................................................................ 94
ຕາຕະລາງ 6: ອາຊີບໃນ 12 ເດືອນຜ່ານມາ ຂອງ ສະມາຊິກ ຄົວເຮືອນ ........................................................ 94
ຕາຕະລາງ 7: ອັດຕາສ່ວນ ຂອງ ປະຊາຊົນ ອາຍຸເກີນ 6 ປີ ທີ່ໄດ້ເຂົ້າໂຮງຮຽນ................................................ 95
ຕາຕະລາງ 8: ຈຸດປະສົງ ຂອງການ ເກັບ ເຄື່ອງປ່າຂອງດົງ ແລະ ຜະລິດຕະພັນ ທີ່ດິນບໍລິເວນນໍ້າ....................... 97
ຕາຕະລາງ 9: ສັດສ່ວນ ຂອງ ລາຍຮັບປະຈໍາປີ ຂອງຄົວເຮືອນ(ກີບ) ຈາກ ແຫຼ່ງຕ່າງໆ...................................... 97
ຕາຕະລາງ 10: ລາຍຮັບສະເລ່ຍ ຕໍ່ປີ ຂອງຄົວເຮືອນ (ກີບ) ຈາກແຫຼ່ງຕົ້ນຕໍຂອງລາຍຮັບ .................................. 98
ຕາຕະລາງ 11: ລະດັບຫຄວາມທຸກຍາກ ໃນບ້ານ ຕົວຢ່າງ ........................................................................... 99
ຕາຕະລາງ 12: ທໍານຽມປະຕິບັດ ຂອງ ກົດໝາຍປະເພນີ...........................................................................101
ຕາຕະລາງ 13: ສັດທີ່ບໍ່ ອະນຸຍາດໃຫ້ລ່າໄດ້ .........................................................................................102
ຕາຕະລາງ 14: ບົດບາດ ຂອງ ກອງຈໍາ ບ້ານ ແລະ ໝໍດູ (ໝໍຜີ) ...............................................................103

ໃບແນບທີ 1: ຄໍາຖາມແນະນໍາ ສໍາລັບ ການປຶກສາຫາລື ເປັນກຸ່ມ
ໃບແນບທີ 2: ຮ່າງຄໍາຖາມ ສໍາລັບ ການສໍາພາດຄົວເຮືອນ

**ແປຄໍາສັບ**

| | |
|---|---|
| ບ້ານ | |
| ດົງມະເຫສັກ | ປ່າສັກສິດ ທີ່ເຊື່ອກັນວ່າ ເປັນບ່ອນຢູ່ ຂອງວິນຍານ ຜູ້ເຝົ້າຮັກສາ ແລະ ປົກປັກຮັກສາ ສະມາຊິກຂອງຊຸມຊົນທັງໝົດ. |
| ການສ້າງແຜນທີ GIS | ການສ້າງແຜນທີ່ ໂດຍໃຊ້ລະບົບ ຂໍ້ມູນ ພູມສາດ (ເພື່ອສະແດງແຜນທີ່ ແລະ ລັກສະນະພູມສາດ ຂອງທ້ອງຖິ່ນ) |
| ກູດ | ໜອງ. ຄໍານີ້ໃຊ້ສະເພາະແຕ່ຢູ່ ເຊ ຈໍາພອນ ເທົ່ານັ້ນ. |
| ກວານຈໍາບ້ານ | ຜູ້ທີ່ເປັນສື່ກັບວິນຍານ(ຜີ)/ຜູ້ຈັດພິທີ ພິທີກໍາ |
| ໜອງ | Lake |
| ສຸ້ຍ | ອ່າງເກັບນໍ້າ ຊົນລະປະທານ ຢູ່ທີ່ດິນ ບໍລິເວນນໍ້າ ເຊຈໍາພອນ |
| ເຊ | ສາຍນໍ້າ (ຊື່ສາຍນໍ້າ) |

**ສະເໜີເລື່ອງ**

ບົດສຶກສານີ້ ແນໃສ່ ວິໄຈສະພາບການ ຢູ່ ທີ່ດິນ ບໍລິເວນນ້ຳ ເຊຈຳພອນ ຂອງ ສປປ ລາວ. ມັນຈະຄົ້ນຄວ້າ ບັນຫາ ທີ່ບໍ່ທັນໄດ້ຮັບການຄົ້ນຄວ້າ ເທົ່າທີ່ຄວນ ຂອງກົດໝາຍປະເພນີ ທີ່ຄຸ້ມຄອງ ຊັບພະຍາກອນ ທຳມະຊາດ, ລວມທັງ ສາຍພົວພັນຂອງພວກມັນ ກັບກົດໝາຍ ນິຕິບັນຍັດ. ຂໍ້ສັນນິດຖານ ທີ່ຈະຖືກທົດລອງ ກໍແມ່ນອັນທີ່ວ່າ ການບໍ່ຮັບ ຮູ້ ຂອງກົດໝາຍປະເພນີ ທີ່ຄຸ້ມຄອງ ການໃຊ້ ຊັບພະຍາກອນ ທຳມະຊາດ ແລະ ການຈັດຕັ້ງປະຕິບັດ ຢູ່ບ່ອນທີ່ ກົດໝາຍປະເພນີ ຖືກຮັບຮູ້ ຢ່າງເປັນທາງການ - ແມ່ນມີຄ່າໃຊ້ຈ່າຍ ໃຫ້ແກ່ລັດ ໃນແງ່ ຂອງການສູນເສຍ ການ ບໍລິການ ຂອງລະບົບນິເວດ ແລະໃນແງ່ ຄ່າໃຊ້ຈ່າຍ ເພື່ອແກ້ໄຂ ຂໍ້ຂັດແຍ້ງ ທີ່ເກີດຂຶ້ນ ຈາກການບໍ່ຮັບຮູ້, ແລະ ການສືບຕໍ່ພົບຄວາມລຳບາກຢ່າງຕໍ່ເນື່ອງ ໃນໝູ່ ປະຊາຊົນ ຜູ້ທີ່ຊີວິດປະຈຳວັນຂອງເຂົາເຈົ້າຖືກຄອບງຳ ໂດຍກົດໝ າຍປະເພນີ ແລະ ຂຶ້ນກັບ ຊັບພະຍາກອນ ແລະ ການບໍລິການ ທີ່ລະບົບນິເວດ ບ່ອນທີ່ເຂົາເຈົ້າດຳລົງຊີວິດຢູ່ນັ້ນ ສະໜອງໃຫ້. ບົດລາຍງານນີ້ ແມ່ນບົດລາຍງານຄວາມຄືບໜ້າ ຂອງ ວຽກພາກສະໜາມ ທີ່ໄດ້ດຳເນີນການ ຈົນ ຮອດ ເດືອນ ທັນວາ 2011. ການວິໄຈ ລະອຽດ ການສຳຫຼວດ ດ້ານສັງຄົມ-ເສດຖະກິດ ແລະ ກົດໝາຍປະເພນີ ຈະຖືກສ້າງໃຫ້ສຳເລັດຫຼັງຈາກ ການສຶກສາ ພາກສະໜາມໃນທັງໝົດ 10 ບ້ານຕົວຢ່າງ ໄດ້ສຳເລັດລົງ.

### 1.1 ຈຸດປະສົງ ແລະ ຂອບເຂດ ຂອງບົດລາຍງານ

ບົດລາຍງານນີ້ ໃຫ້ເຫັນພາບລວມ ຂອງວິທີການ ແລະ ຜົນຈາກການສຳຫຼວດ ພາກສະໜາມຢູ່ໃນ 10 ບ້ານຕົວຢ່າງ ທີ່ຢູ່ໃນ ຫຼື ຢູ່ຕິດ ກັບ ສະຖານທີ່ຕັ້ງຣ່ຳຊາ ເຊຈຳພອນ ໃນເດືອນ ພະຈິກ ແລະ ທັນວາ 2011.

### 1.2 ໂຄງປະກອບ ຂອງ ບົດລາຍງານ

ພາກທີ 2 ຂອງ ບົດລາຍງານນີ້ ໃຫ້ເຫັນພາບລວມ ຂອງ ວິທີການ ສຳລັບ ການເກັບກຳຂໍ້ມູນ. ພາກທີ 3 ສັງລວມ ຂໍ້ມູນດ້ານ ສັງຄົມ-ເສດຖະກິດ ລວມທັງ ຂໍ້ມູນດ້ານ ປະຊາກອນດ ອົງການຈັດຕັ້ງ ສັງຄົມ ແລະ ກິດຈະກຳ ເສດຖະກິດ ຢູ່ໃນ ບ້ານຕົວຢ່າງ. ພາກທີ 4 ອະທິບາຍ ຜົນ ຈາກການປຶກສາຫາລື ກຸ່ມຈຸດສຸມ ກັບ ເດັກນ້ອຍ ນັກຮຽນ, ແມ່ຍິງ, ຜູ້ສູງອາຍຸ ແລະ ຜູ້ຫາປາ ກໍຄື ຈາກ ການສຳພາດ ຄົວເຮືອນ ກ່ຽວກັບ ທຳນຽມປະຕິບັດ ສຳລັບ ການປົກປັກຮັກສາ ຊັບພະຍາກອນທຳມະຊາດ ຢູ່ອ້ອມແອ້ມ ຊຸມຊົນ ຂອງພວກຕົນ.

## 2. ວິທີການ

ການສຳຫຼວດພາກສະໜາມ ໄດ້ຖືກດຳເນີນການ ໃນ 3 ລະດັບ: ຄົວເຮືອ, ບ້ານ ແລະ ເມືອງ. ຮ່າງແບບຄຳຖາມ ແລະ ຄຳຖາມແນະນຳ ສຳລັບ ການສຳຫຼວດ ຄົວເຮືອນ ແລະ ການປຶກສາຫາລື ກັບກຸ່ມຈຸດສຸມ ເປັນ ການທົດ ສອບພາກສະໜາມ ກ່ອນໜ້າ ການຝຶກອົບຮົມ ຜູ້ແຈ້ງນັບ (ຜູ້ບັນທຶກຕົວເລກ).

ກ່ອນໜ້າການ ສຳຫຼວດ ພາກສະໜາມ, ພະນັກງານແຈ້ງນັບ ຈຳນວນ ສີ່ ຄົນ ໄດ້ຮັບການຝຶກອົບຮົມ ດ້ານວິທີການ ສຳລັບ ການເກັບຂໍ້ມູນ. ໃນໄລຍະການສຳຫຼວດ, ບັນດາພະນັກງານຜູ້ແຈ້ງນັບ ໄດ້ຖືກຈັດເປັນສອງໝວດ, ໝວດ ລະສອງຄົນ. ໝວດໜຶ່ງ ເກັບກຳຂໍ້ມູນ ຂອງ ບ້ານ ແລະ ເມືອງ ແລະ ຈັດການປຶກສາຫາລື ກຸ່ມຈຸດສຸມ. ສ່ວນ ອີກ ໝວດໜຶ່ງ ແມ່ນດຳເນີນການ ສຳພາດ ຄົວເຮືອນ ແລະ ເຮັດແຜນທີ່ GIS. ຂໍ້ມູນ ຈາກການສຳພາດຄົວເຮືອນ ໄດ້ ຮັບການວິເຄາະ ດ້ວຍ ຊອບແວຣ໌ ສະຖິຕິ SPSS.

**ຂະໜາດ ຂອງຕົວຢ່າງ**

ມີ 40 ບ້ານ ທີ່ຕັ້ງຢູ່ໃນ ສະຖານທີ່ຕັ້ງ ຣ່ຳຊາ ແລະມີປະຊາກອນທັງໝົດ ປະມານ 20,000 ຄົນ. ການສຳຫຼວດ ພາກສະໜາມ ໄດ້ຖືກດຳເນີນການ ຢູ່ໃນ ສິບ ບ້ານ ຂອງຊົນເຜົ່າ ທີ່ແຕກຕ່າງກັນ ເຊັ່ນ ລາວລຸ່ມ (50%) ແລະ ຜູ້ ໄທ (21%) (ໄຕ ກະໄດ ຫຼື ໝວດພາສາໄຕ), ກະຕ່າງ (18%) ແລະ ມະກ່ອງ (21%) (ໝວດ ພາສາ ມອນ-ຂະແມ) ດັ່ງທີ່ໄດ້ສະຫຼຸບຢູ່ໃນຕາຕະລາງ 1.

ຕາຕະລາງ 1: ບ້ານຕົວຢ່າງ

| ລດ. | ບ້ານ | ມາດຖານເງື່ອນໄຂ | ຈຳນວນ ຄົວເຮືອນທີ່ໄດ້ສຳພາດ | ຜູ້ເຂົ້າຮ່ວມການປຶກສາຫາລືກຸ່ມຈຸດສຸມ | | | | ເຜົ່າ |
|---|---|---|---|---|---|---|---|---|
| | | | | ຜູ້ສາວ | ແມ່ຍິງ | ຜູ້ບ່າວ | ຊາຍ | |
| 1. | ດອນແດງ | ໜອງສັກສິດ,ບ່ອນອາໄສຂອງເຕົ່າ, ແຫຼ່ງທ່ອງທ່ຽວ | 17 | 4 | 9 | 6 | 15 | ຜູ້ໄທ (ໝວດພາສາໄຕ) |
| 2. | ດົງຕະແບ່ງ | ໜອງສະຫງວນ ແລະ ປ່າ ຂອງຊຸມຊົນ | 12 | 0 | 16 | 0 | 35 | ກະຕາງ (ມອນ-ຂະແມ) |
| 3. | Dongmuang | ຄວບຄຸມການຫາປາ, ປ່າດົງລີງ | 12 | 5 | 12 | 5 | 20 | ລາວລຸ່ມ (ໝວດພາສາໄຕ) |
| 4. | ແກ້ງກອກ-ດົງ | ພວກຊາວບ້ານໂດຍກົງທີ່ດົນບໍລິເວນນ້ຳເພື່ອການດຳລົງຊີວິດຂອງຕົນ | 30 | 5 | 5 | 5 | 9 | ລາວລຸ່ມ (ໝວດພາສາ ໄຕ) |
| 5. | ນາກະທາງ | ໜອງສະຫງວນ ແລະ ປ່າຂອງຊຸມຊົນ | 17 | 5 | 17 | 5 | 22 | ກະຕາງ(ມອນ-ຂະແມ) |
| 6. | ນານົກຂຽນ | ໜອງສະຫງວນ ແລະ ປ່າຂອງຊຸມຊົນ | 17 | 8 | 12 | 2 | 18 | ມະກ່ອງ (ມອນ-ຂະແມ) |
| 7. | ຊະຄຸນ-ເໜືອ | ປ່າດົງລີງ, ປ່າສະຫງວນ ຂອງເມືອງ, | 20 | 4 | 28 | 6 | 10 | ລາວລຸ່ມ (ໝວດພາສາລາວ) |
| 8. | ຕາແຫຼວ | ໜອງສະຫງວນ ແລະ ປ່າຂອງ ຊຸມຊົນ | 16 | 5 | 32 | 5 | 10 | ຜູ້ໄທ (ໝວດພາສາໄຕ) |
| 9. | ເຊ (ເຊບັ້ງເກດ ໃນເມື່ອກ່ອນ) | ໜອງສະຫງວນ ແລະ ປ່າຂອງຊຸມຊົນ | 10 | 5 | 12 | 5 | 15 | ລາວລຸ່ມ (ໝວດພາສາໄຕ) |
| 10. | ຕານສຸມ | ແຂ້ສະຫຍາມ | 8 | 4 | 8 | 4 | 11 | ຜູ້ໄທ ແລະ ລາວລຸ່ມ(ໝວດພາສາໄຕ) |
| | **ລວມທັງໝົດ** | | **159** | **45** | **151** | **43** | **165** | |

## *2.1 ການປຶກສາຫາລື ກັບ ກຸ່ມຈຸດສຸມ*

ການປຶກສາຫາລື ຂອງກຸ່ມຈຸດສຸມ ໄດ້ຖືກດຳເນີນການ ໂດຍ ສະມາຊິກ ສອງຄົນ ຂອງຄະນະ ຜູ້ແຈ້ງນັບ ກັບກຸ່ມຕ່າງຫາກ ຂອງ ພວກຫາປາ, ຜູ້ສູງອາຍຸ, ແມ່ຍິງ ແລະ ເດັກນັກຮຽນ. ການປຶກສາຫາລືຂອງແຕ່ລະກຸ່ມ ນານໜຶ່ງຊົ່ວໂມງເຄິ່ງ. ພວກຫາປາໄດ້ຖືກສະເໜີໃຫ້ ຂີດເປັນແຜນທີ່ ຂອງ ຊັບພະຍາກອນທຳມະຊາດ ທີ່ຢູ່ອ້ອມ ເຂດປ່າຂອງເຂົາເຈົ້າ; ລວມທັງ ທົ່ງນາ, ສວນ, ປ່າຊຸມຊົນ ປ່າສະຫງວນ ແລະ ປ່າສັກສິດ, ປ່າສະຫງວນ ດັ່ງທີ່ ໄດ້ຖືກກຳນົດໂດຍອຳນາດການປົກຄອງ ເມືອງ ແລະ ແຂວງ ຫຼື ບັນດາໂຄງການອື່ນໆ, ສາຍນ້ຳ, ຫ້ວຍນ້ຳ ແລະ ໜອງ. ພວກຜູ້ສູງອາຍຸ ແລະ ພະນັກງານປົກຄອງເມືອງ ກໍ່ຖືກສະເໜີ ໃຫ້ຂີດແຕ້ມແຜນທີ່ ບ້ານ ລວມມີ ເຮືອນ ແລະ ສິ່ງປຸກສ້າງ

ອື່ນໆ ທີ່ສຳຄັນຢູ່ໃນບ້ານ, ລວມທັງ ຫໍພີບ້ານ, ເຮືອນສຳລັບ ພິທີກຳ, ຜູ້ເຮັດພິທີ, ວັດ, ໂຮງຮຽນ, ສຸກສາລາ, ແລະ ເຮືອນ ສຳລັບຄົນທຸກ.

ແຜນທີ່ທີ່ແຕ້ມນັ້ນ ໄດ້ຖືກໃຊ້ເພື່ອລິເລີ່ມ ການປຶກສາຫາລື ກັບກຸ່ມຕ່າງໆ ຂອງຜູ້ເຂົ້າຮ່ວມ ທີ່ໄດ້ກ່າວມາກ່ອນນີ້, ກ່ຽວກັບບັນຫາທີ່ພົວພັນ ກັບການຄຸ້ມຄອງ ຊັບພະຍາກອນທຳມະຊາດ ຂອງຊຸມຊົນ, ບັນຫາສິ່ງແວດລ້ອມ ແລະ ໄພຂົ່ມຂູ່ ຕໍ່ພື້ນທີ່ອະນຸລັກ ຂອງຊຸມຊົນ, ກົດລະບຽບຂອງຊຸມຊົນ ສຳລັບການຄຸ້ມຄອງ ຊັບພະຍາກອນທຳມະຊາດ , ການປະຕິບັດຕາມ ແລະ ການບັງຄັບໃຊ້ ກົດລະບຽບ, ເຂດແດນ ແລະ ສິດ ຕໍ່ທີ່ດິນ, ເຄືອຂ່າຍ ຂອງຊຸມຊົນ ໃນ ບັນຫາ ສິ່ງແວດລ້ອມ ແລະ ບັນດາອົງການທີ່ເປັນຄູ່ຮ່ວມ ຂອງລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ແມ່ນ ລັດຖະບານ ໃນການອະນຸລັກ ຊັບພະຍາກອນທຳມະຊາດ.

ຄຳຖາມແນະນຳ ສຳລັບ ການປຶກສາຫາລືເປັນກຸ່ມ ມີຢູ່ໃນ ໃບແນບຕິດ 1.

### *2.2 ການສຳພາດ ຄົວເຮືອນ*

ສິບສ່ວນຮ້ອຍ ຂອງ ບັນດາຄົວເຮືອນ ໃນບ້ານທີ່ໄດ້ລົງສຳຫຼວດ ແມ່ນໄດ້ຖືກສຳພາດ ຈາກ ຄະນະທີສອງ ທີ່ມີ ພະນັກງານແຈ້ງນັບ ສອງຄົນ. ໄດ້ນຳໃຊ້ ວິທີການເກັບ ຕົວຢ່າງຂໍ້ມູນ ແບບຈັດເປັນໝວດ ເພື່ອການຄັດຈ້ອນ ເອົາ ຄົວເຮືອຕົວຢ່າງ ທີ່ກວມເອົາ ຂໍ້ມູນຂ່າວສານ ຫຼາຍໆດ້ານ ຈາກຄົວເຮືອນ ທີ່ທຸກຍາກ, ຄົວເຮືອນທີ່ມີລາຍຮັບປານ ກາງ ແລະ ຄົວເຮືອນທີ່ຮັ່ງມີກວ່າ. ການສຳພາດແຕ່ລະກຸ່ມ ໃຊ້ເວລາ ປະມານ ໜຶ່ງ ຊົ່ວໂມງ.

ຮ່າງແບບຄຳຖາມ ສຳລັບການສຳພາດ ຄົວເຮືອນ ກວມເອົາ ຂໍ້ມູນກ່ຽວກັບ ຈຳນວນ ຂອງສະມາຊິກຄົວເຮືອນ , ໂດຍແຍກຕາມເພດ ແລະ ອາຍຸ, ສາຍພົວພັນຂອງເຂົາເຈົ້າ ຕໍ່ກັບ ຫົວໜ້າຄົວເຮືອນ, ລະດັບການຮຽນ ແລະ ວຽກ ເຮັດງານທຳ; ລາຍຮັບໂດຍສະເລ່ຍ ຂອງຄົວເຮືອນ ແຍກຕາມແຫຼ່ງລາຍຮັບ; ການຄຸ້ມຄອງ ຊັບພະຍາກອນທຳມະ ຊາດ; ບັນຫາສິ່ງແວດລ້ອມ ແລະ ໄພຂົ່ມຂູ່ ຕໍ່ເຂດອະນຸລັກ ຂອງຊຸມຊົນ; ກົດລະບຽບສຳລັບ ການຄຸ້ມຄອງ ທີ່ດິນ ບໍລິເວນນ້ຳ ແລະ ການປະຕິບັດຕາມ ກໍຄື ການບັງຄັບໃຊ້ກົດລະບຽບ.

ຮ່າງຄຳຖາມ ສຳລັບການສຳພາດຄົວເຮືອນ ມີຢູ່ ໃບແນບຕິດ 2.

### *2.3 ການສ້າງແຜນທີ່ ໂດຍໃຊ້ GIS*

ພະນັກງານແຈ້ງນັບ ກໍໄດ້ຮັບການຝຶກອົບຮົມ ວິຊາການສ້າງແຜນທີ່ ໂດຍໃຊ້ GIS ເຊັ່ນດຽວກັນ. ຫຼັງຈາກການ ປຶກສາຫາລື ກັບກຸ່ມຈຸດສຸມໃນແຕ່ລະບ້ານແລ້ວ ອຳນາດການປົກຄອງບ້ານ ກໍໄດ້ນຳພາທາງ ຄະນະເຮັດແຜນທີ່ GIS ເພື່ອ ຊອກຫາ ຈຸດພິກັດ ຂອງແຕ່ລະເຂດອະນຸລັກ ສຳລັບບ້ານຕ່າງໆ ທີ່ໄດ້ລົງສຳຫຼວດ. ເວລາສຳລັບ ການ ສ້າງແຜນທີ່ GIS ໃນແຕ່ລະບ້ານ ແຕກຕ່າງກັນໄປຈາກ ສອງ ຫາສີ່ ຊົ່ວໂມງ, ຂຶ້ນກັບເຂດອະນຸລັກ. ໃນໄລຍະ ວຽກພາກສະໜາມ, ແມ່ນໄດ້ໃຊ້ ວິທີການສຳພາດ ທີ່ວາງໂຄງຮ່າງໄວ້ເຄິ່ງໜຶ່ງແລ້ວ ເພື່ອໃຫ້ເຂົ້າໃຈ ດີກວ່າ ວ່າ ບັນດາ ເຂດອະນຸລັກ ໄດ້ຖືກປົກປັກຮັກສາ ແລະ ຄຸ້ມຄອງແນວໃດ. ນີ້ກໍໄດ້ໃຫ້ໂອກາດ ໃຫ້ເກັບກຳໄດ້ຫຼາຍຂໍ້ມູນ ກວ່າ ກ່ຽວກັບ ການປົກປັກຮັກສາ ຊຸມຊົນ ໂດຍບ້ານ ແລະ ຢືນຢັນ ຫຼື ສືບຕໍ່ຕິດຕາມ ຂໍ້ມູນ ທີ່ໄດ້ຮັບຈາກການ ປຶກສາຫາລືໃນກຸ່ມ.

## 3. ຂໍ້ມູນ ດ້ານເສດຖະກິດ-ສັງຄົມ

ການສຳຫຼວດ ນີ້ແມ່ນ ຖືກດຳເນີນການ ຢູ່ແຕ່ເມືອງ ຈຳພອນ ເທົ່ານັ້ນ, ເຊິ່ງປະຊາຊົນສ່ວນຫຼາຍ ເປັນກະສິກອນກຸ້ມ ຕົນເອງ. ໝາຍຄວາມວ່າ, ພວກເຂົາເຈົ້າ ອີງອາໄສ ຊັບພະຍາກອນທຳມະຊາດ ຢູ່ໃນ ແລະ ອ້ອມແອ້ມ ເຂດດິນ ບໍລິ ເວນນ້ຳ ເພື່ອຕອບສະໜອງຄວາມຕ້ອງການພື້ນຖານຂອງເຂົາເຈົ້າ, ແລະ ກໍໄດ້ປະຕິບັດມາແບບນີ້ ໄດ້ຫຼາຍເຊັ່ນຄົນ ແລ້ວ. ພວກເຂົາເຈົ້າ ມີຜົນປະໂຫຍດ ອັນສະເພາະ ໃນການຮັກສາ ລະບົບນິເວດ ຢູ່ ເຂດທີ່ດິນບໍລິເວນນ້ຳ ເຊຈຳ

ພອນ. ການຫາປາ, ການລ້ຽງສັດກິນຫຍ້າ, ການເຮັດນາສອງລະດູຕໍ່ປີ, ການເກັບເຄື່ອງປ່າຂອງດົງ ແລະ ການທ່ອງທ່ຽວ ເປັນແຫຼ່ງລາຍຮັບທີ່ສຳຄັນ ໃນເຂດນີ້.

## 3.1 ຈຸດທີ່ຕັ້ງ

ທີ່ດິນບໍລິເວນນ້ຳ ເຊຈຳພອນ ຕັ້ງຢູ່ໃນ ສອງເມືອງ: ເມືອງຈຳພອນ ແລະ ເມືອງ ຊົນບູລີ ແຂວງສະຫວັນນະເຂດ. ອີງຕາມຂໍ້ມູນ ຈາກ ກະຊວງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ, ສ່ວນໃຫຍ່ ຂອງ ທີ່ດິນບໍລິເວນນ້ຳ ແມ່ນຢູ່ທິດໃຕ້ ຂອງ ບ້ານແກ້ງກອກ-ດົງ, ເມືອງຈຳພອນ ປະມານ ສາມກິໂລແມັດ, ລະຫວ່າງເສັ້ນທາງ ເລກ 9 ແລະ ເສັ້ນທາງ ເລກ 11. ສິ້ນສຸດດ້ານໃຕ້ ຂອງສະຖານທີ່ຕັ້ງ ແມ່ນຕິດກັບ ເມືອງ ຊົນບູລີ, ເບິ່ງຮູບ 1 ຂ້າງລຸ່ມນີ້.

ຮູບ 1: ແຜນທີ່ ຂອງ ບ້ານທີ່ໄດ້ລົງສຳຫຼວດ



## 3.2 ລັກສະນະພິເສດ ຂອງ ຊັບພະຍາກອນ ທຳມະຊາດ

ທີ່ດິນ ບໍລິເວນນ້ຳ ເຊຈຳພອນ ຖືກຫຼໍ່ລ້ຽງ ໂດຍສາຍນ້ຳ ສອງສາຍ: ເຊຈຳພອນ ແລະ ເຊ ຊ້າງຊ້ອຍ, ສາຂາ ຂອງ ສາຍນ້ຳ ທີ່ໃຫຍ່ກວ່າ ຄື ເຊບັ້ງຫຽງ ທີ່ມີພື້ນທີ່ອ່າງຮັບນ້ຳ ປະມານ ສອງລ້ານ ເຮັກຕາ ແລະ ກວມທັງໝົດ ຂອງ ພາກຕາເວັນອອກ ຂອງແຂວງ ສະຫວັນນະເຂດ (Wiszniewski and Lertsirivorakul 2007). ໜອງ, ບຶງ ແລະ ຫ້ວຍນ້ຳ ຈຳນວນ ອັນຫຼວງຫຼາຍ ໃນເຂດນີ້ ເປັນບ່ອນຢູ່ອາໄສທີ່ສຳຄັນທີ່ສຸດ ສຳລັບປາ ແລະ ສັດນ້ຳຊະນິດ ພັນຕ່າງໆ, ລວມທັງ ແຂ້ ສະຫຍາມ ແລະ ນົກນ້ຳຕ່າງໆ. ນອກຈາກນັ້ນ, ພວກມັນ ຍັງເປັນ ແຫຼ່ງ ຂອງນ້ຳເພື່ອການ ຊົນລະປະທານ, ນ້ຳດື່ມ ແລະ ການໃຊ້ສອຍອື່ນໆ ສຳລັບຄົວເຮືອນ.

ປ່າໄມ້ ອ້ອມ ທີ່ດິນບໍລິເວນນ້ຳ ມີບົດບາດສຳຄັນ ໃນບັນດ້ານຍຸດທະສາດ ການດຳລົງຊີວິດ, ເພາະພວກມັນ ສະ ໜອງ ໄມ້ສຳລັບ ການປຸກສ້າງ, ເສັ້ນທາງລົດ ແລະ ຂົວ, ເຄື່ອງມືກະສິກຳ, ເຟີນິເຈີ, ຟືນ ແລະ ຖ່ານດັງໄຟ. ນອກ ນັ້ນ ພວກມັນ ຍັງເປັນແຫຼ່ງ ເຄື່ອງປ່າ ຂອງດົງທີ່ສຳຄັນ ເຊັ່ນ: ເປືອກໄມ້, ຢາງ (Siam benzoin) , ສີທຳມະ ຊາດ, ຫວາຍ, ໄມ້ປ່ອງ ແລະ ພືດເປັນຢາ. ພວກແມງໄມ້ ເຊັ່ນ: ຈີລໍ່, ຈີ່ນ່າຍ ແລະ ໄຂ່ມົດສົ້ມ, ໜໍ່ໄມ້, ສັດປ່າ ນ້ອຍ, ເຫັດ ແລະ ພືດຜັກອື່ນໆ ທີ່ກໍໄດ້ ເປັນແຫຼ່ງອາຫານທີ່ສຳຄັນທີ່ສຸດ ສຳລັບປະຊາຊົນ ໃນເຂດນີ້.

## 3.3 ຈິດສຳນຶກຕໍ່ ເຂດອະນຸລັກ ຂອງ ຊຸມຊົນ

ການສຳພາດ ຄົວເຮືອນ ໄດ້ເປີດເຜີຍໃຫ້ຮູ້ວ່າ ປະມານ 89% ຂອງ ຄົວເຮືອ ຕົວຢ່າງ ແມ່ນຮູ້ ກ່ຽວກັບ ເຂດ ອະນຸລັກ ຂອງ ຊຸມຊົນ, 69% ເວົ້າວ່າ ເຂດແດນ ຂອງ ເຂດອະນຸລັກ ຂອງຊຸມຊົນ ແມ່ນມີການກຳນົດ ຢ່າງຈະ ແຈ້ງ.

ໃນບັນດາບ້ານ ທີ່ໄດ້ລົງ ໄປສຳຫຼວດນັ້ນ ບ້ານ ນານົກຂຽນ (ເຜົ່າ ມະກອງ) ແລະ ບ້ານ ເຊ (ລາວລຸ່ມ) ປະກົດວ່າຮູ້ ດີທີ່ສຸດ ກ່ຽວກັບ ເຂດອະນຸລັກ.

**ຕາຕະລາງ 2: ຄວາມຮູ້ (ຈິດສຳນຶກ) ຕໍ່ກັບ ເຂດ ອະນຸລັກ ຂອງ ຊຸມຊົນ**

| | ຮູ້ກ່ຽວກັບ ເຂດ ອະນຸລັກ (ສ່ວນຮ້ອຍ) | ເຂດແດນທີໄດ້ກຳນົດແຈ້ງ (ສ່ວນຮ້ອຍ) |
|---|---|---|
| ດອນແດງ | 88 | 88 |
| ດົງຕະແບ່ງ | 92 | 58 |
| ດົງມ່ອງ | 92 | 92 |
| ແກ້ງກອກ-ດົງ | 90 | 70 |
| ນາກະທາງ | 82 | 76 |
| ນານົກຂຽນ | 100 | 82 |
| ຊະຄູນ-ເໜືອ | 75 | 40 |
| ຕາແຫຼວ | 88 | 69 |
| ເຊ | 100 | 80 |
| ຕານສູມ | 88 | 25 |
| **ລວມທັງໝົດ:** | **89** | **69** |

ເມື່ອຖືກຖາມ ກ່ຽວກັບ ສິ່ງທີ່ກະຕຸ້ນ ໃຫ້ມີການສ້າງ ເຂດອະນຸລັກ ຂອງຊຸມຊົນ35 ປະມານ ,% ຂອງຜູ້ຕອບຄຳ ຖາມ ອ້າງວ່າ ເຂດອະນຸລັກ ຮັບໃຊ້ຈຸດປະສົງ ໃນການ ຮັກສາໄວ້ຄວາມຕ້ອງການ ດ້ານສາດສະໜາວັດທະນະ , ຍືງຍືນໃຫ້ໄວ້ຊາວບ້ານ ເອກະລັກ ຂອງທຳ ຫຼື ຢູ່ຕໍ່ໄປຜູ້ເຜົ່າ ) ກ້າແຮງນີ້ ຢ່າງອງເລື້ເຊື່ອແຫຼວ ປະຊາຊົນ ບ້ານ ຕາ .

ໃດ ຖາມ ຜູ້ຄຳຕອບຜູ້ມີບໍ່ - ແຫຼວບ້ານ ຕາກັນ ກັບໄທ ຄືຜູ້ເຜົ່າຊົນບ້ານ ,ສຸມບ້ານ ຕານຢູ່ ,ຕາມກຳໃດຢ່າ .( ໄທ ແຮັກສາ ສາດສະໜາ ການໃນເຂດອະນຸລັກ ປະກອບສ່ວນ ວ່າ ເຊື່ອລະ ວັດທະນະທຳ ໃຫ້ຍືນຍົງ .

ປະມານ 26% ຂອງຜູ້ທີ່ຕອບຄຳຖາມ ຕອບວ່າ ການສ້າງ ເຂດ ອະນຸລັກຂອງຊຸມຊົນ ແມ່ນເພື່ອ ປົກປັກຮັກສາ ສັດປ່າ43 ອງນີ້ເລັ້ເພາະ ສະໂດຍ .% ຂອງຜູ້ຕອບຄຳຖາມ ຢູ່ບ້ານຕານສຸມ ໄດ້ອ້າງ ແລະ 37 ຫາ 31% ຢູ່ບ້ານນາ ນົກຂຽນຄູຊະ ,ນ .ດົງ-ກອກແກ້ງແລະ ເໜືອ -

ຮູບ 13 ວ່າ ປະມານເຫັນໃຫ້ນີ້ ກໍລຸ່ມຂ້າງ 2% ຂອງຜູ້ຕອບຄຳຖາມ ເຫັນຄວາມສຳຄັນ ຂອງ ການມີ ເຂດ ອະນຸລັກ ຂອງຊຸມຊົນ ເພື່ອຮັບປະກັນ ການເຂົ້າຫາຊັບພະຍາກອນ ເພື່ອການດຳລົງຊີວິດ ໄດ້ຢ່າງຍາວນານເຖິງ . ຜູ ,ຕາມໃດກໍ່ຢ່າງ້ຕອບຄຳຖາມຢູ່ບ້ານຕາແຫຼວຊຸມເຂດ ອະນຸລັກສິດ ຕໍ່ມະບູລິໃຫ້ເໜືອ -ຄຸນຊະ ແລະມ່ວງ ດົງ , ຊີວິດ ດຳລົງຮັບປະກັນ ການກວ່າ ການເອກະລັກ ຫຼາຍແລະ ສາດສະໜາ ທາງເປັນຈຳຮັກສາ ຄວາມການແກ່ ຊົນ .ເທິງຂ້າງມາເອົ້າໄດ້ທີ່ຕົນ ດັ່ງພວກຂອງ

**ຮູບ 2: ສິ່ງກະຕຸ້ນ ໃຫ້ ມີການສ້າງ ເຂດອະນຸລັກ ຂອງ ຊຸມຊົນ**



ຊະນິດ ຂອງ ລະບົບນິເວດທີ່ມີການຄຸ້ມຄອງ ໂດຍແຕ່ລະບ້ານ ທີ່ໄດ້ລົງສຳຫຼວດ ນັ້ນ ລວມມີ ປ່າໄມ້, ດິນບໍລິເວນ ນໍ້າ, ໜອງ ແລະ ຫ້ວຍນໍ້າ ດັ່ງທີ່ສະແດງຢູ່ໃນຕາຕະລາງລຸ່ມນີ້:

**ຕາຕະລາງ 12: ຊະນິດ ຂອງ ລະບົບນິເວດ ທີ່ຖືກຄຸ້ມຄອງ ໂດຍບ້ານ ທີ່ໄດ້ລົງໄປສຳຫຼວດ (ອັດຕາສ່ວນ ຂອງຜູ້ຕອບຄຳ ຖາມ)**

| | **ປ່າໄມ້** (ສ່ວນຮ້ອຍ) | **ປ່າໄມ້, ທີດິນບໍລິເວ ນນໍ້າ, ໜອງ & ສາຍ ນໍ້າ** (ສ່ວນຮ້ອຍ) | **ກຸດ/ສູ້ຍ/ໜອງ/ບຶງ/ສາຍນໍ້າ** (ສ່ວນຮ້ອຍ) |
|---|---|---|---|
| ດົງແດງ | 18 | 35 | 47 |
| ດົງຕະແບ່ງ | 0 | 83 | 17 |
| ດົງມ່ວງ | 33 | 42 | 25 |
| ແກ້ງກອກດົງ- | 10 | 14 | 76 |
| ນາກະທາງ | 14 | 14 | 71 |
| ນານົກຂຽນ | 63 | 38 | 0 |
| ຊະຄູນເໜືອ- | 22 | 6 | 72 |
| ຕາແຫຼວ | 50 | 43 | 7 |
| ເຊ | 10 | 60 | 30 |
| ຕານສຸມ | 25 | 13 | 63 |
| **ລວມທັງໝົດ** | **24** | **31** | **45** |

## *3.4 ໄພຂົ່ມຂູ່ ຕໍ່ ຊັບພະຍາກອນ ທຳມະຊາດ*

ໄພຂົ່ມຂູ່ ຕໍ່ຊັບພະຍາກອນ ທຳມະຊາດ ທີ່ໄດ້ຮັບຈາກ ການປຶກສາຫາລື ກັນໃນກຸ່ມ ແລະ ຈາກ ການສຳຫຼວດຄົວ ເຮືອນ ສາມາດສັງລວມໄດ້ດັ່ງຕໍ່ໄປນີ້ :

- ປະສົບກັບໄພນໍ້າຖ້ວມ ຫຼາຍກວ່າເກົ່າ ຢູ່ໃນເຂດອະນຸລັກ, ຈາກການສຳພາດຄົວເຮືອນ ແມ່ນ 80%
- ການໃຊ້ສານເຄມີປາບສັດຕູພືດ ແລະ ປຸຍ ຫຼາຍ ໂດຍສວນປູກອ້ອຍທີ່ກວ້າງໃຫຍ່ ຢູ່ນໍ້າຕອນເທິງ ໜອງ, ສົ່ງຜົນກະທົບ ຕໍ່ຄຸນນະພາບນໍ້າ ແລະ ສະນັ້ນ ກໍກະທົບຕໍ່ສຸຂະພາບ ຂອງປະຊາຊົນ ແລະສັດລ້ຽງ ໃນຊຸມ ຊົນ ທີ່ຢູ່ຕອນລຸ່ມ ຂອງນໍ້າ;
- ການຖິ້ມຂີ້ເຫຍື້ອ ທີ່ເປັນຂອງແຂງ ອ້ອມໜອງ ແລະ ບຶງ ( ໜອງປູຕາ, ສູ້ຍ ຢູ່ ຊະຄູນ-ເໜືອ);
- ພືດຊະນິດພັນທີ່ ແຜ່ລາມໄວ ແລະ ເຊັ່ນ. ຫຍ້າກະຖິນນໍ້າ (Mimosa Pigra, Pista, Salvinid ຢູ່ ຕາມໜອງ ແລະ ບຶງ);
- ການລ່າສັດ ແລະ ຕັດໄມ້ ປ່າຂອງຊຸມຊົນ ແລະ ປ່າໄມ້ທີ່ມີວິນຍານເຈົ້າປ່າເຝົ້າ ແລະ ບໍ່ຖືກປົກປັກຮັກສາ ອ້ອມ ທີ່ດິນບໍລິເວນນໍ້າ (ໃນຂະນະທີ່ ປ່າໄມ້ ດ້ານເຕັກນິກແລ້ວ ແມ່ນບໍ່ຖືກປົກປັກຮັກສາ' , ເປັນການ ຂັດກັບກົດໝາຍປະເພນີ ທີ່ລ່າສັດ ແລະ ຕັດໄມ້ໃນເຂດນັ້ນ; ແລະ

- ການແຜ່ພາຍ ຂອງ ຫອຍປາກກວ້າງ ຈາກ ທົ່ງນາ ໄປສູ່ອ່າງເກັບນໍ້າ ຫຼື ສູ້ຍ ໃນເຂດອະນຸລັກ ຂອງບ້ານ ຊະຄູນ-ເໜືອ ເປັນ ໄພຂົ່ມຂູ່ຕໍ່ ຊະນິດພັນທີ່ໃກ້ດີກັບທ້ອງຖິ່ນ, ເຊິ່ງປັດຈຸບັນ ເປັນໜຶ່ງໃນບັນດາແຫຼ່ງລາຍຮັບທີ່ສຳຄັນຂອງເມືອງຈຳພອນ.

ຮູບ 3: ບັນຫາ ດ້ານສິ່ງແວດລ້ອມ ທີ່ສຳຄັນ




ບັນດາຄົວເຮືອນ ສ່ວນຫຼາຍ ເປີດເຜີຍວ່າ ບັນຫາສິ່ງແວດລ້ອມເຫຼົ່ານີ້, ໂດຍສະເພາະ ການເກີດນໍ້າຖ້ວມ ແມ່ນສິ່ງຜົນກະທົບ ຕໍ່ການດຳລົງຊີວິດ ຂອງພວກຊາວບ້ານ ໄດ້ສິບກວ່າປີມາແລ້ວ. ບ້ານ ນານົກຂຽນ, ຕັ້ງຢູ່ຕອນລຸ່ມ ຂອງສວນປູກອ້ອຍ ໄດ້ຮັບຜົນກະທົບ ຈາກເສດເຫຼືອ ຂອງສານເຄມີ ນານເຖິງ 2 ຫາ 6 ປີ.

**ຕາຕະລາງ 13: ການຄົງຕົວຢູ່ ຂອງ ບັນຫາສິ່ງແວດລ້ອມ (ອັດຕາສ່ວນ ຂອງຜູ້ຕອບຄຳຖາມ)**

| | ໜ້ອຍກວ່າ 2 ປີ (ສ່ວນຮ້ອຍ) | 2 ຫາ 4 ປີ (ສ່ວນຮ້ອຍ) | 4 ຫາ 6 ປີ (ສ່ວນຮ້ອຍ) | 6 ຫາ 8 ປີ (ສ່ວນຮ້ອຍ) | 8 ຫາ 10 ປີ (ສ່ວນຮ້ອຍ) | ກວ່າ 10 (ສ່ວນຮ້ອຍ) |
|---|---|---|---|---|---|---|
| ດອນແດງ | 7.1 | 7.1 | 14.3 | 0 | 0 | 71.4 |
| ດົງຕະແບ່ງ | 0 | 0 | 0 | 0 | 0 | 100.0 |
| ດົງມ່ວງ | 0 | 0 | 22.2 | 33.3 | 0 | 44.4 |
| ແກ້ງກອກ-ດົງ | 4.2 | 4.2 | 16.7 | 4.2 | 0 | 70.8 |
| ນາກະທາງ | 0 | 0 | 0 | 0 | 10.0 | 90.0 |
| ນານົກຂຽນ | 7.7 | 23.1 | 38.5 | 15.4 | 7.7 | 7.7 |
| ຊະຄູນ-ເໜືອ | 14.3 | 14.3 | 0 | 0 | 0 | 71.4 |
| ຕາແຫຼວ | 0 | 10.0 | 0 | 0 | 0 | 90.0 |
| ເຊ | 14.3 | 14.3 | 14.3 | 0 | 14.3 | 42.9 |
| ຕານສູມ | 60.0 | 0 | 0 | 20.0 | 0 | 20.0 |
| ລວມທັງໝົດ | 8.2 | 8.2 | 12.7 | 6.4 | 2.7 | 61.8 |

## *3.5 ປະຊາກອນ*

ປະຊາກອນ ທັງໝົດ ຂອງເມືອງ ເຊ ຈຳພອນ ແມ່ນ 111,118 ຄົນ ໃນນັ້ນ ແມ່ຍິງ 57,878 ຄົນ. ເມືອງນີ້ ປະກອບດ້ວຍ 102 ບ້ານ, 14 ກຸ່ມບ້ານ ແລະ 18,580 ຄົວເຮືອນ, ແລະ 19,301 ຄອບຄົວ.[42]

ໝວດຊົນເຜົ່າຫຼັກ ທີ່ອາໄສ ຢູ່ໃນ ແລະ ອ້ອມ ທີ່ດິນບໍລິເວນນ້ຳ ເຊຈຳພອນ ແມ່ນ ຜູ້ໄທ ແລະ ລາວ (97%); ຄົນເຜົ່າ ມະກອງ ແລະ ກະຕາງ (3%) ກໍອາໄສຢູ່ ເຂດນີ້ເຊັ່ນດຽວກັນ.

159 ຄົວເຮືອນຕົວຢ່າງ ມີປະຊາກອນທັງໝົດ 1061 ຄົນນນັ້ນປະມານ 50.10% ເປັນເພດຍິງ. ເຜົ່າກະຕາງ ແລະ ເຜົ່າ ມະກອງ ມີປະມານ 17% ແລະ 13% ຕາມລຳດັບ ຂອງຈຳນວຕົວຢ່າງ ທັງໝົດ ດັ່ງທີ່ສະແດງໃນຕາຕະລາງ 2.

**ຕາຕະລາງ 14: ໝວດຊົນເຜົ່າ ໃນຄົວເຮືອນຕົວຢ່າງ**

| | ເພດ | | ລວມ | ອັດຕາສ່ວນ |
|---|---|---|---|---|
| | ຊາຍ | ຍິງ | | |
| ລາວລຸ່ມ(ລາວ) | 288 | 293 | 581 | 55% |
| ຜູ້ໄທ | 81 | 84 | 165 | 16% |
| ກະຕາງ | 98 | 82 | 180 | 17% |
| ມະກອງ | 62 | 73 | 135 | 13% |
| ລວມ | **529** | **532** | **1061** | **100%** |

ສ່ວນຫຼວງຫຼາຍ ຂອງ ປະຊາກອນ ຕົວຢ່າງ ແມ່ນ ມີອາຊີບ ເຮັດການກະສິກຳ. ສັດສ່ວນ ຂອງ ຜູ້ທີ່ຕ້ອງໄດ້ເພິ່ງພາອາໄສຜູ້ອື່ນ ທັງໝົດທຸກຊົນເຜົ່າ ແມ່ນມີອັດຕາສ່ວນສູງ, ຄືປະມານ 29% ໃນໝວດ ຜູ້ໄທ ແລະ 47% ໃນເຜົ່າມະກອງ. ອາຊີບອື່ນໆ ກໍລວມມີ ແຮງງານເຄື່ອນຍ້າຍໄປ ປະເທດໄທ, ກຳມະກອນຮັບຈ້າງລາຍວັນ, ພວກຄ້າຂາຍ ແລະ ພະນັກງານຂອງລັດ.

**ຕາຕະລາງ 15: ອາຊີບໃນໄລຍະ 12 ເດືອນຜ່ານມາ ຂອງສະມາຊິກຄົວເຮືອນ**

| | ຊົນເຜົ່າ (ສ່ວນຮ້ອຍ) | | | |
|---|---|---|---|---|
| | ເຜົ່າລາວ | ຜູ້ໄທ | ກະຕາງ | ມະກອງ |
| ກະສິກອນ | 51 | 55 | 57 | 49 |
| ເຮັດວຽກຢູ່ໄທ | 4 | 4 | 6 | 2 |

42 ເມືອງຈຳພອນ, ຫ້ອງການປົກຄອງ (2011). *ບົດລາຍງານປະຈຳປີ ຂອງ ເມືອງຈຳພອນ*

| | | | | |
|---|---|---|---|---|
| ແຮງງານມື້ | 4 | 4 | 1 | 1 |
| ຄ້າຂາຍ | 3 | 0 | 0 | 0 |
| ພະນັກງານລັດ | 2 | 7 | 2 | 0 |
| ລູກຈ້າງ ໃນ ພາກເອກະຊົນ | 1 | 2 | 0 | 0 |
| ນັກຮຽນ & ເດ ນ້ອຍ | 30 | 25 | 31 | 44 |
| ບໍານານ/ນັກບວດ | 3 | 2 | 2 | 3 |
| ເຮັດວຽກເຮືອນ | 1 | 2 | 1 | 1 |
| ລວມ | **100** | **100** | **100** | **100** |

ປະມານ 27% ແລະ 19% ຂອງໝວດຊົນເຜົ່າ ກະຕາງ ແລະ ມະກອງ ທີ່ມີອາຍຸ 6 ປີຂຶ້ນໄປ ທີ່ບໍ່ເຄີຍໄດ້ເຂົ້າໂຮງຮຽນ, ໃນຂະນະ ທີ່ລາວລຸ່ມ ແລະ ຜູ້ໄທ ມີໂອກາດ ແລະ ເຂົ້າເຖິງ ໂຮງຮຽນໄດ້ ຫຼາຍກວ່າ.

**ຕາຕະລາງ 16: ອັດຕາສ່ວນ ຂອງປະຊາຊົນ ອາຍຸ ກວ່າ 6 ປີ ທີ່ເຄີຍໄດ້ເຂົ້າໂຮງຮຽນ**

| | ຊົນເຜົ່າ (ສ່ວນຮ້ອຍ) | | | |
|---|---|---|---|---|
| | ລາວ | ຜູ້ໄທ | ກະຕາງ | ມະກອງ |
| ແມ່ນ | 90 | 89 | 73 | 81 |
| ບໍ່ແມ່ນ | 10 | 11 | 27 | 19 |

### *3.6 ອົງການຈັດຕັ້ງ ສັງຄົມ*

ອົງການຈັດຕັ້ງສັງຄົມ ສໍາລັບ ການປົກປັກຮັກສາ ກົດໝາຍ ປະເພນີ ຢູ່ ທີ່ດິນບໍລິເວນນໍ້າ ເຊຈໍາພອນ ເຫັນວ່າມີຢູ່ທຸກໆບ້ານ ທີ່ໄດ້ລົງສໍາຫຼວດ. ອໍານາດການປົກຄອງບ້ານ ທີ່ຮັບຮູ້ ຈາກລັດຖະບານ ແມ່ນປະກອບດ້ວຍ: ນາຍບ້ານ 1 ຄົນ, ຮອງນາຍບ້ານ 2 ຄົນ, ທະຫານກອງຫຼອນບ້ານ 1 ຄົນ, ພະນັກງານປ້ອງກັນຄວາມສະຫງົບບ້ານ 1 ຄົນ ແລະຕາງໜ້າ ຂອງແຕ່ລະອົງການຈັດຕັ້ງມະຫາຊົນທັງສາມ ອົງການ: ສະຫະພັນແມ່ຍິງລາວ, ສະຫະພັນ ຊາວໜຸ່ມ ແລະ ແນວລາວສ້າງຊາດ. ນອກຈາກນັ້ນ, ຍັງມີ ຫົວໜ້າຝ່າຍສາດສະໜາ ເຊິ່ງເປັນຜູ້ ທີ່ສະມາຊິກຂອງຊຸມຊົນ ໃຫ້ຄວາມເຄົາຣົບນັບຖືເປັນຢ່າງດີ, ເຊັ່ນ: ເຈົ້າອາວາດວັດ ປະຈໍາບ້ານ ແລະ ກວານຈໍ້າບ້ານ (ຜູ້ລົມກັບວິນຍານ/ຜູ້ຈັດພິທີກໍາທາງພາມ). ບາງບ້ານກໍມີໝໍດູ/ໝໍຜີ ຜູ້ທີ່ໃຫ້ຄໍາປຶກສາ ແລະ ແນະນໍາ ແກ່ສະມາຊິກ ຂອງຊຸມຊົນ ກ່ຽວກັບການຮັກສາ ກົດໝາຍປະເພນີ. ເຖິງຢ່າງໃດກໍຕາມ, ປັດໃຈຫຼັກ ສໍາລັບ ການຮັກສາ ແລະ ບັງຄັບໃຊ້ ກົດໝາຍປະເພນີນັ້ນ ແມ່ນ ຄວາມເຊື່ອຖື ແລະ ທໍານຽມການປະຕິບັດ ຂອງ ສະມາຊິກ ຂອງຊຸມຊົນ, ເຊິ່ງໄດ້ຖືກສ້າງຂຶ້ນມາໂດຍ ບັນພະບູລຸດ ຂອງເຂົາເຈົ້າ ແລະ ສືບທອດກັນມາຜ່ານຫຼາຍເຊັ່ນຄົນ.

### 3.7 ກິດຈະກໍາເສດຖະກິດ

ກິກຈະກໍາເສດຖະກິດຫຼັກ ທີ່ ເຫັນໄດ້ ຢູ່ໃນ ແລະ ອ້ອມ ທີ່ດິນ ບໍລິເວນນໍ້າ ເຊຈໍາພອນ ແມ່ນ ການປູກເຂົ້າ; ການລ້ຽງສັດ ສົມທົບກັບ ການຫາປາ; ເກັບເຄື່ອງປ່າຂອງດົງ ແລະ ຜະລິດຕະພັນ ດິນບໍລິເວນນໍ້າ; ແລະ ການທ່ອງທ່ຽວໃນລະດັບໃດໜຶ່ງ.

### 3.7.1 ການກະສິກຳ

ເຂົ້າ ເປັນຜະລິດຕະພັນກະສິກຳ ຫຼັກ ຢູ່ ເມືອງ ເຊຈຳພອນ. ໃນໄລຍະ ປີງົບປະມານ 2010-2011, ການຜະລິດເຂົ້າທັງໝົດ ໃນເມືອງນີ້ ໄດ້ປະມານ 127,685 ໂຕນ, ໂດຍຜະລິດຕະພາບ 4.64 ໂຕນ/ເຮັກຕາ ແລະ 4,46 ໂຕນ/ເຮັກຕາ ສໍາລັບ ນາປີ ແລະ ນາແຊງ ຕາມລໍາດັບ. ນອກຈາກການປູກເຂົ້າ, ການປູກອ້ອຍ ກໍເຫັນມີ ການປູກອ້ອຍ ຢູ່ເຂດເໜືອ ຂອງເມືອງ. ມີແຕ່ ສີ່ ຄົວເຮືອນເທົ່ານັ້ນ ທີ່ ລ້ຽງໝູ, ເຊິ່ງມີໝູ 8,945 ຕົວ. ການສົ່ງອອກ ຫອຍໄປຫວຽດນາມ ກໍບັນລຸປະມານ 33 ໂຕນ ໃນປີ 2011.[43]

### 3.7.2 ການບໍລິການ

ເມືອງ ມີ ຕະຫຼາດຖາວອນ ສອງ ແຫ່ງ ແລະ ຕະຫຼາດຂາຍຍ່ອຍເຄື່ອນທີ່ ເກົ້າ ແຫ່ງ.

### 3.7.3 ອຸດສາຫະກຳ

ເມືອງຈຳພອນ ສົ່ງອອກ ຫີນກາວ ໄປຫວຽດນາມ ແລະ ສົ່ງເກືອ ໄປຕະຫຼາດພາຍໃນປະເທດ. ມູນຄ່າການສົ່ງອອກທັງໝົດ ໃນປີ 2011 ແມ່ນ 132,934.341 ໂຕນ ສໍາລັບ ຫີນກາວ ແລະ ເກືອ ຈຳນວນ 1,800 ໂຕນ[44].

### 3.7.4 ແຫຼ່ງຕົ້ນຕໍຂອງລາຍຮັບ

ຕົວເລກ ທີ່ສະແດງ ໃນຕາຕະລາງ 9 ແມ່ນຕົວເລກ ຄາດຄະເນ ຂອງ ລາຍຮັບເປັນເງິນສົດ ຕະຫຼອດໄລຍະ 12 ເດືອນຜ່ານມາ ກ່ອນໜ້າ ການສຳພາດ, ຕາມການບອກເລົ່າຂອງຜູ້ ທີ່ຕອບຄຳຖາມ. ມູນຄ່າການບໍລິໂພກພາຍໃນຂອງແຕ່ລະຄົວເຮືອນ ບໍ່ໄດ້ລວມເອົາ. ການສຳພາດ ຄົວເຮືອນ ໄດ້ເປີດເຜີຍໃຫ້ຮູ້ວ່າ ໝົດທຸກຊົນເຜົ່າ ທີ່ອາໄສຢູ່ໃນຫຼູ້ ອ້ອມ ທີ່ດິນບໍລິເວນນໍ້ານັ້ນ ແມ່ນອາໄສ ຊັບພະຍາກອນທຳມະຊາດ ຫຼາຍທີ່ສຸດ ເພື່ອເປັນລາຍຮັບ, ເຊິ່ງ ປະມານ 77% ຂອງລາຍຮັບຂອງເຂົາເຈົ້າ ແມ່ນມາຈາກ ການກະສິກຳ, ການລ້ຽງສັດ ແລະ ເກັບເຄື່ອງປ່າຂອງດົງ ກໍຄືຜະລິດຕະພັນ ດິນບໍລິເວນນໍ້າ ດັ່ງທີ່ສະແດງໃນຕາຕະລາງ 9,

ຜະລິດຕະພັນຈາກ ການກະສິກຳ, ໂດຍສະເພາະ ການເຮັດນາ ແລະ ການລ້ຽງສັດກວມອັດຕາສ່ວນ ເຖິງ 28% ແລະ 29% ຕາມລໍາດັບ ຂອງລາຍຮັບທັງໝົດ.

ການເກັບໂຮມ ຜະລິດຕະພັນ ເຄື່ອງປ່າ ຂອງດົງ ແລະ ຜະລິດຕະພັນ ທີ່ດິນບໍລິເວນນໍ້າ, ກໍຄື ການຄ້າແລະ ການບໍລິການ ກວມອັດຕາສ່ວນ 20% ຂອງລາຍຮັບທັງໝົດ. ຜະລິດຕະພັນ ເຄື່ອງປ່າຂອງດົງ ແລະ ຜະລິດຕະພັນ ດິນບໍລິເວນນໍ້າ, ເຊັ່ນ: ໜໍ່ໄມ້, ເຫັດ, ຜັກປ່າ, ຈີລໍ່,ຈີນາຍ, ໄຂ່ມົດ, ປາ, ກຸ້ງ, ຫອຍ ແລະ ປູ ສ່ວນໃຫຍ່ ກໍແມ່ນເກັບເພື່ອ ການບໍລິໂພກໃນຄົວເຮືອນ ແລະ ພຽງແຕ່ 3% ຂອງຄົວເຮືອນ ທີ່ໃຊ້ຜະລິດຕະພັນເຫຼົ່ານີ້ ສໍາລັບການບໍລິໂພກໃນຄົວເຮືອນ ແລະ ເປັນການສ້າງລາຍຮັບ.

---

[43] Ibid

[44] Ibid

ຕາຕະລາງ 17: ຈຸດປະສົງ ສໍາລັບ ການເກັບເຄື່ອງປ່າຂອງດົງ ແລະ ຜະລິດຕະພັນ ທີ່ດິນບໍລິເວນນໍ້າ

| | ການບໍລິໂພກໃນຄົວເຮືອນ (ສ່ວນຮ້ອຍ) | ການບໍລິໂພກໃນຄົວເຮືອນ &ການສ້າງລາຍຮັບ (ສ່ວນຮ້ອຍ) |
|---|---|---|
| ດອນແດງ | 100 | 0 |
| ດົງຕະແບ່ງ | 100 | 0 |
| ດົງມອ່ງ | 92 | 8 |
| ແກ້ງກອກ-ດົງ | 100 | 0 |
| ນາກະທາງ | 81 | 19 |
| ນານົກຂຽນ | 100 | 0 |
| ຊະຄູນ-ເໜືອ | 100 | 0 |
| ຕາແຫຼວ | 100 | 0 |
| ບ້ານ ເຊ | 89 | 11 |
| ຕານສຸມ | 100 | 0 |
| **ລວມທັງໝົດ** | **97** | **3** |

ໄດ້ມີການລາຍງານ ອີກວ່າ ໝົດທຸກຄົນໃນຊຸມຊົນ ສາມາດ ເກັບ ຜະລິດຕະພັນ ເຄື່ອງປ່າຂອງດົງ ແລະ ປາ ຢູ່ໃນທີ່ດິນ ບໍລິເວນນໍ້າ ແລະ ສາມາດຂາຍຜະລິດຕະພັນ ໃຫ້ໃຜກໍໄດ້ ລວມທັງພໍ່ຄ້າຊາວຂາຍ ຈາກເຂດອື່ນ. ເຖິງຢ່າງໃດກໍຕາມ, ຖ້າຄົນພາຍນອກ ຢາກມາຫາປາ ຫຼື ເກັບ ເຄື່ອງປ່າ ຂອງດົງ, ກ່ອນອື່ນ ເຂົາເຈົ້າຕ້ອງໄດ້ຮັບ ອະນຸຍາດ ຈາກອໍານາດ ປົກຄອງບ້ານເສຍກ່ອນ.

ສັດປ່າບໍ່ຄ່ອຍຫາໄດ້ ສໍາລັບການລ່າສັດ ໃນເຂດນີ້ ແລະ ຊາວບ້ານ ສ່ວນໃຫຍ່ແມ່ນ ຫ້າງແຮ້ອໝູ, ກະຮອກ, ແລນ ແລະ ນົກ. ສັດທີ່ພົບໃນປ່າ ຫຼື ໜອງ ສັກສິດ ເຊັ່ນ ແຂ້, ເຕົ່າ ແລະ ລິງ ແມ່ນຖືກຖືວ່າ ເປັນເຈົ້າຖິ່ນເຈົ້າຖານວິນຍານທີ່ຮັກສາ ສັດຈໍພວກນີ້ ເຊິ່ງກໍໄດ້ຮັບການປົກປ້ອງຈາກ ກົດໝາຍປະເພນີ.

**ຕາຕະລາງ 18: ສັດສ່ວນ ຂອງລາຍຮັບ ປະຈໍາປີ ຂອງຄົວເຮືອນ (ກີບ) ຈາກແຫຼ່ງລາຍຮັບຕ່າງໆ**

| ແຫຼ່ງລາຍຮັບ | ສະເລ່ຍ | ຄ່າກາງ | ລວມ | ອັດຕາສ່ວນ ຂອງລາຍຮັບ ທັງໝົດ |
|---|---|---|---|---|
| ປູກຝັງ | 6,383,597 | 3,505,000 | 1,014,992,000 | 28 |
| ລ້ຽງສັດ | 6,703,654 | 500,000 | 1,065,881,062 | 29 |
| ເຄື່ອງປ່າຂອງດົງ | 864,739 | 380,000 | 137,493,500 | 4 |
| ປານປະມົງ ແລະ ສັດນໍ້າ | 1,388,651 | 545,000 | 220,795,500 | 6 |
| ອາຫານ, ນໍ້າດື່ມ& ປຸງແຕ່ງຢາສູບ | 726,266 | 0 | 114,750,000 | 3 |
| ເງິນຄ່າຈ້າງ ແລະ ເງິນເດືອນ | 1,137,579 | 0 | 180,875,000 | 5 |

| | | | | |
|---|---|---|---|---|
| ການຄ້າ ແລະ ການບໍລິການ | 2,227,673 | 0 | 354,200,000 | 10 |
| ລາຍຮັບອື່ນໆ | 3,597,799 | 0 | 572,050,000 | 16 |
| **ລວມລາຍຮັບປະຈໍາປີ** | **23,100,610** | **11,380,000** | **3,672,997,062** | **100** |

ການແປຮູບ ອາຫານ, ແລະ ເງິນຄ່າຈ້າງ ແລະເງິນເດືອນ ເປັນສ່ວນປະກອບປະມານ 3% ແລະ 5% ຕາມລໍາດັບ ຂອງລາຍຮັບທັງໝົດ. ເງິນຄ່າຈ້າງສ່ວນຫຼາຍ ແມ່ນກ່ຽວຂ້ອງກັບ ການສົ່ງເງິນ ຈາກສະມາຊິກ ຄອບຄົວ ທີ່ເປັນແຮງງານເຄື່ອນຍ້າຍ ຢູ່ປະເທດໄທ.

ເມື່ອສົມທຽບ ກັບບ້ານຕົວຢ່າງອື່ນໆ, ຊາວບ້ານ ນາມີກຊຽນ ແມ່ນຂຶ້ນກັບ ທີ່ດິນບໍລິເວນນໍ້າ ຫຼາຍກວ່າການເຮັດ ກາຍຜະລິດ ກະສິກໍາ ທັງການລ້ຽງສັດ ແລະ ເກັບເຄື່ອງປ່າຂອງດົງ. ຕາຕະລາງ 10 ສະແດງໃຫ້ເຫັນວ່າ ລາຍຮັບ ປານກາງ ຈາກການປູກຝັງ ແລະ ລ້ຽງສັດ ຢູ່ ບ້ານ ນາມີກຊຽນ ແມ່ນ  7 ລ້ານກີບ ແລະ 4 ລ້ານກີບ ຕາມລໍາດັບ. ລາຍຮັບປານກາງ ຈາກ ເຄື່ອງປ່າຂອງດົງ ກໍສູງກວ່າ ຢູ່ບ້ານອື່ນໆ.

ສໍາລັບລາຍຮັບ, ພວກຊາວບ້ານ ຢູ່ ດອນແດງ ບໍ່ຄ່ອຍຂຶ້ນກັບ ການ ລ້ຽງສັດ ຫຼື ການ ເກັບເຄື່ອງປ່າຂອງດົງ ແລະ ຜະລິດຕະພັນ ດິນບໍລິເວນນໍ້າ ພໍປານໃດ. ຊາວບ້ານ ຕາແຫຼວ, ນາກະທາງ ແລະ ແກ້ງກອກ-ດົງ ຂະຫຍັນທີ່ສຸດ ໃນການສ້າງລາຍຮັບ ຈາກການຫາປາ ແລະ ສັດນໍ້າອື່ນໆ ໃນຂະນະທີ່ ຊາວບ້ານຕານສຸມ ອາໄສການຫາປາໜ້ອຍທີ່ສຸດ ເພື່ອສ້າງລາຍຮັບ. ຄວາມແຕກຕ່າງ ຂອງແຫຼ່ງລາຍຮັບ ລະຫວ່າງ ບັນດາບ້ານຕົວຢ່າງ ອາດເປັນຍ້ອນ ໄລຍະຢູ່ ໃກ້ຫຼືໄກ ກັບ ຊັບພະຍາກອນ ທໍາມະຊາດ ທີ່ຢູ່ອ້ອມ ທີ່ດິນບໍລິເວນນໍ້ານັ້ນ ກໍເປັນໄດ້.

**ຕາຕະລາງ 19:  ລາຍຮັບປະຈໍາປີ ສະເລ່ຍ ຂອງຄົວເຮືອນ (ກີບ) ຈາກແຫຼ່ງລາຍຮັບຕົ້ນຕໍ**

| | ປູກພືດສິນຄ້າ ລວມ ທັງການປູກເຂົ້າ) | ການລ້ຽງສັດ | ເຄື່ອງປ່າ ຂອງດົງ | ການຫາປາ ແລະ ສັດນໍ້າ |
|---|---|---|---|---|
| ດອນແດງ | 3,000,000 | 75,000 | 25,000 | 62,500 |
| ດົງຕະແບ່ງ | 1,735,000 | - | 855,000 | 482,500 |
| ດົງມ່ວງ | 3,825,000 | 2,225,000 | 245,500 | 350,000 |
| ແກ້ງກອກ-ດົງ | 4,000,000 | 662,500 | 102,000 | 1,017,500 |
| ນາກະທາງ | 2,590,000 | 1,680,000 | 725,000 | 1,200,000 |
| ນາມີກຊຽນ | 7,000,000 | 4,050,000 | 965,000 | 530,000 |
| ຊະຄູນ-ເໜືອ | 4,000,000 | 1,495,000 | 220,000 | 680,000 |
| ຕາແຫຼວ | 3,887,000 | 1,100,000 | 347,500 | 1,530,000 |
| ບ້ານ ເຊ | 3,255,000 | 137,500 | 435,000 | 137,500 |
| ຕານສຸມ | 770,000 | 250,000 | 656,000 | - |

## *3.8 ເຂົ້າໃຈ ຄວາມທຸກຍາກ ຢູ່ ເຊຈໍາພອນ*

ຄົວເຮືອນທີ່ທຸກຍາກ ທີ່ໄດ້ຖືກລະບຸອອກມາ ໃນບົດລາຍງານນີ້ ແມ່ນ ອີງໃສ່ ດໍາລັດ ເລກທີ 28/ນຍ, ລົງວັນທີ 13 ຕຸລາ 2009, ກ່ຽວກັບ ເງື່ອນໄຂ ຄວາມທຸກຍາກ ແລະ ການພັດທະນາ ສໍາລັບ 2010-2015 ດໍາລັດສະບັບນີ້ ໃຫ້ ຄໍານິຍາມ ແລະ ເງື່ອນໄຂ/ມາດຖານ ສໍາລັບ ການລະບຸ ຄວາມທຸກຍາກ ແລະ ການພັດທະນາ ໃນລະດັບຄົວ

ເຮືອນ, ບ້ານ ແລະ ເມືອງ. ຄວາມທຸກຍາກ ແມ່ນການຂາດ ສິ່ງທີ່ຕອບສະໜອງຄວາມຕ້ອງກາພື້ນຖານ ສໍາລັບ ຊີວິດປະຈໍາວັນ, ເຊັ່ນ ການຂາດ ອາຫານ ເພື່ອໃຫ້ພະລັງງານ 2.100 ກາລໍຣີ ຕໍ່ຄົນ ຕໍ່ມື້, ຂາດເຄື່ອງນຸ່ງຫົ່ມທີ່ຈໍາເປັນ, ບໍ່ມີເຮືອນຢູ່ຖາວອນ, ບໍ່ມີຄວາມສາມາດທີ່ຈະຈ່າຍຄ່າຢາ, ບໍ່ສາມາດຈ່າຍຄ່າການຮຽນຂັ້ນພື້ນຖານ ແລະ ຂາດຊ່ອງທາງເຂົ້າຫາຕະໜ່າງ ການບໍລິການ ຂອງໂຄງລ່າງພື້ນຖານ ຢູ່ໃນສັງຄົມ. ຂີດຄວາມທຸກຍາກ ແມ່ນໄດ້ຕັ້ງໄວ້ 180,000 ກີບ ຕໍ່ຄົນ ຕໍ່ເດືອນ ສໍາລັບເຂດຊົນນະບົດ ແລະ 240,000 ກີບ ສໍາລັບ ເຂດຕົວເມືອງ. ເພາະເມືອງຈໍາພອນ ເປັນເມືອງ ທີ່ຢູ່ເຂດ ຊົນນະບົດ, ບົດລາຍງານນີ້ ຈຶ່ງອີງຕາມ ຂີດຄວາມທຸກຍາກ 180,000 ກີບຕໍ່ຄົນ ຕໍ່ເດືອນ.

ຕາຕະລາງ 11 ຂ້າງລຸ່ມນີ້ ຊີ້ໃຫ້ເຫັນວ່າ ປະມານ 57% ຂອງບັນດາຄົວເຮືອນ ຕົວຢ່າງ ແມ່ນ ຢູ່ ໃຕ້ຂີດຄວາມທຸກຍາກ ທີ່ລັດຖະບານຕັ້ງໄວ້. ຕົວເລກນີ້ ອາດພາໃຫ້ເຂົ້າໃຈຜິດກໍເປັນໄດ້ ເພາະວ່າ ດັ່ງທີ່ໄດ້ເວົ້າມາກ່ອນແລ້ວວ່າ ຄົວເຮືອນສ່ວນຫຼາຍ ອາດບໍ່ຈື່ ລາຍຮັບປະຈໍາປີຂອງຕົນຕະຫຼອດໄລຍະ 12 ເດືອນ, ແລະ ອາດໄດ້ລາຍງານ ຕົວເລກທີ່ຕໍ່າກວ່າ ກ່ຽວກັບລາຍໄດ້. ເຖິງຢ່າງໃດກໍຕາມ, ຕາຕະລາງ 11 ກໍໃຫ້ ການຊີ້ແຈງ ກ່ຽວກັບ ໝວດຊົນເຜົ່າທີ່ທຸກຍາກ ທີ່ຢູ່ໃນ ແລະ ອ້ອມທີ່ດິນບໍລິເວນນໍ້າ. ບ້ານດົງມ່ວງ, ຊະຄູນ-ເໜືອ ແລະ ບ້ານຕານສຸມ ປະກົດວ່າ ມີຈໍານວນຄົວເຮືອນ ທີ່ທຸກຍາກໜ້ອຍກວ່າ ບ້ານຕົວຢ່າງອື່ນໆ ໃນຂະນະທີ່ ບ້ານ ດົງຕະແບ່ງ, ບ້ານດອນແດງ ແລະ ບ້ານ ເຊ ມີຄົວເຮືອທີ່ທຸກຍາກ ຫຼາຍກວ່າ.

**ຕາຕະລາງ 20: ລະດັບຄວາມທຸກຍາກ ຢູ່ໃນ ບ້ານ ຕົວຢ່າງ**

| | **ລາຍຮັບຕໍ່ເດືອນ/ ຄົນ <180,000 ກີບ (ສ່ວນຮ້ອຍ)** | **ລາຍຮັບຕໍ່ເດືອນ/ຄົນ ≥180,000 ກີບ** (ສ່ວນຮ້ອຍ) |
|---|---|---|
| | 82 | 18 |
| ດອນແດງ | 83 | 17 |
| ດົງຕະແບ່ງ | 25 | 75 |
| ດົງມ່ວງ | 53 | 47 |
| ແກ້ງກອກ-ດົງ | 71 | 29 |
| ນາກະທາງ | 53 | 47 |
| ນາມີກຂຽນ | 35 | 65 |
| ຊະຄູນ-ເໜືອ | 50 | 50 |
| ຕາແຫຼວ | 80 | 20 |
| ບ້ານ ເຊ | 38 | 63 |
| ຕານສຸມ | **57** | **43** |

## 4 ກົດໝາຍ ປະເພນີ ທີ່ຄຸ້ມຄອງ ຊັບພະຍາກອນທໍາມະຊາດ ຢູ່ທີດິນບໍລິເວນນໍ້າ ເຊຈໍາພອນ

### *4.1 ປ່າສະຫງວນປະເພດຕ່າງໆ ອ້ອມ ທີ່ດິນບໍລິເວນນໍ້າ*

ປ່າສະຫງວນ ອ້ອມ ປ່າສະຫງວນ ສ່ວນຮ່ວມ ບໍ່ມີວິນຍານເຈົ້າຖິ່ນເຈົ້າຖານທີ່ດິນບໍລິເວນນໍ້າ ເຊຈໍາພອນ ສາມາດຈັດປະເພດ ເປັນ i) ປ່າສະຫງວນ ສ່ວນຮ່ວມ ບໍ່ມີວິນຍານເຈົ້າຖິ່ນເຈົ້າຖານ, ລະບຸໂດຍ ອໍານາດການປົກຄອງບ້ານ ແລະ ເມືອງ, ຫຼື ໂດຍລະບຽບການ ບັນພຸບຸລຸດ ເພື່ອຮັກສາ ຊ່ອງທາງເຂົ້າຫາ ຊັບພະຍາກອນ ການດໍາລົງຊີວິດ ໃຫ້

ຍາວນານ ແລະ ການປົກປັກຮັກສາ ສັດປ່າ; ແລະ ii) ປ່າສະຫງວນ ທີ່ມີເຈົ້າຖິ່ນຮັກສາ ເພື່ອຮັກສາຄວາມເຊື່ອຖື ທາງສາດສະໜາ ແລະ ຄວາມຕ້ອງການ ດ້ານວັດທະນະທໍາ.

### 4.1.1 ປ່າສະຫງວນ ສ່ວນຮ່ວມ ບໍ່ມີວິນຍານເຈົ້າຖິ່ນເຈົ້າຖານ

ປ່າສະຫງວນ ສ່ວນຮ່ວມ ບໍ່ມີວິນຍານເຈົ້າຖິ່ນເຈົ້າຖານ ມີຢູ່ ບາງບ້ານ ທີ່ໄດ້ລົງໄປສໍາຫຼວດ. ດົງ ປ່າສວ່ງ ປ່າແດງ ຢູ່ ບ້ານ ຕາແຫຼວ. ເປັນປ່າທີ່ຖືກປົກປັກຮັກສາ ຍ້ອນມັນມີແຫຼ່ງນໍ້າໃຕ້ດິນ ທີ່ເປັນແຫຼ່ງຕົ້ນຕໍ ຂອງນໍ້າ ທີ່ຫຼໍ່ລ້ຽງ ຊຸມຊົນ ໃນລະດູແລ້ງ. ໃນດົງແຫ່ງນີ້, ມີການຫ້າມຕັດຕົ້ນໄມ້ໃຫຍ່ ແຕ່ວ່າ ຕັດຕົ້ນນ້ອຍໄດ້. ຕົ້ນໄມ້ນ້ອຍສາມາດຖືກຕັດມາ ເພື່ອໃຊ້ສ່ວນບຸກຄົນ, ແຕ່ວ່າບໍ່ສາມາດໃຊ້ ໃນຈຸດປະສົງການຄ້າ. ການລ່າສັດໃຫຍ່ ກໍບໍ່ອະນຸຍາດ ແຕ່ວ່າລ່າສັດ ນ້ອຍແມ່ນເຮັດໄດ້.

ເມື່ອບໍ່ດົນມານີ້, ອໍານາດການປົກຄອງ ເມືອງ ແລະບ້ານ ໂດຍມີການປຶກສາຫາລື ກັບບັນດາສະມາຊິກ ໄດ້ພາກັນ ລະບຸ ເຂດປ່າສະຫງວນ ສ່ວນຮ່ວມ ເພື່ອຮັກສາ ແລະ ຄໍ້າຊູ ການລ້ຽງຊີບຂອງເຂົາເຈົ້າ. ຕົວຢ່າງ, ປ່າສະຫງວນ ຂອງ ຊຸມຊົນ 100 ເຮັກຕາ ຢູ່ ບ້ານ ນານົກຂຽນ ທີ່ຊາວບ້ານ ໄດ້ປົກປ້ອງ ບໍ່ໃຫ້ອະນຸຍາດ ໃຫ້ບໍລິສັດ ປູກອ້ອຍ ຂອງ ເອກະຊົນ ໄດ້ຮັບການສໍາປະທານ. ພວກຊາວບ້ານ ໄດ້ຍົກບັນຫາ ການສໍາປະທານ ທີ່ດິນ ຕໍ່ສະພາແຫ່ງຊາດ ແລະ ກໍໄດ້ມີການຕົກລົງວ່າ ບໍລິສັດ ຕ້ອງສະຫງວນປ່າໄວ້ 100 ເຮັກຕາ ສໍາລັບການເຄື່ອນໄຫວ ເພື່ອການທໍາມາ ຫາກິນ ຂອງບັນດາຊຸມຊົນທີ່ຢູ່ອ້ອມ. ໜອງກ່ານ ຢູ່ ບ້ານ ແກ້ງກອກ-ດົງ ແລະ ບາງສ່ວນ ຂອງ ສຸ້ຍ (ອ່າງເກັບນໍ້າ) ຢູ່ ບ້ານ ຊະຄູນ-ເໜືອ ຖືກປິດປັດຮັກສາໄວ້ ເປັນບ່ອນ ປາປະສົມພັນ.

### 4.1.2 ປ່າສະຫງວນ ທີ່ໃຊ້ເປັນດົງ ຫໍຜີບ້ານ

ຄວາມເຊື່ອທາງສາດສະໜາ ໄດ້ສ້າງ ກົດໝາຍປະເພນີ ທີ່ເຮັດໜ້າທີ່ໄດຍກົງ ແລະ ທາງອ້ອມ ທີ່ເປັນຜົນດີ ໃຫ້ແກ່ ການປົກປັກຮັກສາ ຊັບພະຍາກອນ ທໍາມະຊາດ ອ້ອມ ທີ່ດິນບໍລິເວນນໍ້າ ເຊຈໍາພອນ: ນິນທານ ຫຼື ເລື້ອງເລົ່າ ມັກ ຖືກນໍາມາໃຊ້ ເພື່ອປະກອບ ແລະ ເພີ້ມເນື້ອຫາສາລະ ໃຫ້ແກ່ ກົດໝາຍປະເພນີ ເພື່ອເຮັດໃຫ້ພວກມັນແຈ້ງ. ດົງ ສັກສິດ, ໜອງສັກສິດ ແລະ ປ່າຊ້າ ຢູ່ ຫຼາຍບ້ານທີ່ໄດ້ລົງສໍາຫຼວດ ຍັງຄົງຖືກເຝົ້າຮັກສາ ຢ່າງເອົາຈິງເອົາຈັງ ຈາກ ຊາວບ້ານ ໃຫ້ເປັນສະຖານທີ່ໄປໄຫວ້ວອນ ແລະ ເປັນບ່ອນຢູ່ ຂອງ ຈິດວິນຍານ ຫຼື ນາກ (ເງືອກ ຫຼື ມັງກອນ).

ເຊື່ອກັນວ່າ ເຈົ້ານໍ້າ ແລະ ເຈົ້າປ່າ ຈະລົງໂທດ ຜູ້ທີ່ລຸກລໍ້າ ຫຼື ລ່າສັດທີ່ຖືກຫວງຫ້າມ, ແລະ ການໃຊ້ຊີວິດຢູ່ຢ່າງບໍ່ມີ ສິນທໍາ. ເພາະສະນັ້ນ, ຫຼາຍໜອງ ແລະ ປ່າດົງ ຢູ່ ໃນ ທີ່ດິນບໍລິເວນນໍ້ານັ້ນ ຈຶ່ງໄດ້ກາຍເປັນ ບ່ອນ ປະສົມພັນ ຂອງ ສັດນໍ້າ ແລະ ສັດບົກ. ບາງຕົວຢ່າງ ກໍຄື ດົງມະເຫສັກ ຢູ່ ບ້ານ ດົງມ່ວງ ແລະ ບ້ານ ແກ້ງກອກ-ດົງ,, ໜອງສັກສິດ ຢູ່ ບ້ານ ແກ້ງກອກ-ດົງ ແລະ ບ້ານດອນແດງ, ແລະ ປ່າຊ້າ ຢູ່ຫຼາຍບ້ານ ທີ່ໄດ້ລົງສໍາຫຼວດ.

## 4.2 ກົນໄກການຄຸ້ມຄອງ ປ່າສະຫງວນ

ການວິເຄາະ ການປຶກສາຫລື ໃນກຸ່ມ ຢູ່ ໃນ 10 ບ້ານ ທີ່ມີຊົນເຜົ່າແຕກຕ່າງກັນອາໄສຢູ່ນັ້ນ ໄດ້ເປີດເຜີຍໃຫ້ຮູ້ວ່າ ກົນໄກ ສໍາລັບການຄຸ້ມຄອງ ທັງສອງປ່າສະຫງວນ ທີ່ບໍ່ກ່ຽວກັບສາສະໜາຫຼືຄວາມເຊື່ອ ແລະ ປ່າທີ່ມີວິນຍານ ເປັນ ເຈົ້າຖິ່ນເຈົ້າຖານ ແມ່ນຄ້າຍຄືກັນຫຼາຍ, ສໍາລັບ ສ່ວນຫຼາຍ ຂອງເຜົ່າລາວ ແລະ ກຸ່ມສ່ວນໜ້ອຍ ທີ່ຢູ່ອ້ອມ ທີ່ດິນບໍລິເວນນໍ້າ ເຊຈໍາພອນ. ອໍານາດການປົກຄອງບ້ານ, ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ ແລະ ກອງຫຼອນ ແມ່ນເຝົ້າ ຮັກສາ ເຂດ ທີ່ບໍ່ກ່ຽວກັບສາດສະໜາ ຫຼື ຄວາມເຊື່ອ, ສ່ວນວິນຍານ ທີ່ເປັນເຈົ້າຖິ່ນເຈົ້າຖານນັ້ນ ໂດຍຜ່ານ ໝໍດູ/ ໝໍຜີ ແລະ ກວານຈໍ້າບ້ານ ແມ່ນເຝົ້າຮັກສາ ປ່າເຂດທີ່ມີວິນຍານ ເປັນເຈົ້າຖິ່ນເຈົ້າຖານ.

ປະມານ 86% ຂອງຜູ້ຕອບຄໍາຖາມ ໄດ້ໃຫ້ຮູ້ວ່າ ກົດໝາຍ ທີ່ເຂົາເຈົ້າ ປະຕິບັດ ແມ່ນກົດໝາຍປະເພນີ. ຜູ້ຕອບຄໍາ ຖາມທັງໝົດ ໃນ 6 ຈາກ 11 ບ້ານ ເບິ່ງຄືວ່າ ປະຕິບັດູາມກົດໝາຍ ປະເພນີ ຫຼາຍກວ່າ ກົດໝາຍນິຕິບັນຍັດ, ໃນ ຂະນະທີ່ ຜູ່ຕອບຄໍາຖາມ ໃນ 5 ບ້ານ ກໍຮັບຮູ້ ກົດໝາຍ ນິຕິບັນຍັດ. ເບິ່ງ ຕາຕະລາງ 12

ຕາຕະລາງ 21: ທຳນຽມປະຕິບັດ ກົດໝາຍປະເພນີ

| | ກົດໝາຍປະເພນີ (ສ່ວນຮ້ອຍ) | ກົດໝາຍນິຕິບັນຍັດ (ສ່ວນຮ້ອຍ) |
|---|---|---|
| ດອນແດງ | 71 | 29 |
| ດົງຕະແບ່ງ | 100 | 0 |
| ດົງມ່ວງ | 75 | 25 |
| ແກ້ງກອກ-ດົງ | 83 | 17 |
| ນາກະທາງ | 100 | 0 |
| ນານີກຂຽນ | 100 | 0 |
| ຊະຄູນ-ເໜືອ | 53 | 47 |
| ຕາແຫຼວ | 100 | 0 |
| ບ້ານ ເຊ | 100 | 0 |
| ຕານສູມ | 100 | 0 |
| **ລວມ** | **86** | **14** |

### 4.2.1 ການຄຸ້ມຄອງ ປ່າສະຫງວນສ່ວນຮ່ວມ ທີ່ບໍ່ກ່ຽວກັບຄວາມເຊື່ອຖື (ບໍ່ມີວິນຍານເປັນເຈົ້າຖິ່ນເຈົ້າຖານ)

ປ່າສະຫງວນສ່ວນຮ່ວມ ທີ່ບໍ່ກ່ຽວກັບຄວາມເຊື່ອຖື ແມ່ນອຳນາດ ການປົກຄອງບ້ານ ເປັນຜູ້ຄຸ້ມຄອງ; ໂດຍສະເພາະ ເຈົ້າໜ້າທີ່ ຮັກສາຄວາມສະຫງົບ ແລະ ກອງຫຼອນບ້ານ.

### 4.2.2 ການຄຸ້ມຄອງປ່າສະຫງວນ ທີ່ມີວິນຍານ ເປັນເຈົ້າຖິ່ນເຈົ້າຖານ

ບັນດາປ່າດົງ ສັກສິດ. ຫຼື ດົງມະເຫສັກ ຖືກເຊື່ອວ່າ ເປັນສະຖານທີ່ ຂອງ ວິນຍານ ທີ່ເປັນຜູ້ເຝົ້າຮັກສາ ທີ່ ປົກປ້ອງ ສະມາຊິກ ຂອງຊຸມຊົນທັງໝົດ ແລະ ຢູ່ທຸກແຫ່ງຫົນ. ເມື່ອເປັນດັ່ງນັ້ນ, ວິນຍານເຫຼົ່ານັ້ນ ຕ້ອງໄດ້ຮັບຄວາມເຄົາລົບ ນັບຖື ແລະ ແຕະຕ້ອງບໍ່ໄດ້. ປ່າດົງສັກສິດ ປະເພດນີ້ ຕາມທຳມະດາ ແມ່ນຕັ້ງຢູ່ໃກ້ໜອງ, ຢູ່ ຍອດຫ້ວຍ ຫຼື ຢູ່ ແຄມສາຍນ້ຳໃຫຍ່. ຕົວຢ່າງ ດົງມະເຫສັກ ຢູ່ບ້ານນານີກຂຽນ ແມ່ນຕັ້ງຢູ່ ໃກ້ໆ ກູດ ເຊັງ (ໜອງເຊັງ); ບ້ານແກ້ງກອກ-ດົງ ແມ່ນຢູ່ຕິດກັບ ໜອງ ປູ່ ຕາ; ແລະ ບ້ານ ດອນແດງ ຕັ້ງຢູ່ໃກ້ ກັບ ໜອງຫຼວງ, ໜອງເຕົ່າ ທີ່ມີຊື່ສຽງ ຂອງ ເມືອງ ຈຳພອນ.

ມີການເກືອດຫ້າມການລ່າສັດ ຢູ່ໃນປ່າ ສັກສິດ ເພາະວ່າ ພວກຊາວບ້ານ ເຊື່ອວ່າ ສັດເຫຼົ່ານັ້ນ ເປັນຜູ້ປົກປ້ອງຮັກສາ ວິນຍານ ຂອງເຈົ້າຖິ່ນເຈົ້າຖານ. ເລື້ອງນີ້ ແມ່ນຈະແຈ້ງ ຢູ່ໃນກໍລະນີ ລີງ ທີ່ບ້ານດອນເມືອງ ແລະ ເຕົ່າຢູ່ ໜອງ ປູ່ ຕາ ຂອງບ້ານ ແກ້ງກອກດົງ ແລະ ໜອງຫຼວງ ຂອງບ້ານດອນແດງ. ທຸກໆປີ ພວກຊາວບ້ານ ພາກັນຈັດ ພິທີກຳ ໜຶ່ງ ຂຶ້ນ ໂດຍມີ ກວານຈ້ຳບ້ານ ເປັນຜູ້ພາເຮັດ ເພື່ອສະແດງຄວາມເຄົາລົບບູຊາ ວິນຍານຂອງຜູ້ປົກປ້ອງຮັກສາ ຢູ່ດົງມະເຫສັກ. ມີການຂ້າສັດ , ເຊັ່ນ: ໄກ່ ຫຼື ໝູ ໃນໄລຍະພິທີດັ່ງກ່າວ. ສຳລັບຊາວບ້ານຜູ້ ທີ່ຮັ່ງມີແດ່ ກໍຂ້າຄວາຍເປັນ ສິ່ງບູຊາ ທຸກໆສາມປີໃດ ແມ່ນຂ້າຄວາຍຕົວໜຶ່ງ ເພື່ອບູຊາ ວິນຍານ ຢູ່ດົງມະເຫສັກ.

ການບັງຄັບໃຊ້ ກ່ອນອື່ນ ແມ່ນດ້ວຍການເປັນຕຳຫຼວດ ເອງ ຍ້ອນຢ້ານ ວ່າຈະຜິດໃຈ ຂອງ ວິນຍານ.ກວານຈ້ຳບ້ານ ຈັດພິທີພິທີກຳ ແຕ່ ບໍ່ໄດ້ມີສ່ວນຮ່ວມ ໃນການຄຸ້ມຄອງ ຫຼື ປົກປັກຮັກສາ.

ຕາຕະລາງ 22: ສັດທີ່ຫ້າມລ່າ

| | ທຸກປະເພດສັດ (ສ່ວນຮ້ອຍ) | ແລນ, ໄກ່ປ່າ & ລີງ (ສ່ວນຮ້ອຍ) | ເຕົ່າ, ແລນ,ຟານ ໝູປ່າ & ງູ (ສ່ວນຮ້ອຍ) | ແລນ, ນົກ, ໝູ ປ່າ, ໄກ່ປ່າ, ງູ (ສ່ວນຮ້ອຍ) | ແຂ້ & ເຕົ່າ (ສ່ວນຮ້ອຍ) |
|---|---|---|---|---|---|
| ດອນແດງ | 40.0 | 0 | 0 | 0 | 60.0 |
| ດົງຕະແປ່ງ | 22.3 | 0 | 11.1 | 66.6 | 0 |
| ດົງມ່ວງ | 0 | 27.3 | 72.7 | 0 | 0 |
| ແກ້ງກອກ-ດົງ | 96.7 | 0 | 0 | 0 | 3.3 |
| ນາກະທາງ | 100.0 | 0 | 0 | 0 | 0 |
| ນານົກຂຽນ | 35.2 | 0 | 53.0 | 11.8 | 0 |
| ຊະຄູນ-ເໜືອ | 66.6 | 11.2 | 22.2 | 0 | 0 |
| ຕາແຫຼວ | 75.0 | 6.3 | 6.3 | 0 | 12.5 |
| ບ້ານ ເຊ | 33.3 | 11.2 | 55.5 | 0 | 0 |
| ຕານສຸມ | 0 | 0 | 0 | 0 | 100.0 |
| **ລວມ** | **58.5** | **4.8** | **19.0** | **5.5** | **12.2** |

ຫຼາຍໆບ້ານ ທີ່ມີປ່າສັກສິດ ແມ່ນມີ ກວານຈ້ຳບ້ານ ເປັນຜູ້ ຕິດຕໍ່ ກັບ ວິນຍານ ທັງເປັນ ຜູ້ຈັດພິທີກຳຕ່າງໆ, ແລະ ໝໍດູ ຫຼື ໝໍຜີ ຜູ້ທີ່ໃຫ້ຄຳປຶກສາແນະນຳ ແກ່ຊາວບ້ານ ກ່ຽວກັບ ວ່າ ແມ່ນຫຍັງ ກໍ່ໃຫ້ເກີດບັນຫາໃນຄອບຄົວ ຂອງ ເຂົາເຈົ້າ ແລະ ຈະຕ້ອງເຮັດຫຍັງ ເພື່ອພົ້ນເຄາະຮ້າຍເຫຼົ່ານັ້ນ. ພວກຊາວບ້ານ ທີ່ມີປ່າສັກສິດ ຮ່ວມກັນນັ້ນ, ຕົວຢ່າງ ບ້ານ ດົງມ່ວງ ກັບບ້ານ ຊະຄູນ-ເໜືອ ມີກວານຈ້ຳບ້ານ ສອງຄົນ ແຕ່ວ່າ ມີແຕ່ຜູ້ດຽວ ຜູ້ທີ່ຢູ່ ບ້ານ ຊະຄູນ- ເໜືອ ສາມາດ ຈັດພິທີກຳຫຼວງ ປະຈຳປີ ສຳລັບ ຜູ້ທີ່ຖືກ ວິນຍານ ກຸກກວນ.
ບົດບາດຕ່າງໆ ຂອງ ກວານຈ້ຳ ບ້ານ ແລະ ໝໍດູ ຫຼື ໝໍຜີ ໄດ້ສະຫຼຸບຢູ່ໃນຕາຕະລາງ 14 ລຸ່ມນີ້:

**ຕາຕະລາງ 23: ບົດບາດ ຂອງ ກວານຈ້ຳບ້ານ ແລະ ໝໍດູ/ໝໍຜີ**

| ກວານຈ້ຳບ້ານ (ຜູ້ຈັດພິທີທາງພາມ) | ໝໍດູ/ໝໍຜີ |
|---|---|
| • ຕັກເຕືອນ ຊາວບ້ານ ກ່ຽວກັບ ການລົງໂທດ ຂອງ ວິນຍານ ຖ້າ ຜູ້ໃດຜູ້ໜຶ່ງ ໄດ້ເຮັດສິ່ງໃດສິ່ງໜຶ່ງຜິດ ສິ່ງຜິນເດືອດຮ້ອນ ຕໍ່ວິນຍານ ໃນປ່າສັກສິດ.<br>• ຈັດພິທີກຳຕ່າງໆ ແລະ ຊ່ວຽ ຕິດຕໍ່ກັບ ວິນຍານ ຢູ່ ດົງມະເຫສັກ ເມື່ອຜູ້ໃດຜູ້ໜຶ່ງ ຢາກບູຊາ ວິນຍານ ເພື່ອພົ້ນເຄາະຮ້າຍຂອງຕົນ.<br>• ເຂົາເຈົ້າ ຖືກຄັດເລືອກ ໂດຍ ວິນຍານ ຢູ່ ດົງມະເຫສັກ ແລະ ນີ້ເປັນສິ່ງທີ່ສືບທອດກັນຫຼາຍທີ່ສຸດ ລະຫວ່າງ ບັນດາສະມາຊິກຄອບຄົວ.ຢ່າງໃດກໍຕາມ ກໍມີການຍົກເວັ້ນບາງກໍລະນີ, ຕົວຢ່າງ ກວານຈ້ຳໃໝ່ ຢູ່ບ້ານແກ້ງກອກ-ດົງ ເປັນແມ່ຍິງ ຜູ້ທີ່ມີສາຍພົວພັນຄອບຄົວ ກັບຜູ້ກ່ອນ ທີ່ໄດ້ລ່ວງລັບໄປແລ້ວ. | • ໃຫ້ການປຶກສາຫາລື ແກ່ຊາວບ້ານ ເມື່ອສະມາຊິກຄອບຄົວຫຼື ສັດສາວາສິ່ງ ຂອງ ເຂົາເຈົ້າ ໄດ້ຮັບຜົນກະທົບຈາກ ຄວາມເຈັບໄຂ້ໄດ້ປ່ວຍ ຫຼື ມີເຄາະເວນເຂັນຮ້າຍ.<br>• ໃຫ້ຄຳແນະນຳ ແກ່ຄອບຄົວທີ່ປະສົບເຄາະຮ້າຍນັ້ນວ່າ ຈະຜ່ອນເບົາ ຫຼື ແກ້ໄຂບັນຫາຂອງພວກຕົນແນວໃດ ແລະຄວນຈະຂ້າສັດປະເພດໃດໃຫ້ແກ່ວິນຍານ, ແຕ່ວ່າບໍ່ສາມາດຈັດພິທີກຳໄດ້;<br>• ບໍ່ເອົາຫົວຊາຕໍ່ຄຳແນະນຳ ຂອງໝໍຜີ ແມ່ນສ່ຽງຕໍ່ຊີວິດ ຂອງຄົນຜູ້ໜຶ່ງ;<br>• ທຸກຄົນສາມາດຮຽນເປັນໝໍຜີ/ໝໍດູ. |

ການລົງໂທດ ໂດຍວິນຍານ ຢູ່ ດົງມະເຫສັກ ກ່ອນອື່ນແມ່ນ ກ່ຽວກັບ ຄວາມເຈັບໄຂ້ໄດ້ປ່ວຍ ຫຼື ໂຊກຮ້າຍ ສຳລັບສະມາຊິກຂອງຊຸມຊົນ. ເຄາະຮ້າຍນັ້ນ ສາມາດຕົກໃສ່ໝົດທຸກຄົນ - ບໍ່ກ່ຽວກັບວ່າ ຄອບຄົວນັ້ນໄດ້ລະເມີດ ກົດລະບຽບ ຫຼືບໍ່. ເມື່ອຄອບຄົວໜຶ່ງ ມີຄວາມເຈັບປ່ວຍ ພວກເຂົາກໍຈະປຶກສາກັບໝໍດູ/ໝໍຜີ ເພື່ອໄດ້ຄຳແນະນຳ ຈາກນັ້ນ ພວກເຂົາກໍຈະຂໍຄວາມຊ່ວຍເຫຼືອຈາກ ກວານຈ້ຳບ້ານ ເພື່ອບູຊາວິນຍານ ໂດຍອີງຕາມຄຳແນະນຳ ຂອງ ໝໍດູ/ໝໍຜີ.

ທຸກຄົນ ຕ້ອງປະຕິບັດຕາມ ຄຳແນະນຳ ຂອງໝໍດູ/ໝໍຜີ; ໃຜບໍ່ຫົວຊາ ແມ່ນສ່ຽງຕໍ່ການຕາຍ ຂອງພວກເຂົາ.ມີເລື່ອງເລົ່າເລື່ອງໜຶ່ງ ເວົ້າກ່ຽວກັບ ການລົງໂທດ ທີ່ກ່ຽວຂ້ອງກັບ ທະຫານຫວຽດນາມສອງຄົນ ທີ່ໄດ້ເອົາລີງຈາກ ປ່າ ດົງມ່ວງ, ແລະ ເວລາຢ່າງກັບຄືນເມືອຄ້າຍຂອງພວກຕົນ ທະຫານນັ້ນ ຍິງກັນເອງ. ອີກເລື່ອງໜຶ່ງທີ່ຍັງໃໝ່ ທີ່ເລົ່າກັນຢູ່ໃນຊຸມຊົນ ແມ່ນກ່ຽວກັບ ກຳມະກອນກໍ່ສ້າງຜູ້ໜຶ່ງ ທີ່ເຮັດວຽກຢູ່ບ່ອນສ້າງວັດ ບ້ານ ດົງມ່ວງຫຼັງໃໝ່. ຜູ້ກ່ຽວໄດ້ຕີລີງຕົວໜຶ່ງ ທີ່ລັກອາຫານຂອງລາວ. ໃນຕອນກາງຄືນ ກຳມະກອນຜູ້ນັ້ນ ເຈັບກະທັນຫັນ ແລະ ມີເລືອດປາກເລືອດດັງອອກ, ສຸດທ້າຍ ຜູ້ກຽວກໍ ຕາຍຢູ່ ໂຮງໝໍແຂວງ. ພວກຊາວບ້ານເວົ້າວ່າ ຖ້າພວກຄົນເຫຼົ່ານີ້ ຫາກໄດ້ປະຕິບັດຕາມ ຄຳແນະນຳ ຂອງ ໝໍຜີ/ໝໍດູ ແລະ ຂໍຂະມາໍນຳວິນຍານ ຜູ້ເຝົ້າຮັກສາ ດົງມະເຫສັກ, ພວກເຂົາຈະບໍ່ຕາຍ. ກໍລະນີສ່ວນຫຼາຍ ທີ່ເຂົາເຈົ້າ ໄດ້ລ່ວງລະເມີດ ກົດລະບຽບ ແມ່ນຈະຖືກຂໍໃຫ້ ຂ້າສັດ ໃຫ້ວິນຍານ ແລະ ມູນຄ່າ ຂອງການລົງໂທດນັ້ນ ແມ່ນຂຶ້ນກັບ ຄວາມຮ້າຍແຮງ ຂອງ ການເຮັດຄວາມຜິດ, ເຊິ່ງເລີ້ມແຕ່ ໄກ່, ໝູ, ງົວ ແລະ ຄວາຍ. ຫຼັງຈາກເສັດສິ້ນພິທີກຳ ແລ້ວ ພວກຊາວບ້ານ ກໍພາກັນແບ່ງປັນກັນ ຊີ້ນສັດທີ່ໄດ້ຂ້ານັ້ນ.

ຢູ່ໜອງສະຫງວນ ທີ່ບ້ານ ແກ້ງກອກ-ດົງ, ໜອງ ແມ່ຮ້າງ, ການຫາປາ ແລະ ລ່າແຂ້ ແມ່ຖືກເກືອດຫ້າມມາແລ້ວໄດ້ຫຼາຍເຊັນຄົນ ແລະ ອຳນາດການປົກຄອງບ້ານ ຮັບຜິດຊອບ ໃນການບັງຄັບໃຊ້ ກົດໝາຍປະເພນີ. ຖ້າຜູ້ໃດຜູ້ໜຶ່ງ ຖືກຈັບໄດ້ໄລ່ທັນ ໃນການຫາປາ ຢູ່ໜອງແຫ່ງນີ້, ຜູ້ກ່ຽວ ຈະຖືກປັບໃໝ ດ້ວຍຄວາຍຕົວໜຶ່ງ ຫຼື ເງິນສົດທີ່ມີຄ່າທຽບເທົ່າ. ການລົງໂທດແບບນີ້ ແມ່ນຖືກໃຊ້ ກັບໝົດທຸກຄົນ ທີ່ລ່ວງລະເມີດ ລວມທັງຄົນພາຍນອກ.

ໜອງສັກສິດ ຢູ່ບ້ານແກ້ງກອກ-ດົງ, ໜອງປູຕາ ຕັ້ງຢູ່ຕິດກັບ ປ່າດົງມະເຫສັກ. ພວກຊາວບ້ານ ບໍ່ສາມາດເອົາເຕົ່າຈາກໜອງນັ້ນ ເພາະເຊື່ອກັນວ່າ ພວກເຕົ່າເຫຼົ່ານັ້ນ ເປັນນາຍຍາມ ຂອງຈິດວິນຍານ ໃນປ່າສັກສິດດັ່ງກ່າວ. ຈົນເຖິງ

ປັດຈຸບັນ ບໍ່ທັນມີການປັບໃໝໃສ່ໂທດ ເພາະບໍ່ມີຜູ້ໃດ ໄດ້ລ່ວງລະເມີດ ກົດລະບຽບດັ່ງກ່າວ. ເຖິງຢ່າງໃດກໍຕາມ ພວກຊາວບ້ານ ກໍໄດ້ຮັບອະນຸຍາດ ໃຫ້ຫາປາຢູ່ໜອງນັ້ນ. ໃນໄລຍະການລົງສຳຫຼວດ ໄດ້ສັງເກດເຫັນວ່າ ດ້ານໜຶ່ງ ຂອງໜອງນັ້ນແມ່ນ ຖືກໃຊ້ເປັນ ບ່ອນຖິ້ມຂີ້ເຫຍື້ອທີ່ເປັນຂອງແຂງ.
ຢູ່ໜອງສັກສິດ ກູດ ເຊັງ ທີ່ຕັ້ງຢູ່ ດົງມະເຫສັກ ຂອງບ້ານ ນາບົກຂຽນ, ອະນຸຍາດໃຫ້ຫາປາ ແຕ່ສະເພາະໃນເດືອນ ທັນວາ, ຫຼັງຈາກພິທີ ລ້ຽງບູຊາວິນຍານເຈົ້າຖິ່ນເຈົ້າຖານ, ຈົນຮອດເດືອນ ກໍລະກົດ. ເຖິງຢ່າງໃດກໍຕາມ, ພວກ ຊາວບ້ານ ກໍກ້າແຕ່ຫາປາ ຢູ່ໜອງໃນປ່າສັກສິດນີ້ ເພື່ອສ່ອນຮ່ວມ ໃນມື້ມີພິທີກຳລ້ຽງບູຊາ ວິນຍານເທົ່ານັ້ນ. ພວກ ເຂົາເຈົ້າ ຈະບໍ່ເອົາເຕົ່າ ຫຼື ງູ ຈາກໜອງນີ້.
ໜອງຫຼວງ, ຫຼື ໜອງເຕົ່າ ຢູ່ບ້ານດອນແດງ ເປັນໜອງສະຫງວນ ເພາະວ່າ ເປັນບ່ອນຢູ່ ຂອງ ພວກເຕົ່າ. ເຕົ່າຕົວທຳ ອິດ ແມ່ນຖືກພົບເຫັນ ໃນປີ 1954 ແລະພວກມັນກໍ ຢູ່ທີ່ນັ້ນມາແຕ່ ກ່ອນການຕັ້ງບ້ານ. ປັດຈຸບັນ, ມີເຕົ່ານັບຮ້ອຍ ຕົວ ອາໄສຢູ່ໃນໜອງດັ່ງກ່າວ, ເຖິງແມ່ນວ່າ ບໍ່ເຄີຍມີການນັບປະຊາກອນ ເຕົ່າມາກ່ອນຈັກເທື່ອ. ໂດຍທົ່ວໄປ, ເຕົ່າ ມີການປະສົມພັນ ໃນເດືອນມິຖຸນາ ແລະ ວາງໄຂ່ ຢູ່ຕາມແຄມໜອງ. ມີຊະນິດພັນໜຶ່ງ ທີ່ສຳຄັນ, ເຖິງແມ່ນວ່າເຕົ່າ ຊະນິດອື່ນໆ ກໍສາມາດຖືກພົບເຫັນເໝືອນກັນ. ພວກຄົນຄ້າ-ຊາວຂາຍ ທີ່ເດີນທາງຜ່ານແຖວນັ້ນ ໄດ້ຖືກເຈົ້າໜ້າທີ່ ດ່ານ ຈັບຕົວໄດ້ ຢູ່ຊາຍແດນ ຜູ້ກ່ຽວຫາບເຕົ່າ 12 ຕົວ, ແລະຕໍ່ມາກໍໄດ້ຖືກປ່ອຍລົງໜອງແຫ່ງນີ້ ແລະ ກໍຍັງເຫັນ ພວກມັນຢູ່. ປະມານ 20 – 30 ປີ ກ່ອນນີ້, ໄດ້ມີເຕົ່າເຜືອກອາໄສຢູ່ໃນໜອງ ດັ່ງກ່າວ ເຊິ່ງຖືກເຊື່ອວ່າ ເປັນເຕົ່າ ສັກສິດທີ່ສຸດ, ແຕ່ວ່າໃນໄລະຫຼັງມານີ້ ພວກມັນບໍ່ປະກົດຕົວໃຫ້ເຫັນອີກ.

ພວກຊາວບ້ານ ເຊື່ອວ່າ ວິນຍານເປັນຜູ້ປົກປັກຮັກສາເຕົ່າ, ແລະ ເຊື່ອວ່າວິນຍານແມ່ນຢູ່ໃນເຕົ່ານັ້ນ, ເປັນສິ່ງໝາຍ ບອກວ່າເຕົ່ານັ້ນເປັນຜູ້ຮັບວິນຍານ. ຍ້ອນຄວາມເຊື່ອ ເລື້ອງຈິດວິນຍານດັ່ງກ່າວ, ຈຶ່ງບໍ່ມີໃຜໄດ້ຮັບອະນຸຍາດ ໃຫ້ລ່າ ສັດ ແລະ ຂີ່ເຮືອ ໃນເຂດໜອງນີ້, ແຕ່ວ່າ ການຫາປາແມ່ນໄດ້ຮັບອະນຸຍາດເປັນບາງເທື່ອ ເພື່ອການໃຊ້ຮ່ວມໝູ່. ພວກຊາວບ້ານ ອາດຈະບໍ່ໄດ້ຮັບອະນຸຍາດ ໃຫ້ລ່າສັດ ໃນປ່າອ້ອມໜອງນັ້ນ ເຊັ່ນດຽວກັນ, ແຕ່ວ່າ ອາດຈະເກັບ ຜັກຈາກເຂດອ້ອມແອ້ມນັ້ນ ໃນຂອບເຂດ 10 ແມັດ ຖ້າວ່າຜູ້ເກັບໄດ້ຂໍອະນຸຍາດຈາກວິນຍານໃນເຂດນັ້ນ. ກົງກັນຂ້າມ, ເດັກນ້ອຍ ແມ່ນໄດ້ຮັບອະນຸຍາດ ໃຫ້ຫຼິ້ນ ແລະ ລອຍນ້ຳຢູ່ໜອງນັ້ນ ແລະ ຜູ້ຄົນກໍໄດ້ຮັບອະນຸນາດ ໃຫ້ສຳຜັດກັບຕົວເຕົ່ານັ້ນໄດ້.

ຖ້າວ່າກົດໝາຍ ຖືກລ່ວງລະເມີດ ແລະ ການລົງໂທດ ກໍຈະແມ່ນ ໂທດຈາກວິນຍານເຈົ້າປ່າເຈົ້າຖິ່ນເຈົ້າຖານ, ເພາະວ່າ ບໍ່ມີການລົງໂທດ ຂອງບ້ານ ທີ່ກຳນົດໄວ້. ການລົງໂທດ ທາງວິນຍານ ລວມມີ ການເຈັບປ່ວຍ ແລະ ການ ຕາຍ. ເຄີຍມີ ຄອບຄົວໜຶ່ງ ໄດ້ເອົາເຕົ່າຕົວໜຶ່ງອອກ ໄປປ່ອຍໄວ້ເຂດອື່ນ ແລະ ຄອບຄົວນັ້ນ ກໍໄດ້ຈັດພິທີກຳຂຶ້ນ ຄັກແນ່ ເພື່ອຂໍອະນຸຍາດຈາກວິນຍານເຈົ້າຜູ້ເຝົ້າຮັກສາເຂດນັ້ນ, ແຕ່ວ່າຫຼັງຈາກນັ້ນ ບໍ່ພໍເທົ່າໃດເດືອນເຕົ່າຕົວນັ້ນກໍ ໄດ້ຖືກນຳຄືນມາຫາໜອງເກົ່າເໝືອນເດີມ.

ໜອງດັ່ງກ່າວ ໄດ້ກາຍເປັນ ແຫຼ່ງໜຶ່ງທີ່ດຶງດູດ ນັກທ່ອງທ່ຽວ ໃນແຂວງ ແລະ ເປັນແຫຼ່ງລາຍຮັບໃໝ່ສຳລັບບ້ານ. ດ້ວຍການຈ່າຍເງິນ 2000 ກີບ ຜູ້ຄົນກໍຈະໄດ້ຜ່ານຂົວທີ່ສ້າງຂຶ້ນ ໃນສອງປີກ່ອນໜ້ານີ້ ເຊິ່ງມຸ່ງໄປສູ່ຫົວນ້ອຍໆ ທີ່ຢູ່ ກາງໜອງ. ພວກນັກທ່ອງທ່ຽວ ສາມາດຈ່າຍຄ່າທຳນຽມເລັກໆນ້ອຍໆ ໃຫ້ພວກເດັກນ້ອຍທີ່ຫຼິ້ນຢູ່ໃນເຂດນັ້ນ ເຊິ່ງ ເຂົາເຈົ້າຈະຂັບຮ້ອງເພງ ພື້ນເມືອງໃຫ້ຟັງ. ເວລານັ້ນ ເຕົ່າກໍຈະພາກັນຟູຂຶ້ນມາໜ້ານ້ຳ, ລໍຖ້າ ການເກືອດ້ວຍ ອາຫານ ທີ່ມີຂາຍຢູ່ທາງເຂົ້າ. ນີ້ກໍເປັນລາຍຮັບທີ່ມີຄຸນຄ່າ ໃຫ້ແກ່ບ້ານ, ແຕ່ວ່າພວກຊາວບ້ານກໍພາກັນກັງວົນ ກ່ຽວ ກັບການສວຍໃຊ້ເຕົ່າເພື່ອ ສະແຫວງຫາຜົນປະໂຫຍດສ່ວນຕົວ ຈາກການທ່ອງທ່ຽວ ແລະ ຜູ້ຄົນທີ່ມາຈາກບັນດາ ປະເທດ ທີ່ຢູ່ອ້ອມຂ້າງປະເທດເຮົາ. ເພື່ອຄວບຄຸມເຂດດັ່ງກ່າວ, ພວກຊາວບ້ານ ກໍໄດ້ພາກັນເຮັດຮົ້ວອອ້ມ ແລະ ແຕ່ງຕັ້ງຜູ້ທີ່ອາສາສະໝັກ ໃຫ້ເຝົ້າຍາມໜອງແຫ່ງນີ້.




**INTERNATIONAL UNION**
**FOR CONSERVATION OF NATURE**

ຫ້ອງການ ປະຈຳ ສປປ ລາວ
ຕູ້ ປ.ນ 4340
082/01 ຖະໜົນຟ້າງຸ້ມ
ບ້ານອັດຈັນ,
ນະຄອນຫຼວອວຽງຈັນ, ສປປ ລາວ
Tel +856-21-216401
www.iucn.org
www.iucn.org/lao